ໜັງສື

ທ້າວສຸຣິວົງ

ເຫຼັ້ມ ໑.

ຂອງ

ກົມວັນນະຄະດີ

ພ. ສ. ໒໕໑໑

ພິມເທື່ອທີ່ນຶ່ງ ຈຳນວນ ໓.໐໐໐ ສະບັບ

ຄຳນຳ

ພີ່ນ້ອງຊາວລາວທີ່ຮັກແລະນັບຖືທັງຫຼາຍ ໜັງສື "ພື້ນທ້າວສຸຣິວົງ" ນີ້ ຂ້າພະເຈົ້າໄດ້ເຄີຍພາຣິບເຖິງຫຼາຍໆເທື່ອມາແລ້ວ ວ່າໜັງສືນີ້ເປັນໜັງສືພື້ນໃຫຍ່ກວ້າງຂວາງຫຼາຍ ຂນາດດຽວກັນກັບພື້ນສັງສິນໄຊ, ຈຳປາ໔ຕົ້ນ, ກາລະເກດ, ໄສວັດ, ແຕງອ່ອນແລະອື່ນໆ.

ຂ້າພະເຈົ້າຂໍບໍ່ກ່າວເຖິງວ່າໜັງສືພື້ນທ້າວສຸຣິວົງນີ້ ແມ່ນນັກປາດຜູ້ໃດແຕ່ງໆຢູ່ໃສໃນປີ ພ.ສ ທີ່ໃດ ເພາະເຣື່ອງນີ້ມັນເຄີຍໝວກ, ບອດແລະກືກມາພໍແຮງແລ້ວ ນອກຈາກເຣື່ອງສັງສິນໄຊ ແມ່ນທ້າວປາງຄຳແຕ່ງ, ອິນທະບານສອນລູກ ແມ່ນນັກປາດອິນທິບານແຕ່ງແລະກາບປູ່ສອນຫຼານແມ່ນເພັຍແກ້ວດວງຕາເປັນຜູ້ແຕ່ງທີ່ນັ້ນ ສ່ວນເຣື່ອງອື່ນໆນອກນັ້ນບໍ່ເຄີຍໄດ້ເຫັນຊື່ຂອງຜູ້ແຕ່ງນຳເລີຍ ເຄີຍເຫັນແຕ່ຊື່ຂອງຜູ້ຂຽນກ່າຍຕໍ່ໆກັນມາຢ່າງດຽວ

ເຖິງຢ່າງໃດກໍດີໜັງສືພື້ນທ້າວສຸຣິວົງນີ້ ເມື່ອອ່ານແລ້ວຍ່ອມໃຫ້ເກີດຄວາມມ່ວນຊື່ນອອນຊອນ ແລະມີຄະຕິເຕືອນໃຈເກີດຂຶ້ນໃນດວງຈິດຂອງທ່ານຜູ້ອ່ານຜູ້ຟັງຢູ່ມາກມາຍຕົວຢ່າງ

໑/ ກ່ອນພຍາພິມມະທັດຈະໄດ້ສັ່ງໃຫ້ເພຊຄາດເອົາມະເຫສີ (ນາງພິມພາ) ແລະພຣະໂອຣົດ (ທ້າວສຸຣິວົງ) ໄປຂ້ານັ້ນ ກໍ່ຍ້ອນຫຼົງຮັກຫຼົງມັກໃນຮູບ ໂສມຂອງນາງບັກຂີນີແມ່ໝ້າຍທີ່ແປງກາຍເປັນກວາງທອງແລະເປັນນາງສາວສວັນມາຫຼອກລວງ ເຊິ່ງໝາຍຄວາມວ່າຄົນເຮົາມັກມີຄວາມຫຼົງແລະເຫັນຜິດໄປຍ້ອນເຣື່ອງເຫຼົ່ານີ້ເລື້ອຍໆຖ້າຂາດຄວາມພິຈາຣະນາ ດັ່ງສຸພາສິດບູຮານບົດນຶ່ງເວົ້າໄວ້ວ່າ "ເມົານິດລືມຕາຍ, ເມົາກາຍລືມແກ່, ເມົາເມັຽລືມພໍ່ລືມແມ່ແລະເມົາຊັບລືມສາສນານັ້ນເອງ

໒/ ຄວາມເຫັນແກ່ໂຕຝ່າຍດຽວ ບໍ່ຫຼຽວເຫັນຄວາມທຸກຍາກລຳບາກຂອງຜູ້ອື່ນນັ້ນ ທ່ານວ່າເປັນຄວາມຊົ່ວຮ້າຍທີ່ສຸດຈະນຳມາເຊິ່ງຄວາມຈິບຫາຍ

ແກ່ຄົນໃນພາຍໜ້າ ຢ່າງບໍ່ຕ້ອງສົງສັຍເຊັ່ນທ້າວພຍາຍັກທິສກັນທີ່ໄດ້ໄປກຳ
ຣາບບາບເຕັງເອົາບາງພິມພາໜີໄປຈາກທ້າວສຸຣິວົງ ຄາວເມື່ອສອງແມ່ລູກ
ພາກັນນອນຢູ່ຣິມໄພໄຊທອງນັ້ນ ທີ່ສຸດກໍ່ຖືກທ້າວສຸຣິວົງນຳໄປລ້າງແຄ້ນ ຂ້າ
ຍັກທິສກັນຕາຍຄາສນາມຣົບຢ່າງອະນາດຍ້ອນບາບກັມທີ່ໄດ້ເຮັດໃຫ້ຜູ້ອື່ນເປັນ
ທຸກ ຈົນເຖິງເລືອດຕາຕົກນັ້ນເອງ

໓/ ການທີ່ເປັນຄົນມັກລະເມີດໃນສິນທັມ ບໍ່ນັບຖືໃນຊີວິດ, ຊັບສິນ
ແລະລູກເມັຽຫຼື ລູກຜົວຂອງຜູ້ອື່ນ ຍ່ອມເປັນທາງນຳມາເຊິ່ງຄວາມດັບວາຍຫາ
ຍະນະທັງຊາດນີ້ແລະຊາດໜ້າໂດຍແທ້ ດັ່ງນາງຍັກແມ່ໝ້າຍທີ່ໄດ້ແປງກາຍ
ເປັນສາວສວັນ ມາຫຼອກລວງເອົາພຍາພົມມະທັດໄປເປັນຜົວ ແລະທ້າວພຍາ
ທອນທີ່ໄດ້ລັກເອົາເມັຽທ້າວສຸຣິວົງໄປເພື່ອຫວັງຈະເອົາເຮັດເມັຽ ພາຍຫຼັງຍັກ
ແມ່ໝ້າຍກໍ່ໄດ້ຖືກທ້າວສຸຣິວົງຍິງສອນໃສ່ຕົກລົງຕາຍ, ແລະທ້າວພຍາທອນ
ກໍ່ຖືກທອນໂຕໃໝ່ມາພົບເຂົ້າ ຕ່າງຝ່າຍກໍ່ອ້າງວ່າເມັຽຂອງຕົນແລ້ວເກີດຣົບ
ເຣວກັນຂຶ້ນ ເລີຍຕາຍໄປພ້ອມກັບທັງສອງໂຕນັ້ນແລ.

ນອກຈາກນີ້ ໜັງສືພື້ນທ້າວສຸຣິວົງຍັງມີຄະຕິເຕືອນໃຈອັນດີງາມຫຼາຍ
ຢ່າງຫຼາຍປະການ ພ້ອມທັງມີພຣະຣາຊປະເພນີສມັຍບູຮານຕ່າງໆເຈືອປົນຢູ່
ຕລອດເຣື່ອງ ດ້ວຍເຫດນີ້ທາງຄນະກັມມະການວັນນະຄະດີຈຶ່ງໄດ້ລົງມືຈັດການ
ສຳຣະກວດທານ ແລະພິມອອກເຜີຍແຜ່ ດັ່ງພວກທ່ານທີ່ໄດ້ຈັບອ່ານຢູ່ໃນເວ
ລານີ້ເອງ ເພື່ອຫວັງວ່າໃຫ້ຫຼາຍຄົນໄດ້ອ່ານໄດ້ຟັງແລະໄດ້ຕັ້ງໃຈຊ່ວຍກັນຮັກ
ສາວັນນະຄະດີແລະຄວີທັນອັນລ້ຳຄ່າຂອງເຮົາເອົາໄວ້ ໃຫ້ໄດ້ເປັນມໍຣະດົກຕົກ
ທອດໄປເຖິງລູກຫຼານເຮົາພວກຮຸ່ນນ້ອຍພາຍຫຼັງຕາມພຸ້ນແລ./.

ລົງນາມ: ປະທານຄນະກັມມະການວັນນະຄະດີ

ສົມຈິນ - ງິນ

ພົ້ນທ້າວສຸຣິວົງ

ສາທຸ ຂໍເຊີນທັງສິບທິກຊັ້ນຟ້າ ພົມມາພິມານເມກ
ກັບທັງເທພໄທ້ ຄວາງຟ້າຊູ່ແດນ
ແມ່ນວ່າອິນຕາທ້າວ ມີຕາພັນຊ່ອງ ກໍດີ
ຂໍໃຫ້ມາຊ່ອຍປ້ອງ ຊູຂ້າຊູ່ອົງ ແດ່ທ້ອນ.
ບັດນີ້ຂ້າຈັກແປປັ້ນພົ້ນ ນິເທດຊາດົກ
ບົກແຕ່ນິກາຍທັມ ກ່າວເປັນໄທກວ້າງ
(ຂໍໃຫ້ໄປຕາມພົ້ນ ພູມເດີມຂອງເຣື່ອງ
ຢ່າໃຫ້ຜິດບາດເບື້ອງ ພຸດໂທເຈົ້າເທສນາ ແດ່ທ້ອນ)
ບັງມີເມືອງໃຫຍ່ກວ້າງ ຮຽກຊື່ເປັງຈານ
ອັນວ່າຣາຊາທົງ ແທ່ນຄຳເປັນເຈົ້າ
ນາມະກອນເທງົ້າ ຣາຊາພຣະບາດ
ຊື່ວ່າ ພົມມະທັດຕະຣາດທ້າວ ເປັນເຈົ້າບັ້ງປອງ
ກໍຫາກສຸກບົງລ້າ ສເມີດັ່ງເມືອງສວັນ
ພົນແພ່ນຫຼາຍ ອະເນກນັບເຫຼືອລົ້ນ
ເງິນຄຳແກ້ວ ເບັ່ງສາງແສນໂກດ
ຝູງເສື້ອຜ້າ ແຮລົ້ວໝື່ນສາງ
ກໍຫາກດູເລີດລ້ຳ ຊາວເທດເປັງຈານ
ບູກະເສີມສຸກ ເພິ່ງບຸນພຣະອົງທ້າວ
ມີທັງກຸນຊະໂຮຊ້າງ ພາຍສານຫາຍໝື່ນ
ຄວນແອບປ້ອນ ຫອມຫຼັງາຊູ່ວັນ

ເສນາຂ້າ ຄົບຫານພໍໂກດ
ເສເບດລ້ອມ ລະວັງເຈົ້າໜື່ນຖັບ
ຟັງບິບຄ່ວນໆກ້ອງ ຕຸຣີຍານວນມີ
ເສັບພຣະເຈົ້າລຸ່ມຟ້າ ມີພ້ອມຊູ່ອັບ
ມີທັງບັກສບິນລ້ອມ ບໍຣິວານຫິກໝື່ນ
ຊົມຊື່ນໜ້າ ສເນີດ້ານດັ່ງຂຽນ
ອັນວ່າເທວີແກ້ວ ຫຽມພຣະອົງພູວະບາດ
ງາມຍິ່ງລ້ຳ ດວງໜ້າສິງພິມ
ແຂນກົມສ້ວຍ ແອວບາງຄົ້ວກ່ອງ
ສອງຝ່າຍແກ້ມ ແດງເຂັ້ມດັ່ງຜາງ
ນ່າງໆໜ້າ ສີດອກບົວທອງ
ຮ່ອງໆໃສ ສິ່ງບາງນະຄອນຟ້າ
ທັນຕາແຂ້ວ ຂາວງາມຟັນຖີ່
ງາມບໍ່ມີບ່ອນເປື້ອນ ເໝືອນແກ້ວໜ່ວຍພຣະຈັນ
ເລງທີ່ສອງຖັນຕັ້ງ ຄ້ອງຫຼໍ່ ຈູມຄຳ
ຄໍແກວນກົມ ດັ່ງຫົງເປັນປ້ອງ
ບາງກໍຫຽມແທບຊ້ອນ ພຣະບາດອົງກະສັດ
ຫຼາຍປີເດືອນ ຖ່າຍຣະດູເດີນເຕົ້າ
ບານະກອນເຈົ້າ ສຸວັນນະພິມພາເປັນຊື່
ບາງກໍເປັນເອກຕົ້ນ ເທວີເຖົ້າແທ່ງພຍາ
ກໍຫາກດູບານລ້ຳ ສັ່ງຂານແຖນຖ່າຍ   ມາແລ້ວ

ບໍ່ມີຄວາມເດືອດຮ້ອນ ເມືອງບ້ານສໍ່າຣານ
ອັນວ່າພິມພາແກ້ວ ເທວີນາງເອກ
ນາງກໍທົງຄັນນ້ອນ ໃນທ້ອງທ່ຽງຈິງ
ກໍບໍ່ມີໄພຍຕ້ອງ ອິນຕາຍບັງບຽດ
ສຸກຢູ່ລ້ວນ ຄວາມໄຂ້ຫ່າງຄີງ
ບູທ່າງທົງເມືອງສ້າງ ທຳບຸນຟັງເທດ
ທັງເລົ່າທົງສືບສ້າງ ສິນຊ້ອຍສໍ່າຣານ
ສອງກໍບໍ່ເດືອດຮ້ອນ ດ້ວຍສິ່ງໂຣຄາ
ໄພຍໄພສັງ ກໍບໍ່ມີມາຕ້ອງ
ດູນານໄດ້ ສິບເດືອນຄ້ວນແກ່ ມາແລ້ວ
ນາງກໍເລີຍປະສູດໄດ້ ກຸມານນ້ອຍນອດຊາຍ
ງາມເລີດລ້ຳ ສເມີດັ່ງຫຸ່ນສິງ
ເລົ່າຄືງງາມ ດັ່ງອິນແປງປັ້ນ
ປິດຕຸຣາດຊັ້ນ ທັງໝູ່ພານມະນາ
ກໍຈິ່ງຫານາມທ້າວ ກຸມານບຸດຣາດ
ຕາມຊາດເຊື້ອ ແນວທ້າວທີ່ເຊງ
ຊື່ວ່າ ສຸຣິວົງທ້າວ ໂສມງາມອິນຫຼໍ່
ພຣະພໍ່ເຈົ້າ ແພງໄວ້ເກີ່ງຕາ
ຄັນວ່າຫຼາຍວັນໄດ້ ຫຼາຍຄືນແຖມຖ່າຍ ມາແລ້ວ
ນານ່າວທ້າວ ສອນໜ້າໃຫ່ຽມາ
ງາມບົ່ງບ້ອນ ປຸນປຽນອິນທາ

ບານເນື້ອລີລາເໜືອນ   ດັ່ງພິມພາບຟ້າ
ມາດາແກ້ວ   ເທວີຮັກຍິ່ງ
ຟູງພີ່ລ້ຽງ   ປົວປ້ອນຊູວັນ
ຈອມທັນທ້າວ   ສຸຣິວົງສອນປາກ   ມາແລ້ວ
ສຽງອ່ອນອ້ວນ   ເປັນໜ້າອີດູ
ທ້າວກໍບົວຣະບາດບ້າຍ   ເດີນທ່ຽວກາງໂຮງ
ຜິວຜາງໂສມ   ຮູບງາມປານແຕ້ມ
ດູບານໄດ້   ຫຼາຍປີແຖມຖ່າຍ   ມາແລ້ວ
ເຈັດຂວບເຂົ້າ   ຣະດູໄດ້ຖ່າຍມາ
ອັນວ່າຣາຊາເຈົ້າ   ພຣະບາຫຼວງຕົນພໍ່
ຄຶດປາກໄປມ່ວນຫຼິ້ນ   ສວນກ້ວາງໃຫ້ສວ່າງເຫີງາ
ກໍຈຶ່ງປາກກ່າວຕ້ານ   ເດີນໝູ່ເສນາ
ບອກໃຫ້ເດີນໂຍທາ   ຊູ່ຊູນມວນພ້ອມ
ບັດນີ້ເຮົາຈັກໄປມ່ວນຫຼິ້ນ   ສວນອາດອຸດທິຍານ
ສູຈົ່ງເດົາດາຕົກ   ແຕ່ງດີດາຫ້າງ
ເຊີນທັງພິມພາແກ້ວ   ເທວີນາງນາດ
ຕົກແຕ່ງຫ້າງ   ດາເນື້ອຊູ່ຄົນ
ພໍເນື້ອສຸຣິໂຍຂຶ້ນ   ເຖິງແຖໃກ້ທ່ຽງ   ມາແລ້ວ
ພຣະກໍເດີນຫ້າງມ້າ   ມາພ້ອມຊູ່ພາຍ
ຊ້າງແລະມ້າ   ຕັ້ງແຕ່ງເປັນຄຸບ
ຄົນເນືອງນັບ   ຄັ່ງກັນເຕັມຄຸ້ມ

ເມືອນັ້ນຣາຊາຂຶ້ນ　　ພາຍສານຊ້າງໃຫ່ຽ
ພຣະກໍອວນໄພ່ນ້ອຍ　　ພິບຕື້ອອກໄປ
ອັນວ່າເທວີແກ້ວ　　ພິມພາບາງບາດ
ກັບທັງບຸກຣາດທ້າວ　　ບຸນກ້ວາງລູກຕິບ
ຂຶ້ນຣິດແກ້ວ　　ສະເດັດດ່ວນຕາມໄປ
ແສນສາວໄຫຼ　　ແຫ່ນຳບາງແກ້ວ
ບືດງບ້າຍ　　ພິບຫຼັ່ງໄຫຼຕາມ　　ແລະເປີ
ພິບແພນຄັບ　　ຄັ້ງຫາງປານນ້ຳ
ຫຼີງດູສິບງມ້າ　　ອານຄຳແສະອອກ　　ພຸ້ນເປ
ພວກຫອກງ້າວ　　ຕາມຂ້າງຖີ່ຖັບ
ໄທຂັບທ້າວ　　ຖືປືນໄປກ່ອນ
ຄົນມືດກຸ້ມ　　ເຕັ້ນຫັ້ນຄັ້ງຫາງ
ຟັງຍິນຄື້ນງກ້ອງ　　ສຽງກອງເສບອອກ　　ພຸ້ນເປີ
ປະຄືແດງອວນ　　ກ່ອນພິບໄປໜ້າ
ຫອບສັງພ້ອມ　　ດຸຣິຍາສຽງເສບ
ແຫນແຫ່ເຈົ້າ　　ບຸນກວ້າງອອກໄປ
ແມ້ງບິງເຖິງແຫ່ງຫ້ອງ　　ສວນອາດອຸດທິຍານ
ພູມີພຣະ　　ຄ່ອນເຊົາສນາມກວ້າງ
ອັນວ່າພິມພາແກ້ວ　　ກັລຍາບາງບາດ
ບົວຣະບາດຂຶ້ນ　　ທຳກວ້າງຮ່ວມພຍາ
ກັບທັງບຸຕຣາດທ້າວ　　ສຸຣິວົງຕົນລູກ

ຕາມແກ່ນເຫງົ້າ ນາງແກ້ວແມ່ດິນ
ກັບທັງບັກສບິນລ້ອນ ປະຣິວານຫຼາຍໝູ່
ເຂົາກໍລຽນບັ້ງເຜົ້າ ແຝງເຈົ້າຊູ່ຄິນ
ເນື້ອດງເນື້ອ ໄກວແກ່ວງຈຳນອນ
ສອນລອນສາວ ແກ່ວງວີພຍາເຈົ້າ
ຝູງໝູ່ນາງແກ່ເຖົ້າ ບັ້ງປູ່ສອນລອນ
ເສນາຫຼາຍ ບອກໃບເນື້ອງເຜົ້າ
ແຕ່ນັ້ນພຣະກໍບິນບອກໃຫ້ ຂຸນຫຼວງຕິກແຕ່ງ
ຫ້າງເຄື່ອງພ້ອມ ຖວາຍໃຫ້ເທພດາ
ຄອນວ່າພຣະກ່າວແລ້ວ ເສເບດມຸບດີ
ເຕົາດາດີ ຊູ່ຄິນເລີບແລ້ວ
ມີທັງສຸຣາເຫຼົ້າ ໃຫງານພໍ່ຄູ່
ມີທັງພາສົ້ມຕັ້ງ ຫວານພ້ອມເຄື່ອງຄາວ
ມີທັງດອກໄມ້ພົ້ວ ຫຼຽນຫູບມວນມາ
ເອົາໄປຖວາຍ ເທພດາສວນກວ້າງ
ຄ້ອນວ່າບໍຣະບວນແລ້ວ ພະລືກັນເລີບເລີກ
ຂຶ້ນຂາບໄຫວ້ ຈອມເຈົ້າປູ່ສະລອນ
ຟັງບິນຄ່ວນໆກ້ອງ ຕຸຣິບາມວນມື້
ສຽງປີ່ຫໍ້ ແຄນພ້ອມຂຸ່ນຣະບຳ
ມີທັງສິງໃຂນພ້ອມ ທັງຣະເນງຫຼາຍໝູ່
ບາງພ່ອງຫຼົ້ນໜາກກາລອດບ້ວງ ທັງຂຶ້ນໂຕ່ໜ້າງ

24 / VII
ຫ້າມຈຳໜ່າຍ

ຝູງໝູ່ຊາຍໃຖງເຫຼົ້າ ກິນເມົາຊິນຊື້ນ
ສຽງໂຮ່ຮ້ອງ ສາວບຫຼີ້ນຊື້ນຊິນ
ຂັບແລະຟ້ອນ ທັງອ່ານໜັງສື ກໍມີ
ເຂົາກໍເອີ້ນເຫີນສຽງ ໃສ່ກັນຫົວຂື້ນ
ເຂົາກໍແຊວງຫຼີ້ນ ຫຼາຍແຊງເຊີງຕ່າງ
ສຽງສນັ່ນເຫົ້າ ທະລັງພື້ນແຜ່ນດິນ
(ໃນຕິກາບັ້ນ ພຍາຊິນສວນອາດ
ໄວ້ທ່ນີ້ ເມືອໜ້າກ່າວນານ ກ່ອນແລ້ວ)
ບັດນີ້ ຈັກກ່າວເຖິງຂີນີຮ້າຍ ຜີສວາງ ບັກໃຫ່ງ ກ່ອນແລ້ວ
ມັນກໍປູ່ດ່ານດ້າວ ຄອບກວ້າງຄວ່າໂກ
ຜົວມັນນັ້ນ ນໍຣະບາຕາຍຈາກ
ມັນກໍເປັນແມ່ໝ້າຍ ຫຼາຍນີ້ພ່ຳນານ
ມັນ ຈິ່ງເດີນດ່ານດ້າວ ຄວ່າທ່ຽວຫາຜົວ
ມັນກໍເດີນພົງໄພ ຄວ່າໄກດູລ້າ
ກໍຈິ່ງຕົກປະເທດກ້າ ຂິງເຂດເປັງຈານ
ມັນກໍເດີນເວຫາ ລ່ວງກາຍມາຫັ້ນ
ມັນໄດ້ຍິນຄວນໆກ້ອງ ດຸຣິຍານວນນີ້
ສຽງເສບເຈົ້າລຸ່ມຟ້າ ອໍຣະອົງອຸ່ນໃຈ
ກໍ່ກາກດຸນ່ວນແຫ້ ເໝືອນສິ່ງເມືອງສວັນ
ເພນີນັ້ນ ນອກໃນເຝືອນຟັ້ນ
ມັນຈິ່ງໄປຈິນໃກ້ ອຸດທິຍານຫຼິ່ງລ່ຳ

ກໍຈຶງເຫັນພຣະບອດເຈົ້າ   ທິງມ້າປ່າບຄື
ເນືອຄງເນື້ອ   ສິນສຶງອິນຂຽນ
ຣັງສີໃສ   ສຶງພິບເມືອງຟ້າ
ນັບກໍຫຼິງລ່ຳປ້ຽນ   ເຫັນພຣະບາດອິງກະສັດ
ບິນສະອອນອິກ   ບອບໃບແດດື້ນ
ຄຶດປາກປຸນເປັນເຫງົ້າ   ເຫວືຫຽນແຫບ
ຄຶດປາກຊິນເສບຊ້ອນ   ເຜອຜັ້ນກ່ອນສເບ
ນັບກໍເຫຫວງຣ້ອນ   ຣິນນະໃບແຄ້ບຄັ້ງ
ຄຶດສວາດຣູ້   ກູຊິນ້າງຜ່າເອົາ
ນັບກໍກັບເພດພ້ຽງ   ເປັນຣູບກວາງຄຳ
ເດີນດິງຫຼວງ   ຜ່າພິບກາຍທ້າວ
ນັບກໍຣວາຍມິນນ້ອມ   ພິມພາບາງບາດ
ໃຫ້ມີໃຈປາກໄດ້   ກວາງນັ້ນຣູບງາມ
ແຕ່ນັ້ນພິມພາແກ້ວ   ນະເຫສືບາງບາດ
ເຫັນຣູບເນື້ອ   ບາງແກ້ວປາກກະສັບ
ຄຶດປາກໄດ້   ເນື້ອເດືອນກວາງຄຳ
ນາຫຼິງດູ   ລ່ຳແຍງຊິມຫຼົ້ນ
ບາງຈຶງບໍມີໄຫວ້   ຣາຊາພິວມຶງ
ຂ້ອຍກໍຄຶດປາກໄດ້   ກວາງນັ້ນຣູບງາມ   ພຣະເອີຍ
ແຕ່ນັ້ນພຣະບາດທ້າວ   ຕ້ານຕໍ່ເມັຽແພງ
ພິມພາເອີຍ   ບໍ່ຄວນນາເຈົ້າ

ອັນວ່າແນວນາມເຊື້ອ	ກວາງຄຳໃນປ່າ	
ບໍ່ໃຊ້ຄົນແອບລ້ຽງ	ຊິເອົາໄດ້ດັ່ງລື	ພີເດ
ເມື່ອນັ້ນນາງຄານເຈົ້າ	ເທວີຂຶ້ນໜ່ຽວ	
ເພື່ອວ່ານັກຄ່ອນຮ້າຍ	ມົນກຸ້ມກ່ອມໃຈ	
ນາງຈິ່ງວອນວານໄຫວ້	ຜົວແພງອິງອາດ	
ຂໍໃຫ້ພູວະນາດເຈົ້າ	ອີດູຂ້າເທື່ອດຽວ	ນີ້ຄ້ອນ
ນ້ອງກໍເຫັນຮູບເນື້ອ	ກວາງເຖື່ອນດົວງາມ	ແທ້ນາ
ຂໍກູນາ	ໂຜດພາບເອົາໃຫ້	
ແຕ່ນັ້ນຣາຊາເຈົ້າ	ຈອມເມືອງເລີຍກ່າວ	
ຂໍແກ່ສີແຈ່ມເຈົ້າ	ນາງແກ້ວຢ່າເອົາ	ພີ່ຄ້ອນ
ຊາດທີ່ແນວນາມເຊື້ອ	ມິກຄາໃນປ່າ	
ບໍ່ທ່ອນເຫຼືອງຫຼາກເຫຼື້ອມ	ເປັນເນື້ອຮູບຄຳ	ພີ່ນາ
ມັນຈັກເປັນເຂັນຮ້າຍ	ໂພຍໄພອຸບາດ	
ກົວແຕ່ເປັນເຫດຕ້ອງ	ຣາເຈົ້າເນື້ອລຸບ	ພີ່ນາ
ອັນນີ້ທັມມະຊາດເຊື້ອ	ສັດຢູ່ໃນດົງແທ້ນາ	
ຢ້ານແຕ່ເປັນເວຣາ	ເບື້ອງໃດມີຮູ້	
ແຕ່ນັ້ນເທວີແກ້ວ	ບໍ່ມີຟັງຊ້າໜ່ຽວ	
ຄັນບໍ່ໄດ້	ໃຈຂ້າຈິຂາດຕາຍ	ພຣະເອີຍ
ເມື່ອນັ້ນພຣະບາດທ້າວ	ອີດູນາດນາງຄານ	
ກໍຈິ່ງເດີນເສນາ	ໝູ່ໂບທາພ້ອມ	
ສູ່ຈິ່ງໄປວຽນອ້ອມ	ໃນດົງທຸກແຫ່ງ	

ອ້ອມຊູ່ດ້ານ ຫຼາຍຊຸ້ນແວດຣະວັງ ແຫ້ຜີ
ຜີວ່າຍັງກາຍແຫ້ ຄົນໃດຊິຕັດຂາດ ຄົນນັ້ນ
ສູຈົ່ງເອົາໃຫ້ໄດ້ ກວາງນີ້ຫ່ຽວພລັນ ນັ້ນດາຍ
ແຕ່ນັ້ນເສນາພ້ອມ ໄປຫາຫຼາຍໝື່ນ
ເຂົາກໍໄຫຼຫຼັ່ງເຂົ້າ ດົງກວ້າງແວດຣະວັງ
ສວນວ່າອົງກະສັດທ້າວ ຣາຊາພຣະບາດ
ຊິດຂຶ້ນມ້າ ຄົນກຸ້ມແຫ່ນຳ
ເສນາພ້ອມ ຈັດໄປເປັນພວກ
ລວາອອກໜ້າ ພົນລ້ອມຈອດກັນ
ເຂົາກໍເນື່ອງນັນພ້ອມ ເອົາກັນຣະວັງຣາດ
ຮອດດ່ານກວ້າງ ເຕັ້ນຕື່ນໂຍງສຽງ
(ກວາງກໍຕື່ງວາງປົບ ຕື່ນຮົນເຮຟ້າວ)
ມັນກໍໂຍງໄປໜ້າ ຄືນຫຼັງຫຼົບຫຼີກ
ແລ່ນພຸ້ນພີ້ ຄົນອ້ອມຊູ່ພາຍ
ມັນກໍຫົນຫວນແຫ້ ຄົນໂຮເຕັ້ນປ່າ
ຫຼົບພຸ້ນພີ້ ບໍ່ມີຮູ້ຮ່ອນຊິໄປ
ເມື່ອນັ້ນພົນນະຫັດທ້າວ ເດີນປ່າວໄປຫາ
ຄັນກວາງກາຍຄົນໃດ ສ່ວນກູຟັນຂ້າ
ແຕ່ນັ້ນເຂົາກໍກົວເກງປ້ານ ຣາຊາຕັດຂາດ
ເຂົາກໍຕັ້ງໃຫ່ໄວ້ ຖືງ້າວແລ່ຫວນ
ສຽງເພື່ອນຟື້ນ ໃນດົງເດງຄື້ນ

ແຕ່ນັ້ນກວາງຫອບເຕັ້ນ ທະຍານຜ້າຍຜັ່ນໄປ
ກາຍໜ້າທ້າວ ພຣະບາດຣາຊາ
ພຣະກໍບາຍຫວນແຫງ ບໍ່ທັນກວາງເຕັ້ນ
ແຕ່ນັ້ນຣາຊາເຈົ້າ ອິງກະສັດຣ້ອນເຣ່ງ
ຜັນຖີບມ້າ ເດີນດັ້ນແລ່ນນຳ
ແຕ່ນັ້ນກວາງ ກໍເລີຍຫອບເຕັ້ນ ເຂົ້າປ່າໄພສົນ
ຣາຊາຜັນ ຖີບຕາມໄປແທ້
ເລີຍເລົ່າເຂົ້າ ດົງດອນຫຼາຍລັ້ນ
ເຂົ້າຊອງຊັ້ນ ດົງກວ້າງເຖື່ອນກວາງ
ພຣະຈິ່ງຫຼຽວແລຢ້ຽມ ພາຍຫຼັງບໍ່ເຫັນໝູ່
ຝູງໝູ່ເສເນດເຕັ້ນ ນຳທ້າວບໍ່ທັນ
ເຂົາກໍຕາມຮອຍມ້າ ເຫິງນານອິດອ່ອນ
ກໍບໍ່ທັນທ່ອນທ້າວ ເລີຍຮ້ອງກູກຫາ
ຝູງໝູ່ໂຍທາຮ້ອງ ຫາກັນທຸກແຫ່ງ
ກໍບໍ່ເຫັນແຈ່ມເຈົ້າ ບາທ້າວພຣະຍອດເມືອງ
ມີແຕ່ອົງດຽວເຈົ້າ ຣາຊາພູວະນາດ
ມ້າກໍອິດອ່ອນແທ້ ຢືນຢັ້ງເບິ່ງກວາງ
ເມື່ອນັ້ນກວາງກໍຫຼຽວຫຼັງຢ້ຽມ ເຫັນພຍາເຊົາຢູ່
ມັນກໍທຳເພດພ້ຽງ ຂາຫ້ານຄ່ອຍໄປ
ທັງແຜນລື້ນ ຫູເຕື່ອຍຢືນຊັນ
ຣາຊາຜັນ ຖີບນຳແຖມແສ້

ແຕ່ນັ້ນກວາງຄະໂນງເຕັ້ນ ໄປໄກພໍຊົ່ວ
ພຣະບາດເຈົ້າ ເຊົາມ້າຜໍ່ດູ
ມັນກໍເດີນໄປແທ້ ໃນດົງລົ້ມລຸກ
ເໝືອນດັ່ງທິວທອດແທ້ ເລີຍລົ້ມຊຸກຊວນ
ແຕ່ນັ້ນພູມີທ້າວ ຜັນລວາເລີຍໄລ່
ເຂົ້າປ່າໄມ້ ໄປໜ້າຄວ່າໄກ
ແຕ່ນັ້ນກວາງປ່ວງຟ້າວ ເຂົ້າ ປ່າໄພສົນ
ທຳດົນເປັນຜີໂຂນ ດ່ວນມາເຖິງທ້າວ
ມືມັນນັ້ນ ຖືຂ້ອນກັບສາກ
ປາກໃຫຍ່ກ້ວາງ ປະມານແທ້ທໍ່ຮືນ
ຕາແດງເຂັ້ມ ປານໄຟລຸກລວນ
ພຣະບາດທ້າວ ເລີຍປ້ານສັ່ນສາຍ
ແຕ່ນັ້ນອັດສາມ້າ ເຫັນຜີຍັກໃຫຍ່
ມັນເລົ້າເຕັ້ນ ກົວປ້ານຮີບທະຍານ
ແຕ່ນັ້ນຣາຊາທ້າວ ຍິນກົວຍັກໃຫຍ່
ຕົກຈາກມ້າ ເລີຍກະດ້າງຢູ່ດິນ
ແຕ່ນັ້ນຍັກຮີບຟ້າວ ຜັນແລ່ນເລີຍຕາມ
ຈັບອັດສາ ຈີກກິນຕົວມ້າ
ມ້າກໍມໍຣະນັງສຽງ ເສັຽຊີວັງລົດຊົ່ວ
ເປັນເຫງື່ອທ້ອງ ສວາງເສື້ອບໍ່ບານ
ອັນວ່າຣາຊາທ້າວ... ບໍ່ຕື່ງຕົນກະດ້າງຢູ່

ບັດວິງກັບເພດຜູ້ງ   ເດີນດັ້ນດ່ວນມາ
ມັນກໍກັບເພດໃຫ້   ເປັນສາວສອນໃຫ່ງ
ງາມຍິ່ງບ້ອຍ   ດວງໜ້າສິງຂຽນ
ຄໍກົມປ້ອງ   ຕາດໍາຄົ້ວກ່ອງ
ຄີ່ງອ່ອນອ້ວນ   ແອວສ້ວຍສິງເຫຼົາ
ມັນກໍສຸບເຄື່ອງແກ້ວ   ເພງມາດມະນີສີ
ດູງາມເໝືອນ   ສິງນາງເມືອງຟ້າ
ໂສມສີໜ້າ   ຄືນາງເທວະຣາດ
ເໝືອນດັ່ງຄາດແຕ່ຫ້ອງ   ພົມພຸ້ນລ່ວງມາ
ແຂນແພນສ້ວຍ   ທະນູທອງເຫຼົາຫຼໍ່
ຕາວາດໄວ້   ພໍດົ້ນດັ້ນດອນ
ມັນກໍລີລາຍ້າຍ   ເດີນມາພົບຈອບ
ເຫັນທີ່ພຣະບາດທ້າວ   ນອນກະດ້າງເກືອກດິນ
ມັນກໍທໍາເພດຜູ້ງ   ສເນີສິງແນບເຫຼົາ
ເລົາຄືງງາມ   ແປກນາງເມືອງຟ້າ
ແຕ່ນັ້ນນ້ອງກະສັດເຈົ້າ   ເປງຈານດົນອາດ
ຕົ້ງສະຕິໄດ້ແລ້ວ   ຄາງອື້ລຸກມາ
ພຣະກໍນັ່ງຢູ່ແລ້ວ   ຫຼີງລໍ່າໄປມາ
ກໍຈຶ່ງເຫັນນາງງາມ   ດຸ່ງເດີນມາໃກ້
ຄ້ອມວ່າພຣະບາດເຈົ້າ   ເຫັນຮູບນາງງາມ
ໂສມສັບຄື   ສິງຄໍາໃນເບົ້າ

ພຣະກໍທົງຫວງແຄ້ນ ທີຣະໄທນີມາກ
ຄືດຮ່ຳແລ້ວ ກົວປ້ານຫຼາບຫຼັງ
ອັນນີ້ຈັກວ່າເທວະດາດ້າວ ຄວງສວັນມາລົວ ກູລື
ຮູ້ວ່າຍັກຫາກກັບເພດໜ້າ ກິນຊ້ຳແທ່ງກູນີ້ລື
ຕາມກັມທ້ອນ ເຄີຍມາເປັນເຫຼື້ອ ມັນແລ້ວ
ມັນຫາກຈັບຈີກມ້າ ກິນແລ້ວບໍ່ພໍ ນັ້ນລື
ມັນຈັກກິນກູຊ້ຳ ຕາຍໄປເສັຽເປົ່າ ແລະນາ
ທ້າວຮ່ຳແລ້ວ ເລີຍຕ້ານກ່າວຖາມ
ດູຣາເຈົ້າ ນາງຜີກັບເພດ
ນຶງຈັກກິນທ່ຽງແທ້ ກູທ້າວບໍ່ຄາ ແລນໍ ?
ແຕ່ນັ້ນ ນາງຜີຕ້ານ ຂານຄຳດູມ່ວນ
ຂ້ອຍນີ້ບໍ່ໃຊ່ເປັນຊາດເຊື້ອ ສວາງເສື້ອທ່ຽວກິນ ດອກນາ
ສັງວ່າມາຈາຕ້ານ ງາມຄວມສວຍສຽດ ນີ້ເດ
ເຫັນວ່ານ້ອງຮູບຮ້າຍ ເປັນເຊື້ອຍັກໃຂ ວ່າລື
ນ້ອງນີ້ຄິນດຳຮ້າຍ ນາຄານດູມິ້ນ ກະດັດນໍ
ວ່ານ້ອງເປັນຍັກຮ້າຍ ສວາງເສື້ອທ່ຽງຈິງ ນັ້ນລື
ນ້ອງນີ້ໂສມຮູບຮ້າຍ ເໝືອນຍັກຂີນີ
ວ່າຈັກກິນຈອມຫົວ ຮູບງາມນາທ້າວ ນັ້ນລື ?
ເມື່ອນັ້ນພຣະບາດທ້າວ ໄດ້ຍິນອ່ອນນາງຜີ
ໄຂວາຈາ ມ່ວນຫູຄີຄ້ອຍ
ພຣະຈິ່ງຖາມນາງນ້ອຍ ໂສມງາມກັບເພດ

ເຈົ້ານີ້ຢູ່ປະເທດຫ້ອງ ເມືອງທ້າວທີ່ໃດ
ລືວ່າແມ່ນຊາດເຊື້ອ ເທວະຣາດຣາຊາ
ຮູ້ວາກັລຍາເປັນ ແມວຄົນດັ່ງລື ເດເຈົ້າ ?
ເມື່ອນັ້ນຂືນຜູ້ ນາງຜີກັບແພດ
ມັນກໍມ່າຍໆໜ້າ ຫົວແຍ້ມຈຶ່ງຈາ
ຂ້ອຍບໍ່ໃຊ່ເຊື້ອ ຊັ້ນຊາດແມວຄົນ
ຫາກແມ່ນແມວເທວາ ເລື່ອນລອຍມາແທ້
ຂ້ອຍນີ້ມີກັມແທ້ ເວນຫຼັງຊາດກ່ອນ
ພຣະໄອສວນບອກໃຫ້ ເດີນດັ້ນດູ່ງມາ
ໃຫ້ມາໃຊ້ບາບຮ້າຍ ຢູ່ປ່າຄົນດຽວ
ນ້ອງຫາກມີເວຣາ ແຕ່ຫຼັງຈຶ່ງແທ້
ຄັນວ່າຂ້ອຍຫາກໄດ້ຊາດເຊື້ອ ມະນຸດເລົ່າເປັນຜົວ ເມື່ອໃດ
ກໍ່ຈຶ່ງໝົດເວຣາ ແຫ່ງຮຽມຍາມນັ້ນ
ນາງຜີຕ້ານ ຖາມພຍາດ້ວຍເລດ
ເຈົ້ານີ້ຢຸປະເທດຫ້ອງ ເມືອງທ້າວທີ່ໃດ ນັ້ນເດ
ເຈົ້າສັງມາຄວ່າດັ້ນ ເດີນປ່າຄົນດຽວ
ມາຢູ່ດົງໄພຂຽວ ເຖື່ອນພະນອມແຄມເກື້ອ
ເຈົ້າຢູ່ນັກເຣດຫ້ອງ ຊັ້ນຊື່ເມືອງໃດ
ນາມກອນບາ ຊື່ລືເດເຈົ້າ
ສັງວ່ານານອນກົ້ງ ເຫີງດົນດາຍເປົ່າ
ຈັກວ່າເປັນເຫດດ້ວຍ ໃດແທ້ຈິ່ງມາ ນີ້ເດ ?

ເມື່ອນັ້ນພຣະບາດທ້າວ   ຂານຕອບນາງຜີ
ຕາມຄວາມນີ້   ຊູ່ອັນພາຍຜ້ຽນ
ພື້ນຫາກແມ່ນອິງກະສັດເຊື້ອ   ເປງຈານບັດເຣດ
ອິງເອກກ້ວາງ   ທິງສ້າງສືບເມືອງ
ເຮົາກໍພາໄພ່ນ້ອຍ   ມາສຸອຸດທິບານ
ເຫັນກວາງຄຳ   ຮູບງາມປານແຕ້ມ
ອັນວ່າເທວາແກ້ວ   ນາງງາມຂໍໜ່ຽວ
(ວອນໃຫ້ຂ້ອຍ   ຊຽວດັ້ນດຸ່ງນຳ)
ພີ່ຈຶ່ງຂຶ້ນຂີ່ມ້າ   ເດີນໄລ່ກວາງຄຳ
(ຜັນລວານຳ   ບໍ່ເຊົາຕາມສົ້ນ
ພອບເລົາໄລເສັຽຂ້າ   ໂບທາພົບໄພ່
ເຮົາກໍເຂົ້າປ່າໄມ້   ເດີນດັ້ນໄລ່ກວາງ
ແລ້ວເລົາມາພົບພໍ້   ຍັກໃຫຍ່ຜີສວາງ
ເຮົາກໍຕົກໃຈກົວ   ເກືອກລົງຫຼັງມ້າ
ຍັກກໍຈັບເອົາມ້າ   ຂອງເຮົາໄປຈີກ   ກິນແລ້ວ
ພີ່ຈຶ່ງນອນເກືອກກິ້ງ   ດິນແດ້ງຫອດແຮງ   ນ້ອງເອີຍ
ແຕ່ນັ້ນຂີ່ນີ້ຜູ້   ນາງຜີກັບເພດ
ເລີຍກ່າວຕ້ານ   ຈາທ້າວລ່າຍພາງ
ອັນນັ້ນຄືແມ່ນຂີ່ນີ້ຮ້າຍ   ຜີສວາງຍັກໃຫຍ່
ມັນຫາກເຄີຍເພັ້ນພ້າຍ   ເດີນດັ້ນຊອກກິນ   ພຣະເອີຍ
ເມື່ອຂ້າເດີນມານັ້ນ   ກໍແລເຫັນມັນຢູ່

24 / VN
ຫ້າມຈຳໜ່າຍ

ໃນທີຂ້າງ ດົງກວາງບໍ່ໄກ ພຣະເອີຍ
ຂ້າກໍເຫັນມັນບາຍຂາມ້າ ມາກິນກັດຢູ່
ຄັນວ່າຂ້າຫາກມາຮອດແລ້ວ ມັນຢ້ານຜ່າຍໜີ ພຸ້ງແລ້ວ
ເຫດວ່າໄອສວນທ້າວ ຣາຊາປົງອາດ
ເຂດດ່ານແດນທົ່ນີ້ ໃຫ້ຕົນນ້ອງຮັກສາ
ເມື່ອນັ້ນບັກກໍຈາລົມທ້າວ ຣາຊາອົງອາດ
ປາກກ່າວຕ້ານ ສຽງຈ້ອຍມ່ວນຫູ
ໂອບໍ່ມາອີດູຕົນທ້າວ ຣາຊາພູວະນາດ ເດນໍ
ສັງວ່າເມັຽແຈ່ມເຈົ້າ ຈໍາໃຫ້ທ່ຽວດາຍ ນີ້ເດ
ອັນວ່າໃນໄພກວ້າງ ສັດຕູຫາຍສິ່ງ ຈິງນາ
ມີທັງງູງອດພ້ອມ ເສືອຊ້າງແຮດກະທິງ
ຄັນວ່າເດີນໄປພໍ້ ງູຊວາງຊີຂົບກອດ
ລາງເທື່ອງູເຫົ່າຫ້ອມ ຈົງອາງພ້ອມຕອດຕາຍ ບໍ່ຮູ້
(ສັງມາຮ່ວາປາກໄດ້ ສັນຊາດກວາງທອງ
ແນວບໍ່ເປັນມຸງຄຸນ ຊ່າງດູແລງເອີ ໃຫ້)
ຈັກຊິເອົາໄປໄວ້ ສັງກວາງຕົວດ່ອຍ
ມັນຈັກເປັນປໂຍດດ້ວຍ ກວາງນັ້ນດັ່ງລື ນີ້ເດ
ຮ້ອຍທີນາງຄານແກ້ວ ຫຽມພຣະອົງຊົງໜ່າຍ ອົງແລ້ວ
ນາງຈົງເຊີນພຣະຜ້າຍ ດົງກວ້າງໄລ່ກວາງ
ຈະໃຫ້ເສືອສາງຊ້າງ ກິນພຣະອົງເປັນເຫື່ຽອ ເສັຽນັ້ນ
ນາງນາດນ້ອຍ ຈິຊົມຊ້ອນໃໝ່ແທນ ແທ້ແລ້ວ

ແຕ່ນັ້ນຣາຊາໄດ້ ຍິນຄຳນາງກ່າວ
ຄຶດຖີ່ຖ້ວນ ຄຳນີ້ກໍຫາກຄື ແທ້ນໍ
ບາມເມື່ອກູຈາຫ້າມ ພິມພາຫຼາຍເລົ່າ
ອັນວ່າສີແຈ່ມເຈົ້າ ນາງນ້ອຍກໍບໍ່ຟັງ ກີນາ
ກູຈິ່ງພັດບ່າວແກ້ວ ຝູງໝູ່ໄບທາ
ແຂງບໍ່ມີບຸນຫາຍ ກໍສ່ວນນໍຣະບາມຸ້ງ
ກໍຫາກເປັນດັ່ງຄວາມນາງແກ້ວ ເທວະດາຕ້ານກ່າວ ຈິ່ງແລ້ວ
ແຂງວ່າບຸນບໍ່ກວ້າງ ກູນີ້ກໍສ່ວນວາຍ ແທ້ແລ້ວ
ບັດນີ້ກູຈັກເອົານາງແກ້ວ ເທວາເປັນຄູ່
ເມື່ອຢູ່ຊ້ອນ ໂຮງກ້ວາງຮ່ວມຮຽງ ແທ້ແລ້ວ
ແຕ່ນັ້ນພູມີເຈົ້າ ເປງຈານກະສັບໂສກ
ກໍຈິ່ງແປປາກຕ້ານ ດອມນ້ອງພຣະຍອດນ ໆ
ບັດນີ້ຮຽມຈັກເອົາເຈົ້າເມື່ອສິມສ້າງ ເປງຈານດອມພີ້ ຈິ່ງແລ້ວ
ຂໍນ້ອງເມື່ອຮ່ວມຫ້ອງ ສະຖານກ້ວາງຢູ່ກະເສີນ ພີ້ຖ້ອນ
ຄ້ອນວ່າພຣະກ່າວແລ້ວ ນາງນາດພອຍຖແລງ
ມັນກໍແປງຄວາມເໜືອນ ບໍ່ປາກຊິມພຍາເຈົ້າ
ແປງຄຳເວົ້າ ຄືນາງເທວະຣາດ
ທຳວາດໄວ້ ເໜືອນໜ້າບໍ່ປາກເມືອ
ຂອບໃຈເຈົ້າ ເໜືອຫົວພຣະໂຜດ
(ເປັນແຕ່ບຸນຫຸ້ມເກົ້າ ພຣະອົງເຈົ້າໂຜດ.ຜ້ ຍ ແທ້ແລ້ວ
ຮຽມນີ້ເປັນແນວເຊື້ອ ເທວາທັດທ່ຽງ ຈິ່ງນາ

ບໍ່ຄວນເມືອປູ່ຊ້ອນ ເປັນນ້ອຍປົດປ້າຍ ພຣະເອີຍ
ຂໍພຣະເມືອຊົມຊ້ອນ ເທວີຂອງເກົ້າ ພຣະອົງຖ້ອນ
ຈັກຈິເອົາຂ້ອຍຜູ້ນ້ອງ ເປັນນ້ອຍບໍ່ຄວນ ພຣະເອີຍ
ຄ້ອນວ່ານາງກ່າວແລ້ວ ພຣະອົງຕອບຂານຄຳ
ພີ່ຈັກເອົານາງເປັນເທວີ ເອກໂທນຈິງແທ້
ອັນວ່າເທວີແກ້ວ ພົມພາຂອງເກົ້າ ອວນນັ້ນ
ພີ່ຈັກລາລົດໄວ້ ເປັນນ້ອຍປົດປ້າຍ ແທ້ແລ້ວ
ເມື່ອນັ້ນນາງຜີຮ້າຍ ຍິນດີຊົມຊື່ນ
ມັນກໍຖວາຍນອບເນື້ອ ຕົນໃຫ້ແກ່ພຍາ ແທ້ແລ້ວ
ເມື່ອນັ້ນຣາຊາຊ້ອນ ຊົມນາງກາງປ່າ
ແລ້ວຈິ່ງພາລ່ວງຜ້າຍ ດົງກ້ວາງຄ່ອຍມາ
ສອງກໍຕາມຮອຍມ້າ ຄືນມາທາງເກົ້າ
ຍາມເມື່ອທົວທອດແລ້ວ ພານ້ອງຈອດເຊົາ
ນາງຜີເຈົ້າ ຖວາຍຕົນຕາງເສື່ອ
ໃຫ້ພຣະນອນທອດເນື້ອ ເໜືອທ້ອງແທ່ງຕົນ
ບັດນີ້ຈັກກ່າວເຖິງເສນາພ້ອມ ໃບທາຝູງໄພ່
ເຂົາກໍຕາມຮຽກຮ້ອງ ຫາທ້າວບໍ່ເຫັນ
ເຂົາກໍຕົກແຕ່ງຕັ້ງ ຫຼາຍໝູ່ເດີນໄປ
ກໍຈິ່ງເຫັນຣາຊາ ປູ່ເຊົາດົງກວ້າງ
ເຂົາຈິ່ງມາຫູບທ້າວ ຣາຊາພູວະບາດ
ຝູງຂ້າຕາມບາດເຈົ້າ ບຸນກວ້າງບໍ່ທັນ ພຣະເອີຍ

ພຣະບາດຂຶ້ນຂີມ້າ　　ເຕັ້ນໄຕ່ນຳກວາງ
ຝູງຂ້າເດີນທາງຕີນ　　ບໍ່ທັນພຣະອົງເຈົ້າ
ເມື່ອນັ້ນເຂົາກໍຫຼົງເຫັນແກ້ວ　　ນາງຜີກັບເພດ
ເຂົາກໍນົບນອບໄຫວ້　　ພຍາເຈົ້າກ່າວຖາມ
ພຣະກໍໄປຫາໄດ້　　ນາງງາມຜູ້ປະເສີດ　ທີໃດນັ້ນ
ນາງນີ້ມາແຕ່ດ້າວ　　ແດນຫ້າວແຫ່ງ ໃດ　ພຣະເອີຍ
ແຕ່ນັ້ນພຣະກ່າວຕ້ານ　　ຈາຕໍ່ເສນາ
ເຮົາກໍຕາມກວາງທອງ　　ດົງເດີນໄພກວ້າງ
ກໍຈຶ່ງໄປພົບພໍ້　　ຂີນີຍັກໃຫ່ຽ
ມັນກໍຈັບຈີກມ້າ　　ກິນແທ້ບໍ່ນານ
ຍັງແຕ່ອົງກູເກົ້າ　　ຕົກລົງກິ້ງຢູ່
ແຂງວ່າບຸນບໍ່ກວ້າງ　　ຕາຍແທ້ຄອນມັນ　ແລະນາ
ກໍຫາກເປັນແຕ່ບຸນເຮົາແລ້ວ　　ເທວ ນາຈອນ
ກໍຈຶ່ງລຸກລານແພ້　　ມານຮ້າຍພ່າຍໜີ
ເຮົາຈຶ່ງເອົານາງນ້ອຍ　　ເທວາເປັນຄູ່　ນານີ້
ເຮົາຈັກເອົານາງເມືອຢູ່ຫ້ອງ　　ເປັນແກ້ວນຶ່ງເມັ້ງ　ແທ້ແລ້ວ
ແຕ່ນັ້ນເສນາພ້ອມ　　ໂຍທາຊົມຊື່ນ
ເຂົາກໍແຫນແຫ່ເຈົ້າ　　ບຸນກວ້າງຕ່າວມາ
ກັບທັງນາງຜີຮ້າຍ　　ຂີນີກັບເພດ
ມັນກໍຍ່າງຕູເຕີ້　　ນຳທ້າວພຣະບອດເມືອງ
ກໍຈຶ່ງມາເຖິງຫ້ອງ　　ທໍໄຊສວນດອກ

ຄືນນຶກກຸ້ມ ເຫັນທ້າວຊຶບຊິມ
ແຕ່ນັ້ນພິມພາແກ້ວ ນາງງາມໂສມສະອາດ
ເຫັນທີ່ພຣະບາດເຈົ້າ ມາແລ້ວຊຶບຊິມ
ເມື່ອນັ້ນຣາຊາເຈົ້າ ເປງຈາບກະສັດໃຫຍ່
ເຈົ້າກໍຂຶ້ນສູ່ຫ້ອງ ຫໍແກ້ວຄ່ອຍເຊົາ
ພຣະບອກເຈົ້າ ສະຖິດແທ່ນບັນລັງ
ເສນາຫາຍ ອະເນກນອງເນືອງເຝົ້າ
ອັນວ່າຂີ້ນີຮ້າຍ ນາງຜີຍັກໃຫຍ່
ມັນກໍປູ່ຜ່າງຂ້າງ ຫຽມທ້າວບໍ່ວາງ
ບັດນີ້ຈັກກ່າວເຖິງພິມພາແກ້ວ ເທວີນາງນາດ
ບົວຣະບາດບ້າຍ ມາເຝົ້າຍໍ່ນານ
ນາງກໍນິບນອບນົ້ວ ຖວາຍບາດບັງຄົມ
ເໜືອຫົວມາ ຮອດດີລີເຈົ້າ
ພຣະບາດຍົກທັບບ້າຍ ນຳແທ່ງກວາງທອງ
ນ້ອງຄະນຶງເຖິງພຣະ ບອກເມືອງເປັນເຈົ້າ
ປຽວວ່າຈອມຫົວເຈົ້າ ໄປໄກຫຼົງປ່າເສັງນາ
ພຣະກໍໄດ້ໜຸ່ມໜ້າ ມາຊ້ອນຕົ້ນຣຽມ ແທ້ນໍ
ບຸນເຖິງໄດ້ ນາງງາມມາເປັນເພື່ອນ
ກໍຈັກມີຄູ່ນ້ອນ ງ ຂ້າອຸ່ນກໍໃຈ ພຣະເອີຍ
ອັນວ່າກວາງຄຳນັ້ນ ພຣ ອົງເອົາໄດ້ບໍ່
ຮູ້ວ່າເຂົ້າປ່າໄມ້ ໜີມົ້ນດັ່ງລື ພຣະເອີຍ ?

ເມື່ອນັ້ນຣາຊາເຈົ້າ ພຍາຫຼວງຮັບພາກ
ຕ້ານຕໍ່ນ້ອງ ນາງແກ້ວຊູ່ອັນ
ພີ່ກໍພາພົນເຂົ້າ ຕາມກວາງໃນເຖື່ອນ
ໄປພົບພໍ້ ຜີຮ້າຍຍັກໂຂ
ມັນກໍຈັບເອົາມ້າ ໄປຈີກກິນເສັ້ຽ
(ພີ່ກໍກົວວາຍຕົກ ຂະມ່າໃຈບິນຢ້ານ
ເລີຍສະເດັນກົ້ງ ລົງດິນບໍ່ຮູ້ເມື່ອ)
ຕົກເກືອກກົ້ງ ດິນແດ້ງສແນ່ງວາຍ ແທ້ແລ້ວ
ພີ່ຈຶ່ງໄປພົບພໍ້ ແກ້ວແກ່ນເທວາ
ກໍຈຶ່ງເອົາບາງມາ ປູ່ເຜື່ອແຜງຂ້າງ
ນາງນັ້ນທັມມະຊາດເຊື້ອ ເປັນໜໍ່ເທວາ
ເກີຍມາເປັນເມັ້ຽຂວັນ ແຕ່ປາງປະຖົມພຸ້ນ
ເຮົາຈັກເອົານາງແກ້ວ ເທວາເປັນເອກ
ປູພ່າງຂ້າງ ທັນຕົ້ນຝ່າຍຂວາ ພີ່ແລ້ວ
ແລ້ວຈັກເອົາອວນໄວ້ ເປັນປາຍຖ້ານຕ່ຳ
ໃຫ້ເຈົ້າອຸປຖາກນ້ອຍ ນາງແກ້ວຊູ່ວັນ ພີ່ຖ້ອນ
ຖ້ອນວ່າພຣະກ່າວແລ້ວ ນາງນາດເລີຍສລົບ
ນີ້ຕີ້ຫວງ ກ່າວຈາຈິງຕ້ານ
ສັງວ່າຈອມຫົວເຈົ້າ ມາຈາຜິດຮີດເຮວນີ້
ສັງຈິເອົາໃໜ່ຂຶ້ນ ເປັນຕົ້ນເອກໂຫນ ເຈົ້າເອີຍ
ຄຳນີ້ດູດັ່ງຜິດຄອງເຄົ້າ ບູຮານເຖົ້າແກ່ ແທ້ນາ

ຂ້ານີ້ບໍ່ໃຊ່ເຊື້ອ ຊູນໄພ່ຊາວເມືອງ ພຣະເອີຍ
ຫາກແມ່ນແນວພູທອນ ສືບເມືອງຈິງແທ້
ຊູ່ກິນຊູ່ຫາກເປັນກະສັດເຊື້ອ ຊິນສອງສິບຄູ່ ກັນນາ
ແສນວ່າມີໝື່ນຊ້ອນ ຫຼຸມຂ້າງນັ່ງປອງ ກໍດີ
ບໍ່ຄວນໄລເສັງແກ້ວ ມູງຄູນຂອງເກົ້າ ເຮົາດາຍ
ຄວນທີ່ເອົາຫ້ອຍຄ້ອງ ຄໍໄວ້ແທນທວງ ເຈົ້າເອີຍ
ຄັນວ່ານາງກ່າວແລ້ວ ຕາມຮີດບູຮານ
ຣາຊາເລີຍ ໂກດເຄັນຄຳຮ້າຍ
ພິມມະທັດທ້າວ ຄືດຖຽດມີນາຍ
ຄືງແດງປານ ພ່າງໄຟຂາງຮ້ອນ
ເຈົ້າກໍໂກທາຮ້າຍ ຂິນເຄັນເລີບດ່າ
ຊາດທີ່ຍິງຂີ້ຮ້າຍ ມາອ້າງໂອດສະຫາວ ນີ້ເດ
ອັນວ່າບຸບເພພຸ້ນ ເຮືອງມາຈຳຈື້
ຍິງຜູ້ເປັນດັ່ງນີ້ ບໍ່ຄວນໄວ້ພ່າງເມືອງ ແທ້ນາ
ມຶງກໍຈຳກູໃຫ້ ໜີໄປຕາຍເສັງເປົ່າ
ແຂງວ່າບຸນບໍ່ກວ້າງ ຕາຍແທ້ຄອບມຶງ ຫັນແລ້ວ
ມຶງກໍພາງານໃຫ້ ເອົາກວາງເປັນປໂຍດ ໃດນັ້ນ
ມຶງກໍຄືນໃຄ່ຂ້າ ກູນີ້ຫຼຽງຈິງ
ກູບໍ່ລ້ຽງ ມຶງວ່າເປັນຄົນ ໄດ້ແລ້ວ
ມຶງນີ້ມີໂທສາ ໂທດຄວນພັນຂ້າ
ພຣະກັຣຍາໝູ່ທ້າວ ເພັຊຄາ ມາ ປົງງ

ສູຈິງເອົາພິມພາ　　ຜູກໄປຟັນຂ້າ
ແຕ່ນັ້ນເພັຊຄາດຟ້າວ　　ໂດຍອາດຣາຊາ
ມາຈັບເອົານາງງາມ　　ຜູກຈູງລົງຫ້ອງ
ແຕ່ນັ້ນພິມພານ້ອຍ　　ຊິລຫາໄຫ້ຫັ່ງ
ຮ້ອງສັ່ງເຈົ້າ　　ກຸມານນ້ອຍລູກຕົນ
ເມື່ອນັ້ນກຸມານເຈົ້າ　　ເຫັນເຂົາຈັບແມ່
ຖູແກ່ທົ້ນ　　ລົງແຫ້ຈາກຫໍ
ບາບໍ່ຊ້າ　　ເຣວຣີບພລັນໄປ
ຄວາມີຈັບ　　ແຈ່ງສະໄບທັງໄຫ້
ເມື່ອນັ້ນພິມພາແກ້ວ　　ບາຍແຂນຕົບລູກ
ໄຫ້ຕໍ່ເຈົ້າ　　ທັງຕ້ານສັ່ງບາ
ຄ່ອຍຢູ່ດີເປີສຸຣິວົງແກ້ວ　　ບຸດກາສເນີເນດ　ກູເອີຍ
ເຈົ້າຈົ່ງເມື່ອຢູ່ຫ້ອງ　　ຫໍແກ້ວແຫ່ງເຮົາ　ແມ່ຄ້ອນ
ບັດນີ້ແມ່ຈັກລົດຊີວມ້ຽນ　　ເສັຽຈາກບຸດດາ　ແມ່ແລ້ວ
ແມ່ຈັກມໍຣະນາຕາຍ　　ຈາກບາວັນນີ້
ເມື່ອນັ້ນສຸຣິວົງທ້າວ　　ກຸມານຂານແມ່
ອອດງຕ້ານ　　ພໍໜ້າອີດູ
ໂອນໍ ນາດາແກ້ວ　　ຄຸນໃບລົ້ນເກດ　ຂ້ອຍເອີຍ
ແມ່ຈັກມຸດມອດມ້ຽນ　　ຕາຍຊ້າເພື່ອເວນ　ແລະນໍ
ລູກຂໍຕາຍນໍາເຈົ້າ　　ເປັນຜີເສັຽສວ່າງ　ແມ່ເອີຍ
(ຈັກປູ່ເປັນກໍ່າພ້າ　　ບໍ່ເຫັນໜ້າແມ່ຄືງ　ນີ້ນາ

ປ້ານທໍ່ທຸກຍິງລົ້ນ　　ບໍ່ມີແມ່ບົວຣະບັດ
ແສນທຸກໃນໂລກາ　　ແມ່ບໍ່ມີພຽງຕູ້ມ)
ໃຫ້ລູກເອົາໃຜຜູ້　　ມາປຸນເປັນແມ່　ນໍ້ເດ
ເຖິງເມື່ອຍາມຄ່ຳຄ້ອຍ　　ຊິໄປຊົ້ນຜ້າຫົ່ມໃຜ　ແມ່ເອີຍ
ອັນນຶ່ງຍາມເມື່ອເຜົາໃນຫ້ອງ　　ຈິເອົາໃຜມາກອດ
ລູກຂໍຕາຍພ່າພ້ອມ　　ນຳແກ້ວເພື່ອນຊີວັງ　ແມ່ເອີຍ
ເມື່ອນັ້ນພຣະແມ່ເຈົ້າ　　ສລົບທ່າວທັງປືນ
ເພື່ອອີດູກຸມານ　　ເນຫນອງຣ່ຳໜ້າ
ແຕ່ນັ້ນຄືນເຊັ້ງກ້າ　　ໂຈມນາງລຸກນັ່ງ
ນາງຈິ່ງສັ່ງລູກນ້ອຍ　　ຕົວເຈົ້າຢ່າຕາຍ　ແມ່ຖ້ອນ
ເຈົ້າຈົ່ງຄືນເມື່ອສ້າງ　　ທຳບຸນຫາແມ່
ອັນວ່າຝູງເສື້ອຜ້າ　　ຄ່ຳແກ້ວແຫ່ງຣາ
ເຈົ້າຈົ່ງເທທານໃຫ້　　ຝູງຄົນທຸກຂມອດ　ນັ້ນເນີ
ກັບທັງປາຍແຈກໃຫ້　　ຄົນໃຊ້ແຫ່ງຣາ　ແມ່ເນີ
ອັນວ່າຝູງສາວໃຊ້　　ບາຄານປາຍໃຫ້ຄູ່
ກັບທັງນາງພີ່ລ້ຽງ　　ຂອງເຈົ້າແຈກປາຍ　ແມ່ເນີ
ເມື່ອນັ້ນຝູງພີ່ລ້ຽງ　　ທັງໝູ່ສາວສນົມ
ເຂົາອີດູຕົນນາງ　　ຄັ່ງຫວງຄາແຄ້ນ
ເຂົາກໍປາກບໍ່ໄດ້　　ຂັງຢູ່ໃນອົກ
ມືຟູມຟາຍ　　ຊູ່ຄົນທົວໄຫ້
ແຕ່ນັ້ນກຸມານທ້າວ　　ສຸຣິວົງໂພພິຣາດ . . . .

ໃຈຂນາດກ້າ ຈາດ້ານແມ່ດິນ
ດູຣາເຈົ້າ ມາດາຈອມເກດ ຂ້ອຍເອີຍ
ເຈົ້າຢ່າຈຳລູກນີ້ ຄືນເຂົ້າສູ່ເມືອງ ແມ່ເອີຍ
ຢ່າໄດ້ເສັຽດາຍທ້ອນ ຂອງເຮົາມູນເກົ່າ ຝູງນັ້ນ
ຄັນວ່າບິດບຶງກ້ວາງ ເມືອໜ້າຫາກເກີດມາ ແມ່ເອີຍ
ອັນວ່າຈອມຄຸນເຈົ້າ ນານດາຫາຍາກ ແທ້ນາ
ຄັນວ່າເຈົ້າຫາກລິດຊີວັນມ້ຽນ ແຫ່ງສູ້ສ່ວນກາຍ ແມ່ເອີຍ
ຣາບໍ່ເສັຽດາຍສ້າງ ທີ່ງເມືອງເປັນໃຫ່ຽ ສັງແລ້ວ
ລູກຂໍຕາຍນອດມ້ຽນ ນຳເຈົ້າບອດຄຸນ ແມ່ເອີຍ
ເມື່ອນັ້ນເພັຊຄາດຮ້າຍ ເຂົາແກ່ຈູງໄປ
ສຸຣິວົງຈັບແຂນມາດາ ບໍ່ວາງໄປພ້ອມ
ແຕ່ນັ້ນພົມພາເຈົ້າ ວອນໆເອີ້ນສັ່ງ
ຝູງພີ່ນ້ອງ ສາວໃຊ້ຊູ່ຄົນ
ຄ່ອຍປູ່ດີເປີ ຝູງພີ່ລ້ຽງ ທັງໝູ່ຫາສີ
ກູຈັກມ່ຣະນາຕາຍ ຈາກສູວັນນີ້
ສູຈົ່ງຄືນເມືອຫ້ອງ ທຳປາງຜາສາດ ເຮົາທ້ອນ
ທຸກຄ່ຳເຊົ້າ ສິບຫ້າປ່າວາງ ນັ້ນເນີ
ອັນວ່າເຄື່ອງບຸ່ງພ້ອມ ອັນປູ່ໃນທຳກູນັ້ນ
ສູຈົ່ງປ-ຍປັນກັນ ບຸ່ງທີ່ງຍ ໄວ້
ອັນວ່າເງິນຄຳ ແກ້ວ ໃຫ້ເອົາ ການເາທອດ
ສູຈົ່ງໜາຍປາວນ້ຳ ໃຫ້ໄປຄ້າຣອດກູ ແດ່ເນີ

ຄ້ອນວ່ານາງສັ່ງແລ້ວ   ເຂົາແກ່ຈູງໄປ

ຝູງໝູ່ນາງສາວສີ   ເນຫນອງນຳເຈົ້າ

ເຂົາກໍຕີອົກໄຫ້   ຄອຍຄາບດູເປົ່າ

ເມື່ອຈັກໄຫ້ຟັ່ງຟື້ນ   ກໍກິວປ້ານພຣະບອດເມືອງ

ເຂົາກໍຫົນອົກໂອ້   ໂອ່ນອົກສັ່ນ

ປາກບໍ່ໄດ້   ຄາແຄ້ນຄັ່ງຫວງ

ເຂົາກໍກົ້ມໝອບໄຫ້   ນ້ຳຕາປາດລົງດິນ

ເປັນດັ່ງໄຫສວນຫົດ   ປູກແດງບານແລ້ງ

ທັງມວນພ້ອມ   ສງັດເປັນງຽບຢູ່

ເພາະເພື່ອເຂົາໂສກເສົ້າ   ນຳເຈົ້າພຣະບອດນາງ ຫັ້ນແລ້ວ

ບັດນີ້ຈັກກ່າວເຖິງພິມພາແກ້ວ   ເຂົາຈູງຜູກແກ່ໄປນັ້ນ

ນາງກໍຊົດດົງໄຫ້   ນ້ຳຕາຍ້ອຍຖຸ່ມແຖວ

(ທຸກຍິ່ງລ້ຳ   ພົ້ນລົ້ນອະວິໄສ)

ນີ້ຝູມຝາຍ   ຍ່າງໄປທັງໄຫ້

ກໍຈື່ງກາຍສວນກວ້າງ   ເຖິງດົງແດນເຖື່ອນ

ຝູງໝູ່ເພັຊຄາດກ້າ   ເຂົາອ້ອມແວດລະວັງ

ເຂົາກໍຈຳນາງແກ້ວ   ພິມພາພອບນັ່ງ

ເຊືອກຜູກໄວ້   ຈິຝັນຂ້າບອດນາງ

ແຕ່ນັ້ນສຸຣິວົງຫ້າວ   ແຂວນຄໍພຣະແມ່

ຄິດຈັກໃຫ້ເພັຊຄາດຂ້າ   ນຳແກ້ວແມ່ຕົນ

ແຕ່ນັ້ນເຂົາກໍກູ່ງແກະໄງ້   ນີ້ອອນກຸມມານ

ບາກໍປົດມື້ເຂົາ   ກອດມາດາໄວ້
ແຕ່ນັ້ນເພັຊຄາດກ້າ   ດ້ານກ່າວປຶກສາ
ຄວນທີ່ເຮົາເມືອທູນພູມີ   ພຣະບອດເມືອງເປັນເຈົ້າ
ແຕ່ນັ້ນເຂົາຮີບໃຊ້   ທູນຄອບສອງຄົນ
ເຂົາກໍເຮວພລັນເປືອງ   ຮອດພຣະເມືອງເປັນເຈົ້າ
ເພັຊຄາດກົ້ມ   ທູນຣາຊເຣງໄບ
ໄຂກອນຄຳ   ຂາບທູນພຣະອົງເຈົ້າ
ທານໂທດທ້ອນ   ລະອອງບາດທູລີ
ຟູງຂ້າເອົາບາງແກ້ວ   ເທວີໄປເຖິງບ່ອນ   ພາຍພຸ້ນ
ອັນວ່າພຣະບອດນ້ອຍ   ກຸມານທ້າວກອດຄໍ   ພຣະເອີຍ
ທ້າວກໍຮັດກອດກ້ຽວ   ຕິດແມ່ມາດາ
ວ່າຈັກທານຊີວັງ   ພໍ່ມາດາເຈົ້າ
ສັນໃດແທ້   ຈອມເມືອງພູວະບາດ
ພຣະຈັກພາຍໂພດຂ້າ   ອັນໃຊ້ດັ່ງລື   ພຣະເອີຍ
ເມື່ອນັ້ນຣາຊາເຈົ້າ   ພຍາຫຼວງກົ້ວໂກດ
ສູຈົ່ງຟັນພ່າພ້ອມ   ກັນນັ້ນບາດດຽວ   ທ່ານເອີຍ
ອັນວ່າກຸມານນີ້   ກູແພງສຸດທະບິງ   ຈິງນາ
ມັນບໍ່ຄືດພໍ່ລ້ຽງ   ຕາຍຊ້າຊ່າງມັນ   ທັ້ງຖ້ອນ
ມຶງຈົ່ງໄປຟັນຂ້າ   ທັງສອງແມ່ລູກ   ຈິງເຖີ້ນ
ໃຫ້ຂ້າຈິດຊົ່ວຊ້າ   ບາຫຼຸ້ງບາກກໍໃຈ   ທ່ານເອີຍ
ແຕ່ນັ້ນເສນາພ້ອມ   ຊາວເມືອງໄດ້ຍິນຂ່າວ

ວ່າຈັກຂ້າໜໍ່ທ້າວ ບຳແກ້ວແມ່ຕົນ
ເຂົາກໍປາກບໍ່ໄດ້ ກັ້ນໂສກໃນຈິດ
ຄຶດອີ່ດູກຸມານ ໜໍ່ເນື້ອງຄີດ້ອຍ
ເຂົາກໍທົນສະອອນໜ້ອມ ບຳບາບຸນມາກ
ອັນວ່າຝູງຊ່ວງໃຊ້ ໜອງໜ້ອມຊູ່ຄົນ ແທ້ແລ້ວ
ເມື່ອນັ້ນຣາຊາເຈົ້າ ຈັດເຂົາຄືນຮີບ
ບອກໃຫ້ເພັຊຄາດຂ້າ ເສັ່ງແທ້ລູກຕົນ
ເພື່ອວ່າຂີນີຮ້າຍ ຮວາຍມົນກຸ້ມກ່ອນ
ຮັກຍັກຮ້າຍ ຊັງແກ້ວລູກເມັງ ແທ້ແລ້ວ
ແຕ່ນັ້ນເພັຊຄາດຟ້າວ ຮີບຂາບລາລົງ
ເດີນພລັນເປືອງ ຮອດດົງເຖິງແກ້ວ
ບັດນີ້ຈັກກ່າວເຖິງສັກໂກໄທ້ ອິນທາເທວະຣາດ ກ່ອນແລ້ວ
ທົນສີລາບາດໃຫ້ ເລີບກະດ້າງແກ່ນແຂງ
ພຣະຈົ່ງຫົງ ໆໂລກກ້ວາງ ໃນທົບຊົມພູ
ກໍຈິ່ງເຫັນພົມພາ ພຣະຍອດບາງແພງລ້ານ
ກັບທັງສຸຣິວົງນ້ອຍ ກຸມານແນບຫູ່
ພຣະພໍ່ເຈົ້າ ຈະຟັນຂ້າມອດຊີວັງ
ແຕ່ນັ້ນອິນທາເຈົ້າ ລົງມາໂດຍຮີບ
ເຖິງແຫ່ງຫ້ອງ ດົງກວ້າງບໍ່ນານ
ອິນທີຣາດທ້າວ ກັບເພດໂດຍພລັນ
ເປັນແມງວັນ ຮີບໄປມີຊ້າ

ຈັບປູ່ໃນສັບງ້າວ	ຄົນຫານເພັຊຄາດ	
ພຣະກໍຈັບປູ່ຫັ້ນ	ດີແລ້ວບໍ່ຕຶງ	
ແຕ່ນັ້ນເພັຊຄາດຜູ້	ສອງຄົນໃຊ້ຣີບ	ມາແລ້ວ
ຂ້າກໍມາກ່າວເວົ້າ	ຜາບຜ້ຽນຊູ່ອັນ	
ວ່າໃຫ້ພັນເສັງຊ້າ	ທັງສອງແມ່ລູກ	
ເຂົາບໍ່ຊ້າ	ດາຫ້າງແຕ່ງດີ	
ເມື່ອນັ້ນສຸຣິວົງໄດ້	ຍິນຄວາມເຂົາກ່າວ	
ວ່າຈັກຂ້າທ່ອນທ້າວ	ນຳແກ້ວແມ່ຕົນ	
ທ້າວກໍບໍ່ປ່ອນຢ້ານ	ກົວແຫ່ງຄວາມຕາຍ	
ບາຄານຜາບຄຳຈາ	ຕໍ່ມາດາແກ້ວ	
ຣາຈິ້ງຕາມກັນທ້ອນ	ເວນຣາມາຮອດ	ຈິ່ງແລ້ວ
ຣາຈິ້ງແບງບອກຟ້າ	ຫາຍສ້ຽງບາບເວນ	ແມ່ເອີຍ
ແຕ່ນັ້ນບາກໍເກາະກອດໄວ້	ຄໍແມ່ມາດາ	
ສອງມືຮັດ	ກອດຄໍດຶດໜັ້ນ	
ແຕ່ນັ້ນຄົນເຊງກ້າ	ດາດີຕົກແຕ່ງ	
ມັນກໍບໍເງືອດງ້າວ	ຟັນແຫ້ບໍ່ຄາ	
ເມື່ອນັ້ນອິນຕາເຈົ້າ	ຈັບດາວດຶງແກ່	
ເພຊຄາດກ້າ	ສະເດນລົ້ມທ່າວຫງາຍ	
ເຂົາບໍ່ຕຶງຕົນໄດ້	ໂອຍຄາງເຈັບປວດ	
ມືທັງຕົວກະດ້າງ	ມືຊ້າງ່ອຍເສັງ	
ໃຈອ່ອນອ້ວນ	ນ້ຳຕາຫຼັ່ງເປັນແຖວ	

ເພື່ອວ່າເຕໂຊອິນ   ຂຶ້ນແຂງເຂົາປ້ານ
ແຕ່ນັ້ນເຂົາຈິ່ງບໍ່ມີໄຫວ້   ບາຄານເຈົ້າອ່ອນ
ເຈົ້ານີ້ບຸນມາກລົ້ນ   ເຫຼືອພົ້ນແຜ່ນໄຕ   ແທ້ແລ້ວ
ຂໍໃຫ້ເທວີແກ້ວ   ຈອມທັບນາງນາດ
ເອົາໜໍ່ທ້າວ   ເດີນດັ້ນດ່ວນໜ   ທ່ຽວຖ້ອນ
ຝູງຂ້າຈັກທູນເຈົ້າ   ຈອມເມືອງພຣະພໍ່
ວ່າໄດ້ຂ້າໜໍ່ເຊື້ອ   ສອງເຈົ້າທ່ຽງຈິງ   ແມ່ເອີຍ
ເຈົ້າຈິງແລຫິງກ້ຳ   ທາງໄກຍາໄດ້ຕ່າວ   ຄືນຖ້ອນ
ຄັນພຣະຮູ້ຂ່າວເບື້ອງ   ຣາເຈົ້າສ່ວນຕາຍ   ແທ້ແລ້ວ
ເມື່ອນັ້ນເທວີແກ້ວ   ພິມພານາງນາດ
ຈູງເອົາແຂນອ່ອນນ້ອຍ   ເລີຍຍ້າຍຍ່າງໄປ
ນາງກໍວອຍໆເຂົ້າ   ດົງດອນພົ້ນເຂດ
ເປັນແຕ່ເທເວດເຈົ້າ   ພຣະອິນທ້າວຊ່ອຍຊູ
ສອງກໍເນົາໃນຫ້ອງ   ດົງດອນເຊົາຈອດ
ຮອດຫ້ວຍນ້ຳ   ລົງລ້າງອາບສີ
ຄັນວ່າພໍດີແລ້ວ   ຄືນມາເຊົາຮົ່ມ
ນາງກໍຫັກພິດໄມ້   ປູແລ້ວເລົ່ານອນ
ເທວະດາດ້າວ   ຮັກສາສອງອ່ອນ
ສອງກໍບໍ່ປ່ອນປ້ານ   ເສືອຊ້າງຫຼີກໄກ   ເຈົ້າເອີຍ
ບັດນີ້ຈັກກ່າວເພັຊຄາດກ້າ   ເຂົາຕ່າວຄືນມາ
ເຂົາກໍເອົາຄົນຕາວ   ສ່ວຍສີໃນນ້ຳ

ກໍຈຶ່ງຄືນມາເຝົ້າ ຣາຊາອົງອາດ
ວ່າຂ້າສອງຣາດໄທ້ ເສັງແລ້ວຊິບຊົວັງ ແທ້ແລ້ວ
ແຕ່ນັ້ນຂີນີ້ຜູ້ ຜີສວາງກັບເພດ
ນັບກໍຊົມຊື່ນໜ້າ ຫົວແບ້ນຕໍ່ພຍາ ຫັ້ນແລ້ວ
ເມື່ອນັ້ນຣາຊາເຈົ້າ ເປງຈານກະສັດໃຫ່ງ
ກັບທັງນາງຍັກຮ້າຍ ເນົາຫ້ອງນັ່ງງຽງ
ຝູງໜຸ່ມນາຣີສ້ອຍ ສາວສນົມຫຼາຍໝື້ນ
ເຂົາກໍຮັບແຈ່ມເຈົ້າ ນາງແກ້ວຕ່າງເມືອງ
ລາງພ່ອງສວາຍຫາໄດ້ ໂພຊະນັງຂອງແຈກ
ໝ້ຽງໝາກພ້ອມ ຖວາຍເຈົ້າພຣະບອດນາງ
ສັພສັບພ້ອມ ຂອງກິນມີມາກ
ສີແຈ່ມເຈົ້າ ເພງລ້ານຄ່ອຍກິນ
ພໍເບື່ອສຸຣິໂບຄ້ອຍ ແສງລົງມົວມຶດ
ຈັບທະໃສ່ສ່ອງແຈ້ງ ເຮືອງຂຶ້ນຂອບເຂົາ
ຟັງຍິນຄື້ນໆກ້ອງ ກອງຍາມເຄົ້າຄື້ນ
ຝູງໜູ່ໄທເລັກນ້ອຍ ແທນເຈົ້າແວດລະວັງ
ແຕ່ນັ້ນພຣະບາດເຈົ້າ ໄດ້ອ່ອນນາງພີ
ມາເຟືອແຝງ ກ່ອນພຣະໄທອຳອົງ
ສອງເຟືອຝັ້ນ ສເນຫາຮັກຮູບ
ພຣະກໍກົ້ວກົບແກ້ວ ສວາງເສື້ອເສບສົນ
ກໍຫາກດູເລີດລ້ຳ ສນຸກຍິ່ງອະວິໄສ

ອັນແຕ່ນາງມີໃນໂຮງຫຼວງ ກໍບໍ່ປູນປານໄດ້
ຣາຊາຊ້ອນ ນາງນີ້ກົວກິນ
ສອງກອດກ້ຽວ ເຜືອຝັ້ນບໍ່ນາຍ
ພໍເມື່ອຣາຕີຂ້ອນ ກອງຄິວເຄົ້າອັ່ນ ມາແລ້ວ
ຝູງສໍ່າຂ້າ ເຕີນຕັ້ງແຕ່ງຄິວ
ເມື່ອນັ້ນພຣະບາດເຈົ້າ ລຸກອາບໂສງສີ
ຄັນເກີຫອມ ອິ່ມຈັບເຈືອຄູ້
ພໍເມື່ອສຸຣິໂຍຂຶ້ນ ເຮືອງແສງໃສສ່ອງ
ເຂົາກໍຕິກແຕ່ງຕັ້ງ ພາເຂົ້າຂາບຖວາຍ
ພຣະບາດເຈົ້າ ສເວີຍໂພດພາງາຍ
ພໍປະມານຖອຍ ເລີກລາເລີຍແລ້ວ
ຝູງສໍ່າຂ້າ ມ້ຽນເຄື່ອງພາຄໍາ
ຣາຊາເຕີນ ແຕ່ງຄິວເມືອບ້ານ
ຄັນວ່າບໍຣະບວນແລ້ວ ພູຫອມສະເດັດອອກ
ພຣະກໍຂຶ້ນຂີ່ຊ້າງ ສານຕົ້ນເຄື່ອງຄໍາ
ເສນາທ້າວ ບໍຣິວານຫຼາຍໝູ່
ບີດງບ້າຍ ໄທເຂົ້າສູ່ເມືອງ
ແມ້ງບົ່ງຄັບຄັ່ງເຫົ້າ ເຖິງຣາຊປາງຫອງ
ຣາຊາປຸດ ຈອດຮຽງເກີຍກວ້າງ
ພູມີເຈົ້າ ເປງຈານກະສັດໃຫ່ງ
ພຣະກໍຂຶ້ນສູ່ຫ້ອງ ໂຮງກວ້າງຄ່ອຍເຊົາ

ພູເບດເຈົ້າ ສະຖິດແທ່ນບັນລັງ
ເສນາຫາຍ ອະເນກນອງກິນເຜົ້າ
ອັນວ່າຂີ້ນີຮ້າຍ ນາງຜີບັກໃຫຍ່
ມັນກໍປູ່ຜ່າງຂ້າງ ຫຍຸມຫ້າວບໍ່ວາງ ແທ້ແລ້ວ
ບັດນີ້ຈັກກ່າວຝູງຄົນຊັ້ນ ໃນຫໍນາງນາດ
ເຂົາກໍຂຶ້ນສູ່ຫ້ອງ ຫໍແກ້ວແທ່ງນາງ
ເຫັນແຕ່ຜາສາດເຈົ້າ ນາງນາດເນີ້ມພາ
ນາງກໍນໍຣະນາດາຍ ຈາກໂຮງສູນເສົ້າ
ເຫັນແຕ່ຫໍນອນຫ້ອງ ຕຽງທອງໜອງໝົ່ນ
ເຫັນແຕ່ເຄື່ອງນຸ່ງພ້ອມ ທັງຜ້າບ່ຽງສະໄບ
ເຫັນແຕ່ຂັນສລາຕັ້ງ ພູວັນຊ້ອງຊໍ່
ເຂົາກໍທຸກຍາກໄຫ້ ຫາແກ້ວພຣະນອດນາງ
ເຫັນແຕ່ຊອງນອນພ້ອມ ໝອນລາຍຊ້ອນເສື່ອ
ນາງເຄີຍນອນແນບເນື້ອ ຊຸ່ມຕູ້ມລູກຕົນ
ເຂົາກໍທົບອົກໄຫ້ ເຫັນຫໍນາງນາດ
ເຫັນແຕ່ເຄື່ອງຫຼີ້ນເຈົ້າ ນອດເນື້ອງ
ຝູງພີ້ລ້ຽງ ມື້ຜ່າຜລຽງອົກ
ຊິລຫາຕົກ ປາດລົງບົນບ້ອນ
ເຫັນແຕ່ຜ້ານ້ອຍໆ ສະໄບບ່ຽງກາສາ
ນາເຄີຍທົງ ຊູ່ວັນຖືຫຼີ້ນ
ບັດນີ້ຕາຍເສັຽເຈົ້າ ທັງສອງແມ່ລູກ

ປະໄປ່ຜາສາດກວ້າງ ຕາຍຄ້າງປູ່ດົງ ແລະບໍ່
ໂອບໍ່ເຫັນແຕ່ຫໍບອນເຈົ້າ ທັງສອງແມ່ລູກ ແລະບໍ່
ປານນີ້ ປານນີ້ຄົງເນົ່າເປື້ອ ກາແຮ້ງຕອດກິນ ແລະບໍ່
ໂອບໍ່ຍາມເມື່ອທ້າວປູ່ຫ້ອງ ດອມແມ່ນາດາ ບັ້ນບາ
ທ້າວເຄີຍເດີນໄປມາ ປາກຈາສຽງຈ້ອຍ
ບັດນີ້ກຸມານນ້ອຍ ທັງນາງຕາຍຈາກ ເສັຽແລ້ວ
ປະເປົ່າຍູງພີ່ນ້ອງ ທັງຂ້ອຍໄພ່ເມືອງ ແລະບໍ່
ເອົາກໍຊິລຫາໃຫ້ ຫານາງທັງລູກ
ທຸກຄໍາເຊົ້າ ກະນຶງເຈົ້າບໍ່ລືມ ແທ້ແລ້ວ
ບັດນີ້ຈັກກ່າວເຖິງອາຊາເຈົ້າ ເປັງຈານກະສັດໃຫ່ຽ ກ່ອນແລ້ວ
ພອະກໍບອກແກ່ເສນດທ້າວ ດາຫ້າງເຄື່ອງເຄົາ
ຈົ່ງໃຫ້ເອົາມາພ້ອມ ພານມະນາທັງສີ
(ສູຈົ່ງຕົກແຕ່ງຫ້າງ ລິນທະລ້າງໂລດສົງ)
ອຸພິເສກເຈົ້າ ນ້ອຍອ່ອນນາງບີ
ເປັນເທວີ ເອກໂທນທັນອ້າງ
ແຕ່ນັ້ນຂຸນຫຼວງເຈົ້າ ໂດຍຄໍາເຣວຣິບ
ເອົາກໍຕົກແຕ່ງຫ້າງ ນາພ້ອມຊູ່ວັນ
ແຕ່ງທັງຫໍໃສງນ້າ ລິນຄໍາຣູບນາກ
ເອົາກໍປຸກກ້ວຍອ້ອຍ ລຽນລ້ອມພ່າງທາງ
ມີທັງທຸງໄຊພ້ອມ ພິດານນຸງເມກ
ຣົມກົງກັ້ງ ເປັນຖ້ານຖືຖັນ

ມີທັງຂົວເງິນພ້ອມ	ຂົວຄຳພໍຄູ່
ລົນກ່າຍໄວ້	ເລີຍແລ້ວບໍ່ນານ
ຄັນວ່າຄົບເຄື່ອງແລ້ວ	ເຊີນຣາຊເຮງໃບ
ທັງບາງງານ	ສູ່ຫໍໂສງບ້ານ
ເຂົາກໍບີຣະມິນເຈົ້າ	ມະຫາສົມຕົນປະເສີດ
ສົບເສກບ້ານ	ມີນແລ້ວໂສດໂສງ
ຫຼິງດູຊວາດງບ້ານ	ໄຫຼ່ລົນຄຳ ພຸ້ນເປີ
ເສນາຫຼາຍ	ຄັ້ງຄົບໂສງເຈົ້າ
ບໍຣະບວນແລ້ວ	ສອງສີສະເດັດອອກ
ແຫນແຫ່ເຈົ້າ	ຫອງລ້ານສູ່ສະຖານ
ແຕ່ນັ້ນພານມະບາເຂົ້າ	ຖວາຍພອນພູວະບາດ
ຈົ່ງໃຫ້ພຣະບາດເຈົ້າ	ສະຖຽນໝັ້ນໝື່ນປີ ແດ່ຖ້ອນ
ກັບທັງເທວີແກ້ວ	ຫຽມສອງສົມຄູ່
ຈົ່ງໃຫ້ສຸກບົງລ້ຳ	ພັນເຂົ້າໝື່ນວະສາ
ຈົ່ງໃຫ້ມີໄຊກ້າ	ສັດຣູຂາມອ່ອນ
ຮ້ອຍປະເທດທ້າວ	ມານ້ອມສ່ວຍໄສ ແດ່ຖ້ອນ
ຄັນວ່າບໍຣະບວນແລ້ວ	ເສນາລາເລີກ
ເຂົາກໍລົງຈາກຫ້ອງ	ພຣະເມືອງເຈົ້າຊູ່ຄົນ
ພໍເມື່ອສຸຣິເບດຍ້າຍ	ລັບລ່ຽມເຂົາຫອງ ແລະເປີ
ນາຍຄົວເຂົາ	ແຕ່ງແລງປຸນຕັ້ງ
ເມື່ອນັ້ນພຣະບາດເຈົ້າ	ສເວີຍໂພດພາແລງ

24/VII
ห้ามจำหน่าย

ບໍ່ຣະບວນຖອຍ　　ເລີກທະລາໄລລ້າງ
ຣາຊາເຈົ້າ　　ທັງນາງນ້ອຍນາດ
ນ້ຳລູບບົ້ວ　　ສອງເຈົ້າຢູ່ສະຖຽນ　　ແທ້ແລ້ວ
ບັດນີ້ໃບດີກາບັ້ນ　　ເປງຈານໄວ້ກ່ອນ
ອັນວ່າຕອນຕໍ່ນີ້　　ໄປໜ້າຊິກ່າວນາງ　　ເຈົ້າເອີຍ

ບັ້ນນາງພິມພາແລະລູກເດີນປ່າ

– ບັດນີ້ຈັກກ່າວເຖິງພິມພາຄ້າງ　　ກາງໄພທັງລູກ　　ກ່ອນແລ້ວ
ສອງກໍເຊົາຣິມໄບ້　　ມີແຮງແລ້ວເລົ່າໄປ
ສອງກໍພາກັນເຂົ້າ　　ອະຣັນຍາເດີນປ່າ
ສອງແຈ່ມເຈົ້າ　　ເດີນດັ້ນຄວ່າໄປ
ຝູງໝູ່ເສືອແຮດຊ້າງ　　ຄວາຍເຖື່ອນທິວຣະພີ
ທັງໝີເໝືອຍ　　ໝຸ່ກະທິງງົວຮ້າຍ
ມີທັງງູສະເພາຮ້າຍ　　ຈິງອາງທັງເຫົ່າ
ຝູງໝູ່ເງົາງອດຮ້າຍ　　ໜີເວັ້ນທີ່ ກໄກ
ເພາະເພື່ອເດໂຊເຈົ້າ　　ເທວາຊູ່ຊ່ອຍ
ສັດສິງເນື້ອ　　ໜີເວັ້ນທີ່ ກໄກ
ທີ່ ງດູພູຜາຂັ້ນ　　ຫີນຕັນເດີນຍາກ
ເລີຍເລົ່າເປັນຊ່ອງໄວ້　　ທາງເທົ້າດຸ່ງເດີນ
ດູກະການຜ້ຽງ　　ງາມດຽງຮາບ
ເໝືອນປະດຸ ດັ່ງໜ້າ　　ກອງກ້ຽງຮາບງາມ

ຄ້ອນວ່າສອງກາຍແລ້ວ　　ເປັນດັງສັນເກົ່າ
ມີທັງຫີນໃຫຍ່ຕັ້ງ　　ພາຂັ້ນໜື້ນດອຍ
ແນ້ງບຶ່ງເຖິງສະພັງນ້ຳ　　ເປັນໜອງພຽງຮາບ
ສອງແຈ່ມເຈົ້າ　　ແພງລ້ານລອດເຊົາ
ພໍເມື່ອວັນຄ່ຳຄ້ອຍ　　ສອງພ່ຳພານອນ
ຄອນງຶດ　　ຊູ່ລວງເລີຍໜ້ອມ
ພັງຍິນເປັດປ່ອງຮ້ອງ　　ໃນເຖື່ອນໄພສົນ　ພຸ້ນເປີ
ນາງຄານຄຶດ　　ຮ່ຳຄະນຶງຫຼາຍຊົ້ນ
ພໍເມື່ອເດິກມາແລ້ວ　　ເໜື່ອຍຮວາຍຮ່ຳ ປາດ
ນາງກໍເລີຍນັ່ງໄຫ້　　ຄາແຄ້ນຄັ່ງທວງ
ໂອນໍນາອີດູດິນແກ້ວ　　ບຸດດາເຈົ້າລູກ　ກູເດ
ພອຍໄດ້ມາຫອດເນື້ອ　　ນອນຄ້າງແຄ່ໄພ　ນີ້ເດ
ຄຶດເມື່ອເນົາໃນຫ້ອງ　　ປາງຫອງຜາສາດ　ວັນນັ້ນ
ສຸກບົງລ້າ　　ມີພ້ອມຊູ່ອັນ　ແມ່ນາ
ມີທັງສຸດມ່ານກັ້ງ　　ເນງອາດໜອນລາຍ
ໃໝຄຳສັບ　　ແສ່ວສົນປະດັບແກ້ວ
ມີທັງເສື່ອອ່ອນພ້ອມ　　ໝອນເທົ້າແສ່ວດາວ　ແມ່ນາ
ແມ່ກໍພານອນຫ້ອງ　　ເວໄຊຍົນຜາສາດ
ມີຜ້າລາຍດອກໄມ້　　ນາດຸ້ມຕື່ມນອນ　ແມ່ນາ
ໂອນໍບັດນີ້ນາບແລ່ນຕ້ອງ　　ເວນທາກນຳຈົນ　ແລະນໍ
ກໍຫາກກັນເຮົານີ້　　ພາກເມືອງມານີ້

ຕັ້ງຫາກຫາຍພໍານີ້ ບອນເດືອນໃພຫນາ
ມືຫັງວາໂບພັດ ເມື່ອແລງບອນແລ້ງ
ຄ້ອມວ່ານາງຈົ່ມແລ້ວ ມືຜ່າຕີທວງ
ອັນວ່າກອງແພງນາງ ຄ່ອຍນອນໃນດ້າວ
ຫົງໆດູດາວເລົາລ້ອມ ແສງພຣະຈັນເຮືອງຮຸ່ງ
ໃສ່ສ່ອງແຈ້ງ ຄວາງຟ້າຮຸ່ງເຮືອງ
ກໍຫາກອໍຣະຊອນລ້ຳ ຍາມຣະດູເດືອນສີ່
ດີແກ່ເຫືອຍຫນອກນ້ອຍ ຣວາຍໄມ້ຫນ່ວງຫນ◌ວ
ແຕ່ນັ້ນສອງແຈ່ມເຈົ້າ ຕຸ້ມຫົ່ມຜືນແດງ
ວອນໆຫຼັບ ຊິ່ວຍາມໃນຜ້າ
ພໍເມື່ອຣາດີຄ້ອຍ ກອງຄິວເກົ້າອັ່ນ ມາແລ້ວ
ຟັງນີນນິກຮ່ຳຮ້ອງ ຮຽວໄມ້ຮ່ຳໄຣ
ແຕ່ນັ້ນສຸຣິວົງນ້ອຍ ກຸມານເລີຍຕື່ນ
ເຈົ້າກໍນິວຣະບາດນ້າຍ ຄືງຄ້ອມນັ່ງເນົາ
ອັນວ່າກອງແພງເຈົ້າ ພົມພາຕົນແມ່
ນາງກໍເລີຍຕື່ນແລ້ວ ກະຊັງຮູ້ຮຸ່ງຄືງ
ຄ້ອມວ່ານາງຕື່ນແລ້ວ ລຸກນັ່ງດອມນາ
ນາງກໍຫຼຽວໄປມາ ຮ່ຳຄະນິງທວງມ້າງ
ບັງເລົາຫຼຽວເຫັນແກ້ວ ບຸດດາລົບລູກ
ໃຈວູ່ຮ້ອນ ທວງສະບັ້ນເມື່ອຍມະໂນ
ນາງກໍຊວງກອດອຸ້ມ ເຈົ້າ.ອ່ອນກັບອົກ

ສາຍໃຈກູ ເວທນານີ້ມ້ວ
ຄ້ອນວ່ານາງຈົ່ມແລ້ວ ເລີຍຮຸ່ງເສັ່ງແສງ
ສຸຣິໂຍໃສ ສ່ອງດິງດູແຈ້ງ
ແຕ່ນັ້ນນາງນາດເຈົ້າ ທັງອ່ອນກຸມານ
ເລີຍສິງສີ ສ່ວນມືທັງໜ້າ
ພໍຄາວແລ້ວ ທັງສອງແມ່ລູກ
ຈູງເອົາແຂນອ່ອນນ້ອຍ ເດີນດັ້ນດຸ່ງໄປ
ລຽບຝັ່ງນ້ຳ ສະພັງຮາບພຽງງາມ
ຕັ້ງຫາກນາງນີ້ ດອກດວງຫອມເຮົ້າ
ຫຼີງສະພັງພຽງກ່ຽງ ກີນນະຣີມີມາກ
ດູເລີດລ້ຳ ໄພກວ້າງຮຸ່ງເຮືອງ
ມີທັງສາລີເຂົ້າ ສຸກແດງເຮືອງເຮື່ອ
ມີທັງຝູງໝູ່ເຕົ້າ ແດງພ້ອມອະເນກນອງ
ມີທັງແດງໂມພ້ອມ ແດງກົວຂືນໄຂ່ວ
ເດືອສອດແສ້ວ ຫຼາຍລົ້ນອະເນກນອງ
ມີທັງອຸດສຸອ້ອຍ ລຳງານເດັ່ງຣະດາດ
ຝູງໝູ່ກ້ວຍຕີນງ້າວ ຕີນເຕົ້າໝູສີ
ສຸກເຫຼືອງດີ ເຮື່ອເຮືອງທັງຄ້າຍ
ມີທັງອໍຣະນັດພ້ອມ ນໍ້ມ່ວງນາວກາງ
ໂຮຍໆຫອມ ທົ້ວດິງໄພກວ້າງ
ມີທັງຜູຜາງພ້ອມ ກຽງຄຳໝາກຫຼອດ

ສຸກເຮືອເຂັ້ນ ເຫຼືອລົ້ນທົ່ວດົງ
ແຕ່ນັ້ນກອງະເພງະເກົ້າ ທັ້ງສອງຫຼີງງລ່ຳ
ເຫັນໝູ່ເຕົ້າ ແດງພ້ອນຊື່ນຊົມ
ກຸມານນ້ອຍ ບານເອົາໃສ່ປາກ
ສອງແຈ່ມເຈົ້າ ແພງລ້ານຄ່ອຍກິນ
ຮີດຮວ່າງເຮົາ ຫອມອ່ອນຫວານເປັ້ນ
ພໍປະມານເລີຍ ລວດເຊົາແຮງນ້ອຍ
ຟັງຍິນແຊວໆຮ້ອງ ສັງກາບົກແຂກ ພຸ້ນເປີ
ກັບທັງກົ້ກ່າງພ້ອມ ສາວນຫົ້ນຊື່ນຊົມ
ເຂົາກໍບິນສອດ ເສ້ວ ໃນປ່າຫິມະພານ
ເຊວໆສຽງ ບາດກັບກິນເຂົ້າ
ຝູງໝູ່ພື້ງຄະນາຈ້ອນ ເຫັນດາງລິງຄ່າງ
ກະແຕໂຕ່ຕັ້ນ ຮຽວໄມ້ໂຕ່ລຳ
(ຫຼາຍສ່ຳແທ້ ເຕັ້ນໂຕ່ໄປມາ)
ຝູງໝູ່ພຶງຄະນາສັດ ບາດກັບກິນກະບ
ໃນຫິມຫ້ອງ ຫິມະພານນິມາກ
ສັພສິງພ້ອມ ໃນຫັ້ນມາກມູນ
ຫຼີງງດຸອຸດທະກັງນ້ຳ ໃນໜອງໃສສ່ອງ
ຝູງໝູ່ປາຫວ່າໄຄ້ ສະງອມຫົ້ນລ່ອງລອຍ
ມີທັງບົວເງິນພ້ອມ ບົວທອງໄຂກາບ
ບາງແບ່ງສ້ອຍ ສະພັງກ້ວາງເຮືອເຮືອງ

ມີດອກໄມ້ ຫຼາຍສິງນາງ
ມາລາຫອມ ທົ່ວດົງດອນກ້ວາງ
ໃບຫິນຫ້ອງ ສະພັງໜອງດວງດອກ
ຕັ້ງວ່າມີບໍ່ໄຮ້ ເຫຼືອລົ້ນອະເນກນອງ
ມີນົກຈັກກະພາກພ້ອມ ຕົວອາດຫົງຄຳ
ເຂົາກໍເອົາກັນລອຍ ແຄ່ສະພັງຊົມຫຼິ້ນ
ມີທັງຍາງແດງພ້ອມ ບາງຂາວຫຼາຍໝູ່
ເຂົາກໍລຽບຝັ່ງນ້ຳ ລອຍຫຼິ້ນໄລ່ປາ
ກໍຫາກນາງພ້ອມ ພາສາສັດສິງ
ບາງພ່ອງບິນເວີນຂຶ້ນ ປາຍໄມ້ເບິ່ງປາ
ລາງຕົວດຳລົງພື້ນ ສະພັງໜອງຫາເຫຍືອ
ເຂົາຫາກຊົມຊື່ນຫຼິ້ນ ສະພັງກ້ວາງບີບັນ ເຈົ້າເອີຍ
ອັນວ່າໃບຫິນຫ້ອງ ຫິມະພານມີມາກ
ກໍຫາກມີບໍ່ໄຮ້ ເຫຼືອລົ້ນຊູ່ອັນ
ອັນວ່ານາງພ້ອມ ເຫຼືອຫຼາຍເດັຽຣະດາດ
ສອງກໍຫຼີງລ່ຳປຽນ ເຫັນກັ້ວນຊູ່ອັນ
ແຕ່ນັ້ນນາງກໍເອົາອ່ອນນ້ອຍ ເຂົ້າສູ່ໄພໄຊ
ພາກັນເຊົາ ຣົ່ມໄພໄຊກ້ວາງ
ດູງາມແທ້ ໄພໄຊຣົ່ມອາດ
ປູ່ແຫນຂ້າງ ສະພັງກ້ວາງຈີມຈິນ
ສອງກໍບໍ່ເດືອດຮ້ອນ ປະການສິງສັນໃດ

ບລະບາຍກິນ　　ຊູ່ອັນຫວານສົ້ມ
ໂບູດິກາບັ້ນ　　ນາງງາມເຊົາກ່ອນ
ຕອນແຕ່ນີ້　　ເມື່ອໜ້າຊິກ່າວເມືອງ ກ່ອນແລ້ວ
ອັນວ່າເປງຈານເສົ້າ　　ເສັ່ງສືອັບປະໂສກ
ກໍຫາກຂ່ຳເຂືອກຮ້ອນ　　ຝົນຟ້າບໍ່ລົງ ເຈົ້າເອີຍ
ແມ່ນວ່າເສນາເຈົ້າ　　ໂຮງຫຼວງຫຼາຍໝູ່ ກໍດີ
ກັບທັງຝູງໄພ່ນ້ອຍ　　ເມືອງບ້ານຫງ່ວມເຫງົາ
ກັບທັງສັ້ງໂຄເຈົ້າ　　ຮຽນທັມທົງສູດ
ກໍຫາກສຸບເສົ້າແຫ້　　ທັມພຣະເຈົ້າບໍ່ເຮືອງ
ແມ່ນວ່າໄພສີແກ້ວ　　ເຫວີປອງປູກ ໄວ້ນັ້ນ
ກໍຫາກເຫຼືອງຫຼົນແຫ້　　ຈຳກ້ານບໍ່ເຮືອງ
ອັນນີ້ຫາກະແມ່ນບຸນຈອມເຈົ້າ　　ທັງສອງແມ່ລູກ ຈິ່ງແລ້ວ
ສອງຫາກພັດມາກຫ້ອງ　　ເມືອງບ້ານບໍ່ຮູ່ງເຮືອງ
ແມ່ນວ່ານາໂຄຊ້າງ　　ນະທີງສາສັດສິງ
ຝູງໝູ່ລໍແລະມ້າ　　ບໍ່ກິນຫຍ້າຫງ່ວມເຫງົາ
ຝູງໝູ່ສັດຂອງລ້ຽງ　　ໝູໝາເປັດໄກ່
ກໍຫາກເຫງົາຫງ່ວມແຫ້　　ທັງຄ້າຍທົ່ວເມືອງ
ອັນວ່າເປງຈານເສົ້າ　　ເສັ່ງສີໜອງໝົ່ນ
ທຸກແຫ່ງຫ້ອງ　　ເມືອງບ້ານບໍ່ເຮືອງ ແຫ້ແລ້ວ
ອັນນີ້ເປັນແຕ່ເຕໂຊກ້າ　　ຂີນີຍັກໃຫຍ່
ປູ່ແຫນຊ້ອນ　　ຫຽມທ້າວນັ້ງປອງ

ກໍຈຶງອຸບາດຮ້ອນ ເຫົ້າຫິວຫັງເນືອງ
ເຂົາກໍເມົາມົວເຈັບ ບໍ່ສະບາຍໃນເນື້ອ
ກໍກາກຫາຍວັນໄດ້ ຫາຍຄືນມີມາກ
ເຂົາກໍເຈັບປ່ວຍໄຂ້ ໃນເນື້ອບໍ່ເຫືອດຄືງ
ລາງຄົນລົ້ມ ເສັຽຊີວັງລົດຊົ່ວ ກໍມີ
ລາງພ່ອງພໍລຸກໄດ້ ຄ້າງໃອ້ຕໍ່ກັບ
ອັນວ່ານາງຜີຜູ້ ແປງຕົວກັບເພດ
ມັນກໍຊີນຊືບໄດ້ ເປັນເຈົ້ານັ້ງປອງ ແທ້ແລ້ວ
ໃບຕົກາບັ້ນ ນາງຜີກັບເພດ
ໄວ້ແຕ່ພຽງທີ່ນີ້ ເນື້ອໜ້າຊິກ່າວນາງ ກ່ອນແລ້ວ
ບັດນີ້ຈັກກ່າວເຖິງສອງແຈ່ມເຈົ້າ ພັດພາກເປງຈານ
ສອງກໍເນົາສຳຣານ ຣົມໃພໄຊກ້ວາງ
ສັພສັນພ້ອມ ຂອງກິນມີມາກ
ອັນວ່າຫວານແລະສົ້ມ ມີພ້ອມຊູ່ອັນ ເຈົ້າເອີຍ
ສອງແຈ່ມເຈົ້າ ຍັ້ງຢູ່ເຈັດວັນ
ພໍມີແຮງ ດຸ່ງເດີນໄປໜ້າ
ທີ່ງເຫັນພູເຂົາຂັ້ນ ດົງໜາແສນຍ່ານ
ສອງດຸ່ງດັ້ນ ໄປໜ້າປ່າໜາ
ຜ່ານູສັງລັງໄມ້ ລຽນລຳສຸດລ່ຳ ພຸ້ນເຢີ
ຕົ້ນຕໍ່ຕົ້ນ ໃບຄ້ອນກ່າຍກັນ
ມີທັງເຄືອເຂົາກຽວ ປາຍບຸ້ງຍານຍ່າງ ພຸ້ນເຢີ

ຝູງໜູ່ລີງຮ່າຍໄມ້	ໂຕນເຕັ້ນໄຕ່ກອນ
ຟັງຍິນວ່ອນໆຮ້ອງ	ຊະນີຫຸ່ຍຫາຜົວ ພຸ້ນເຢີ
ຕັ້ງຫາກແຊວໆສຽງ	ຫົວໄພພິງກ້ວາງ
ຟັງຍິນອໍຣະແອຊ້ອນ	ສະກູບາຣຽງຄູ່
ເຂົາກໍເພື່ອນປີກຕຸ້ນ	ໂລມອ້ອຍອີນອອຍ
ມີທັງຈັກກະພາກພ້ອມ	ຫົງຫ່ານຊູມແຊງ
ເຕັມດົງດອນ	ມີບັນເນືອງຮ້ອງ
ແຊວໆຮ້ອງ	ສັງກາບິກແຂກ
ອັ້ມອໍ່ເປົ້າ	ສຽງເວົ້າດັ່ງຄົນ
ຜໍ່ແທັບສັງລັງພຸ້ນ	ເທິງພູດາວດາດ
ຕົ້ນຕໍ່ຕົ້ນ	ໃບກ້ານກ່ອງງານ
ສອງກໍໄປເຊົາຍັ້ງ	ຕີນຜາເຂົາໃຫຍ່
ຫີນັ້ນມີບໍ່ນ້ຳ	ວັງກ້ວາງສ່ອງໃສ
ຊວາດໆນ້ຳ	ອອກບໍ່ຕີນເຂົາ
ເປັນແປວໄຫຼ	ລ່ອງລົງເປັນຫ້ວຍ
ດູວະການແຫ້	ພລານຫິນພຽງຣາບ
ກໍຫາກດູເລີດລ້ຳ	ສະຖານກ້ວາງຣາບງາມ
ມີທັງບີໂຄດແກ້ວ	ຕົ້ນໃຫຍ່ລຳສູງ
ໃບດົກໜາ	ໝາກຊາງພວງພົ້ວ
ສຸກແດງເຂັ້ມ	ບົວງາມໃສສ່ອງ
ເຣືອງເຣືອເຫົ້າ	ໄພກ້ວາງທົ່ວແດນ

ຄັນວ່າຫຼົ້ນຈາກຂັວນ   ກາຍເກີດເປັນຄຳ
ລາງໜ່ວຍສີໃສແສງ   ສີງເງີນລຽງແລ້ວ
ຄັນວ່າຕົກໃສ່ນ້ຳ   ກາຍເກີດເປັນປາ
ເປັນຕົວລອຍ   ລ່ອງເລງໃນນ້ຳ
ອັນວ່າງ່າດ່ວນຊື້   ປາຍປີນເມືອບິນ
ເປັນມະນີໄຊ   ລູກດີເຫຼືອງເຫຼື້ອມ
ຄັນວ່າຫຼົ້ນຈາກຕົ້ນ   ລົງສູ່ທໍຣະນີ
ເປັນແສງໃສ   ມາບເມືອງກົງແກ້ວ
ລາງໜ່ວຍສຸກຫຼົ່ນແລ້ວ   ລົງສູ່ທໍຣະນີ
ໂຮງໆຫອມ   ທົ່ວດົງໂຮຍເຮົ້າ
ນາຄານນ້ອຍ   ບາຍເອົາສເວີຍໂພດ
ຣິດຣ່ວາງເຮົ້າ   ຫວານຈ້ອຍສີງຕານ
ສອງແຈ່ມເຈົ້າ   ສເວີຍໂພດຜາລາ
ບູທ່າງຊົມສະບາຍສຸກ   ບໍ່ມີຄຳຮ້ອນ
ແຕ່ວ່າເວນສອງເຈົ້າ   ມາປະຈົບບັງບຽດຈີງແລ້ວ
ກໍຫາກເວັ້ນບໍ່ໄດ້   ເວນເຈົ້າແຕ່ຫຼັງ ໆ ຫັ້ນແລ້ວ
ອັນວ່າສອງແຈ່ມເຈົ້າ   ນອນປູ່ພລານຫີນ
ຄອນໆຫຼັບ   ຊົ່ວຍາມຄາໄດ້
ຂໍບຸດກາໄວ້   ພົມພາເດີນປ່າ
ໄວ້ແຕ່ພຽງທໍນີ້   ໄປໜ້າຊິກ່າວມີ   ເຈົ້າເອີຍ

ບັນຍັກທິສກັນເອົານາງພິມພາໜີຈາກລູກ

– ບັດນີ້ຈັກກ່າວເຖິງທິສກັນຜູ້	ຜີສາງຍັກໃຫຍ່ ກ່ອນແລ້ວ
ມັນກໍທິງສືບສ້າງ	ເປັນເຈົ້ານັ່ງປອງ
ກໍບໍ່ມີນິງຕົ້ນ	ເປັນເອກມະເຫສີ
ກໍບໍ່ມີເຫວີ	ປູ່ເຜືອແຜງຜັ້ນ
ມັນເຖີບເດີນມາຫຼົ້ນ	ນາຣີດວງດອກ
ສົມເສບຊ້ອນ	ຊົມຫຼົ້ນຊູ່ວັນ
ທຸກຄ່ຳເຊົ້າ	ຊົມດອກນາງກາຍ
(ຕາງສເນຫາ	ຮູບນິງງາມແນ້ນ)
ກໍຫາກມີໃນຫ້ອງ	ຫີມະພານດົງໃຫຍ່
ໂລກຫາກຕັ້ງແຕ່ງໄວ້	ປະຖົມເຖົ້າຊົວບຸຣົມ
ກໍຫາກດູເລີດລ້ຳ	ສົມສິງສາວສວັນ
ຄໍກົນແກວນ	ກົວງາມເປັນປ້ອງ
ແຂນກົມສ້ວຍ	ທະນຸທອງຄົ້ວກ່ອງ
ນົມຕຸ່ມຕັ້ງ	ແຂນສ້ວຍສິງເຫົາ
ເໝືອນດັ່ງເນົາໃນຫ້ອງ	ເມືອງສວັນເທວະໂລກ
(ຮູບຮ່າງອ້ວນ	ອໍຣະອົ້ງອົ້ນຕາ)
ດັ່ງຊິຣູ້ປາກຕ້ານ	ກອບກ່າວເຈຣະຈາ
ທໍ່ບໍ່ມີດວງຈິດ	ຊິກ່າວຄວາມຄົນໄດ້
(ລອນທໍ່ໄຫວດິງດ້ວຍ	ລົມພະຍູຢຽງອ່ວຍ)

ພໍແຕ່ຮູ້ຍິນແບ້ນ ເໜືອບໜ້າຈີປາກເປັບ ຫັ້ນແລ້ວ
(ອັນວ່າຍັກໃຫ່ຍຮ້າຍ ຕົວຊື່ຫິສກັນ
ມັນມາຊົມນາງກາຍ ອີ່ມໃຈເນື້ອຫ້ອງ
ເລິງໆແກ້ ຫຍວຊົມຫຼາຍເລົ່າ)
ເຖິງເນື້ອຮາຄະຮ້ອນ ເຮືອງຂຶ້ນພັດຖວ່າໄປ
ເມື່ອນັ້ນຫິສກັນຜູ້ ກັນດານຍັກໃຫ່ຍ
ມັນກໍອອກຈາກຫ້ອງ ໂຮງກວ້າງເພັ້ນພາຍ
ແຍງຫິນຫ້ອງ ຫີມະພານໄພຍະມາດ
ຍ່ອງໆຜ້າຍ ສແວງດັ້ນດ່ວນໄປ
ມັນກໍກອຍແຮງຂ້າມ ຄີຣີຫຼາຍຍ່ານ
ມັນບໍ່ຊ້າ ທະຍານລ້ຳລ່ວງບິນ
ພໍ່ເຫັນດອຍເຂົາຂັ້ນ ບິວຣະພັບແຜງຝ່າຍ
ທີ່ນັ້ນມີແມ່ນ້ຳ ທັງຫ້າແບ່ງກະແສ
ອັນວ່າຊົມພູໄມ້ ສາຂານີໂຄດ
ປູ່ແງ່ເງືອມ ສະຖານກວ້າງຮາບງາມ
ມັນກໍໄປເຊົາປັ້ງ ແຄມຊົບນ້ຳໃຫ່ຍ
ມັນກໍລົງອາບນ້ຳ ຫາຍຮ້ອນສວ່າງວອນ
ຄັນວ່າມັນອາບແລ້ວ ບົວຣະບາດລີລາ
ມັນກໍແຍງຊົມພູ ຮົ່ມງາມເຊົາປັ້ງ
ມັນກໍຫຼຽວແລຢ້ຽມ ໄປມາທຸກແຫ່ງ
ເຫັນໝາກໄມ້ ຊົມພແກ້ວເລົ່າກິນ

ແລ້ວຍ່າງຍ້າຍ ອອກຣິມຊົມພູ
ໃບແຄມຊົບ ຮາບງາມສະພັງກວ້າງ
ມັນຈຶ່ງເຫັນສອງເຈົ້າ ກຸມານແມ່ລູກ
ນອນຢູ່ຄ້າງ ສະຖານກວ້າງຮິມງາມ
ດູຄຸ່ມຄົ້ວ ສເນີດັ່ງກິນນາຣີ
ກັບດານເຫັນ ເດືອດແດດາດົ້ນ
ມັນກໍໄປຈົບໃກ້ ພາທີຕ້ານກ່າວ
ສີແຈ່ມເຈົ້າ ແພງລ້ານຕື່ນຕົນ
ຄ້ອມວ່ານາງຕື່ນແລ້ວ ຫຼຽວເຫຼືອດໄປມາ
ກໍຈຶ່ງເຫັນກັບດານ ລວດສະເທີນໃຈເຈົ້າ
ນາງກໍກະເກັງຢ້ ນ ອິນ ກາຍບັງເກີດ
ນາງກໍຊວງກອດອຸ້ມ ເອົາແກ້ວລູກຕົນ
ເມື່ອນັ້ນຍັກທື ງດູທ້າວ ສຸຣິວົງເຈົ້ ອ່ອນ
ມັນກໍຄຶດຮ່ຳຮູ້ ຄະນິງຜູ້ນຊູ້ອັນ
ອັນນີ້ຣ້ອນວ່າເພວນາມເຊື້ອ ມະນຸດສາເດີນທາດ ມາແລ້ວ
ກູຈັກເອົານອດແກ້ວ ເມື່ອຊ້ອນຮ່ວມສະນອນ ແທ້ແລ້ວ
ເມື່ອຈັກເອົ ທັງທ້ າວ ກຸມານຕົນລູກ ນຳນັ້ນ
ຝູງໄພ່ຟ້າ ເມືອງບ້ານຈິຮູ້ມກຸງນ ບໍ່ຮູ້
ເອົາຈິວ່າກູນີ້ໄປລັກໄດ້ ເມັງເພີນມາຊົມ
ກູຈັກເອົາຕົນດຽວ ແຕ່ນາງ ນື້ອຊ້ອນ
ຄ້ອມວ່າມັນຮ່ຳແລ້ວ ຮີບອ່ານມົນສະກົດ

ມັນກໍຣວາຍມິນຍຳ ກ່ອນກຸມານນ້ອຍ
ເມື່ອນັ້ນພິມພາແກ້ວ ປຸກບາດິນລູກ
ຊຸກຊຸ່ນຮ້ອງ ປຸກທ້າວບໍ່ດີງ
ໂອນໍບຸດຕາແກ້ວ ສາຍໃຈເຈົ້າແມ່ ກູເອີຍ
ເຈົ້າສັງຫຼັບຊວດພົ້ນ ປານນີ້ບໍ່ຕື່ງ ແມ່ເດ
ບັດນີ້ເປັນເຫດຮ້າຍ ບັງເກີດອັນຕາຍ ແມ່ແລ້ວ
ສາຍຄໍເອີຍ ດັ່ງລືຫຼັບພົ້ນ ແມ່ນໍ
ລູກແມ່ທ້ອນ ສາຍໃຈເຈົ້າແມ່ ກູເອີຍ
ເຈົ້າສັງຫຼັບພອກພົ້ນ ບໍ່ມີຮູ້ເມື່ອດີງ ແທ້ເດ
ນາງກໍຊິລຫາໄຫ້ ປຸກບາດິນລູກ
ນາງນາດເຈົ້າ ທັງປ້ານສັ່ນສາຍ
ອັນນີ້ຫາກແມ່ນຜີສວາງເສື້ອ ໃນດົງມາຈອບເຮົາແລ້ວ
ມັນຈັກກິນທ່ຽງແທ້ ຮາເຈົ້າມອດຊີວັງ ແມ່ແລ້ວ
ນາງກໍກອດລູກນ້ອຍ ເອົາແທບເທງມອິກ
(ສາຍໃຈກູ ຕື່ນເປີຍາຊ້າ
ເມື່ອນັ້ນກັນດານເວົ້າ ຈານາງອ້ອຍອື່ນ)
ທຳເພດໜ້າ ກະບວນເບື້ອງດັ່ງຄືນ
ດູຣາເຈົ້າ ນາງງາມນ້ອຍໜຸ່ມ
ເບື້ອສຸມກ້ຽງ ຜິວອ້ວນອ່ອນງາມ ພີ່ເອີຍ
ເຈົ້ານີ້ປຸປະເທດດ້າວ ຫັນແທ່ງເມືອງໃດ ພີ່ເດ
ສັງວ່າຄືນດງວມາ ປູ່ດົງໄພກວ້າງ

ພີ່ກໍເດີນດົງຜ້າຍ ປະສົງຫາທິພຂີນ ອ່ວນແລ້ວ
ຈຶ່ງຄ່ອຍມາຈວບເຈົ້າ ນາງນ້ອຍຕ່ອນສເນ ພີ່ແລ້ວ
ທີ່ພີ່ເປັນແນວເຊື້ອ ກັນດານບໍຣິສາດ
ແຕ່ບໍ່ມີນຶ່ງເຄົ້າ ຫຽມຂ້າງນັ່ງປອງ ພີ່ແລ້ວ
(ພີ່ຈັກເອົາໜ່ອມນ້ອງ ເປັ່ງເອກມະເຫສີ
ເອົາເນື້ອເປັນເຫວີ ປູ່ທົງຫຽມອ້າຍ)
ເມື່ອນັ້ນພີ່ມພາແກ້ວ ນາງງາມຟັງຄື
ກໍຫາກດູຫາກແທ້ ໃຈເຈົ້າລວດສະເຈົາ
ນາງກໍຄຶດຮ່ຳຮູ້ ຂລັງປູ່ໃນໃຈ
ອັນນີ້ຮ້ອຍວ່າກັນດານຕົວະ ນົວະກິນກູແທ້
ນາງຈຶ່ງປາກກ່າວຕ້ານ ຂານຕອບກັນດານ
ໄຂຄຳດີ ຄ່ອຍຈາຈຶ່ງຕ້ານ
ຮຽນນີ້ມິໃຊ່ເປັນສາວຈ້ອຍ ດົນດຽວນອນຄືກ ພີ່ເອີຍ
ຜົວຂ້າມີທ່ຽງແທ້ ຄຳນີ້ບໍ່ຄວນພຣະເອີຍ
ມັນຈັກເປັນບາບຮ້າຍ ຈົມຈຸ່ມອະວີຈີ ແທ້ດາຍ
ຣາຊາເອີຍ ບໍ່ຄວນຈຶ່ງແທ້
ແຕ່ນັ້ນກັນດານທ້າວ ຖາມນາງຫຼາຍສິ່ງ
ອັນວ່າຜົວນຶ່ງເຈົ້າ ມີແທ້ຢູ່ຊີໃດ ນັ້ນເດ ?
ແຕ່ນັ້ນນາງຖາມຕ້ານ ກັນດານຫຼາຍເລົ່າ
ຈາພາກຖ້ອຍ ໂລມຕ້ານຊອບເຊີງ
ອັນວ່າເປງຈານພຸ້ນ ເປັນເຂັ້ນອັກຫຼາກ

ຝົນບໍ່ຮໍາເຂົ້າກ້າ ເລີຍແຫ້ງຫ່ຽວຕາຍ
ຄົນອຶດເຂົ້າ ທັງເມືອງລໍາບາກ
ເຂືອເລົ້າພັດພາກບ້ານ ເມືອງຫ້ອງຫ່ຽວມາ
ກໍ່ຈຶ່ງຫຼິງເຫງົາເຂົ້າ ຫີນພານຫຼາຍຂອບ ເດືອນແລ້ວ
ດຽວນີ້ຜົວຂ້າໄປກ່ຽວຄົ້ນ ດົງກວ້າງຊອກມັນ ພຣະເອີຍ
ກໍຫາກຫຼາຍວັນແລ້ວ ບໍ່ເຫັນມາຄືນຄອບ
ຈັກວ່າເປັນເຫດຮ້າຍ ໃດແທ້ດັ່ງລືບໍ່ຮູ້
ແຕ່ນັ້ນຍັກກ່າວຕ້ານ ໂລມອ່ອນນາງງາມ
ອັນວ່າຜົວນາງໜີ ຈາກອວນເສັ່ງແລ້ວ
ມັນກໍໜີໄປຫ້ອງ ເປງຈານຂອງເກົ່າ ມັນພຸ້ນ
ມັນເອົາເມັຽໃໝ່ແລ້ວ ຊິນຊ້ອນປ່ຽນແທນ ນ້ອງແລ້ວ
ນາງປ່າສິນເທກທ້ອນ ສາມີໂກຜົວເກົ່າ ນາງນັ້ນ
ມັນຕົວະໜີຈາກເຈົ້າ ເສັ່ງແລ້ວບໍ່ຕ່າວມາ ພີນາ
ບັດນີ້ພີ່ຈັກເອົານາງແກ້ວ ເປັນເມັຽຮຽງຮ່ວມ
ພີ່ຈັກເອົາແຈ່ມເຈົ້າ ເນື້ອສ້າງສືບເມືອງ ພີ່ແລ້ວ
ອັນວ່າໂຮງຫຼວງກ້ວາງ ເມືອງເຮົາສຸກຍິ່ງ ນາງເອີຍ
ມີທັງຝູງສໍ່າຂ້າ ຄົນໃຊ້ຊ່ວາ ຕີນ ພີນາ
ແຕ່ນັ້ນພິມພາຕ້ານ ດອມຜີຍັກໃຫ່ຽ
ຂ້ານີ້ມີຄູ່ແລ້ວ ບໍ່ຄວນຫ້າວຍາດຊິງ ແທ້ແລ້ວ
ຂ້າບໍ່ໄປນໍາແລ້ວ ກົວເກງເປັນບາບ
ຂ້າຈັກຄອຍປູຄ້າງ ດົງກ້ວາງເພື່ອໄພ ພີ່ແລ້ວ

ແຕ່ນັ້ນກັບຄານເກົ້າ ໂລມນາງຫາຍເລົ້າ
ເວົ້າຈ້ອຍໆ ນາງແກ້ວບໍ່ຟັງ
ແຕ່ນັ້ນຍັກກໍໂກະກາໃຫ້ ນາງຄານນ້ອຍນາດ
ເຮົາກໍເວົ້າຈ້ອຍໆ ນາງນ້ອຍບໍ່ຟັງ ພືລື
ເຮົາຈັກຟັນຄໍຂ້າ ນາງງາມຫົງລູກ
ໃຫ້ເຊືອຕາຍນອດມ້ຽນ ນຳພ້ອນພໍ່ກັບ ຫັ້ນແລ້ວ
ແຕ່ນັ້ນນາງຄານນ້ອຍ ກົວກາຍນໍລະມຶງ
ນາງຈຶ່ງກອຍກ່າວຕ້ານ ສຽງຈ້ອຍຕໍ່ຜີ
ເຈົ້າຈັກເອົາຕົວຂ້າ ໄປນຳບໍ່ຂືນອາດ ໄດ້ແລ້ວ
ຫໍ່ວ່າຜົວຂ້າບໍ່ຂາດແທ້ ກົວຢ້ານບາບເວນ
ຂ້າຈັກໄປເປັນຂ້ອຍ ຕາມພຣະອົງໃຊ້ຊ່ວາງ
ຂາບໍ່ຂືນອາດເຈົ້າ ຂໍໃຊ້ຊວ່າງຕີນ ພຣະເອີຍ
ເມື່ອນັ້ນຍັກກ່າວຕ້ານ ໂລມອ່ອນນາງງາມ
ພືຈັກເອົານາງເປັນເມັຽແພງ ຣວມສະນອນຮຽງຊ້ອນ
ແຕ່ນັ້ນນາງບໍ່ມີຈາຕ້ານ ນຳຜີຍັກໃຫ່ງ
ນາງກໍປາກບໍ່ໄດ້ ນ້ຳກາຍ້ອຍຫຼັ່ງລົງ
ເມື່ອນັ້ນຍັກຮ່ຳຮູ້ ຄະນຶງເກີໃນໃຈ
ກູຈັກໂລມນາງເມືອ ຮອດໂຮງກູພຸ້ນ
ພໍໃຫ້ນາງລືມແກ້ວ ຜົວແພງຂອ ເກົ່າ
ເມື່ອຮອດຜາສາດແລ້ວ ກູຫ້າວຈຶງຊົມ ຊວນແລ້ວ
ຍັກຈຶ່ງໂລມລູບເຈົ້າ ຈາອ່ອນນາງງາມ

ພີ່ຈັກເອົານາງເມືອ ນັ່ງປອງເປັນເຈົ້າ
ອັນວ່າກົງນະຄອນຫ້ອງ ເມືອງຫຼວງຈົມວນນອນ ເຈົ້າແລ້ວ
ພີ່ຈັກໄວ້ແກ່ເຈົ້າ ນາງນ້ອຍນັ່ງປອງ ພີ່ແລ້ວ
ຄ້ອມວ່າບັກກ່າວແລ້ວ ນາງນາດຄະນິງໃນ
ຄັນວ່າກູບໍ່ຟັງຄຳມັນ ກໍສ່ວນນໍຣະນ້ຳມ້ຽນ
ກູຈັກໄປການແຫ້ ນຳມັນເສັງກ່ອນ
ເອົາແຕ່ບຸນແຕ່ງໃຫ້ ພາຍຊ້ອຍຫານຈິ່ງເຫັນ ຫັ້ນແລ້ວ
ຄັນວ່ານາງຮ່ຳແລ້ວ ນ້ຳການເນດນອງຕົກ
ນາງຈິ່ງປຸກກຸມານ ລູກດົນທັງໄຫ້
ລູກແມ່ຫ້ອນ ສາຍໃຈເຈົ້າແມ່ ກູເອີຍ
ເຮົາຈັກໄດ້ດ່ວນຜ້າຍ ນຳເຈົ້າທີ່ເຊົາລູກເອີຍ
ແຕ່ນັ້ນເດໂຊກຸ້ມ ກຸມານອິດອ່ອນ ໄປແລ້ວ
ເຈົ້າກໍຫຼັບຊວດພົ້ນ ບໍ່ມີຮູ້ເມືອຄືງ
ແຕ່ນັ້ນນະສິກັບຫ້າວ ພຣະນາຄີບັກໃຫຍ່
ມັນກໍເຕີນບອກເຈົ້າ ນາງນ້ອຍແຕ່ງຕົວ
ບັດນີ້ພີ່ຈັກເອົາແຈ່ນເຈົ້າ ດັ້ນດຸ່ງເວຫາ
ເມືອເມືອງເຮົາ ປຸກະເສີມສົມສ້າງ
ນາງຈິ່ງໄລເສັງທ້ອນ ບຸດຕາດົນລູກ
ພີ່ຈັກເອົາແຕ່ເຈົ້າ ຜນອງດັ້ນດ່ວນໄປ ແຫ້ແລ້ວ
ແຕ່ນັ້ນນາງນາດນ້ອຍ ຕົກຂະນ່າໃນໃຈ
ກໍຈິ່ງຈາສຽງໃສ ຕໍ່ມັນຄືຄ້ອຍ

ຄັນຈັກເອົາອວນຜ້າຍ　　ເດີນເມືອດອນພີ　　ພາຍພຸ້ນ
ຂໍໃຫ້ເອົາລູກນ້ອຍ　　ເມືອພ້ອມພໍ່ກັບ　　ພີເອີຍ
ຄ້ອນວ່ານາງກ່າວແລ້ວ　　ຍັກໂກດໂກທາ
ມັນກໍຈາສຽງແຂງ　　ບານນາງຄໍາຮ້າຍ
ມາເມືອຫ້ອນ　　ຍານານໂດຍຮີບ
ຄັນປ່ຊ້າ　　ກິວຮ້ອນເຮ່ງວອນ
ແຕ່ນັ້ນນາງກໍຊວງກອດອຸ້ມ　　ເອົາອ່ອນກຸມານ
ນາຄານເລີຍ .　　ບໍ່ຕຶງຕິນໄດ້
ອັນວ່ານາງຄານເຈົ້າ　　ໂຊມເອົາຫຼາຍເລົ້າ
ສີແຈ່ມເຈົ້າ　　ແພງລ້ານບໍ່ຕີ
ບູຕຣາດນ້ອຍ　　ໜັກເກິງເສລາ
ມາດາເລີຍ　　ຍ່າວບິນຫິວໃຫ້
ເປັນແຕ່ບຸນບາຫ້າວ　　ເທວະດາແປນຊ່ອຍ
ກໍຈີງຈູງຈ່ອງໄວ້　　ບາຫ້າວບໍ່ໃຫ້ຕຶງ
ນາງກໍຊິດໆນ້ຳ　　ຕາຫຼັ່ງນອງໄຫຼ
ເພາະຄະນຶງບຸດຕາ　　ເວທະນາຫິວໃຫ້
ເມືອນັ້ນກັບດານຜູ້　　ຜີສາງບັກໃຫ່ງ
ເຫັນແຈ່ມເຈົ້າ　　ນາງນ້ອຍຍ່າວບິນ
ມັນບໍ່ຊ້າ　　ກິວໂກດໂກທາ
ມັນກໍກຳຕ່າວຜັ້ນ　　ແລ່ນໄປມີຊ້າ
ຈິງໃຫ້ວາງນາໄວ້　　ໃນດົງຕານຊ່າງ　　ມັນຫ້ອນ

ປ່າໄດ້ຄືດອ່າວໄອ້	ດອນທ້ອນຊ້າງມັນ	
ຄັນວ່າຍັງດິນແທ້	ກູຊິຟັນແຫງສຽບເສັຽແລ້ວ	
ໃຫ້ມັນນໍຣະບາດຊ້ຳ	ຕາຍຂ້ວນຊາກກາວ	ແທ້ແລ້ວ
ແຕ່ນັ້ນນາງກໍກົວເກງປ້ານ	ກັບດານເລີບສັ່ນ	
ນາງກໍກິ້ງເກືອກໃຫ້	ນຳແກ້ວລູກດີນ	
ເມື່ອບໍ່ໄປນຳທ້າວ	ກັບດານຍັກໃຫຍ່	ດັ່ງນັ້ນ
ຢ້ານມັນຂ້າອ່ອນນ້ອຍ	ແພງລ້ານລູກດີນ	
ແຕ່ນັ້ນທສົກັບປີ້	ບາຍແຂນນາງນາດ	
ມັນກໍຮີບຫອບອູ້ມ	ເອົາຜ້າຍເຜັ້ນຜຍອງ	
ມັນກໍແບງຫີນຫ້ອງ	ເມືອງດິນເພັດໄສ່	
ພາອ່ອນນ້ອຍ	ນາງແກ້ວດ່ວນໄປ	
ນາງກໍວອຍໆໃຫ້	ຫາອ່ອນກຸມານ	
ວອຍໆຈິດ	ຂາດໄປຍາມນ້ອຍ	
ແຕ່ນັ້ນທສົກັບຟ້າວ	ຮວາຍມິນເລີເຟົາ	
ອັນວ່າສີແຈ່ມເຈົ້າ	ຄາວນ້ອຍນຶ່ງຄືນ	
ນາງຈິ່ງຂໍວອນໄຫວ້	ຍັກໃຫຍ່ກັບດານ	
ຂໍໃຫ້ປານີພາຍ	ໂຜດອວນປາງກີ້	
ອັນວ່າສາຍໃຈແກ້ວ	ບຸດຕາດີນລູກ	ອວນນັ້ນ
ຄັນວ່ານອນຕື່ນແລ້ວ	ບໍ່ເຫັນຊິຂ້າທ່າວຕາຍ	ພຣະເອີຍ
ອັນວ່າສາຍສມອນແກ້ວ	ກຸມານຍັງອ່ອນ	ຈິງນາ
ຈັກຊິເດີນດຸ່ງດັ້ນ	ໄປແຫ້ທີ່ໃດ	ນໍເດ

ແຕ່ນັ້ນກັບດານເວົ້າ   ໂລມນາງນົງຄ່າວ
ເຈົ້າປ່າກົດຄັ່ງແຄ້ນ   ກຸມານນ້ອຍປູດີ   ດອກນາ
ຄັນວ່າຣາຫາກເມືອຮອດຫ້ອງ   ຫໍຣາຊປາງທອງ   ເມື່ອໃດ
ພີ້ຈັກທະຍານຕີນເຫາະ   ຣີບມາເອົານ້ອຍ
ຄ້ອນວ່າມັນກ່າວແລ້ວ   ພາດຸ່ງເດີນໄປ
ວອຍໆກາຍ   ຫື້ນດອຍເຂົາຂັ້ນ
ຜໍ່ເຫັນເຂົາວົງລ້ອມ   ແດນໄກພອນຜໍ່   ພຸ້ນເຢີ
ບັກໃຫ່ງຫ້າວ   ເຊົາດ່ານພຍາລີງ
ໃນວົນດອຍ   ຣົມເຢັນເຊົາບັ້ງ
ເມື່ອນັ້ນນາໂຄເຊື້ອ   ພຍາລີງເຈົ້າດ່ານ
ມັນກໍມາເຝົ້າເຈົ້າ   ກັບດານທ້າວບໍ່ນານ
ລີງກໍກົ້ມຂາບໄຫວ້   ບັກໃຫ່ງກັບດານ
ປອມຫົວເດີນທາງໃດ   ດວ່າມາຈີງແທ້
ແຕ່ນັ້ນຣາຊາທ້າວ   ທົສກັບເລີຍກ່າວ
ກູກໍໄປທ່ຽວຫຼີ້ນ   ດົງກວ້າງຄວ່າໄກ
ໃນໄພຫ້ອງ   ຫີນພານດົງໃຫ່ງ   ພາຍພຸ້ນ
(ກໍຫາກມີໂຊກແທ້   ຫີນີ້ກວ່າຫຼັງ   ທ່ານເອີຍ)
ກູກໍໄດ້ນາດນ້ອຍ   ເຈົ້າອອນນາງງາມ
ແລ້ວຈັກຄືນເມືອເມືອງ   ຈິ່ງມາເຊົາບັ້ງ
ບັດນີ້ກູຈັກລົງສູ່ນ້ຳ   ລ້າງອາບເຢັນຄີງ   ກ່ອນແລ້ວ
ນົງຣັກສານາງງາມ   ຖ້າກູມາຮັ້ນ   ແດ່ເນີ້

ແກ່ນັ້ນພຍາລີງກົ້ມ	ບໍ່ບືຮັບບາດ	
ນັກກໍເລີຍຍ່າງຍ້າຍ	ໄປແທ້ບໍ່ນານ	
ເມື່ອນັ້ນພຍາລີງຕ້ານ	ຖາມນາງນ້ອຍນາດ	
ຖາມຫານັກເຣດຫ້ອງ	ເມືອງບ້ານແຫ່ງນາງ	
ດູຣາເຈົ້າ	ນາງງາມໂສມສະອາດ	
ເຈົ້ານີ້ຢູ່ປະເທດຫ້ອງ	ເມືອງບ້ານທີ່ໃດ	ນັ້ນເດ ?
ເມື່ອນັ້ນພິມພາວ້ານ	ຂານຄຳກອບກ່າວ	
ຂ້ອຍນີ້ຢູ່ປະເທດດ້າວ	ເມືອງກວ້າງທີ່ໄກ	ແທ້ແລ້ວ
ອັນວ່າເປັງຈານຫ້ອງ	ເປັນເມືອງຂ້ອຍຢູ່	
ຂ້ອຍກໍເອົາລູກນ້ອຍ	ໜີແທ້ຈາກເມືອງ	
ກໍຈຶງມາຢູ່ຖ້າງ	ໃນປ່າຫິມພານ	
ກັນດານເດີນໄປເຫັນ	ຈຶງເອົາມາພີ້	
ຂ້ອຍກໍພັດລູກນ້ອຍ	ຖ້າງຢູ່ໃນໄພ	ພຸ້ນແລ້ວ
ບັດນີ້ບຸນຫົວຫາຍ	ກໍຈຶງມາເຫັນເຈົ້າ	
ຂໍພຍາລີງເຈົ້າ	ອີດູນ້ອງນາດ	
ໃຫ້ເຈົ້າຊູຊ່ອຍປ້ອງ	ປາງນີ້ຢ່າໄລ	ແດ່ທ້ອນ
ຂ້ອຍກໍຂໍຝາກແກ້ວ	ດວງອາດທຳນະໂຮງ	
ທັງສະໃບນາງຜືນ	ຄ່າແພງດອນເຈົ້າ	
ຫອນວ່າກຸມານນ້ອຍ	ຫີ ຫໍ ມາຮອດ	ບໍ່ຮູ້
ໃຫ້ເຈົ້າເອົາສິງໃຫ້	ນາທ້າວລູກຮຽມ	ແດ່ຖ້ອນ
ຄ້ອມວ່າແລ້ວ	ນາງຍື່ນສະໃບ - ແຫວນ	

ພຍາລີງເລີຍ ຮັບເອົາໄປນ້ຽນ
ຄ້ອມວ່າບໍຣະບວນແລ້ວ ກັບຄານມາຣອດ
ມັນກໍເລີຍກ່າວຕ້ານ ຄຳຜ້ຽນສັ່ງລີງ
ມັນບໍ່ຊ້າ ອູ້ມອ່ອນພິມພາ
ເລີຍທະຍານໄປ ບໍ່ນານຜັນຜ້າຍ
ຫຼິງເຫັນເມືອງງເຫຼົ້ອນ ຫໍຄຳຜາສາດ ພຸ້ນະປີ
ວຽງໃຫ່ຽລ້ອມ ກຳແພງນັ້ນກໍ່ຫີນ
ສອງແຈ່ມເຈົ້າ ເລີຍລ່ວງເວຫາ
ແຍງຊານມິນ ຈອດເຊົາເກີຍກວ້າງ
ມັນຈິງເອົາແຈ່ມເຈົ້າ ເຂົ້າສູ່ໂຮງທອງ
ກອງແຍງສີ ຄ່ອຍເຊົາໃນຫ້ອງ
ເມືອນັ້ນທິສກັງຫ້າວ ພຍານິບັກໃຫ່ຽ
ຄ້ອນພາດຄ້ອງ ສຽງຫ້າວກ່າວເຕີນ
ແຕ່ນັ້ນຝູງສ່ຳເຊື້ອ ເສນດໂນທາ
ເຂົາກໍເອົາກັນມາ ຣີບເຣວນວນພ້ອມ
ເມືອນັ້ນຣາຊາເຈົ້າ ພຍານິມິອາດ
ບອກເຫດໃຫ້ ເຂົາຮູ້ຊູ່ປະການ
ເຮົາກໍໄປຫາໄດ້ ນາງງາມມະນຸດຊາດ
ກູຈັກເອົາປູ່ຊ້ອນ ເປັນເຫງົ້ານຶງເມັຽ
ນາງນັ້ນບໍ່ໃຊ່ເຊື້ອ ຊັບຊາດແນວເຮົາ
ເກີຍປູ່ໃນຫໍປາງ ບ່ອນສ່ຳລານສະບາຍເນື້ອ

ສູຈົ່ງໄປແຕ່ງສ້າງ	ພາສາດມະນີສີ	
ໃນທີ່ສວນນາຣີ	ຂວ້າງພຽງກາງຄຸ້ມ	
ຈັກໃຫ້ນາງນາດນ້ອຍ	ເນົາຢູ່ສະບາຍໃຈ	
ໃຫ້ສູທຳແວນເປືອງ	ປ່ານານວັນນີ້	
ຄ້ອມວ່າທ້າວບອກແລ້ວ	ເຂົາເລີກທູນລາ	
ໂດຍອາສາ	ຣີບເປືອງມື້ຊ້າ	
ແຕ່ນັ້ນຫື້ນໆຂ້າ	ຊາວເທດກັບດານ	
ເຂົາກໍໂດຍພູນານ	ຣີບປຸນແປງຕັ້ງ	
ແຊວງພ້ອມ	ນັກໂຂຫາຍໝູ່	
ສຽງໂຫ່ຮ້ອງ	ດັງເທົ້າທົ່ວເມືອງ	
ຄ້ອມວ່າບໍຣະບວນແລ້ວ	ທໍຄຳພາສາດ	
ເຂົາຈຶ່ງເຊີນແຈ່ມເຈົ້າ	ນາງນາດພິມພາ	
ລີລາເມືອ	ສູ່ຫໍປາງແກ້ວ	
ແຕ່ນັ້ນທິສກັບທ້າວ	ທຳດີນດ້ວຍເດດ	
ກັບເພດພຸ້ງ	ເໜືອນໜ້າດັ່ງຄີນ	
ຄຶດຈັກໄປຊົມນ້ອງ	ໃນປາງພາສາດ	
ເລີບເລົາໃກ້ບໍ່ໄດ້	ຄິງຮ້ອນດັ່ງໄຟ	
ອັນວ່າກັບດານທ້າວ	ກະສັນໃຈດອມອ່ອນ	
ແຕ່ວ່າໃກ້ບໍ່ໄດ້	ແລປຸ້ມລ່ຳດາຍ	
ເໜືອນດັ່ງຄວາຍເຫັນເຂົ້າ	ໃນນາຮົ້ວດີ	ນັ້ນແລ້ວ
ປາກກໍກິນບໍ່ໄດ້	ເລັຽລີນລ່ຳດາຍ	ແທ້ແລ້ວ

ແຕ່ນັ້ນທິສກັນຕ້ານ   ຖາມນາງ ວດນ້ອຍ
ເປັນສັງນາດທະນ້ອງ   ຄື ຮ້ອນດັ່ງໄຟ   ນັ້ນເດ
ຍາມພີ່ເອົານາງຜ້າຍ   ຫົມພານອູ້ມຫອບ   ມານັ້ນ
ຄືງອ່ອນນ້ອຍ   ຍັງອ້ວນສູ່ມເປັນ   ພີ່ນາ
ພີ່ກໍຄຶດປາກສິນເສບຊ້ອນ   ນ້ອງແຕ່ກາງຫາວ   ພຸ້ນແລ້ວ
ກົວແຕ່ຝູງເທພາ   ຈິກ່າວຖຽນຕິນອ້າຍ
ບັດນີ້ເອົານ້ອງມາເຖິງຫ້ອງ   ຫໍປາງຜາສາດ
ພີ່ປາກສິນເສບຊ້ອນ   ຄືງຮ້ອນດັ່ງໄຟ   ນີ້ເດ
ແຕ່ນັ້ນພິມພາໄຫວ້   ອາຊານັກໃຫ່ຽ
ປາກກ່າວຕ້ານ   ຈານ້າວອ່ອນຫວານ
ຂ້າໄຫວ້ະເຈົ້າ   ພຣະບາດອົງກະສັດ
ຂໍອະໄພໂທສາ   ຢ່າຟຸນຄຳຮ້າຍ
ຖຽວນີ້ຜົວຂອງຂ້າ   ອາໄລຍັງໄປ່ຂາດ
ຄັນອາໄລຂາດແລ້ວ   ຕົວນ້ອງກໍສູ່ມເປັນ   ດອກນາ
ເຈົ້າຈິ່ງອິດເອົາທ້ອນ   ເທິງນານຫາກຈິຂາດ
ນາດວ່າພາຍໜ້າພຸ້ນ   ເຮົາເຈົ້າຈິ່ງຄອຍຊົມ   ພີ່ເອີຍ
ຍາມເມື່ອພຣະອົງເອົານາງຜ້າຍ   ເວຫາອາກາດ   ມານັ້ນ
ເຈົ້າບໍ່ຄຶດໄລນລ້ຽວ   ຄືງນ້ອງຈິ່ງສູ່ມເປັນ
ຜີວ່າພຣະຫາກຄຶດຈິງ້ອນ   ນ້ອງແຕ່ກາງຫາວ   ດັ່ງນັ້ນ
ກໍສ່ວນຄືງເປັນໄຟ   ບໍ່ອາດເອົາມາໄດ້
ພີ່ຈິ່ງລ້ຽງນ້ອງໄວ້   ພໍແຕ່ເບິ່ງບູຊາຕາ   ກ່ອນຖ້ອນ

ເມື່ອໃດຄີງນ້ອງຫາຍແປວໄຟ	ພີ່ຈຶ່ງຊົມຄືນຮ້ອນ	
ນ້ອງບໍ່ຂືນຂັດຂ້ວາງ	ຕາມໃຈເຈົ້າຈິ ຈູບຊົມແລ້ວ	
ບໍ່ກົ້ວພຣະບອກແກ້ວ	ຈິຊົມກົ້ງກ່ອນນອນ	ພຣະເອີຍ
ແຕ່ນັ້ນທິສກັນທ້າວ	ເຫັນນາງດານເປົ່າ	
ເລີຍເລົ່າຊົມບໍ່ໄດ້	ຄືນເຂົ້າສູ່ໂຮງ	
ກໍຫາກຫຼາຍວັນລ້ຳ	ຫງວໄປຫົ່ງເປົ່າ	
ພໍແຕ່ເຫັນນາດເຈົ້າ	ກະສັນລ້ຳເລົ່າຄືນ	
ອັນວ່າພົມພານ້ອຍ	ເນົາປາງຜານາດ	
ນາງກໍຄຶດໃຂກເສົ້າ	ຄະນຶງນ້ອຍລູກຕົນ	
ນາງກໍອິດລາເບື້ອນ	ໃນທໍຄຶດຮ່ຳ	
ຫຼັບບໍ່ໄດ້	ນ້ຳຕາຍ້ອຍຫຼັ່ງລົງ	
ໂອນກົມກູແລ້ວ	ຫຼາຍທົວງນຈວນ	ຈຶ່ງນາ
ຍາມເມື່ອມາສູ່ຫ້ອງ	ສວນກວ້າງປູເມືອງ	ພຸ້ນນາ
ພຣະບາດເຈົ້າ	ຈອມມິ່ງບົວຂວັນ	
ຈຳໝູ່ໄທອາສາ	ຜູກໄປພັນຂ້າ	
ຍັງມີບຸດຕານ້ອຍ	ບຸນມີຊູຊ່ອຍ	
ເປັນເພື່ອນບຸນລູກຄ້າ	ເຂົາຂ້າຈຶ່ງບໍ່ວາຍ	ແທ້ນາ
ກູກໍພາງາເອົາ	ດົງດອນນອນປ່າ	
ທຸກຍິ່ງລ້ຳ	ນອນກົ້ງເກືອກດິນ	ແທ້ນາ
ບັດນີ້ກູຊ້ຳໜີໄກແກ້ວ	ບຸດຕາພັດພາກ	
ປະລູກນ້ອຍ	ນອນແລ້ງຜູ້ດຽວ	ແລະນໍ

ຍາມເມື່ອທ້າວຕື່ນແລ້ວ ໃຜຈິກອດເຊີຍຊົມ ແມ່ເດ
ບາຈິຫຼຽວໄປມາ ບໍ່ເຫັນກູແກ້ວ
ລູກຈິ່ວອຍໆໄຫ້ ຫາກູຫິວຫອດ ແລະບໍ
ປານນີ້ພຣະຍອດແກ້ວ ຕາຍແລ້ວຮູ້ວ່າຍັງ ນີ້ເດ
ນາງກໍຍໍມືໄຫວ້ ອິນພົມເທວະຣາດ
ກັບທັງຄຸວນາກພ້ອມ ເທວາເຈົ້າຊ່ອຍຊູ ແດ່ຖ້ອນ
ຂໍໃຫ້ເທວາໄທ້ ແຜນນຳເຈົ້າອ່ອນ
ຢ່າໃຫ້ມຸດນອດມ້ຽນ ຕາຍຄ້າງແດ່ດົງ ແດ່ຖ້ອນ
ຄ້ອນວ່ານາງຮ່ຳແລ້ວ ເພທເພ່ງເພົາບອນ
ຫາຍວັນຄືນ ບໍ່ລືມຄາວນ້ອຍ
ໂຍຄີກາບັ້ນ ກັບດານໄວ້ກ່ອນ
ຕອນແດ່ນີ້ເມື່ອໜ້າ ຈິກ່າວນາກ່ອນແລ້ວ

ບັ້ນທ້າວສຸຣິວົງຮ່ອງໄຫ້ຫາແມ່

\- ບັດນີ້ຈັກກ່າວເຖິງສຸຣິວົງນ້ອຍ ກຸມານເຈົ້າອ່ອນ
ເຈົ້າກໍນອນປຸແລ້ງ ເນົາລ້າງແດ່ໄພ
ອັນວ່າເທວະດາດ້າວ ສາຂານີໂຄດ
ເຈົ້າກໍແນນອ່ອນນ້ອຍ ບາທ້າວບໍ່ວາງ
ອັນວ່າກຸມມານນ້ອຍ ສະບາຍໃຈນອນຢູ່
ຄ້ອນວ່າທ້າວຕື່ນແລ້ວ ບໍ່ເຫັນແກ້ວແມ່ຕົນ
ທ້າວບໍ່ຊ້າ ລຸກນັ່ງແວນເປືອງ

ບາບໍ່ເຫັນມາດາ ແມ່ຕົນເລີຍໄຫ້
ໂອນໍບຸນກອງແກ້ວ ມາດາຕົນແມ່ຂ້ອຍເອີຍ
ແມ່ກໍ່ເດີນດຸ່ງດັ້ນ ໄປແຫ້ທີ່ໃດນີ້ເດ
ເມື່ອແຕ່ກີ້ ແມ່ກ່ອນພາບອງ ແຫ້ບາ
ບັດນີ້ມາດາໄປ ແຫ່ງໃດເດເຈົ້າ
ບາກໍວອນໆຮ້ອງ ສຽງແຮງເອີ້ນກ່າວ
ແມ່ບໍ່ຂານແຈ່ມເຈົ້າ ແພງລ້ານທີ່ໃດ
ເມື່ອນັ້ນສຸຣິວົງນ້ອຍ ກຸມານເລີຍສັ່ນ
ໃຈສະບັ້ນ ຈອນເຈົ້າວົ້ງເວ
ບາກໍເຮວພລັນຟ້າວ ລີລາຈຸກຍ່າງ
ໄປກຸກະເອີ້ນ ຫາແກ້ວແມ່ຕົນ
ທ້າວກໍໄປວຽນອ້ອມ ສາຂານິໂຄດ
ທ້າວກໍຮ້ອງຮ່ຳໄຫ້ ທັງເອີ້ນກູກຫາ
ກໍຫາກຮູນແຮງນ້ອຍ ວຽນໄປຫຼາຍເລົ່າ ເລີງແລ້ວ
ເຈົ້າກໍອິດອ່ອນຮ້າຍ ບາທ້າວຄ່ອຍເຊົາ
ພໍປະມານໄດ້ ມີແຮງນ້ອຍນຶ່ງ
ທ້າວກໍລຸກຍ່າງຍ້າຍ ໄປແຫ້ບໍ່ເຊົາ
ເຈົ້າກໍລຽບຝັ່ງນ້ຳ ຊອກແມ່ມາດາ
ກໍບໍ່ເຫັນຮ້ອຍຕີນ ທີ່ໃດມີຮູ້
ທ້າວກໍວ່ອນໆຮ້ອງ ຫາແມ່ເຕັມແຮງ
ບໍ່ໄດ້ຍິນສຽງຂານ ທີ່ໃດເຢັນຈ້ອຍ

ບຸດຣາດນ້ອຍ　　ຊ້ຳອອກເມືອບົກ
ບາກໍວອຍໆສຽງ　　ຜູ້ຖຽງຫົວໃຫ້.
ພໍເມື່ອລາວັນຄ້ອຍ　　ເມືອແລງແດດອ່ອນ　　ມານັ້ນ
ສີແຈ່ມເຈົ້າ　　ແພງລ້ານຕ່າວກືນ
ທ້າວກໍມາຮອດໄມ້　　ນີໂຄດໂພໄຊ
ໃບສະຖານງາມ　　ຣົ່ມພຽງພລານກ້ວາງ
ບາຄານນ້ອຍ　　ກຸມານຫົວຫອດ
ທັງເລົ້າຄຶດປາກເອົ້າ　　ແຄວນແລ້ວລວດນອນ
ພໍເມື່ອຣາຕີລ້າ　　ຍາມແຄໃກ້ຫຸ້ງງ　　ຄືນນັ້ນ
ອັນວ່າສີແຈ່ມເຈົ້າ　　ແພງລ້ານຕື່ນມາ
ບາກໍປຽວນີ້ຍົ້　　ຄວາໄປຫາແມ່
ກໍບໍ່ຈວບແຈ່ມເຈົ້າ　　ມາດາແກ້ວທີ່ໃດ
ທ້າວກໍຄຶດຮຸ່ງຮູ້　　ຄະນຶງຢູ່ໃນໃຈ
ກູນສັງເລົາເລີ້ງໆທຸກ　　ພາກກັນໄກແກ້ວ
ນັບຫາກເປັນແຕ່ເວນກູແລ້ວ　　ນຳມາໃຊ້ຊາດ
ຈິ່ງໄດ້ພັດພາກບ້ານ　　ເມືອງບັ້ງແຫ່ງຕົນ　　ແລະນໍ
ພອຍເລົ້ານາງນອນຄ້າງ　　ໄພສິນຫົວຫອດ
ຊ້ຳມາພັດຍອດແກ້ວ　　ຈອມຊ່ອຍແມ່ຕົນ　　ນີ້ແລ້ວ
ທ້າວສະດຸ້ງຕື່ນແລ້ວ　　ລຸກນັ່ງມືນຕາ
ບັງເລົ້າງົມງວາຫາ　　ແມ່ຕົນທັງໃຫ້
ນ້ອຍນຶ່ງແລ້ວ　　ທ້າວເລົ້າຫຼັບໄປ

ພໍປະມານເລີຍ ຮຸ່ງມາໃະແຈ້ງ
ອັນວ່າບຸນກອງທ້າວ ນິງເບົາເລີຍຕື່ນ
ທ້າວກໍຫຼິງລ່ຳປຸ້ມ ໄປແທ້ຊູ່ທາງ
ຫວັງຈັກເຫັນໜ້າແກ້ວ ພຣະແມ່ມາດາ
ກໍຈຶ່ງລີງແຄນຊີບ ທ່າພຽງພລານກ້ວາງ
ຄ້ອມວ່າທ້າວລ່ຳແລ້ວ ລຸກຍ່າງແວນເປືອງ
ເຖິງບະທີຫຼວງ ຜໍ່ດູຫຼິງປຸ້ມ
ກໍບໍ່ເຫັນຕົນແກ້ວ ມາດາພຣະແມ່
ເຫັນແຕ່ປາເຫຼື້ອມບ້ອນ ຕີນ້ຳຟາດຟອງ
ເຈົ້າກໍລີງສູ່ນ້ຳ ນົ້ກອນຟາຍກົນ
ບາຄານເລີຍ ສ່ວນສີໃສງລ້າງ
ແຕ່ນັ້ນກຸມານນ້ອຍ ລີລາຍິວຣະບາດ
ຂຶ້ນຝັ່ງນ້ຳ ມາແລ້ວລວດເຊົາ
ບາຄານນ້ອຍ ຄະນິງໄປຫຼາຍສິງ
ຈັກວ່າແມ່ແຈ່ມເຈົ້າ ຕາຍແລ້ວຈາກກູ ນັ້ນລື
ທ້າວຮ່ຳແລ້ວ ບາຍໜ່ວຍຊົມພູ
ນິງເບົາເລີຍ ຄ່ອຍກິນທັງໝ້ອມ
ໂອນໍເວນໃດເດ ຈຳຈົນພັດແມ່ ກູເດ
ຮູ້ວ່າຜີເສື້ອນ້ຳ ມາພໍໄລ່ກິນ ນັ້ນລື
ຜີວ່າເປັນສິງນັ້ນ ກູເລົາຕາຍດອນ ບໍ່ຢ່າແລ້ວ
ແມ່ນວ່າມັນຈັກກິນທັງສອງ ກໍຊ່າງກັນລາງແລ້ວ

24/7
ຫ້າມຈຳໜ່າຍ

ຄ້ອນວ່າບາຈົ່ມແລ້ວ　　ຫຼຽວເຫຼືອດໄປມາ
ກໍບໍ່ເຫັນມາດາ　　ເພທນອງບິນບ້ອຍ
ນັບແຕ່ບາຄານນ້ອຍ　　ຕົນດຽວນອນປ່າ
ໄດ້ຫ້ານີ້　　ຄອຍປ້ຽນລ່ຳທາງ
ອັນວ່າເທວະດາດ້າວ　　ຈັກກະວານຂຶງເຂດ
ກໍຈຶ່ງຊູຊ່ອຍໃຫ້　　ບາຫ້າວບອດໄດ
ເທວາບັນດົນໃຫ້　　ຫົວໃຈເຈົ້າອ່ອນ
ໃຫ້ດຸ່ງດັ້ນ　　ໄປແທ້ບໍ່ນານ
ແຕ່ນັ້ນກຸມານນ້ອຍ　　ສະບາຍໃຈຫາຍໂສກ
ເຈົ້າຈຶ່ງເດີນດຸ່ງດັ້ນ　　ໄພກົ້ວາງຄ່ອຍໄປ
ກໍບໍ່ຮູ້ທີກ້າ　　ຫົນແຫ່ງທາງໃດ
ເຈົ້າກໍຈົນງວາເດີນ　　ຄວ່າດົງໄພກ້ວາງ
ອິນທາເຈົ້າ　　ຈະຕຸຣາທັງສີ່
ເຈົ້າກໍລົງກວາດແຜ້ວ　　ທາງຫ້າວທີ່ໄປ
ອິນກໍລົງປູກໄວ້　　ສັພສິ່ງຂອງກິນ
ນາງນີ　　ຊູ່ອັນເຫຼືອລົ້ນ
ມີທັງກູດທະລີກ້ວຍ　　ເຄືອງາມໄຂກາບ
ສຸກເຮືອເຂັ້ນ　　ເຄືອຕັ້ງຕໍ່ດິນ
ບາຄານຫ້າວ　　ບູຂະບາຍກິນອີ່ມ
ຝູງໝູ່ບາວເວີສົ້ນ　　ທັງກ້ຽງກອກກຽງ
ມີທັງຊົມພູພ້ອມ　　ຂຸນຝູນມີ້ມ່ວງ

ສັພສິ່ງແນວໝາກໄມ້ ມີພ້ອມຊູ່ອັນ
ມີທັງທຸລຽນພ້ອມ ຊາງຫວານໝາກຫາດ
ມີທັງຝູງດອກໄມ້ ບານເຮື້ອແຄ່ທາງ
(ຫຼາຍສໍ່າເຊື້ອ ຊ້າງຊຸ້ເປັນແຖວ)
ບາຄານເລີບ ລ່ວງກາຍໄປໜ້າ
ດູບານໄດ້ ຫຼາຍອັນມີມາກ
ທຸກຄໍ່າເຊົ້າ ເດີນດັ້ນຜູ່ດຽວ
ຟັງບິນກໍຈະວີກຮ້ອງ ສຽງກ່ອນຫວານຫູ
ເໜືອນດັ່ງສຽງພິນຊໍ່ ອຸ່ນແຄນວົງຄ້ອງ
ສຽງມ່ວນແມ້ງ ເຂົາເສບທີມະພານ
ບາຄານຟັງສຽງນີກ ອ່າວຄະນຶງຫາແກ້ວ
ທ້າວຮໍ່າແລ້ວ ຄະນຶງແມ່ມາດາ
ບາກໍເດີນມັກຄາ ເທພອິນແປງໄວ້
ກໍຈິ່ງໄປເຖິງຫ້ອງ ອານາຂິງເຂດ
ຮອດທີ່ທີມເວດກ້ວາງ ບາທ້າວຄ່ອຍເຊົາ
ໃຍດີກາບັ້ນ ສຸຣິວົງໄວ້ກ່ອນ
ຕໍ່ແຕ່ນີ້ ໄປໜ້າກ່າວຣັດສີ ກ່ອນແລ້ວ

ບັ້ນທ້າວສຸຣິວົງເຂົ້າໄປອາສັຍຢູ່ນຳພຣະຣັດສີ

ຍັງມີອາສົມຫ້ອງ ສາລາແກ້ວກູ່
ພຣະຣັດສີຢູ່ສ້າງ ຄິດໃກ້ຫວ່າງດອຍ

ມີທັງສະພັງກວ້າງ　　ບົວທອງເຮືອງເຮືອ
ມີທັງສວນດອກໄມ້　　ລຽນລ້ອມແວດລະວັງ
ຕັ້ງຫວາກບາງພ້ອມ　　ດວງຫອມຫາບສົງ
(ບານແບ່ງກ້ານ　　ຫອມເຮົ້າທົ່ວທະອັງ)
ມີທັງມີ້ມ່ວງພ້ອມ　　ເຂົ້າໂດດແຕງໂມ
ບາງຫຼາຍ　　ອະເນກບອງເຫຼືອລົ້ນ
ອິນປູກໄຫ້　　ຕາປັດໄສເຊັ່ນເກົ້າ
ທຸກຄ່ຳເຊົ້າ　　ອັດສີສ້າງສືບມາ　　ເຈົ້າເອີຍ
– ບັດນີ້ຈັກກ່າວເຖິງເມັງຂວັນທ້າວ　　ສຸຣິວົງແຕ່ປາງກ່ອນ　　ກ່ອນແລ້ວ
ສອງຫາກລົງຈາກຟ້າ　　ມາພ້ອມພໍ່ບາ
ຍາມເມື່ອລົມດີວ້ອງ　　ນາງງາມພັດປ່ອງ
ນາງກໍລົງສູ່ຫ້ອງ　　ດົງກວ້າງປ່າໄພ
ນາງເລົ້າມາເກີດແທ້　　ໃນດອກບົວທອງ
ຕາປັດໄສເຫັນ　　ຈຶ່ງເອົາມາລ້ຽງ
ພຣະຈຶ່ງຣວາຍນົມໃຫ້　　ເປັນເປຕາງອູ່
ແລ້ວຈຶ່ງແຂວນຫ້ອຍໄວ້　　ສາລາກວ້າງແທ່ງຕົນ
ພຣະຈຶ່ງນິຣະມິດມື້ນົ້ວກ້ອຍ　　ໃຫ້ດູດຕາງນົມ
ຫຼາຍວັນຄືນ　　ໃຫຍ່ມາສອນໜ້າ
ພຣະຈຶ່ງທາງນາມແກ້ວ　　ນາງງາມຜູ້ປະເສີດ
ເຫດວ່ານາງອາໄສດວງດອກໄມ້　　ບົວແກ້ວເກີດມາ
ຊື່ວ່າໄກສອນແກ້ວ　　ຕາມນາມອັນເກີດ　　ມານັ້ນ

ຄີງອ່ອນອ້ວນ　　ປານຝ້າຍສໍາລີ
ພໍເມື່ອຫຼາຍປີແລ້ວ　　ນາງງາມສອນຍ່າງ　　ມານັ້ນ
ພຣະກໍພາທ່ຽວຫຼີ້ນ　　ສວນກວ້າງຄ່ອຍຈູງ
ເກັບດອກໄມ້　　ໃບເຂດອາສົມ
ເກັບມາລາ　　ໃສ່ມືນາງນ້ອຍ
ພໍປະມານແລ້ວ　　ຄືນມາແກ້ວກູ່
ອູ້ມລູກຂື້ນອູ່ແກ້ວ　　ຣັດສີເຈົ້າຄ່ອຍໂກວ
ນອນເປີນດີແກ້ວ　　ສເນີດາດວງເນດ　　ກູເອີຍ
ບັດນີ້ວັນວີ່ງຂື້ນ　　ປາຍໄມ້ຂອບເຂົາ
ພໍ່ຈັກລືລາເຂົ້າ　　ດົງດອນດັ້ນເຖື່ອນ
(ຫາທ່ຽວເລັ້ມລູກໄມ້　　ໃບດ້າວດ່ານດົງ　　ກ່ອນແລ້ວ
ຫຼອນເລົ່າໄດ້　　ພວງໝາກຊາງຫວານ
ມາໄວ້ເປັນອາຫານ　　ມ່ານນາງປຸນລ້ຽງ
ແຕ່ນັ້ນໄກສອນແກ້ວ　　ນາງງາມນອນອູ່
ຫຼັບຊອດຊູ້ອຍ　　ນາງນ້ອຍບໍ່ຕື່ງ
ແຕ່ນັ້ນພຣະຣັດສີເຈົ້າ　　ດົງດອນດັ້ນເຖື່ອນ
ຫາລູກໄມ້　　ທັງເຜືອກຫົວມັນ
ພໍເມື່ອວາວັນຄ້າຍ　　ຄືນມາເຖີງເຂດ
ໄດ້ເຄື່ອງຕ້ອນ　　ເອົາໃຫ້ແກ່ນາງ
ນາງກໍອອດງຕ້ານ　　ຈາພໍ່ຣັດສີໂສມ
ເອົາຊາງຫວານ　　ປອກກີນຫົວຈື້ນ

ແຕ່ນັ້ນຫຼາຍວັນໄດ້ ຮະດູປີສອນໃຫ່ຍ ມາແລ້ວ
ງາມນົງນ້ອຍ ອິນແຕ້ມແຕ່ງລົງ
ອາຍຸໄດ້ ຫົກຂວບປີປາຍ
ເໜອນດັ່ງອິນຕາຊຽນ ແຕ່ລົງມາປ້ອງ
ພຣະຈິງນິຣະມິດໃຫ້ ເປັນເຮືອນຫຼັງນຶ່ງ
ປູ່ຜ່າງຂ້າງເຂດເຈົ້າ ຣັດສີແກ້ວຈິ້ມຈິບ
ພຣະກໍແປງຍິນໃຫ້ ນາງງາມນ້ອຍອ່ອນ
ນາງກໍໄຫວອູ່ແກ້ວ ນອນຫຼິ້ນປູ່ເປັນ
ອັນວ່າພຣະພໍ່ເຈົ້າ ຮັກເກິງຕາຕົນ
ແພງນາງງາມ ເກິງໃຈຈິງອ້າງ
ບັດນີ້ຈັກກ່າວເຖິງສຸຣິວົງທ້າວ ເດີນດົງດັ້ນປ່າ ກ່ອນແລ້ວ
ເຈົ້າກໍມາຮອດຫ້ອງ ສະພັງກ້ວາງຄ່ອຍໄປ
ຫຼິງເຫັນອາສົນເຈົ້າ ຕາປັດໄສເຮືອງຮຸ່ງ
ຝູງໝູ່ວົ້ນດອກໄມ້ ລຽນລ້ອມລອບສະພັງ
ແຕ່ນັ້ນກຸມານນ້ອຍ ສຸຣິວົງເຈົ້າອ່ອນ
ທ້າວກໍຄຶດຊູ່ຊັບ ກົວປ້ານຫຼາຍຫຼັງ
ກູກໍພົບນຶ່ງແລ້ວ ຊ້ຳເລົ້າສອງທີ ແລະນໍ
ເປັນແຕ່ເວຣາກູ ຂອດມານີແລ້ວ
ອັນນີ້ຈັກວ່າເຄຫັງຫ້ອງ ເຮືອນຜີຍັກໃຫ່ຍ ຈິງແລ້ວ
ຮູ້ວ່າຄົນປູ່ສ້າງ ດຸນນີ້ປ່ຽວພອຍ ນີ້ເດ
ຄ້ອມວ່າທ້າວຈົ່ມແລ້ວ ຄຶດປຸໃນໃຈ

ກູຈັກເອົາຕົນໜີ	ທີ່ໃດມີໄດ້	
ອັນນີ້ທາງຮອມຮ້າຍ	ຫົວພູຊົນໜີບ	ເສັງນັ້ນ
ກູຈັກລັດລ່ວງຜ້າຍ	ທາງເວັ້ນກໍບໍ່ມີ	ນີ້ເດ
ຄວນທີ່ກູລັກດັ້ນ	ໄປຫຼໍ່ ງລີງດູ	ກ່ອນເຖີ້ນ
ຄັນວ່າເປັນແນວຍັກ	ຫາກຈັກເຫັນຈິງແທ້ -	
ກໍຈິງເອົາຕົນຜ້າຍ	ຄືນໜີທາງອື່ນ	ເສັງຖ້ອນ
ອັນນີ້ບັງໄປ່ເຫັນແຈບແຈ້ງ	ສຸດສ້ຽງຮອດປ .ຍ	ແທ້ນາ
ແຕ່ນັ້ນທ້າວບໍ່ຍັ້ງ	ເລີ້ຍລ່ວງລີລາ	
ນຳທາງໄປ	ຮອດສະພັງມີຊ້າ	
ທ້າວກໍລັກລອບລີ້	ແຄມສະພັງຫຼ ງລ່ຳ	
ຄຸນອມຕົວເປາະ	ປ່ອງໄປທັງປ້ານ	
ບາຈິງໄປຈົບໃກ້	ອາສົນທີ ງລ່ຳ	ດູ່ນັ້ນ
ທ້າວກໍທີ ງເບິ່ງຫ້ອງ	ສະຖານແກ້ວຊູ່ພາຍ	
ກໍບໍ່ເຫັນຄົນແທ້	ພໍເບົາໃນເຂດ	
ອັນວ່າສີແຈ່ມເຈົ້າ	ໄປໃກ້ຈົມຈົນ	
ກໍຈິງເຫັນນາງນ້ອຍ	ເຈົ້າອ່ອນໂກສອນ	
ດູສົມສັນ	ສິງອິນຈິງແທ້	
ເຈົ້າຈິງກອບໃຈຕັ້ງ	ວາຈາຖາມຖີ້	
ເຈົ້ານີ້ຈັກວ່າແມ່ນຊາດເຊື້ອ	ແນວຊັ້ນຊີລີ	ນັ້ນເດ
ຮູ້ວ່າແນວສວາງເສື້ອ	ຜີພູພົງສມ່ອຍ	ນັ້ນລີ
ຮູ້ວ່າເປັນຊາດເຊື້ອ	ຄົນແທ້ປູ່ດົງ	ນັ້ນເດ

ອັນວ່າເຄຫັງຫ້ອງ	ເຮືອນຫຼວງຫຼັງໃຫຍ່	ນັ້ນນາ
ຈັກວ່າຄນປູ່ສ້າງ	ຈິງແທ້ສິງໃດ	ນ້ອງເອີຍ
ແຕ່ນັ້ນໄກສອນນ້ອຍ	ນາງງາມຟ້າວຟັ່ງ	
ກໍເພື່ອເຫັນແຈ່ມເຈົ້າ	ກຸມານນ້ອຍຊື່ນຊມ	
ນາງຈິງປີປາຍຕ້ານ	ດອມນາຄຳມ່ວນ	
ນາງກໍນົບບອກໃຫ້	ນາຫ້າວຊູ່ອັນ	
ຊ້ອຍນີ້ບໍ່ໃຊ່ເຊື້ອ	ຜີປ່າສມ່ອຍດົງ	ພີ່ເອີຍ
ບໍ່ໃຊ່ເນວກັນດານ	ຍັກສາສວາງເສື້ອ	
ຂ້ອຍນີ້ຫາກແມ່ນທີຕານ້ອຍ	ພຣະອັດສີອົງປະເສີດ	ຈິງແລ້ວ
ພຣະກໍທົງສືບສ້າງ	ສົນແກ້ວແຜ່ຜາຍ	ເຈົ້າເອີຍ
ເຈົ້ານີ້ມາແຕ່ບ້ານ	ຫົນແຫ່ງເມືອງໃດ	ນັ້ນເດ
ຕັ້ງວ່າແດນໄກສຸດ	ສິງໃດມາໄດ້	
ມີທັງພູຜາຂັ້ນ	ຫີນຕັນແສນງ່ອນ	
ມີທັງແຮດແລະຊ້າງ	ເສືອດ້ອນດ່ານດົງ	
ມີທັງໄຂໄບຮ້າຍ	ຜີຫຼວງແສນສ່ຳ	ຈິງນາ
ເຈົ້າສັງເດີນດຸ່ງດັ້ນ	ມາໄດ້ຜູ້ດຽວ	
ເຈົ້າຈັກເດີນໄປໜ້າ	ທາງໃດຫາປໂຍດ	ສັງນັ້ນ
ຂໍໃຫ້ພຣະພີ່ເຈົ້າ	ເຊົາຍັ້ງຢູ່ດອມ	ນ້ອງຖ້ອນ
ຢ່າໄດ້ເດີນໄປຖ້ອນ	ດາວໄກລຳບາກ	
ມັນຊິຍາກແກ່ເຈົ້າ	ແສນຊັ້ນເວທນາ	ແທ້ແລ້ວ
(ເຊີນເຈົ້າມາຢູ່ຍັ້ງ	ດອມອຸ່ນສາຍໃຈ)	

ຢ່າໄດ້ໄລຮຽນເສັງ	ປູ່ດຽວຍິນໜ້ອນ	
ເມື່ອນັ້ນບາຄານນ້ອຍ	ສຸຣິວົງກອບກ່າວ	
ທ້າວຈຶ່ງຕ້ານຕໍ່ນ້ອງ	ຄຳຜຽງະບໍ່ບັງ	
ພີນີ້ເປັນແນວເຊື້ອ	ເປງຈານກະສັດໃຫ່ຽ	ຈຶ່ງແລ້ວ
ພີກໍພັດພາກບ້ານ	ມາພີ້ເພື່ອເວນ	ນ້ອງເອີຍ
ແມ່ຂ້ອຍພາດຸ່ງດັ້ນ	ເຂົ້າປ່າໄພສົນ	
ມີແຕ່ສອງຄົນເດີນ	ປ່າດົງດອຍກ້ວາງ	
ເພື່ອວ່າເພີ່ນຈັກຂ້າ	ມາລາຕົນແມ່	
ກັບທັງຂ້ອຍພີ່ອ້າຍ	ເສັງເທ້ທ່ຽງຈຶ່ງ	
ແມ່ຈຶ່ງພາອວນເຂົ້າ	ໃນດົງດັ້ນປ່າ	
(ມາຈາກບ້ານ	ໜີພົ້ນປະເທດຕົນ	
ເພື່ອພີ່ເດີນດຸ່ງດັ້ນ	ໜີຈາກຄຳຕາຍ	
ຫຼາຍວັນຄືນ	ດຸ່ງເດີນຈີໄຈ້ວ	
ກໍ່ຈຶ່ງມາຮອດໄມ້	ນິໂຄດສາຂາ	
ແລ້ວກໍພາກັນເຊົາ	ຮົ່ມເງົາບອນຫັ້ນ	
ພໍເມື່ອວາໂບກ້ອງ	ກາຍາສບຸກິງ	
ພີກໍຫັບຊອດຊ້ອຍ	ບໍ່ມີຮູ້ເມື່ອດຶງ	
ຄັນວ່າພໍປະມານໄດ້	ສະບາຍໃຈບອນຕື່ນ	ມານັ້ນ
ເລີຍບໍ່ເຫັນແຈ່ມເຈົ້າ	ມາດາຂ້ອຍທີ່ໃດ	
ພີກໍເອີ້ນຮຽກຮ້ອງ	ເທົ້າຫົວໄພສົນ	
ກໍບໍ່ເຫັນຈອມຫົວ	ແມ່ຮຽນຫົວໄຫ້	

ພີ່ກໍຄອງຄານແທ້ ຈັກເປັນຄົນຍົນຍາກ
ພີ່ຈຶ່ງດັ້ນປ່າໄມ້ ມາແທ້ຜູ້ດຽວ ດອກນາ
ແຕ່ນັ້ນໄກສອນນ້ອຍ ພາທີກອບກ່າວ
ສຽງມ່ວນແມ້ງ ອໍຣະອ້ອຍອ່ອນຫູ
ຂໍພີ່ມາຢູ່ຍັ້ງ ຮັກຮ່ວມຮຽງອວນ ໜີ້ຖ້ອນ
ນ້ອງກໍເນົາໃນເຮືອນ ຜູ້ດຽວບິນໜ້ອມ
ອັນວ່າປີດາໃຫ້ ພຣະຣັດສີຕິບປະເສີດ
ຍາມເມື່ອພຣະທ່ຽວດ້າວ ວາງຂ້ອຍຢູ່ດຽວ ພີ່ເອີຍ
ແຕ່ນັ້ນກຸມານນ້ອຍ ຈາຣະຈາຕ້ານກອບ
ພີ່ກໍຢ້ານແຕ່ພຣະຣັດສີແຈ່ມເຈົ້າ ໃຈຮ້າຍຈິ່ດ່າຕີ ພີ່ນາ
ພີ່ນີ້ເປັນກຳພ້າ ພັດແມ່ນານດາ
ຢ້ານແຕ່ເປັນເວຣາ ຕອບຖບອງເຖິງຂ້ອຍ
ຄ້ອມວ່າທ້າວກ່າວແລ້ວ ນ້ອຍອ່ອນໄກສອນ
ນາງກໍຈາສຽງຫວານ ຕອບບາບຸນກ້ວາງ
ອັນວ່າຈອມຄຸນເຈົ້າ ພຣະຣັດສີອົງປະເສີດ ເຮົານັ້ນ
ເພີ່ນຫາກໃຈແຜ່ກ້ວາງ ບໍ່ມີໄດ້ໂກດເຄັນ ພີ່ເອີຍ
ຄ້ອມວ່ານາງກ່າວແລ້ວ ເລີຍເລີກລາເມືອ
ນາງຄານນາຍ ຈ່ອງຈູງເອົານີ້ວ
ນາງກໍພານາຂຶ້ນ ເມື້ອເຮືອນເນົານັ່ງ
ສອງແຈ່ມເຈົ້າ ຈາຕ້ານຕໍ່ກັນ
ນາງກໍເອົາມາໃຫ້ ຜາລານີ້ມ່ວງ

ມາສູ່ທ້າວ　　ແພງລ້ານຄ່ອຍກົນ
ຄ້ອມວ່າກິນອີ່ມແລ້ວ　　ເວົ້າມ່ວນຈາກັນ
ນາງກໍພາບາຄານ　　ຂຶ້ນບິນໄກວຫັ້ນ
ອັນວ່າໄກສອນແກ້ວ　　ກອງແພງນ້ອງນາດ
ນາງກໍຂຶ້ນອູ່ແກ້ວ　　ໄກວຫັ້ນທ່ວງບານ
ແຕ່ນັ້ນສຣີວົງທ້າວ　　ກຸມານຊົມຊື່ນ
ທ້າວກໍຂຶ້ນອູ່ແກ້ວ　　ດອມນ້ອງມ່ວນສະບາຍ
ສອງແຈ່ມເຈົ້າ　　ສະຖິດຮ່ວມຮຽງກັນ
ສອງກໍວອບໆຈັບ　　ຈ່ອງດຶງໄກວຫັ້ນ
ອັນວ່າຈອມໄຕແກ້ວ　　ທັງສອງສເນີພາກ　　ກັນແລ້ວ
ສູງຕ່ຳນ້ອຍ　　ສເນີພຽງເກິ່ງກັນ
ອັນວ່າສອງແຈ່ມເຈົ້າ　　ງາມເກິ່ງເທພາ
ຄືດັ່ງອິນກາຕອງ　　ຮູບດຽວປານແຕ້ມ
– ບັດນີ້ຈັກກ່າວເຖິງມະຫາໂສມເຈົ້າ　　ພຣະຣັດຕິນພໍ່　　ກ່ອນແລ້ວ
ພຣະກໍເຂົ້າເຖື່ອນດ້າວ　　ໄພກ້ວາງທ່ຽວເດີນ
ພຣະກໍຫາໝາກໄມ້　　ທັງໝູ່ຫົວມັນ
ເປັນຂອງສັນ　　ເຄື່ອງກິນຕາງເຂົ້າ
ເອົາມາລ້ຽງລູກນ້ອຍ　　ເຈົ້າອ່ອນໄກສອນ
ພໍເມື່ອະພລາເຖິງ　　ຕ່າວຄືນຫາຫ້ອງ
ເຖິງເມື່ອກາວັນຄ້ອຍ　　ພໍແລງແດດອ່ອນ　　ມານັ້ນ
ພຣະບໍ່ຊ້າ　　ຜຍອງດັ້ນດ່ວນມາ

ເຈົ້າກໍມາຮອດຫ້ອງ	ໃນເຂດອາສົນ	
ເຖິງສາລາ	ແຫ່ງຕົນເຊົາຍັ້ງ	
ພຣະກໍລີລາເທົ້າ	ເຖິງຍຽງເບົາບັ່ງ	
ກໍຈຶງເອີ້ນຮຽກຮ້ອງ	ຫາແກ້ວລູກຕົນ	
ດູຣາໄກສອນແກ້ວ	ກຸມາຣີເຈົ້າອ່ອນ	ກູເອີ້ຍ
ພໍ່ກໍມາຮອດແລ້ວ	ນາງແກ້ວຣີບມາ	ພໍ່ຖ້ອນ
ແຕ່ນັ້ນໄກສອນນ້ອຍ	ນາງງານຟັງດີ	
ໄດ້ຍິນພຣະພໍ່ເຈົ້າ	ຈອມຊ້ອຍຮຽກຫາ	
ກັລຍານ້ອຍ	ເລີຍມາເຣວຣີບ	
ຮອດແຈ່ມເຈົ້າ	ຈອມຊ້ອຍພໍ່ຕົນ	
ນາງກໍເລືອກໜາກໄມ້	ທັງໝູ່ຫົວມັນ	
ພໍຄາວເລີຍ	ກ່າວຈາຈິງຕ້ານ	
ບັງມີກຸມານນ້ອຍ	ຫຼີງໄພມາຮອດ	ພໍ່ເອີຍ
ທ້າວກໍບັງຢູ່ໜີ້	ດອນຂ້ອຍໄປໜີ	
ແຕ່ນັ້ນພຣະອັດສີເຈົ້າ	ເລີຍຈາດອນລູກ	
ສັງບໍ່ເອົາແຈ່ມເຈົ້າ	ມາພ້ອມພໍ່ກັບ	ພໍ່ເອີຍ
ເຈົ້າຈຶ່ງໄປເອົາທ້າວ	ຍານານໂດຍຣີບ	
ພໍ່ປາກເຫັນແຈ່ມເຈົ້າ	ບາທ້າວຮູບໃດ	ນັ້ນເດ
ແຕ່ນັ້ນໄກສອນແກ້ວ	ກອງແພງເລີຍແລ່ນ	
ນາງກໍເອີ້ນຮຽກຮ້ອງ	ບາທ້າວຍອດຊາຍ	
ດູຣາສເນຫາແກ້ວ	ພາຕາຕົນພີ້	ຮຽມເອີຍ

ບັດນີ້ບິດາໃຫ້ ພຣະຣັດສີວິບພໍ່
ໃຫ້ນ້ອງມາບອກເຈົ້າ ເມືອພ້ອມພໍ່ອະນ ວ່າອັນ
ແຕ່ນັ້ນສຸຣິວົງນ້ອຍ ກອງແພງບົວຣະບາດ
ທ້າວກໍລົງຈາກຫ້ອງ ເຣືອນແລ້ວຄ່ອຍໄປ
ທ້າວກໍນຳແຈ່ມເຈົ້າ ນ້ອຍອ່ອນໄກສອນ
ເຖິງສາລາ ພໍ່ດົນມີຊ້າ
ກຸມານນ້ອຍ ບໍ່ມືກ້ມຂາບ
ໄຫ້ວພໍ່ເຈົ້າ ຈອມຊ້ອຍແທບດີນ
ເມື່ອນັ້ນມະຫາໂສນເຈົ້າ ເຫັນບານ້ອຍອ່ອນ
ກໍຫາກເປັນທີ່ຮັກຍິ່ງລ້ຳ ຈອມເຈົ້າອືດູ
ພຣະກໍຊວງກອດອຸ້ມ ເອົາອ່ອນຫຽມອົກ
ພຣະຈິ່ງຈາຣະຈາຖາມ ຊື່ບາໄທທ້າວ
ດຣາກຸມານນ້ອຍ ສາຍໃຈເຈົ້າອ່ອນ ພໍ່ເອີຍ
ເຈົ້ານີ້ມາທົນຫ້ອງ ເມືອງໃດມາປ່ອງ ນີ້ເດ
ເຈົ້າຫາກຢູ່ປະເທດຫ້ອງ ເມືອງທ້າວທີ່ໃດ ພໍ່ເດ?
ແຕ່ນັ້ນກຸມານນ້ອຍ ບໍ່ມືທູນເກດ
ບອກເຫດໃຫ້ ຜາຍຜ້ຽນບໍ່ບັງ
ຂ້ານີ້ຢູ່ປະເທດດ້າວ ເມືອງໃຫ່ຽເປັງຈານ
ແນວພູບານ ລູກຊາຍພຍາເຈົ້າ
ອັນວ່າເທວີເຖົ້າ ທຽມອົງພຣະພໍ່ ຂ້ານ້ອຍນັ້ນ
ກໍຫາກແມ່ນໜໍ່ເຊື້ອ ພຣະບາດຣາຊາ

ເປັນມາດາ   ແມ່ຄືງຕົວຂ້ອຍ
ວັນນຶ່ງຣາຊາເຈົ້າ   ບິດາພຣະພໍ່
ພາກັນໄປມ່ວນຫຼິ້ນ   ສວນກວ້າງສວ່າງວອນ
ກັບທັງເທວີແກ້ວ   ມາດາຕົນແມ່
ທັງໄພ່ຟ້າ   ມາພ້ອມຊູ່ຊຸມ
ກໍຈຶ່ງມາເຫັນເນື້ອ   ກວາງຄຳງາມຍິງ
ພຣະພໍ່ເອົາໄພ່ນ້ອຍ   ໄປອ້ອມແວດວົງ
ກວາງຄຳເຂົ້າ   ໃນດົງປ່າໃຫຍ່
ພຣະພໍ່ເຈົ້າ   ທົງມ້າເລ່ນຕາມ
ກໍບໍ່ທັນມັນແທ້   ກວາງໜີເຂົ້າປ່າ
ພຣະພໍ່ຂີ່ມ້າເຕັ້ນ   ຕາມສົ້ນບໍ່ວາງ
ກໍຈຶ່ງໄປພົບພໍ້   ຍັກໃຫຍ່ຜີສວາງ
ຣາຊາກົວ   ເກືອກລົງຫຼັງມ້າ
ຍັກກໍຈັບເອົາມ້າ   ອາສະໄນຕົວອາດ
ມັນກໍເລີຍຈີກຫຍ້າ   ກິນມ້າເທ່ງພຍາ
ມ້າກໍວາຍໃນທັ້ນ   ນໍຣະບາດັບຊີວ
(ຍັງແຕ່ອົງພໍ່ເຈົ້າ   ນອນກິ້ງເກືອກດິນ)
ດາວນຶ່ງພຣະເລົ້າໄດ້   ເຫັນຍອດບາຣີ
ສົມສີງາມ   ຮູບອິນວອງແຕ້ມ
ອັນວ່າບິດາເຈົ້າ   ຣາຊາພຣະພໍ່
ເອົານາງມາປູ່ຊ້ອນ   ຫຽມຂ້າງພ່າງສະນອນ

ພຣະພໍ່ຮ້ອນ ກິ້ວໂກດໂກຫາ
ກໍຈຶງຈຳພິມພາ ແມ່ຮຽມເປັນນ້ອຍ
ແມ່ຈຶງຄິດຄຽດຄ້ອຍ ຖຽງຕອບບິດາ
ພໍ່ຈຶງຈຳໄຫຂັນ ຜູກເອົາໄປຂ້າ
ອັນວ່າຄົນເຊງຊັ້ນ ອາສາໂດຍຣີບ
ຜູກເອົາແມ່ຂ້ານ້ອຍ ລົງຫ້ອງຈາກຫໍ
(ຊັກແກ່ຫົ້ນ ຈັບຈ່ອງຈູງໄປ
ສ່ວນວ່າຄົນທັງຫຼາຍ ກໍບໍ່ມີໃຜຫ້າມ
ຕົນຕົວຂ້າ ໝາຍຕາຍນຳແມ່
ຂ້າຈຶງກອດຈ່ອງໄວ້ ໃຫ້ເອົາຂ້າພ່ຳກັບ
ແຕ່ນັ້ນຄົນເຊັ້ງຊັນ ເມືອທູນພຣະນໍ່
ພໍ່ກໍກິ້ວໂກດກ້າ ຄຳເຂັ້ນບໍ່ນາຍ
ວ່າໃຫ້ຟັນຕົວຂ້າ ຕາຍໄປນຳແມ່
ແຕ່ນັ້ນອິນປູ່ຟ້າ ບັງຄ້ຳຊ່ອຍຊູ
ເຂົາກໍບໍບັງງ້າວ ຣາງເຊັ້ງດວງອາດ
ເລີຍກະດ້າງ ສລົບລົ້ມທ່າວຫງາຍ
ເຂົາກໍບໍມີໄຫ້ວ ມາດາຕົນແມ່
ວ່າໃຫ້ເອົາຂ້ານີ້ ໜີເວັ້ນຈາກເມືອງ
ກໍຈຶງພາກັບເຂົ້າ ດົງດອນດັ້ນເດືອນ
ແສນທຸກລ້າ ເດີນດັ້ນຄ່າວໄປ
ຄັນວ່າມາເຖິງໄມ້ ໂພໄຊຣິນແມ່

ແມ່ແຈ່ມເຈົ້າ ພາຂ້ານັ່ງນອນ
ຄັນວ່າຂ້າຕື່ນແລ້ວ ບໍ່ເຫັນແມ່ມາດາ
ຂ້າກໍຊິລຫາໄຫຼ ຫຼັ່ງລົງຮໍາໜ້າ
ຂ້າກໍເດີນດົງກ້ວາງ ບຸນຫຼາຍຈຶ່ງເຖິງພໍ່ ພາຍພື້
ຂໍແກ່ພຣະພໍ່ເຈົ້າ ກູນາຂ້າອຶດູ ແດ່ທ້ອນ
ແຕ່ນັ້ນພຣະຣັດສີເຈົ້າ ອຶດູຕົນນາບ່າວ
ໄດ້ຍິນທ້າວກ່າວແລ້ວ ທັງໄຫ້ຮຸ່ງຫຼັງ
ແຕ່ນັ້ນໄກສອນແກ້ວ ໄດ້ຍິນນາເລົ້າເຫດ
ນາງກໍຊິລເບດນ້ອຍ ນໍາທ້າວອຶດູ
ເມືອກັ້ນພຣະຣັດສີເຈົ້າ ຈອມບຸນກອບກ່າວ
ໃຫ້ເຈົ້າຍັ້ງປູ່ໜີ້ ຢ່າໄດ້ຮໍ່າຄະນຶງ ລູກເອີຍ
ອັນວ່າກອງແພງແກ້ວ ມາດາຕົນແມ່ ນານັ້ນ
ກໍຫາກຍັງທ່ຽງແທ້ ຈອມໄທ້ບໍ່ຕາຍ ດອກນາ
ຍັງມີກັນດານກ້າ ເຕໂຊຍັກໃຫຽ່
ມັກລັກເອົາແມ່ເຈົ້າ ຈອມຊ້ອຍດ່ວນໄປ
ກໍຈິ່ງເຖິງແທ່ງຫ້ອງ ເປັນນຶງເມັງຂວັນ
ທໍ່ວ່າກັນດານຍັງ ໄປ່ຊົມນາງໄດ້
ບັດນີ້ນາບຸນນ້ອຍ ເລີຍນາເປັນລູກ ເຮົາແລ້ວ
ເຊື້ອຈິ່ງເປັນຄູ່ແກ້ວ ກັນຖ້ອນຢ່າໄລ ພໍ່ເນ
ອັນນຶ່ງຢ່າໄດ້ໄກຫາຮ້າຍ ຂົມແຂງເຂິງຄຽດ ກັນເນີ
ພໍ່ກໍຮັກຍິ່ງແທ້ ສອງແກ້ວເກິ່ງກັນ ພໍ່ແລ້ວ

ຄ້ອນວ່າພຣະກ່າວແລ້ວ ທ້າວຊື່ນຊົມບານ
ມະຫາຣັດສີແພງບຸດຕາ ລູບຫຼັງສອງນ້ອຍ
ກໍຫາກສົມງາມພຽງ ທັງສອງສເນີຣູບ ກັນແລ້ວ
ສອງຈິ່ງປູ່ຮ່ວມຫ້ອງ ກັນຖ້ອນຖ່ອຍນອນ ພໍ່ເນີ
ຄ້ອນວ່າເຈົ້າກ່າວແລ້ວ ເລີຍຄ່ຳອໍຣະຊອນ
ສອງນົງແພງ ຖ່ອຍລາເມືອຫ້ອງ
ກອງແພງນ້ອຍ ທັງສອງນົວຣະບາດ
ເມືອສູ່ຫ້ອງ ເຮືອນນ້ອຍຖ່ອຍເຊົາ
ຂາກໍເອົາໝາກໄມ້ ທັງໝູ່ທົວມັນ
ທັງສາລີ ຊູ່ອັນກິນພ້ອມ
ບໍຣະບວນແລ້ວ ເລີຍນອນເນຫເນ່ງ
ສອງກໍຫຼັບຊອດຊ້ອຍ ໃນຫ້ອງຊົວບານ
ອໍຣະຊອນລ້າ ບານແຖໃກ້ຊີຮຸ່ງ ມາແລ້ວ
ລົມລ່ວງໄມ້ ໃນຖ້ອນໜ່ວງໜາວ
ສອງອ່ອນນ້ອຍ ຕູ້ມກອດກັນຫຼັບ
ພໍຖາວເລີຍ ຮຸ່ງຈວນໃສແຈ້ງ
ອັນວ່າພຣະອັດສີເຈົ້າ ເດົາດາຕຶກແຕ່ງ
ຫ້າງບາດແລ້ວ ທັງຈ້ອງຮົມກາງ
ກັບທັງຕາລະບັດແກ້ວ ລີລານົວຣະບາດ
ເອີ້ນສັ່ງບຸດຣາດນ້ອຍ ສອງເຈົ້າປູ່ດີ ພໍ່ເນີ
ພໍ່ຈັກເມືອທົນຫ້ອງ ເມືອງສວັນນິນທິບາດ ກ່ອນແລ້ວ

ເຂືອຈິ່ງເນົາປູ່ຫ້ອງ ທໍາແກ້ວພໍ່ຄອຍ ຫັ້ນຖ້ອນ
ອັນນຶ່ງຢ່າໄດ້ພາກັນເຂົ້າ ດົງດອນເດນຄ່ວາ ພໍ່ເນີ
ກົວແຕ່ຜີສມ່ອຍດັ່ງ ນາພໍ້ໄລ່ກິນ ແທ້ດາຍ
ແຕ່ນັ້ນສອງແຈ່ມເຈົ້າ ຟາວອອກມາຫາ
ແພງຊາຍນິນ ພໍ່ແລທີ່ງປຸ້ມ
ອັນວ່າໄກສອນນ້ອຍ ກຸມາຣີຕ້ານສັ່ງ
ເຈົ້າຈິ່ງຢ່າປູ່ຊ້າ ໄປແລ້ວຮີບຄືນ ພໍ່ເອີຍ
ຄ້ອນວ່ານາງສັ່ງແລ້ວ ສະເດັດສູ່ເວຫ
ຄືດັ່ງທີ່ງຄໍາຜາຍ ເຜັ້ນພະໂຍນຍັງຟ້າ
ສັງຂຍາໄດ້ ພໍປະມານນ້ອຍນຶ່ງ
ກໍຈິ່ງເຖິງແຫ່ງຫ້ອງ ສວັນຟ້າເທພອິນ ຫັ້ນແລ້ວ
ອັນວ່າອິນທາພ້ອມ ທັງພິມຊິນຊືນ
ຍົກຍິ້ນນົ່ວ ທູນໄຫວ້ປູ່ສະລອນ
ກໍຈິ່ງທານທອດໃຫ້ ເຂົ້າທິບໂພຊະນາ
ຂອງເມືອງອິນ ທອດທານຣັດສີເຈົ້າ
ມີທັງສາລີເຂົ້າ ຂາວງາມສຸກອ່ອນ
ສັພສິ່ງພ້ອມ ຂອງຕ້ອນເຄື່ອງທານ
ນາງພ້ອມ ສັພສັນຫຼາຍສິ່ງ
ມີທັງຫຼຽນດອກໄມ້ ບູຊາເຈົ້າເຮືອເຮືອງ
ຝູງໝູ່ນາຣີນ້ອຍ ສາວສວັນໜ້າໜຸ່ມ
ບໍ່ມີໃສ່ຫວ່າງຄົ່ວ ສະລອນນົ່ວຮັບພອນ

ຍາມເມື່ອບໍຣະບວນແລ້ວ   ຈັດຕາໄຊທັງສີ່
(ປະຣິຂານຄົບຖ້ວນ   ຖວາຍແລ້ວເລີກລາ)
ເຈົ້າກໍສະເດັດດ່ວນດັ້ນ   ລົງສູ່ທໍຣະນີ
ວອຍໆລັດ   ລ່ວງລົງມີຊ້າ
ພຣະກໍແຍງຫີບຫ້ອງ   ສາລາອົງອາດ
ກໍຈຶ່ງປຸນແປ່ງໃຫ້   ສອງນ້ອຍລູກຕົນ
ເຄື່ອງທິບພ້ອມ   ທຸບສິງນາໆ
ສັພສັນມີ   ຊູ່ອັນເຫຼືອລົ້ນ
ຂາກໍບໍ່ເດືອດຮ້ອນ   ສັພສິງການໃດ
ໂພຍໄພສັງ   ກໍບໍ່ມີມາຕ້ອງ
ກໍຫາກດູບານໄດ້   ເຈັດເດືອນທັດທ່ຽງ
ພຣະກໍຮັກຍິ່ງລ້ຳ   ສເນີແກ້ວລູກຕົນ
ສອງກໍພາກັນຫຼົ້ນ   ໃນສວນເກັບດອກ
ມາຮວດຮ້ອຍ   ຖວາຍໃຫ້ພໍ່ຕົນ
ທັງຮາຍນ້ຳ   ອຸປຖາກປິດຕາ
ແລ້ວຈຶ່ງພາກັນມາ   ສູ່ເຮືອນຈິງແທ້
ຍາມເມື່ອພຣະຣັດສີເຈົ້າ   ຕະເດີນດົງດັ້ນປ່າ
ຫາໝາກໄມ້   ພໍແລ້ວຕ່າວຄືນ
(ມາຮອດຫ້ອງ   ໃກ້ຂ່ວງສາລາ)
ສອງກໍພາກັນໄປ   ຮັບເອົາຂອງຕ້ອນ
ມີທັງຊາງຫວານພ້ອມ   ອຳພານົ້ມ່ວງ

ພຣະກໍບໍ່ປື້ນໃຫ້ ສວງນ້ອຍຮັບເອົາ
ສອງກໍເອົາຂອງຕ້ອນ ນາງຫຼາບສິງ
ແລ້ວຈິ່ງມາສູ່ຫ້ອງ ເຮືອນນ້ອຍຄ່ອຍກິນ
ນາງຈິ່ງຈາດອມທ້າວ ສຸຣິວົງເຈົ້າອ່ອນ
ແຕ່ກ່ອນກໍ່ ຕົວນ້ອງປູ່ຜູ້ດຽວ ແທ້ນາ
ນານເມື່ອອົງສັກສີເຂົ້າ ໃນດົງບໍ່ມີຄູ່ ນາເອີຍ
ປະນ້ອງເນົາປູ່ຫ້ອງ ເຮືອນນ້ອຍຫງ່ວມເຫງົາ ພີ່ເອີຍ
ນ້ອງກໍຂຶ້ນອູ່ແກ້ວ ນອນປູ່ຕົນດຽວ
ໃນໄພຂຽວ ປ່າດອນດົງກວ້າງ
ມີແຕ່ສຽງນົກຮ້ອງ ເປັນເພື່ອນເຈຣະຈາ
ຕັ້ງແຕ່ນານມາເຖິງ ຊື່ນໃຈຈິ່ງແທ້
ຖ້ອນວ່າສອງຈາແລ້ວ ເລີຍນອນເນທເນັ້ງ
ສອງກໍບ່າງເວົ້າ ໃນຫ້ອງ.ກໍ່ກັບ
ພໍເມື່ອເດິກໆຂ້ອນ ລົມວອນໜາວໜ່ວງ ນາແລ້ວ
ທ້າວກໍຊວງກອດອຸ້ມ ເອົານ້ອງເນັ້ງນອນ
ພໍເມື່ອຣາຕີຂ້ອນ ສຸຣິໂຍເຮືອງຮຸ່ງ ນານັ້ນ
ແສງສ່ອງແຈ້ງ ສອງເຈົ້າສ່ວຍສີ
ແລ້ວຈິ່ງໄປຂາບໄຫວ້ ຕົນພໍ່ສັກສີໂສມ
ວັນທາຖວາຍ ກ່າວຈາຈິ່ງຕ້ານ
ເມື່ອນັ້ນພຣະສັກສີເຈົ້າ ສໍຣະບານຕັດສ່ອງ
ພຣະກໍຫຼິ່ງລ່ຳປຽນ ເຫັນສ້ຽງສູ່ອັນ

ກໍຈຶ່ງບິນບອກໃຫ້ ນ້ອຍອ່ອນກຸມານ
ສາຍໃຈເອີຍ ຄ່ອຍຟັງເນີທ້າວ
ໃຫ້ເຈົ້າຮຽນເອົາສາດສິນແກ້ວ ສິລປະຄຸນນຳພໍ່ ເສັງເຖິງ
ແລ້ວຈຶ່ງເດີນດຸ້ງດັ້ນ ເອົາແກ້ວແມ່ດິນ ພໍ່ຖ້ອນ
ເມື້ອນັ້ນສຸຣິວົງນ້ອຍ ກຸມານຊົມຊື່ນ
ທ້າວກໍນົບນອບນົ້ວ ຕີ່ນເຈົ້າພຣະຣັດສີ
(ແລ້ວນອບນ້ອມ ຮຽນຮ່ຳອາຄົມ
ບາກໍຮຽນຄາຖາ ຊູ່ວັນບໍ່ມີຄ້ານ
ບາກໍຮຽນເອົາໄດ້ ນິນຢຳຫາຍສິ່ງ
ຊູ່ຄ່ຳເຊົ້າ ບາທ້າວບໍ່ເຊົາ
ນັບແຕ່ບາຮຽນໄດ້ ນິນຢຳສາດເພດ
ຫຼາຍພ່ຳນີ້ ບາທ້າວຄ່ອຍພຽນ
ແມ່ນຈັກຣວາຍມົນໃຫ້ ເປັນໄຟເຜົາແຜ່ນ ກໍເປັນ
ຈັກໃຫ້ເປັນແມ່ນ້ຳ ນອງຖ້ວມລວາດສເມນ ກໍເປັນ
ຫຼື ຈັກເອົາໃບໄມ້ ເສກເປົ່າເປັນຄົນ
ບັ້ງເກີດເປັນພົນຫຼາຍ ໂກດແສນເຫຼືອລົ້ນ
ຫຼາຍປະການແທ້ ພຣະຣັດສີສອນສັ່ງ
ໄດ້ທັງບິນຫຼອດພົ້ນ ດຳດັ້ນກໍເລົ່າເປັນ
(ແມ່ນຈັກທຳໃດໃຫ້ ທຸກສິ່ງເປັນໄປ)
ບໍ່ມີແນວຂີດຂັດ ເບື້ອງໃດເປັນໄດ້
ທ້າວກໍຮຽນໄດ້ແລ້ວ ວິເສດຂອງດີ

ທັງຄາຖາ ຊູ່ອັນເລີບໄດ້
ເມື່ອນັ້ນຕາປະໂສເຈົ້າ ຈອມທັມຕົນພໍ່
ຄິດໃຄ່ເຫັນເດດທ້າວ ບຸນກວ້າງລູກອິນ
(ພຣະເລົ່າຕ້ານ ເຕີນອາຊກຸມານ)
ຜາຍຄຳຈາ ຕໍ່ບາຄືຄ້ອຍ
ພຣະກໍເອີ້ນຮຽກຮ້ອງ ເອົາອ່ອນມາຫາ
ບາຄານເລີຍ ຣີບມາປະນິບໄຫວ້
ເມື່ອນັ້ນພຣະບາດໄທ້ ຕົນພໍ່ຣັສສີໂສມ
ເຕີນບາຄານ ຍົກບໍ່ທະນູແກ້ວ
ດູຣາບຸດຕານ້ອຍ ຕົນແພງສເນີພດ ພໍ່ເອີຍ
ເຈົ້າຈົ່ງບໍ່ດູຖ້ອນ ທະນູສິບໜັກໂກດ
ຄັນເຈົ້າບໍ່ຍົກໄດ້ ເຮົາຈິໃຫ້ແກ່ບາ
ກັບທັງດາບເລັ່ມນີ້ ໜັກເກີງເສລາ
ຄົນພໍ່ແສນລຳຊາຍ ກໍຈົ່ງບໍ່ແບງໄດ້
(ບໍ່ໃຊ່ພໍ່ປະມານດ້າມ ດູໜັກລ້າເລີດ)
ບໍ່ກົວບຸດຣາດໄທ້ ບໍ່ງ້າວເບິງດູ ພໍ່ຖ້ອນ
ເມື່ອນັ້ນສຸຣິວົງນ້ອຍ ຍໍມືທູນບາດ
ທ້າວຈົ່ງຊັດເຂົ້າໃກ້ ທະນູແກ້ວບໍ່ນານ
ທ້າວກໍຫວາຍທິງບ້າວ ທະນູສິບໜັກໂກດ
ທັງດາບກ້າ ກຳດ້າມແກວ່ງໄກວ
ກໍຫາກສົມມາດແມ້ງ ໄດ້ດັ່ງປາຖນາ

ຄືດັ່ງອິນຕາລັງ
ຄ່ວງຄືທັງປ້ອງ
ທ້າວບໍ່ຊ້າ
ຂຶ້ນກົ່ງທະນູສິນ
ຄືດັ່ງສຳລີດິດ-
ແປດມືໄກວເບື້ອງ
ສຽງດັ່ງກອງ
ຈັກກະວານເຄັ່ງຄື້ນ
ສຽງສນັ່ນເທົ້າ
ທັງຄ້າຍທົ່ວແດນ
ອັນວ່າເທວະດາດ້າວ
ຈະດູອາທັງສີ
ກັບທັງອິນປຸ່ຟ້າ
ເທວະທ້າວຕື່ນຣີນ
ປີ້ນເລົ້າໄປວຽນອ້ອມ
ຈັກກະວານວຽນຮອບ
ແລ້ວເລົ້າຄືນສູ່ທ້າວ
ບານໄວ້ທີ່ຄອບ
ແລ້ວເລົ້າຖືກຖອດເບື້ອງ
ໄກວແກ່ວງດວງພຣະຂັນ
ຄືດັ່ງແສງສຸຣິໃນ
ນາບເມືອງກົງແກ້ວ
ອັນວ່າດວງພຣະຂັນນັ້ນ
ຟັນພູກໍຈັກຂາດ
ແມ່ນວ່າຫີນກ້ອນລ້ານ
ທະລາຍມ້າງມຸ່ນກະຈວນ
ແມ່ນຈັກຟັນນະທີກ້ຳ
ສມຸດຫວງກໍເຂີນຂາດ
ເປັນທ້ອນນັ້ນ
ຄາຄ້າງບໍ່ໄຫຼ
ແມ່ນວ່າບໍ່ບິກເບື້ອງ
ເມືອບິນກວັດແກ່ວງ
ຝູງໝູ່ເທພເຈົ້າ
ກໍເຮຮ້ອນຮ່ຳເຄືອງ
ຜີຈັ່ນບໍ່ໄປກ້າ
ຈັກກະວານໄກວແກ່ວງ
ພວກໝູ່ອາຣັກປ້ານ
ໜີຟ້າວຟັ່ງເຟືອນ
ທ້າວກໍລອງເພດພ້ຽງ
ຣິດເດດສໍຣະສິນ
ມະຫາຣັດສີເຫັນ
ຊຶ້ນຊົມດອມທ້າວ

ພຣະກໍຫວາຍທັງອູ້ມ	ເອົານາຫຍມແທບ	
ຮັກແຈ່ມເຈັ້ນ	ກຸມານນ້ອຍເກິງຕາ	
ພຣະກໍເວນມອບໃຫ້	ດວງເດດທະນູສິນ	
ທັງພຣະຂັນໄຊສີ	ມອບນາບຸນກວ້ວງ	
ກັບທັງນາງນາດນ້ອຍ	ໄກສອນມວນມອບ	
ໄວ້ໃຫ້ເປັນນິງຕົ້ນ	ຫຍມທ້າວປູ່ແຝງ	
ອັນນຶ່ງໃຫ້ໄປນຳເອົາແກ້ວ	ມາດາຕົນແມ່	ນານັ້ນ
ນາງຫາກຢູ່ແຫ່ງຫ້ອງ	ກັບດານພຸ້ນທີ່ໄກ	ລູກເອີຍ
ຄ້ອນວ່າພຣະກ່າວແລ້ວ	ນ້ອຍອ່ອນກຸມານ	
ຍໍມືທູນ	ຂານລິງເລີຍໄຫ້ວ	
ອັນວ່າເມືອງຫຼວງທ້າວ	ກັບດານຍັກໃຫ່ຍ	
ປູ່ຝ່າຍກ້າ	ຫົນແຫ້ທີ່ໃດ	ພໍ່ເອີຍ
ຂ້າກໍບໍ່ຫ່ອນຮູ້	ທີ່ປູ່ມາດາ	
ຂໍກູນາ	ບອກນິນພໍແຈ້ງ	ແດ່ຖ້ອນ
ເມື່ອນັ້ນພຣະຣັດເຈົ້າ	ຍໍມືຊີ້ບອກ	
ເຈົ້າຈົ່ງໄປຊື່ນີ້	ຈຳໜັ້ນຢ່າລືມ	ພໍ່ເນີ
ເຈົ້າຈົ່ງແນງທິດກ້າ	ເບື້ອງຝ່າຍອີສານ	
ອັນວ່າເມືອງກັບດານ	ຢູ່ໃນຫົນນັ້ນ	
ມີໜື່ນດອນເຂົາຂັ້ນ	ຜາຕັນເປັນງ່ອນ	
ເຂົາໃຫ່ຍລ້ອມ	ເມືອງນັ້ນຢູ່ກາງ	ພໍ່ແລ້ວ
ເມື່ອນັ້ນສຸຣິວົງນ້ອຍ	ຍໍມືທູນນາດ	

ໄຫວ້ພໍ່ເຈົ້າ ຈອນຊ້ອຍຄ່ອຍຈາ
ອັນວ່າທາງດົນນີ້ ສັບໃດຈິເດີນຮອດ ພໍ່ເອີຍ
(ມັນຫາກໄກຍິ່ງລ້ຳ ເຫຼືອພົ້ນຊວດປະມານ
ມີທັງເຫວັຮ່ອມຫ້ວຍ ຫີນໃຫຍ່ຜາຊັນ
ດົງຫຼວງສູງ ຊີວໄກເຕັມຢູ່ມ)
ມີທັງພູເຂົາຂັ້ນ ແສນພະນັງຫຼາຍໜ່ວຍ
ຜາໃຫຍ່ຕັ້ງ ຕັນໜ້າໜື່ນດອຍ ແທ້ນາ
ຄ້ອນວ່າທ້າວກ່າວແລ້ວ ພອະບາດຮັດສີໂສມ
ຈາຄຳຄວນ ຕໍ່ບາຄີຄ້ອຍ
ເຈົ້າພໍ່ປ່າໄດ້ເຄືອງຄຳແຄ້ນ ທາງໄປບໍ່ມີປາກ
ພໍ່ຈັກທຳເດດໃຫ້ ບາທ້າວຂີ່ໄປ ລູກເອີຍ
ຄ້ອນວ່າເຈົ້າກ່າວແລ້ວ ເລີຍຄ່ຳອໍຣະຊອນ
ອາຣຸນລັບ ລັ່ນລີງດາຄ້ອຍ
ເມື່ອນັ້ນສຸຣິວົງນ້ອຍ ປະນົມກອບລາເລີກ
ລົງຈາກຫ້ອງ ສາລາແກ້ວພໍ່ດົນ
ທ້າວກໍເມືອສູ່ເຈົ້າ ນ້ອຍອ່ອນໄກສອນ
ເຖິງເຮືອນດົນ ຄ່ອຍເຊົາໃນຫ້ອງ
ເມື່ອກັ້ນໄກສອນນ້ອຍ ບໍພາຕັ້ງພ່າງ
ສອງອ່ອນນ້ອຍ ແພງລ້ານຄ່ອຍກິນ
ເຄືອງທິບແທ້ ເຂົ້າອ່ອນຫອມຫວານ
ສອງນົງແພງ ເສບແລງເລີຍແລ້ວ

ສອງສີເຈົ້າ   ຖອຍພາລາເລີກ
ສອງພ່ຳພ້ອມ   ໃນຫ້ອງເບັ້ງນອນ
ພໍເມື່ອຮາວດີລ້າ   ເຖິງແຖໃກຮຸ່ງ   ມາແລ້ວ
ໄກ່ກໍຕີບປີກກ້າ   ຂັນຊັ້ນຮຸ່ງຈວນ
ທ້າວກໍລຸກສ່ວຍໜ້າ   ລ້າງອາບສິງສີ
ພໍດີເລີຍ   ອາບສີສິງນ້ຳ
ອັນວ່ານາຣີນ້ອຍ   ໄກສອນເຈົ້າອ່ອນ
ບໍ່ນິ່ງຂັນໜາກແກ້ວ   ຖວາຍເຈົ້າບໍ່ນານ
ນາຖານທ້າວ   ນາຍເອົາຄ້ຽວໜາກ
(ແລ້ວບໍ່ຊ້າ   ເມືອໄຫ້ວພຣະຣັດສີ
ປັດກວດແພ້ວ   ບັງຄ່ວງສາລາ
ຫາຄັນທີ   ຖ່າຍເສັງແຄມນ້ຳ
ໂຖນໂຖງງ   ບໍຣະບວນລ້າງທົວ
ພາທົບພ້ອມ   ຖວາຍໃຫ້ພໍ່ຕົນ
ພິເສດເຈົ້າ   ສເວີຍໂພດພາທົບ
ບໍຣະບວນຖອຍ   ເລີກທະໄລລາລ້າງ
ນາງກໍນາຍເອົາຂັນສລາແກ້ວ   ບໍໄປຖວາຍບາດ
ແລ້ວເລົ້າແປແປ່ນພື້ນ   ຕົນເຈົ້າໃສ່ຫົວ
ນາງກໍລາເມື່ອຫ້ອງ   ເຄຫັ້ງເຮືອນປູ່
ທຸກຄ່ຳເຊົ້າ   ນາງນ້ອຍຄ່ອຍພຽນ
ອຸປຖາກເຈົ້າ   ພຣະພໍ່ຣັດສີໂສມ

ຖິນນາຄຸນ	ປິ່ນປົວບໍ່ມີຄ້ານ	
ອັນວ່າພຣະຣັດສີເຈົ້າ	ມະຫາຄຸນຕົນປະເສີດ	
ພຣະກໍຫຼີ້ງລ່ຳປຸ້ນ	ເຫັນຖ້ວນຊູ່ອັນ	
ພຣະກໍເອີ້ນມະຫຸຂິກາເພັ້ງ	ຫຼຽນຫັນຍ້ອຍປາດ	
ມາປິ່ນປັ້ນ	ເປັນມ້າຮູບງາມ	
ຄ້ອນວ່າເຈົ້າປັ້ນແລ້ວ	ສິບເສກຄາຖາ	
ອັນວ່າອາສະໄນເລີບ	ເກີດມາເປັນມ້າ	
ອາສະໄນມ້າ	ຕົວງາມຂາວເຜືອກ	
ຄືດັ່ງອິນທ໌ປັ້ນ	ແປງແລ້ວປ່ອນລົງ	
ດູເລີບລ້ຳ	ມະນີກາບຕົວດີ	ພໍ່ແລ້ວ
ມັນຈັກປຽວເປືອງປີນ	ດັ່ງໃຈພລັນໄດ້	
ເຈົ້າຈິ່ງລອງຜັນຂື້ນ	ອາສະໄນທັງຂີ່	ດູເຖີ້ນ
ຕາງໃຫ້ເຫັນເດດທ້າວ	ກຸມານນ້ອຍພໍ່ຊີດູ	ລູກເອີຍ
ເມື່ອນັ້ນໂພທິຣາດນ້ອຍ	ເຈົ້າອ່ອນສຸຣິວົງ	
ບາກໍຜາຍຄືງແຜງ	ຄ່ອຍໄປຫາມ້າ	
ທ້າວກໍບໍ່ມີໄຫ້ວ	ສາມທີກົ້ມຂາບ	
ແລ້ວເລົ່າຊີກຂື້ນມ້າ	ອານແກ້ວເຄື່ອງຄຳ	
ແຕ່ນັ້ນອັດສະດອນແກ້ວ	ອາສະໄນທີ່ຣະເຫັນ	
ເຫາະຫອບເຕັ້ນ	ພາທ້າວແລ່ນເຊີງ	
ມ້າກໍເຂົ້າຄ່ວງເຈົ້າ	ມະຫາເອກຣັດສີໂສນ	
ໄກສອນເຫັນ	ແລ່ນຕາມນີຊ້າ	

ນາງກໍອ່ອນໆຮ້ອງ　　ຫາພີ່ກຸມານ
ນ້ອງປາກທູລວາຄໍາ　　ຂໍຄອມນາທ້າວ
ເມື່ອນັ້ນສຸຣິວົງນ້ອຍ　　ນາຄານຂານຕອບ
ພີ່ກໍກົວພໍ່ຮັດສີແຈ່ມເຈົ້າ　　ຈອມຊ້ອຍໂກດເຄັນພີ່ນາ
ອັນກົ່ງກົວເຈົ້າຕົກຈາກມ້າ　　ອານຄໍານໍຣະບາດ　　ເສັ້ງນັ້ນ
ປະພີ່ໄວ້　　ຄາຄ້າງປູ່ຜູ້ດຽວ　　ພີ່ນາ
ຄ້ອນວ່າທ້າວກ່າວແລ້ວ　　ນາງນາດນີ້ຟັງ
ນາງເລົ້າວອນຄໍາຂໍ　　ບໍ່ເຊົາຄືຄ້ອຍ
ເມື່ອນັ້ນຕາປະໂສເຈົ້າ　　ພຣະຣັດສີຫຼົງລ່ໍາ
ກໍຈົ່ງເຫັນອ່ອນນ້ອຍ　　ເພື່ອມ້າບໍ່ວາງ
ພຣະຈົ່ງເອີ້ນຮຽກຮ້ອງ　　ຫາອ່ອນກຸມານ
ເຈົ້າຈົ່ງເອົານາງງາມ　　ຂີ່ທົ່ງຮຽງຊ້ອນ
ຢ່າໃຫ້ຂືນໃຈນ້ອງ　　ນາຣີນ້ອຍອ່ອນ
ເຂືອຈົ່ງຮຽງຮ່ວມຊ້ອນ　　ອານມ້າຮ່ວມກັນ　　ພໍ່ຖ້ອນ
ແຕ່ນັ້ນທ້າວບໍ່ຊ້າ　　ຈັບຈ່ອງນາຍແຂນ
ນໍ້າຄວາດົ່ງ　　ຈ່ອງເອົານາງແກ້ວ
ໂກສອນນ້ອຍ　　ເຖິງອານເນົານັ່ງ
ນາງກໍຊວງກອດເຈົ້າ　　ບາທ້າວບໍ່ວາງ
ແຕ່ນັ້ນທ້າວບໍ່ຊ້າ　　ທົ້ນແກ່ນອາສະໄນ
ອັນວ່າພາຊີເຫາະ　　ຍ່າງເຊິ່ງຊໍາເຕັ້ນ
ມ້າກໍວິ່ນວຽນອ້ອມ　　ໄປມາໃນເຂດ

ກໍຫາກຊິນຊື່ນແທ້ ນາງນ້ອຍເລົາຫົວ
ເມື່ອນັ້ນພິເສດເຈົ້າ ຕົນພໍ່ຣົວສີໂສມ
ພຣະຈິ່ງມີຄຳຄວນ ຕໍ່ນາບຸນກ້ວາງ
ເຈົ້າຈິ່ງເຕີນຍັງມ້າ ອາຊະໄນເຫາະຫອບ ດູເຖີ້ນ
ໃຫ້ມັນເຫາະຫອບເຕັ້ນ ທະຍານລ້າລ່ວງບິນ ພໍ່ຖ້ອນ
ແຕ່ນັ້ນນາຄານໄດ້ ຍິນຄຳພໍ່ກ່າວ
ທ້າວຈິ່ງຕ້ານຕໍ່ນ້ອງ ນາງແກ້ວຊູ່ອັນ
ບັດນີ້ພີ່ຈັກພານາງຂຶ້ນ ເວຫາເຫາະແອ່ວ ຈິ່ງແລ້ວ
ເຈົ້າຈິ່ງຈັບພີໄວ້ ກຳແໜ້ນປ່າວາງ ແທ້ເນີ
ຄ້ອນວ່າແລ້ວ ເລີຍກ່າວຄຳຄວນ
ອາຊະໄນເອີຍ ຄ່ອຍໄປເນີເຈົ້າ
ຈິ່ງໃຫ້ພາອວນຜ້າຍ ເວຫາອາກາດ ດູຖ້ອນ
ຂ້ອຍຈັກຫຼີງລ່ຳປ່ຽນ ດູແກ້ຊູ່ພາຍ ພີ່ເອີຍ
ເມື່ອນັ້ນອັດສາມ້າ ອາຊະໄນຕົວອາດ
ກໍຈິ່ງເຫາະຫອບເຕັ້ນ ທະຍານຂຶ້ນລ່ວງບິນ
ອັນວ່າເທວະດາດ້າວ ຈັກກະວານທຸກເຫ່ງ
ເຫັນອ່ອນນ້ອຍ ສອງເຈົ້າຊື່ນຊົມ
ຟັງຍິນສວ່າງກ້ອງ ສຽງຫົ່ງນັບເນື່ອງ ພຸ້ນເຢີ
ອາຊະໄນເຫາະ ຜັ່ນພະໂຍນຍັງຟ້າ
ອັນວ່າກອງແພງແກ້ວ ຫັງສອງຫຼີງລ່ຳ
ເຫັນຊູ່ດ້າວ ແດນຟ້າຜໍ່ໄກ

ມ້າກໍຫຼີບຕ່າວປິ້ນ　　ລົງສູ່ທໍຣະນີ
ແລ້ວຈິ່ງແບງພູສູງ　　ຜັ່ນໄປມີຊ້າ
ຫຼີງເຫັນຖຸກຖັ່ນໄມ້　　ຊ້ອງຊໍ່ຂຽວນິນ　　ພຸ້ນເປີ
ດິ້ແກ່ວາໃບພັດ　　ກິ່ງຄອນໄຄວຄ້ອນ
ເຫັນທັງຜາດອກໄມ້　　ບານຈໍ່ຈູມງາມ
ມັນກໍກອບແຮງສຽງ　　ສົ່ງວອນຫາຊູ້
ມີໝູ່ຈັກຈັ່ນຮ້ອງ　　ແຜງງວ້າງສົ່ງສຽງ
ສອງອ່ອນນ້ອຍ　　ເຫັນຫຼາກໃນຕາ
ຝູງໝູ່ພາສາສັດ　　ແອ່ວບິ້ນບິນແສ້ວ
ອັນວ່າອາຊະໄນມ້າ　　ຕົວດີເຫາະຫອບ
ວຽນວັດອ້ອມ　　ດົງກ້ວາງບໍ່ເຊົາ
ແລ້ວເລົ່າຫຼັບຕ່າວປີ້ນ　　ຄືນສູ່ອາສົມ
ອາຣະໄນລົງ　　ບໍ່ນານເຖິງພື້ນ
ມ້າກໍເປາະປ່ອງເຕັ້ນ　　ໃນຄ່ວາງອາຣາມ
ສອງນີງຣາມ　　ຮ່ວມເທິງຫຼັງມ້າ
ມາເຖິງເຫົ້າ　　ອາສົມພຣະພໍ່
ທ້າວກໍຊັກແຄ່ນມ້ຳ　　ຮຽງຮ້ານຈອດເຊົາ
ແລ້ວຈິ່ງຂື້ນສູ່ໄທ້　　ພຣະພໍ່ຣັດສີໂສມ
ບາກໍບໍ່ມີທູນ　　ຂາບລົງເລີຍໄຫວ້
ແຕ່ນບຈອມທັນເຈົ້າ　　ຈາຣະຈາກອບກ່າວ
ໄປພໍ່ທ້ອນ　　ວັນນີ້ໂຊກມີ　　ພໍ່ແລ້ວ

ຄັນວ່າລູກໄດ້ແລ້ວ	ພຣະແມ່ມາດາ	
ໃຫ້ລູກພາເມືອເມືອງເປງຈານ	ແຫ່ງດິນພາຍພຸ້ນ	
ແລ້ວຈິ່ງຄືນເອົານ້ອຍ	ໄກສອນນາງນາດ	
ເມືອຮ່ວມຊ້ອນ	ຫຼຽນທ້າວປູ່ແຝງ	ພໍ່ເນີ
ຄ້ອນວ່າພຣະກ່າວແລ້ວ	ເຈົ້າອ່ອນກຸມານ	
ເດົາດາດິກ	ແຕ່ງດິນມື້ຊ້າ	
ຫາໝູ່ຂັນສລາພ້ອມ	ມາລາຫຼຽນທູນ	
ທ້າວກໍບໍ່ໄສ່ເກົ້າ	ຖວາຍໄຫວ້ພໍ່ດິນ	
ເມື່ອນັ້ນໄກສອນນ້ອຍ	ນາງງາມເຈົ້າອ່ອນ	
ເຫັນແຈ່ມເຈົ້າ	ບາທ້າວພື້ດິນ	
ດິກແຕ່ງຫ້າງ	ຄາດເຄື່ອງອານຄຳ	
ນາງກໍຊົລຫາໄຫຼ	ຫຼັ່ງລົງຮ່ຳໜ້າ	
ນາງກໍຂໍວອນໄຫ້ວ	ພຣະຣັດສີດິນພໍ່	
ຂໍໄປນຳແຈ່ມເຈົ້າ	ບາທ້າວພື້ດິນ	ພໍ່ເອີຍ
ເມື່ອນັ້ນໂສມປະເສີດເຈົ້າ	ລີນອ່ອນບຸດຕີ	
ສາຍໃຈເອີຍ	ຄ່ອຍຟັງເປີເຈົ້າ	
ເຈົ້າຈົ່ງອົດປູ່ນັ້ງ	ນຳພໍ່ຄອຍນາ	ກ່ອນຖ້ອນ
ເກັງທໍ່ສົນຄານໜັກ	ນາກກໍໃຈນາທ້າວ	
ຄັນວ່າມື້ ໄຊກ້າ	ຝູງມານໂອຍອ່ອນ	
ໄດ້ແມ່ເຈົ້າ	ຄືນເຂົ້າສູ່ເມືອງ	
ເມືອຮອດບ້ານ	ເມືອງໃຫ່ຽເປງຈານ	ເມື່ອໃດ

ບາຈັກຄືນມາເອົາບາງເບື້ອ ເນື້ອລຸນນຳພ້ອມ
ພຣະຣັດສີເຈົ້າ ລືມບາງຫຼາຍສິ່ງ
ຂໍໃຫ້ບາງບາດນ້ອຍ ແພງລ້ານຄ່ອຍຟັງ ພໍ່ຖ້ອນ
ແຕ່ນັ້ນສຸຣິວົງນ້ອຍ ບາຄານກົ້ມຂາບ
ແປະແຜ່ນພື້ນ ຕີນເຈົ້າໃສ່ຫົວ
ອັນວ່າພິເສດເຈົ້າ ຕີນພໍ່ອັດສີ ໂສມ
ເຈົ້າກໍຈາຄຳດີ ສັ່ງບາຜາຍຜຸ້ນ
ອັນວ່າເທວີແກ້ວ ຣາຊາພຍາພໍ່ ບານັ້ນ
ນີໄຊ່ເຊື້ອຊາດຊັ້ນ ຄືນແທ້ແມ່ນພີ ລູກເອີຍ
ເຈົ້າຈິ່ງໄປໄລ່ຕ້ອນ ຂັບສິ່ງມັນໜີ ພໍ່ເນີ
ກໍຈິ່ງບູສະບາຍສຸກ ໃພ່ໄທທັງຄ້າຍ
ຄັ້ນວ່າພຣະສັ່ງແລ້ວ ທຸກສິ່ງບໍຣະບວນ
ບາກໍເອງຊູລີກອນ ກາບລາຈອມເຈົ້າ
ແລ້ວເລົ່າບາຍແຂນນ້ອຍ ໄ ກສອນບາງບາດ
ຕ້ານສັ່ງນ້ອງ ຄຳໝັ້ນຊູ່ອັນ
ຄ່ອຍປູ່ດີເປີສເນຫາຫ້ອຍ ສເນໂຫຂອງພີ່ ແພງເອີຍ
ໃຫ້ເຈົ້າອຸປຖາກເຈົ້າ ຈອມໃຫ້ພຣະບອດຄຸນ ພີ່ເນີ
ເຈົ້າຢ່າລືມຍັງບ້ຳ ຄັນທີປຸນຖ່າຍ
ກັບທັງຂັນດອກໄມ້ ບູຊາເຈົ້າຊູ່ວັນ ພີ່ເນີ
ຄັ້ນວ່າທ້າວສັ່ງແລ້ວ ຊຸລເນດນອງໄຫຼ
ບາງກໍຟາຍຟູມເຊັດ ສັ່ງບາທັງໄຫ້

ຄ່ອຍໄປດີເປີສານີໂກແກ້ວ ຜິວແພງກັບປະຖົບ ອວນເອີຍ
ເຈົ້າຢ່າປະໄປ່ນ້ອງ ນອນແລ້ງປູ່ດຽວ ແດ່ເນີ
ຄັນເຈົ້າເມືອເຖິງຫ້ອງ ເປງຈານເມືອງເອກ ເມື່ອໃດ
ໃຫ້ເຈົ້າຣີບແຜັ່ນຜ້າຍ ເອົານ້ອງດ່ວນດອນ ແດ່ເນີ
ຄ້ອນວ່ານາງສັ່ງແລ້ວ ທ້າວເລົ່າພອບຂານ
ຈາຄຳງາມ ສັ່ງນາງຄືຄ້ອຍ
ຄັນວ່າພີຫາກໄປຮອດໃຫ້ ຕິນພໍ່ປິດຕາເມືອໃດ
ພີຈັກເອົາອາຊະໄນ ຕ່າວຄືນຫານ້ອງ
ຄ້ອນວ່າທ້າວກ່າວແລ້ວ ຕ້ານສັ່ງຄຳງາມ
ບາກໍລາໂກສອນ ຄ່ອຍໄປທັງເບື້ອນ
ທ້າວກໍຫວາຍທິງແກ້ວ ທະນູສິນສອນດາບ
ຊິກຂຶ້ນມ້າ ອານແກ້ວເຄືອງຄຳ
ອັດສາມ້າ ອາຊະໄນຫືຣະແຫ່ນ
ເຫາະຫອບເຕັ້ນ ທະຍານລ້າລ່ວງໄປ
ທ້າວກໍຊັກແຄ່ນມ້າ ແຍງຝ່າຍອີສານ
ທະຍານແຝງເມໂຄ ລ່ວງໄປປອນເຝື້ອ
ພໍປະມານໄດ້ ຫາງໄກສິບສອງໂຍດ
ທ້າວກໍລິງແວ່ປັ້ງ ຄາວນ້ອຍຣິ່ມເປັນ
(ພັກຈອດປັ້ງ ຄາວເມື່ອຍເອົາແຮງ
ຄັນວ່າພໍຄາວຈັກ ດຸ່ງເດີນໄປໜ້າ
ບາກໍແຍງພລານກວ້າງ ແດນຊິນແມ່ນ້ຳໃຫຍ່

ໃບຣິມໄມ້ປ່າແປ້ງ ເຊົາຫັ້ນບ່ອນສະບາຍ
ກໍຈິ່ງຫາຍຄຳຮ້ອນ ເສໂຫເສັ່ງສວ່າງ
ທ້າວຈຶ່ງລົງອາບນ້ຳ ວັງກ້ວາງຜັ່ປາ
ຫລິ່ງເຫັນຄຸນເຄິ່ງຄ້າວ ເຂັ້ງຂາວດຸກເດີດ
ມີທັງປາຫວ່າໄຄ້ ເລັງກ້ອນແຫບຫີນ
ສຸຣິວົງທ້າວ ລີລາບົວຣະບາດ
ອອກຝັ່ງນ້ຳ ນະທີກ້ວາງຄ່ອຍເຊົາ
ພໍເມື່ອຕາວັນຄ້ອຍ ບານແລງແດດອ່ອນ ມາແລ້ວ
ຝູງໝູ່ຈັກກະຈັ່ນຮ້ອງ ບານແລ້ງເມື່ອແລງ
ມີທັງຈັກກະພາກພ້ອມ ຣຽກຄູ່ຫາຄອນ ພຸ້ນເປີ
ແຊວໆສຽງສາລິກາ ເຂົ້າຮັງຮຽງຊ້ອນ
ອັນວ່າອັດສາຜ້າຍ ເວຫາຄາວຖີບ
ທ້າວຈຶ່ງລົງແວ່ປັ້ງ ແຄມນ້ຳແມ່ນະທີ
ທ້າວກໍແບງຣິມໄມ້ ຕົ້ນໃຫ່ງໄຣຄຳ
ຈຽມປາງສີ ຄ່ອຍເນົານອນຫັ້ນ
ພໍຍາມລ້າ ກອງຄີວໄກຈີຣຸ່ງ ນານັ້ນ
ໄກ່ປ່າຕີບປີກຮ້ອງ ຂັນທ້າຮຸ່ງຈວນ
ທ້າວກໍຮູ້ເມື່ອແລ້ວ ລຸກນັ່ງເຮວພລັນ
ບາກໍບາຍຄັນທີ ສ່ວຍສີສົງລ້າງ
ຟັງຍິນແຊວໆຮ້ອງ ສະກູບາຊິນເຖື່ອນ
ຝູງກະແຕຮອກຈ້ອນ ໂຕນຫຼົ້ນຮ່າຍຄອນ

ພິເສດທ້າວ ສເວີຍໂພດບໍ່ຣະບວນ
ພໍຄາວເລີຍ ລ່ວງກາຍໄປໜ້າ
ທ້າວກໍຜັນຜຍອງຜ້າຍ ເວຫາອາກາດ
(ກາຍກີບຟ້າ ຊຽວດັ້ນດຸ່ງພະໂຍນ
ຂ້າມປ່າໄມ້ ຫຼາຍລັ້ນພູເຂົາ
ເອົາດົນແຜງຜໂດ ດຸ່ງເດີນໄປໜ້າ
ແມ້ງບຶ່ງເຖິງແດນດ້າວ ດົງໃຫຍ່ພູສູງ
ວອຍໆສຸດ ຊີວຕາເຕັນປຸ້ມ
ຫີນນັ້ນເປັ້ນແດນດ້າວ ກັບດານບັກໃຫຍ່
ມີບໍ່ນ້ຳ ສະພັງກວ້າງລຽບດອຍ
ບໍຣິນທ້າວ ເຖິງສະພັງບານທ່ຽງ
ທ້າວກໍລົງອາບນ້ຳ ຫາຍຮ້ອນຄ່ອຍເຊົາ
– ບັດນີ້ຈັກກ່າວເຖິງນາໂຖເຊື້ອ ພຍາລົງອ້າຍໂກກ ກ່ອນແລ້ວ
ມັນຮັກສາດ່ານເຈົ້າ ກັບດານທ້າວແຕ່ປະຖົມ
ເຂົາກໍມາເຫັນທ້າວ ສຸຣິວົງເຈົ້າອ່ອນ
ເຂົາດົນຫ້ວງ ທັງຄ້າຍຫົວໄພ
ເຂົາກໍວອກແວກເຕັ້ນ ລົງສູ່ທໍຣະນີ
ແຊວງສຽງ ໂຫ່ນັ້ນເນືອງຮ້ອງ
ລາງຕົວໂກກເກກເຕັ້ນ ໂຕນຜ່າຍປົວໜີ ກໍມີ
ລາງພ່ອງດືນໄປຫູບ ໂກກຫຼວງພຍາເຈົ້າ
ບັດນີ້ດູຂ້າເດີນໄປພໍ້ ເຕໂຊນະບຸດຕ່າງ

ມັນກໍມາລ່ວງເຂົ້າ　　ແດນດ້າວດ່ານເຮົາ　　ພຣະເອີຍ
ເມື່ອນັ້ນວານອນເຖົ້າ　　ນາໂຖອ້າຍໂກກ
ໄດ້ຍິນລືງບ່າວຄັ້ນ　　ມາໄຫວ້ໂກດເຄັນ
ມັນກໍເລີຍຖຽດຮ້າຍ　　ຄືງສັ່ນຕາແດງ
ມັນກໍຂວາງສຽງ　　ກ່າວຈາຈິງຕ້ານ
ມັນຫາກລືກູແລ້ວ　　ພຍາລືງຂຸນດ່ານ
ໃຜຫ່ອນມາລ່ວງຫ້ອງ　　ໄພກວ້າງແຫ່ງກູ　　ນີ້ເດ
ຄ້ອນວ່າແລ້ວ　　ເດີນປ່າວໃບທາ
ສູຈິ່ງເດົາດາຕິກ　　ແຕ່ງດີບາຊ້າ
ໃຫ້ຮີບໃຊ້ບອກເຈົ້າ　　ອ້າຍໂກກຂຸນສີ
ທັງຫາງຂໍ　　ໃຫ້ຮີບມາມວນພ້ອມ
ແຕ່ນັ້ນທື່ນໆຂ້າ　　ຊາວເທດນາໂຖ
ເຂົາກໍນອງພົນໄທ　　ລ່ວງມາມວນເຕົ້າ
ຕາດູໄດ້　　ພົນແພນຫຼາຍຫມື່ນ
ກິດເສັນໄດ້　　ສາມລ້ານແປດແສນ
ອັນແຕ່ຕິວຫານໄດ້　　ຫາງຂໍແສນນຶ່ງ
ເຂົາກໍເຕີະປາກງ້າ　　ຄືງຟ້ອນກ່າວຫານ
ຄ້ອນວ່າພົນຄົບແລ້ວ　　ທ້າວໂກກພຍາລືງ
ມັນກໍບໍ່ພົນຫຼວງ　　ລ່ວງໄປມີຊ້າ
ໂຫດໆກ້ອງ　　ເຕັມປ່າໄພສິນ
ແຊວໆຝູງຫມູ່ລືງກັງ　　ໂຫ່ນັນເຜືອນຟັ້ນ

ເຂົາກໍມານອນເຕົ້າ　　ສະພັງພຽງແຄມທົ່ງ
ລາງພ່ອງຂຶ້ນຕົ້ນໄມ້　　ຄອຍປຸ້ມເບິ່ງດູ
ເຂົາກໍຫຼຽວເຫັນມ້າ　　ທັງບາເຊົາປູ່
ເຂົາກໍຕົກປີກຊ້າຍ　　ຂວາເຂົ້າບໍ່ບານ
ອັນວ່າລີງໂຫນເຕົ້າ　　ບາໂດອ້າຍໂກກ
ມັນກໍຫຸນຫູ່ເຂົ້າ　　ກາງໄວ້ເຂື້ອນແຂງ
ເຂົາກໍປະວອກປະແວກເຕັ້ນ　　ປົບໃສ່ສິນໆ
ໝາຍຈັກກຸມບາຄານ　　ຄູ່ຕົວເອົາທ້າວ
ແຕ່ນັ້ນບໍ່ອີນເຈົ້າ　　ກຸມານເຫັນຫຼາກ
ອັນວ່າສັດຖ່ອຍຮ້າຍ　　ມາອ້າງໂອດຕົວ　　ແຫ້ນ
ຄ້ອນຄຶດແລ້ວ　　ທ້າວເລົ້າເລີຍຫົວ
ເຂົານີ້ແນວວານອນ　　ບໍ່ຄວນທຳຮ້າຍ
ເມື້ອຈັກເອົາໃຈແທ້　　ຊາເຂົາຝູງຖ່ອຍ　　ດັ່ງນັ້ນ
ເຂົາຈັກນໍອະນົງມຸ້ງນ　　ເສັ້ງແທ້ບໍ່ສົງ　　ແລະນາ
ບັດນີ້ກູຈັກລວງເຊີງຫຼົ້ນ　　ເດໂຊລິດທິເດດ　　ດູເຖິ້ນ
ຕາງໃຫ້ເຫັນຣິດແທ້　　ລີງເຖົ້າອ່ອນໂຍນ　　ນັ້ນຖ້ອນ
ຄ້ອນກ່າວແລ້ວ　　ເລີຍເລົ້າທົ່ງຫັນ
ທ້າວກໍຣວາຍອາຄົມ　　ເປົ່າໄປມີຊ້າ
ເລີຍເລົ້າເປັນລີງລັ້ນ　　ໃບດົງຂ່ຳເຂືອກ
ເຂົ້າມາວົງແວດລ້ອມ　　ບາທ້າວໝື້ນຖັບ
ເຖ້ຽຣະດາດລັ້ນ　　ລີງມາກເຫຼືອຫຼາຍ

ເຂົາກໍເປັນໄທຂັບ　　ພຣະບອດຊາຍບຸນກວ້າງ
ເມື່ອນັ້ນຣິດທິເດດທ້າວ　　ສຣິວົງໄພທິຮາດ
ພຣະຈິ່ງບິນບອກແຈ້ງ　　ຈຳໃຊ້ໝູ່ລີງ
ສູຈົ່ງໄປຊິນສູ່　　ສົນຖາມຊື່ງບາດ　　ດູຖ້ອນ
ໃຫ້ສູຈັບຜູກຄ້ອງ　　ລີງເຖົ້າແກ່ມາ　　ຫ່ຽວເຖົ້ນ
ຄ້ອນວ່າທ້າວບອກແລ້ວ　　ເຂົາຮີບໂດຍພລັນ
ເຂົາກໍເອົາກັນຕິກ　　ແຕ່ງດີດາຖ້ວນ
ສິບໆເຕັ້ນ　　ຄະໃບງໄປໂດຍຣີບ
ເຖິງທ່ານລີງໃຫ່ຍຜູ້　　ຂຸນທ້າວດ່ານຫຼວງ
ເມື່ອນັ້ນອ້າຍໂກກເຈົ້າ　　ຂຸນໃຫ່ຍພຍາລີງ
ເຂົາກໍແຊວງສຽງ　　ຊູ່ຕົວມາພ້ອມ
ນັບແຕ່ພົບຫານທ້າວ　　ພໍແສນທາງຂອດ
ເຂົາກໍເຫັນຕ່າງແທ້　　ພົນທ້າວອະເນກນອງ
ແຕ່ນັ້ນຫາງຂໍທ້າວ　　ເຕີນພົນດົນແຕ່ງ
ແບກປີກຊ້າຍ　　ຂວາເຂົ້ານໍ່ຫີນ
ລາງຕົວວາງຄີງລົ້ມ　　ເລີຍຕາຍຄໍຂາດ　　ກໍມີ
ລາງພ້ອງເຈັບປວດຮ້າຍ　　ຟາງບ້າບໍ່ຫີນ
ຜົງທຸລີກຸ້ມ　　ແດນສະພັງເປັນຝຸ່ນ
ລາງພ້ອງຕົກໃສ່ນ້ຳ　　ກຸມກ້ຽວກອດກັນ
ໃນບໍ່ຖອຍໜີໄດ້　　ກຸມກັນກາງແກ່ງ
ຊູ່.ກົວຊູ່ຫາກຂີນຄານກ້ຽວ　　ກຸມປ້ານບໍ່ຫີນ

ແຕ່ນັ້ນບໍຣິບທ້າວ　　ສຸຣິວົງໄພທິຣາດ
ເຈົ້າກໍເຫັນພຸ້ນພີ້　　ຕາຍແທ້ໄຂວ່ຂືນ
ທ້າວກໍຄຶດຣ່ຳຣູ້　　ຕັດສ່ອງສໍຣະບານ
ເຂົານີ້ແນວບາມສັດ　　ປູ່ດົງໄພກວ້າງ
ກູນີ້ຕັ້ງແມ່ນທັມມະຊາດເຊື້ອ　　ແນວໜໍ່ເປັງຈານ
ແນວພູບານ　　ພຣະບອດເມືອງ　　ຈິງແທ້
ກໍບໍ່ຄວນທີ່ເອົາໃຈຕັ້ງ　　ຊາເຂົາຝູງຖ່ອຍ　　ຈິງບາ
ເຂົາຈັກມຸດມອດມ້ຽນ　　ຕາຍສ້ຽງບໍ່ຫຼໍ　　ແທ້ແລ້ວ
ແຕ່ນັ້ນທ້າວຖອດກູ້　　ຖືກເພດຄາຖາ
ຝູງຣິດທີບາ　　ລວດບາງຫາຍສ້ຽງ
ບັງແຕ່ກຳລັງເຖົ້າ　　ບາໂຖຂຸນດ່ານ
ເຂົາກໍປິບແລ່ນເຕັ້ນ　　ຫາແກ້ບໍ່ເຊົາ
ແຕ່ນັ້ນທ້າວກໍຣວາຍມົນແກ້ວ　　ອາຄົມອັນປະເສີດ
ໄປເປັນເຊືອກຜູກຄ້ອງ　　ເຂົາໄວ້ຊູ່ຕົວ
ບັງແຕ່ອ້າຍໂກກເຖົ້າ　　ເຈົ້າດ່ານພຍາລີງ
ມັນກໍເລີບຄະໂຍງປີນ　　ຮ່ວນເຣຣິນຮ້ອງ
ຫຼີ ໆເຫັນພົນແຜນທ້າວ　　ຫາງຂໍຫຼາຍໝູ່
ເຂົາຫາກດີງບໍ່ໄດ້　　ຄາງຮ້ອງສນັ່ນເນືອງ
ແຕ່ນັ້ນຣາຊາທ້າວ　　ພຍາລີງເຫັນຫຼາກ
ມັນກໍຕົກຂະນະປ້ານ　　ລີງເຖົ້າສັ່ນສາຍ
ມັນກໍຂຶ້ນຕົ້ນໄມ້　　ປັງເບິ່ງບໍ່ຣີວານ

ພິຈານຫາທາງໜີ   ຫຼີກໄພໂພຍຮ້າຍ
ເມື່ອກູໜີໄປແທ້   ຕົວດຽວເດີນດຸ່ງ   ໄປນັ້ນ
ກົວແຕ່ໜີບໍ່ພົ້ນ   ບາທ້າວຈິໄລ່ນຳ   ບໍ່ປ່າແລ້ວ
ຄ້ອນວ່າມັນຮ່ຳແລ້ວ   ຄະນຶງປູ່ຫົນຫວຍ
ມັນກໍທົນທວງຄຶດ   ຜູ້ດຽວເລີຍໜ້ອມ
ຈົບໃຈແທ້   ຄອງຕາຍນໍຣະບາດ
ກູຫາກຕົກບາດຊ້າ   ອາຍໜ້າທ່ານຫຽນ   ແລະນໍ
ບັດນີ້ຄວນກູເຂົ້າສູ່ທ້າວ   ຂໍອ່ອນໂຍນບາ   ຊອບແລ້ວ
ຫຼອນວ່າຊີວັງນີ   ສືບໄປພາຍໜ້າ
ຄ້ອນວ່າມັນຮ່ຳແລ້ວ   ເຣວຣີບປຸນເປືອງ
ວັງໆໃຈ   ເຂົ້າໄປທັ້ງປ້ານ
ເມື່ອນັ້ນບາຄານທ້າວ   ສຸຣິວົງຫຼົງລ່ຳ
ເຫັນທີອ້າຍໂກກທ້າວ   ລິງເຖົ້າຄ່ອຍມາ
ທ້າວກໍຄຶດຮ່ຳຮູ້   ຕັດສ່ອງສໍຣະບານ
ຮ້ອຍທີມັນມາຫາ   ອ່ອນໂຍນກູແລ້ວ
ແຕ່ນັ້ນນໍຣິນທ້າວ   ສຸຣິວົງເຈົ້າອ່ອນ
ເຈົ້າກໍທົງເຜດໄວ້   ຕາຊ້າຍບໍ່ຫຼຽວ
ເມື່ອນັ້ນບາໂຖເຖົ້າ   ພຍາລິງມາຮອດ
ມັນກໍກົ້ມຂາບໄຫວ້   ບາທ້າວແທບຕີນ
ຂໍແກ່ເໜືອຫົວເຈົ້າ   ກູນາຜ້າຍໂຜດ
ແມ່ນວ່ານຶດຊອບແທ້   ຈອມເຈົ້າປ່າຊາ   ແດ່ຖ້ອນ

ຂ້າບໍ່ຕົກບາດຊ້າ	ພຍາຜ່ອນປຸນປຸດ	
ຂໍໃຫ້ຈອມຫົວພຣະ	ໂຜດຜາຍຕົວຂ້າ	
ແຕ່ນັ້ນນ່າຍຽງໜ້າ	ເຈົ້າອ່ອນສຸຣິວົງ	
ທ້າວກໍ່ພາທີຈາ	ກ່າວຫົວກຸມຕ້ານ	
ຊອບທີນາໃຖເຖົ້າ	ພຍາລືງອ້ານໂກກ	ຈຶ່ງແລ້ວ
ກູບໍ່ມີຈິຂ້າ	ສູມ້ຽນມອດຈົນ	ທ່ານເອີຍ
ແມນທີ່ສູບອກໃຫ້	ຄຳຊື່ນາບັງ	ຫັ້ນຖ້ອນ
ສູຫາກເນົາໃນດົງ	ປູ່ພູພະບັງໄມ້	
ຫອນເຫັນພິມພາແກ້ວ	ມາດາພຣະແມ່ກູນັ້ນ	
ຫວ້ານປ່າໄມ້	ມາພີ້ຮອດສູ	ແດ່ລື
ແຕ່ນັ້ນພຍາລືງປ່ຽນ	ຂານຄຳໂດຍຣີບ	
ມັນກໍ່ຄຶດຮອດຂໍ້	ນາງຕ້ານສັ່ງມັນ	
ອັນວ່າທັນມະໂຮງແກ້ວ	ພາສານາງຝາກ	ປາງນັ້ນ
ມັນກໍ່ກົ້ມຂານໄຫວ້	ທູນທ້າວຊູ່ອັນ	
ທານໂທດທ້ອນ	ໃຕ້ບາດອອງຫລີ	ພຣະເອີຍ
(ຂ້າຂໍຖວາຍຄວາມນີ	ຊູ່ອັນຖວາຍເຈົ້າ	
ອັນວ່ານາງງາມເຫງົ້າ	ມາດາຕົນແມ່	ພຣະອົງນັ້ນ
ນັກກໍ່ເອົາແຈ່ມເຈົ້າ	ໜີແຫ້ທ່ຽງຈິງ	ພຣະເອີຍ
ອັກວ່າກອງແພງເຈົ້າ	ນາງງາມແຖວຖັ່ງ	
ນາງກໍ້ຮ້ອງຮ່ຳໄຫ້	ຫາເຈົ້າບໍ່ເຊົາ	
ນາງກໍ່ບັງຝາກໄວ້	ຂອງປະເສີດມຸງຄຸນ	

ຄືວ່າແຫວນທັມມະໂຣງ　　ລູກດີກອນຂ້າ
ກັບທັງວັດຖັງຜ້າ　　ແພສະໄບຜືນປະເສີດ
ໄວ້ໃຫ້ສີແຈ່ມເຈົ້າ　　ຈອມຊ້ອຍພຣະບອດຊາຍ ພະເອີຍ
ແຕ່ນັ້ນທ້າວກ່າວຕ້ານ　　ຈາດຕໍ່ລີງກັງ
ທ່ານຈົ່ງໄປເອົາມາ　　ທ່ຽວເປືອງດຽວນີ້
ແມ່ນວ່າໂທສາລົ້ນ　　ເຫຼືອຕົວແສນສ່ວນ　　ກໍດີຖ້ອນ
ໂທດໜຶ້ນຊັ້ນ　　ກູທ້າວໂຜດສູ　　ທ່ານເອີຍ
ແຕ່ນັ້ນບາໂຖເຖົ້າ　　ພຍາລີງກົ້ມຂາບ
ມັນກໍນິບນອບນົ້ວ　　ລາເຈົ້າຣີບໄປ
ມັນກໍວັບໆເຕັ້ນ　　ປາຍໄຣໂຕນໄຕ່　　ໄປແລ້ວ
ກໍຈຶ່ງເຖິງແຫ່ງຫ້ອງ　　ສະຖານເຖົ້າທີ່ມັນ
ໃນຂິງຖ້ຳ　　ຕີນກອບເຂົ້າໄຫງ່
ບ່ອນທີ່ມັນເຊື່ອງໄວ້　　ສະໄບຜາແລະແຫວນ
ມັນກໍເຕີບບອກໄຫ້　　ຝູງພວກລີງໃນ
ສູຣີບໄວວາຕົກ　　ແຕ່ງຕົວບາຊ້າ
ບັດນີ້ເໜືອເຈົ້າ　　ຈອມບຸນມາຮອດ　　ເຮົາແລ້ວ
ສູຣີບຫາໝາກໄມ້　　ຫວານສົ້ມເຄື່ອງກິນ　　ທ່ຽວເຖິ້ນ
ເມື່ອນັ້ນທື່ນໆພ້ອມ　　ລີງພວກໂທຂັນ
ເຂົ້າກໍໄດຍພລັນຫາ　　ເຄື່ອງກິນມີຊ້າ
ຝູງໝາກໄມ້　　ນີ້ມ່ວງຜາລາ
ລີງກັງຕົກ　　ແຕ່ງເປືອງເລີຍແລ້ວ

ມັນກໍບາຍແຫວນແກ້ວ ທັງສະໄບລາຍດອກ
ບອກຝູງລີງບ່າວນ້ອຍ ຫາມຫົວເຄືອງສເວີຍ
ມີໝາກໄມ້ ສຸກເຫືມຜາລາຫວານ
ນຳເອົາບໍຣິວານ ແຫ່ງມັນມາເຝົ້າ
ອັນວ່າອ້າຍໂກກເຖົ້າ ເຕັ້ນໄຕ່ມາເປືອງ
ເຖິງບາຄານ ບັ້ງລິງເລີຍໄຫວ້
ມັນກໍຖວາຍໝາກໄມ້ ນີ້ມ່ວງອັນຫວານ
ທັງສະໄບບາງພືນ ຄ່າແພງບໍໃຕ້
ກັບທັງດວງແຫວນແກ້ວ ທັນມະໂຮງບໍບືນ
ຖວາຍແກ່ພຣະແຜ່ນຫຼ້າ ບຸນກວ້າງພຣະບອດຄຸນ ແທ້ແລ້ວ
ແຕ່ນັ້ນກຸມານເຈົ້າ ບາຍເອົາເຣວຣີບ
ເຈົ້າກໍບໍ່ບິກຂຶ້ນ ເບິງແລ້ວລ່ຳດູ
ກໍຫາກມາແມ່ນແທ້ ຂອງແມ່ມາດາ
ບາກໍຊິລຫາໄຫຼ ຫຼັ່ງລິງຮຳໜ້າ
ທ້າວກໍຄຶດຮອດໜ້າ ຕີນແມ່ມາດາ
ເວຣາຈ່ຳ ຈາກກັບສັບນີ້
ໂອບໍ ມັນຫາກເປັນແຕ່ເວນກູແທ້ ພາຍຫຼັງສນອງຕອບ ແລະບໍ
ກໍຈຶງພັດພາກບ້ານ ທັງແກ້ວແມ່ຕີນ ແລະບໍ
ບັດນີ້ເປັນແຕ່ບຸນກູແລ້ວ ເດີນໄພມາຈອບ
ກູຈັກຮູ້ຮ່າງເຄົ້າ ທາງແທ້ທີຈິນຳ ແລະບໍ
ແຕ່ນັ້ນພິເສດທ້າວ ຖືກຖອດພຣະຄາຖາ

ຝູງໝູ່ໄບຫາລີງ ສວ່າງໃພບໄພຮ້ອນ
ເມື່ອນັ້ນທ້າວກ່າວຕ້ານ ສີລາກົມຂາບ
ເຂົາກໍມາເຝົ້າເຈົ້າ ຈອມໃທ້ຊູຕົວ
ເມື່ອນັ້ນທ້າວກ່າວຕ້ານ ຈາຕໍ່ຝູງລີງ
ຖາມຫາທາງ ເຊີງພຍາລີງເຈົ້າ
ອັນວ່າຫົນທາງດັ້ນ ເມືອເມືອງບັກໃຫ່ງ ທີ່ໃດເດ
ຫາກແມ່ນທາງເສັ້ນເຄົ້າ ສູເຈົ້າໝັ້ນໜຽວ ນັ້ນນາ
ສູຈົ່ງກູບາຊີ້ ຫົນທາງບົນບອກ ແດ່ຖ້ອນ
ຈັກວ່າພຣະແມ່ເຈົ້າ ຕາບແທ້ຮູ້ວ່າຍັງ ທ່ານເອີຍ
ແຕ່ນັ້ນພຍາລີງເຈົ້າ ທາງຂໍຫຼາຍໝູ່
ເຂົາກໍກົມຂາບໄຫວ້ ທູນທ້າວຊູ່ປະກາບ
ອັນວ່າກະສັດຕີແກ້ວ ມາດາຕົນແມ່ ພຣະອົງນັ້ນ
ບັກກໍອຸພິເສກໃຫ້ ເປັນນົງມະເຫສີ
ເປັນເທວີ ບັ່ງປອງເປັນເຈົ້າ
ແຕ່ນັ້ນຣາຊາທ້າວ ພຍາລີງກົມຂາບ
ນົບນອບນົ້ວ ທູນທ້າວບອກທາງ
(ເຂົາບອກໃຫ້ ຫົນແຫ່ງທາງໄປ
ເປັນທາງໜຽວ ຮ່ອມຫົນເຫວຖ້ຳ)
ພີວ່າເດີນດົນແທ້ ບັງປະມານສາມຂວບ ປີແກ້ວ
ພີທະບານຫອບຜ້າຍ ບານເຊົາຮອດເມືອງ ພຣະເອີຍ
ຄ້ອນວ່າແລ້ວ ມຸ້ງປາກສະເດັດການ

ພູມີຈຳ ໝູ່ລີງເມືອບ້ານ
ສູຈິ່ງໄປຫາຫ້ອງ ເຮືອນຮັງແຮງປູ່ ສູຖ້ອນ
ກູຈັກດັ້ນດ່ວນຜ້າຍ ໄປແຫ້ຜູ້ດຽວ ທ່ານເອີຍ
ແຕ່ນັ້ນພຍາລີງພ້ອມ ຍມືກົ້ມຂາບ
ຝູງຂ້າຂໍດຸ່ງດັ້ນ ດອນເຈົ້າເພື່ອນທາງ ພຣະເອີຍ
ລີງກ່າວແລ້ວ ທ້າວເລົ້າພອບຂານ
ກູຈັກໄປຫາງບິນ ດັ່ງລືຈີໄປໄດ້
ສູຄ່ອຍຄອຍກູທ້ອນ ຍາມເມືອຫຼີ ບດ່າວ ມານັ້ນ
ກູຈັກມາແວ່ບັ້ງ ປາມແຫ້ແຫ່ງສູ ທ່ານເອີຍ
ເມື່ອນັ້ນທັງຫຼາຍພ້ອມ ພຍາລີງກົ້ມຂາບ
ເຂົາກໍປາກບໍ່ໄດ້ ລາເຈົ້າລວດໜີ
ພໍເມື່ອຕາວັນຄ້ອຍ ຄາວແລງແດດອ່ອນ ມາແລ້ວ
ສີແຈ່ເຈົ້າ ຈາມ້າຄ່ອຍໄປ ພີ່ເອີຍ
ແຕ່ນັ້ນອັດສາມ້າ ອາສະໄນເຮວຣີບ
ມາແທບໃກ້ ບາທ້າວບໍ່ນານ
ສີສະອາດທ້າວ ຂຶ້ນຂີ່ອາສະໄນ
ກໍຈິ່ງພາທະຍານເຫາະ– ເຜັ່ນໄປມີຊ້າ
ຫຼີ ງດູເມໂຄລ້ອມ ເຂົາວົງໝອກອ່ອນ ພຸ້ນເປີ
ມ້າກໍຜາຍເຜັ່ນຂຶ້ນ ທະຍານລ້າລ່ວງບິນ
ບ່ອງງຜ້າຍ ແເກມເມກເວຫາ
ຫຼີ ງດູວາໄບພັດ ລ່ວງວິວເປັນຈົ້ວ

ແນ້ງບຶ້ງເຖິງສະຖານຫ້ອງ ຄູຫາຖ້ຳໃຫ່ຍ
ທ້າວກໍລີງແວ່ບັ້ງ ເຊົາຫັ້ນເມື່ອເປັນ
ຟັງບິນກາເລັນຮ້ອງ ຮິມຜາວີວ່ອນ ພຸ້ນເປີ
ມີຫັງກໍຮະວີກຮ້ອງ ປາຍໄມ້ບອກເຊົາ
ນົງເບົາທ້າວ ບິນສະອອນອີກສັ່ນ
ຄຶດຮອດນ້ອງ ນາງນາດໄກສອນ
ບິນສະອອນໃຈ ອ່າວມາດາແກ້ວ
ທ້າວກໍບັ້ງປູ່ແລ້ວ ເມີນຜ່ໄປມາ
ຫຼີງເຫັນອາຣຸນລັບ ລັ່ນລິງຄາຄ້ອຍ
ທ້າວກໍຫຼຽວໄປກ້ຳ ອີສານຫຼີງລຳ
ຈີງເຫັນວຽງໃຫ່ຍຕັ້ງ ຄັນນັ້ນເມກສູງ
ຫີນນັ້ນເປັນເມືອງທ້າວ ກັນດານຍັກໃຫ່ຍ
ມີທາດທ້າວ ປະການຕັ້ງກໍ່ຫີນ
ຄ້ອມວ່າທ້າວຮ່ຳແລ້ວ ມົວມືດເສັ່ຍແສງ
ຍາມບຶ້ງບາຄານເລີຍ ລວດນອນໃນຖ້ຳ
ພໍເມື້ອເພລາລ້າ ກອງຄິວແລ້ວຮຸ່ງ
ທ້າວກໍລຸກສ່ວຍໜ້າ ລ້າງອາບສິງສີ
ພູມີເລີຍ ເວດງານເລີຍແລ້ວ
ເມື່ອນັ້ນເທວະດາດ້າວ ຄູຫາຖ້ຳໃຫ່ຍ
ເຈົ້າກໍມາສູ່ທ້າວ ຖາມຖ້ອຍເຫດການ
ດູລາກຸມານທ້າວ ດີນດຽວບໍ່ມີເພື່ອນ

ເຈົ້າກໍມີປໃບດດ້ວຍ　　ໃດນັ້ນຈຶ່ງມາ　　ນໍ້ເດ
ສັງວ່າມາປູ່ຄ້າງ　　ໃບເຖື່ອນໄພສິນ
ຕີນດຽວປອນ-　　ໝູ່ຄະນາເສືອຊ້າງ
ເຈົ້າຫາກມາປູ່ຄ້າງ　　ແກມເສື້ອແຜດພີ　　ນໍ້ເດ
ເມື່ອນັ້ນສຸຣິວົງນ້ອຍ　　ກຸມານຫຼິງລ່ຳ
ເຈົ້າກໍຮູ້ເຫດເບື້ອງ　　ກະບວນທ້າວເທພດາ
ບາຈຶ່ງກອບກ່າວຕ້ານ　　ຄຳຊື່ມີອຳ
ໄຂຄຳຈາ　　ບອກກອບເດີມເຄົ້າ
ຂ້ອຍກໍພັດພາກເຈົ້າ　　ພຣະແມ່ມາດາ
ເວຣາຈຳ　　ຈາກກັບປາງນັ້ນ
ໃບຫີບຫ້ອງ　　ຫີນພານເຈັຽຣະຈາກ
ຂ້າຈຶ່ງເດີນດຸ່ງດັ້ນ　　ນຳແກ້ວແມ່ຄີງ　　ເຈົ້າເອີຍ
ແຕ່ນັ້ນເທວະດາໄດ້　　ຍິນຄຳຊີນຊື່ນ
ກໍຈຶ່ງຕ້ານຕໍ່ທ້າວ　　ຄຳຜຽນຊູ່ອັນ
ເຈົ້າຈຶ່ງປູ່ນຳຂ້ອຍ　　ດູຫາຖ້ຳໃຫຍ່　　ທ້າວເອີຍ
ຂ້ອຍຈັກຕົກແຕ່ງຕັ້ງ　　ແປງໃຫ້ທີ່ເຊົາ
ເຈົ້າຈຶ່ງໄປດູຖ້ອນ　　ຄົນດຽວຖາມຂ່າວ
ໃຫ້ມັນຮູ້ແຈບແຈ້ງ　　ເຂົາຈິເວົ້າບອກບາ
ຄັນວ່າທ້າວຫາກຮູ້ເຫດແລ້ວ　　ແໜ້ນແນ່ຄວາມຈິງ　　ດັ່ງນັ້ນ
ທ້າວຈຶ່ງເອົາຕີນກັບ-　　ຕ່າວຄືນມາໜີ້
ຄ້ອນວ່າແລ້ວ　　ທ້າວດຸ່ງເດີນໄປ

ເຖິງແຄມເມືອງ ເຂດກັບດານທ້າວ
ບາກໍທຳຕົວໃຫ້ ເປັນຣັດສີດີປະເສີດ
ໃສມໜຸ່ມນ້ອຍ ງາມນ້ອຍຄ່ອຍໄປ
ພາຍບາດຖືກໄມ້ເທົ້າ ທັງນຸ່ງໜັງເສືອ
ມືນຶ່ງຖືຕາລະບັດ ໄຕ່ທາງໄປໜ້າ
ແມ້ງນຶ່ງເຖິງເຂດຄຸ້ມ ເມືອງໃຫຍ່ກັບດານ
ຝູງໝູ່ຊາວເມືອງພີ້ ມືນັ້ນເລີຍທ້ວງ
ດູຣາເຈົ້າ ພຣະຣັດສີນ້ອຍໜຸ່ມ
ເຈົ້າກູມາແຕ່ຫ້ອງ ແດນດ້າວທີໃດ ນັ້ນເດ
ແຕ່ກ່ອນກໍ້ ບໍ່ຫ່ອນເຄີຍເຫັນ ແທ້ນາ
ເຈົ້າກູເນົາຄູຫາ ທີໃດເດເຈົ້າ
ຈັກວ່າເຄືອງແຄນດ້ວຍ ປະການໃດເດີນຮອດ ເມືອງນີ້
ເຈົ້າກູມີປໂຍດດ້ວຍ ໃດແທ້ຈິງມາ ນີ້ເດ
ເມື່ອນັ້ນຣັດສີເຈົ້າ ສຸຣິວົງເລີຍກ່າວ
ບອກຂ່າວໃຫ້ ເຂົາຮູ້ເຫດມາ
ເຮົາກໍເນົາປູ່ຫ້ອງ ຖ້າໃຫຍ່ຄູຫາ
ໃນທີຫີມພານ ໂຍດຍາວໄກລ້ຳ
ອັນວ່າຣັດສີເຈົ້າ ຕົນກູເຮົາປູ່ ພາຍພຸ້ນ
ພຣະກໍເຈັບປ່ວຍໄຂ ນານແລ້ວຈິງດີ
ພຣະກໍຄຶດປາກແທ້ ເຄືອງສົ້ມຂອງເຄັມ
ກໍຈິງຈຳເຮົາເທາະ ດຸ່ງເດີນມາພີ້

ຄັນວ່າບິນດິບາດໄດ້ ເຄື່ອງສົ້ນຂອງເຄັນ ດັ່ງນັ້ນ
ຈຶ່ງຈັກຄືນໄປຖວາຍ ຕີນຄຣູແຫ່ງເຮົາພາຍພຸ້ນ
ອັນວ່າເມືອງອັນນີ້ ນາມັງນີ ຊື່ໃດນັ້ນ
ອັນວ່າພຣະບາດເຈົ້າ ເມືອງນີ້ ຊື່ໃດນັ້ນເດ
ແຕ່ນັ້ນຊາວຜີຕ້ານ ຂານຣັດສີບິນບອກ
ເລົ່າພາກໃຫ້ ຣັດສີຮູ້ຊູ່ອັນ
ອັນອ່າເມືອງໃຫ່ງກວ້າງ ຮຽກຊື່ກັນດານ ເຈົ້າເອີຍ
ທິສກັບເປັນຣາຊາ ປູ່ທິງເມືອງນີ້
ເມື່ອນັ້ນຣັດສີຊ້າ ຖາມເຂົາບັກໜຸ່ມ
ອັນວ່າພຣະບາດເຈົ້າ ເມືອງນີ້ແກ່ຊະຣາ ແລ້ວລື
ອັນວ່າບຸດຕາທ້າວ ບົງຊາຍມີມາກ ທີ່ໃດນັ້ນ
ຮູ້ວ່າບັງໜຸ່ມນ້ອຍ ທັງສ້າງສືບເມືອງ ນັ້ນລື
ເມື່ອນັ້ນຊາວບັກຕ້ານ ບິນບອກຕາມມີ
ໄຂວາຈາ ບອກບິນຣັດສີເຈົ້າ
ອັນວ່າຣາຊາທ້າວ ທັງເມືອງໄດ້ຫຼາຍຂວບ ປີແລ້ວ
ກໍບໍ່ເຖົ້າແກ່ພົ້ນ ພໍເຂື້ອງເຄື່ອງຄົນ
ກໍບໍ່ມີລູກເຕົ້າ ນາມມະໜໍ່ບົງຊາຍ
ບໍ່ມີນາງມະເຫສີ ປູ່ທັງຫຼຸນເຈົ້າ
ພຣະຈຶ່ງໄປຫາໄດ້ ນາງຄົນມະນຸດຕ່າງ
ມາອຸພິເສກຂຶ້ນ ເປັນແກ້ວມິ່ງຂວັນ
(ພຣະກໍບົກບອດແກ້ວ ໄວ້ເກີງນະຄອນຂວາງ

ພຣະອົງແພງພຽງ　ເກິງຕາຕົນເຈົ້າ)
ອັນວ່າຈອມທັນເຈົ້າ　ຣາຊາຣັກຍິງ
ພຣະຈຶ່ງຕົກແຕ່ງສ້າງ　ທຳແກ້ວໃຫ້ແກ່ນາງ
ໃນທີ່ສວນດອກໄມ້　ກາງຂວ່າງສນາມຫຼວງ
ທີ່ວ່າຣາຊາບັງ　ໄປ່ຊົມນາງໄດ້
ເພາະວ່າຄຶງນາງຮ້ອນ　ປານໄຟລາມລວກ
ພຣະບາດໃກ້ບໍ່ໄດ້　ຄອບລ້າຊູ່ວັນ　ແທ້ແລ້ວ
ແຕ່ນັ້ນຣັດສີທ້າວ　ສຸຣິວົງຄິດຖີ້
ຮ້ອນແມ່ນອົງແມ່ແກ້ວ　ກູແທ້ບໍ່ຄາ　ແລນາ
ອັນວ່ານາຄານທ້າວ　ຄະນຶງໃຈແຈ້ງແຈບ
ແລ້ວຈຶ່ງບິນທະບາດເຂົ້າ　ໃນບ້ານແທ່ງຜີ
ເຂົາກໍບິນດີແທ້　ເອົາມາທານທອດ
ຝູງໝູ່ສົ້ນ　ຄາວພ້ອມເຄື່ອງເຄັນ
ແຕ່ນັ້ນຣັດສີທ້າວ　ສຸຣິວົງອົງປະເສີດ
ຕ້ານສັ່ງຖ້ອຍ　ຝູງເຊື້ອເຜົ່າຜີ
ບັດນີ້ເຮົາຈັກລາເມືອຫ້ອງ　ທີ່ມພານຂອງເກົ້າ　ກ່ອນແລ້ວ
ສູຖ່ອຍເນົາປູ່ຫ້ອງ　ເຮືອນປ້າວສ່ຳຣານ　ທໍ່ເນີ
ຖ້ອມວ່າທ້າວສັ່ງແລ້ວ　ບົວຣະບາດລີລາ
ວອຍໆກາຍ -　ເຂດເມືອງສວາງເສື້ອ
ທ້າວກໍໄປເຖິງເຫົ້າ　ຕີນດອຍເຂົາໃຫ່ງ
ເລີຍຖ່ຳຄ້ອຍ　ບ· ທ້າວເລົ້ານອນ -

ບັດນີ້ຈັກກ່າວເຖິງເທວະດາດ້າວ	ຄູຫາຖ້ຳໃຫຍ່	ກ່ອນແລ້ວ
ເຈົ້າກໍມີຣະນິດໃຫ້	ບາທ້າວຊູ່ອັນ	
ມີທັງທໍາຄຳຕັ້ງ	ວິໄຊຍິນຜາສາດ	
ເຮືອງເຮືອເຫຼື້ອມ	ຄຳແກ້ວສ່ອງໃສ	
ມີທັງສັພສິ່ງພ້ອມ	ເຄື່ອງທິບເຫຼືອຫຼາຍ	
ບາງມີ	ຊູ່ອັນເຫຼືອລົ້ນ	
ຄ້ອມວ່າມີຣະນິດແລ້ວ	ໃກ້ຮຸ່ງອຳຣະຊອນ	
ບາດານເລີບ	ຕື່ນຕົນມີຊ້າ	
ຟັງຍິນເຄັງໆກ້ອງ	ກອງຄິວໃກ້ຮຸ່ງ	
ໄກ່ກໍຕີບປີກທ້າ	ຂັນຊັ້ນຮຸ່ງຈວນ	
ພໍເມື່ອສຸຣິໂຍຂຶ້ນ	ພົ້ນຂອບເຂົາທອງ	
ບາດານເລີບ	ລ່ວງໄປມີຊ້າ	
ບາກໍກອບແຮງຂຶ້ນ	ພູສູງຫຼາຍລົ້ນ	
ແດດສ່ອງຕ້ອງ	ເຂົາແກ້ວເຮືອເຮືອງ	
ມີທັງວອນໆຮ້ອງ	ຊະນີກຸຍຫາຜົວ	ແລະເປີ້
ບາກໍຜາຍຄີງແພງ	ຄ່ອຍເດີນໄປໜ້າ	
ຄອຍເຫັນຄູຫາແກ້ວ	ພູຫຼວງຄ້ຳໃຫຍ່	
ສີແຈ່ມເຈົ້າ	ບາເກົ້າວບໍ່ເຊົາ	
ຫຼີງດູໂຮງໆເຫຼື້ອມ	ວິໄຊຍິນຜາສາດ	ພຸ້ນເປີ້
ທ້າວບໍ່ຊ້າ	ຜາຍລ້ຳລ່ວງເຖິງ	
ເທວະດາເຈົ້າ	ເຫັນບາຊົມຊື່ນ	

ຮັບແຈ່ມເຈົ້າ	ບາທ້າວສູ່ສະຖານ	
ສຸຣິວົງທ້າວ	ກອງແພງບັວຣະບາດ	
ທ້າວກໍຂຶ້ນສູ່ຫ້ອງ	ໂຮງກວ້າງຄ່ອຍເຊົາ	
ອັນວາເທວະດາເຈົ້າ	ປຸນເປືອງຕົກແຕ່ງ	
ພາທົບພ້ອມ	ຖວາຍທ້າວບໍ່ບານ	
ແຕ່ນັ້ນສິດທິເດດນ້ອຍ	ໂພທິຣາດຍິນດີ	
ທ້າວກໍກອບສຽງໃສ	ຕໍ່ເທວະດາເຈົ້າ	
ອັນນີ້ຈັກວ່າຂອງກິນຈ້ອຍ	ເມືອງຄົນຊົມພູທີບ	ເຮົາລື
ຮູ້ວ່າຂອງທິບຫ້ອງ	ເມືອງຟ້າເທພອິນ	ບນັ້ນລື
ອັນນຶ່ງສ້າງມາດູຕະກວ້າງ	ເຮືອງງາມຫຼາຍສິ່ງ	
ມີທັງສຸດຜ່ານກັ້ງ	ລາຍລ້ວນເຮື່ອເຮືອງ	
ອັນນຶ່ງມີເຄື່ອງເຂົ້າ	ບໍຣິໂພກບາໆ	
ທ່ານນີ້ເປັນອາສາ	ແຫ່ງກັບດານທ້າວ	
ໜາຍຈັກທຳກິນໃຫ້	ລວງເຮົາຄົບໂງ່	ນັ້ນລື
ໃຫ້ເຮົາຕົກບາດຊ້າ	ອາຍໜ້າຫ່າງສະເທີນ	ວ່າເດ
ເມື່ອນັ້ນເທວະດາເຈົ້າ	ຄູຫາຕົບປະເສີດ	
ເຈົ້າຈິ່ງບົບບອນໃຫ້	ບາທ້າວຊູ່ປະການ	
ຂ້ອຍນີ້ຫາກແມ່ນທັມມະຊາດເຊື້ອ	ເທວະຣາດຄູຫາ	ເຈົ້າເອີຍ
ເຮົາແມ່ນອົງເທວາ	ແນບນຳບາທ້າວ	
ຂ້ອຍກໍປຸນແປງຕັ້ງ	ໂຮງຫອງຜາສາດ	
ໄວ້ໃຫ້ສີແຈ່ມເຈົ້າ	ບາທ້າວຄ່ອຍເຊົາ	ນັ້ນຖ້ອນ

ຂ້ອຍກໍຫຼົງເລດເບື້ອງ   ຫີນແຫ່ງບາດານ

ດູດັ່ງສິນຄາມໜັກ   ໜ່ວງນານຫຼາຍນີ້

ອັນນຶ່ງເຈົ້າຫາກໄປດູແລ້ວ   ພາທີຖາມຂ່າວ

ບັງໄປ່ເຫັນແມ່ເຈົ້າ   ຈອມຊ້ອຍດັ່ງລື   ເຈົ້າເອີຍ

ແຕ່ນັ້ນສຸຣິວົງນ້ອຍ   ເຈົ້າອ່ອນໂພທິສັດ

ເຈົ້າກໍທົງທັນຕັດ   ສ່ອງຫວນ.ທັນແຈ້ງ

ອັນນີ້ເປັນແຕ່ບຸນຈອມະເຈົ້າ   ພຣະອັດສີຕົນພໍ່   ຈິງແລ້ວ

ມາສົ່ງໃຫ້   ປາງໄຣ້ເນື້ອພອຍ   ແທ້ແລ້ວ

ແຕ່ນັ້ນສິດທິເດດນ້ອຍ   ເຈົ້າອ່ອນໂພທິສັດ

ບາກໍທົງພຣະໄທຄຶດ   ກ່າວຈາຈິງຕ້ານ

ວັນນັ້ນຂ້ອຍກໍເດີນໄປແທ້   ປຸດສາຖາມຂ່າວ   ດູນັ້ນ

ກໍຫາກເຫັນເລດຖ້ອຍ   ເຂົາເວົ້າຊູ່ຄົນ   ຫັ້ນແລ້ວ

ຄ້ອນວ່າທ້າວກ່າວແລ້ວ   ສເວີຍໂພດພາທີນ

ພໍປະມານຖອຍ   ເລີກລາເລີຍແລ້ວ

ຂັນສລາແກ້ວ   ຫຽມອິງຣຽງພ່າງ

ສີແຈ່ມເຈົ້າ   ແພງລ້ານຄ່ອຍສເວີຍ

ຄັນວ່າຄຽວໝາກແລ້ວ   ຕ້ານຕໍ່ເທວະດາ

ຂໍຈົ່ງປານີອວນ   ຊ່ອຍປອງປາງນີ້

ຂ້ອຍຈັກເອົາຕົນເຂົ້າ   ໄປປອງເອົາແມ່

ຍາມຖ່ຳຄ້ອຍ   ວັນນີ້ຊ່ອຍແນມ   ແດ່ຖ້ອຍ

ແຕ່ນັ້ນເທວະຣາດທ້າວ   ຮັບພາກພອຍຂານ

ຂ້ອຍບໍ່ວາງຈອມແພງ
ຄ້ອມວ່າສອງກ່າວແລ້ວ
ບາກໍຊົງບັນທົມ
ພໍຍາມແລ້ວ
ທ້າວກໍລຸກອາບນ້ຳ
ບໍຣະບວນເລີຍ
ແລ້ວເລົ້າສຸບສອດເສື້ອ
ທົງສັງວານ
ສີສະອາດເອ້
ໂສມງາມເໝືອນ
ທ້າວກໍສຸບເກີບແກ້ວ
ຂອງມຸ່ງຄຸນ
ທ້າວກໍຍ້າຍຈາກຫ້ອງ
ບາກໍຫຼີງແລດູ
ພໍເມື້ອວາໂຍຕ້ອງ
ຫອມດອກໄມ້
ແຕ່ນັ້ນພຣະບາດທ້າວ
ວອຍໆສຸດ
ຫຼີງເຫັນເມືອງງເຫຼື້ອມ
ຍອດຊໍ່ຟ້າ
ທ້າວປຸດປູ່ຍັ້ງ

ພຣະຍອດຊາຍບຸນກວ້າງ
ມ້ຽນປາກສະເດັດການ
ຄອຍເຝົ້າໃນຫ້ອງ
ໄສຍາເລີຍຕື່ນ
ໂສງໂສດກາຍາ
ອອກມາທົງຜ້າ
ລາຍດອກບົວເຄືອ
ເຄື່ອງຄຳປະດັບແກ້ວ
ເຮືອງເຮື່ອຄຳແດງ
ດັ້ງພົມເມືອງຟ້າ
ທົງດາບພຣະຂັນໄຊ
ບໍ່ວາງຫຽມເນື້ອ
ສະເດັດສູ່ຊານມົນ
ລ່ຳໄປທັງຄ້າຍ
ສາຂາໄກວກົງ
ກະຈວນພົ້ງທົ່ວດອຍ
ຫຼີງລ່ຳໄປມາ
ຊົ້ວຕາເຕັນປ້ຽມ
ທໍປາງພາສາດ ພຸ້ນເປີ
ຄຳເຫຼື້ອມຮຸ່ງເຮືອງ
ພາສາດເທວະດາ

ຫາບານດີ ໂຊກໄຊວັນກ້າ
ພໍເມື່ອຕາວັນຊ້າຍ ເມືອແລງແດດອ່ອນ ມາແລ້ວ
ອຽງອ່ວນເຂົ້າ ເມືອຮ້ານຮ່ວມຮັງ
ເຖິງບານດີ ລຶກເກນກິງກ້າ
ແຕ່ນັ້ນບາຖານທ້າວ ສຸຣິວົງຄາດເຄື່ອງ
ຊັກແຄມມ້າ ຮຽງຮ້ານບໍ່ນານ
ທ້າວກໍນົບນອບນິ້ວ ຖວາຍບາດບັງຄົມ
ຂໍໃຫ້ເທພາພາຍ ຜໍ່ແລຫຼິງປຸ້ມ
ອັນນຶ່ງຂໍໃຫ້ມີໄຊກ້າ ເດຊາແຂງຂຶ້ນ
ຂໍໃຫ້ລຸລາບໄດ້ ໂດຍດ້ານດັ່ງຄະນິງ ແດ່ຖ້ອນ
ຄ້ອມວ່າແລ້ວ ຂຶ້ນສູ່ອາຊະໄນ
ຮາຕີບານ ທ່ຽງຄືນຜັນຜ້າຍ
ທ້າວກໍແບງທໍາແກ້ວ ວິໄຊບິນສວນດອກ
ໃນຂວ່າງຄຸ້ມ ນານເຖົ້າບໍ່ນານ
ທ້າວກໍເທາະທອບເຕັ້ນ ເຂົ້າປ່ອງເບງຊອນ
ແບງກາງໂຮງ ຄ່ອຍເຊົາບັນລັງແກ້ວ
ຫຼິງດູພາງບານໄຕ້ ກາງໂຮງເຮືອງຮຸ່ງ
ແມ່ແຈ່ມເຈົ້າ ນອນແທ້ບໍ່ຕື່ງ
ທ້າວກໍພາຍເຊີງເຂົ້າ ໄປໃນຫາແມ່
ພະແບດເຈົ້າ ເຖິງແທ້ແມ່ຕົນ
ເຫັນແມ່ແຈ່ມເຈົາ ນອນປູ່ຄົນດຽວ

ເນົາເມືງຄຳ ປູ່ສະບາຍມີຮ້ອນ
ທ້າວກໍຊຸດເຂົ້າໃກ້ ຈັບຈ່ອງບາຍແອບ
ມາດາເລີຍ ຕື່ນຕົນທັງສະດຸ້ງ
ນາງກໍຫງວແລຢູ້ມ ເຫັນບາບຸດອາດ
ຄືດັ່ງອິນທຼ໌ປັ້ນ ແປງແລ້ວລ່ວງລິງ
ນາງກໍຄຶດຮອດທ້າວ ຄືດັ່ງສຸຣິວົງ
ນາງກໍຈາຄຳຖາມ ຊື່ບາທັງຟ້າວ
ອັນນີ້ຮ້ອຍວ່າບຸດດາແກ້ວ ສຸຣິວົງເຈົ້າອ່ອນ ຈິ່ງແລ້ວ
ນາງກໍຊວງກອດອູ້ມ ເອົານ້ອຍບໍ່ນານ
ນາງກໍເຫັນແຫວນແກ້ວ ຫັນມະໂຮງເຮືອງຮຸ່ງ
ສຸບສອດນີ້ວ ບາທ້າວສ່ອງໃສ
ກັບທັງກາສາຜ້າ ຜືນດີຕູ້ມຫົ່ມ
ນາງກໍຊີລເນດນ້ອຍ ຮຳໜ້າເຝືອດຟາຍ
ນາງກ່າວຕ້ານ ຖາມອ່ອນກຸມານ
ສາຍໃຈເອີຍ ດັ່ງລືມາໄດ້
ແມ່ບໍ່ຄອງເຫັນໜ້າ ສາຍໃຈເຈົ້າອ່ອນ ເສັຽແລ້ວ
(ຄຶດວ່າເຈົ້ານີງມຸ້ງນ ໄພກວ້າງຜູ້ດຽວ ແມ່ນາ)
ຍາມເມື່ອແມ່ຫາກພາແຈ່ມເຈົ້າ ເຊົາຮົ່ມໂພໄຊ ແທ້ນາ
ກັບດານໄປ ຈອນສອງຣາເຈົ້າ
ບຸດດາເຫງົ້າ ສາຍໃຈຫຼັບປູ່
ແມ່ກໍເຫັນບັກກ້າ ກົວປ້ານສັ້ນສາຍ

ແມ່ຫາກປຸກຕົວເຈົ້າ　　ບາດານກໍບໍ່ຕື່ນ
ແມ່ກໍຫິວຫອດໄຫ້　　ກົວປ້ານບັກກິນ
ມັນກໍໄກຫາໄຫ້　　ມາດາເຮົາແມ່
ທ້າວກໍຫຼັບຊວດພົ້ນ　　ບໍ່ມີຮູ້ເມື່ອດີງ
ມັນຈຳໄຫ້　　ວາງເສັງບັງລູກ
ວ່າຈັກເອົາແມ່ຜ້າຍ　　ເດີນດັ້ນດ່ວນໜີ
ແມ່ກໍຊວງກອດອຸ້ມ　　ເອົາລູກບຸດຕາ
ວ່າຈັກເອົາສາຍໃຈ　　ລູກມວນມາພ້ອມ
ມັນກໍໄກຫາເຂັ້ມ　　ຈາຟັນບັງລູກ
ແມ່ຈຶ່ງປະໄປ່ເຈົ້າ　　ວາງໄວ້ປູ່ດຽວ　　ແມ່ນາ
ມັນກໍຈັບເອົາໄດ້　　ບັງເຮົາຕົນແມ່
ໜີຈາກເຈົ້າ　　ຕົນຊ້ອຍພັດມາ　　ແມ່ນາ
ແມ່ກໍຊິລຫາໄຫ້　　ຕີທວງກົ້ງເກື້ອນ
ຫິວຫອດກັ້ນ　　ໃຈນ້ອຍຂາດຕາຍ
ມັນກໍຮວາຍມິນຢຳ　　ເປົ່າເອົາຄືນແຫ້
ມັນກໍເອົາແມ່ຜ້າຍ　　ຜາຍມາໄດຍຣີບ
(ດັ້ນກີບຟ້າ　　ຜາຍດັ້ນດຸ່ງພະໄພມ
ນ້ອຍບຶ່ງເທົ້າ　　ເຖິງຣິມສະພັງພຽງ
ກັບດານລີງ　　ຈອດເຊົາພລານກວ້າງ)
ທີ່ນັ້ນເປັນແດນດ້າວ　　ພຍາລີງເຈົ້າດ່ານ
ແມ່ຝາກແຫວນຄ່າລ້ານ　　ທັງຜ້າແພ່ນສະໄບ

(ໄວ້ໃຫ້ເຈົ້າ ຈອມຣາດບຸດດາ
ຫຼອນວ່າບຸນບາບັງ ຫ່ວງເຖິງຖົ້ນສົ້ນ
ຄັນວ່າມາເຖິງຫ້ອງ ເມືອງຜີບັກໃຫຍ່
ແມ່ກໍທຸກໂສກເສົ້າ ຫາເຈົ້າຊູ່ວັນ
ສັນໃດແທ້ ສາບໃຈເຈົ້າແມ່ ກູເອີຍ
ບານເມື່ອເຈົ້າຕື່ນແລ້ວ ໄປແທ້ແຫ່ງໃດ ແມ່ເດ
ເມື່ອນັ້ນທ້າວກ່າວຕ້ານ ຂານແມ່ມາດາ
ຕາມຄຳນີ ຊູ່ອັນພາຍພຸ້ນ
ດູຣາເຈົ້າ ຈອມຄຸນລົ້ນເກດ ຂ້ອຍເອີຍ
ບານເມື່ອພຣະແມ່ເຈົ້າ ວາງຂ້ອຍຜູ້ດຽວ ນັ້ນນາ
ຄັນວ່າລູກຕື່ນແລ້ວ ບໍ່ເຫັນແມ່ມາດາ
ລູກກໍຊິລຫາໄຫຼ ຫຼັ່ງລົງມີເອື້ອນ
ລູກກໍວອນງຣ້ອງ ເດີນຫາພຣະແມ່
ໄດ້ຫ້າວັນທ່ຽງແທ້ ຫິວໄຫ້ຫອດແຮງ
ລູກຈິ່ງເດີນດຽວເຂົ້າ ໄພສົນດົ້ນປ່າ
ຫິວຫອດໄຫ້ ເດືອນຕັ້ງຄວ່າດົງ
ກໍຈິ່ງໄປເຖິງເຈົ້າ ອັດສີໂສມຈົບເພດ
ໃນເຂດດ້າວ ດົງກວ້າງປູ່ດອນ
ລູກຈິ່ງຮຽນເອົາໄດ້ ອາຄົມຫຼາຍສິ່ງ
ແລ້ວຈິ່ງເດີນດຸ່ງດົ້ນ ນຳເຈົ້າຮອດເມືອງ ໜີ້ແລ້ວ
ເມື່ອນັ້ນມາດາໄດ້ ຍິນຄຳລູກກ່າວ

ບາງກໍຢ່າວງນ້ຳ ຕາບ້ອຍຖຸ່ມແຖວ
ໂອບໍບຸດຕາແກ້ວ ສາຍໃຈເຈົ້າແມ່ ກູເອີຍ
ແມ່ກໍຄອງວ່າເຈົ້າ ຕາຍແທ້ງຜູ້ດຽວ
(ຄືດວ່າເຈົ້າມອດມ້ຽນ ໃນປ່າໄພຊຽວ)
ເຈົ້າຫາກຕາຍຄົນດຽວ ບໍ່ມີໃຜມ້ຽນ
ແມ່ກໍທຸກຂະເວດລ້ຳ ພົ້ນບຶງແສນຖນັດ
ກໍເມື່ອທິງຄວາມຄຶດ ຊູວັນຫິວໄຫ້
ບັດນີ້ບຸນປະກອບໄດ້ ເຈົ້າອ່ອນມາເຖິງ ແມ່ແລ້ວ
ວ່າຈັກທຳປະການໃດ ຈຶ່ງຈິເອົາຕົວພົ້ນ
ແມ່ກໍກິວເກັ່ງປ້ານ ກັບດານບັກໃຫ່ຽ
ມັນຈັກກືວໂກດຮ້າຍ ເສັ່ງແທ້ສິງໃດ ບໍ່ຮູ້
ແຕ່ນັ້ນບຸດຮາດທ້າວ ເຕີນແມ່ແວນເປືອງ
ເໜືອຫົວເອີຍ ປ່າເຄືອງຄຳຮ້ອນ
ເຈົ້າປ່າເຄືອງແຄນດ້ວຍ ກັບດານບັກໃຫ່ຽ ສັງຖ້ອນ
ຂ້ອຍຈັກຟັນຜ່າມ້າງ ມັນໃຫ້ມອດຊີວັງ ແມ່ເອີຍ
ເຈົ້າຈຶ່ງເຮວພລັນຖ້ອນ ດາດີຕິກແຕ່ງ
ຂ້ອຍຈັກພາແຈ່ມເຈົ້າ ໜີແທ້ທ່ຽວເປືອງ ແທ້ແລ້ວ
ຄ້ອມວ່າທ້າວກ່າວແລ້ວ ພຣະແມ່ມາດາ
ໄຂຄຳຄວນ ຕໍ່ບາບຸນກວ້າງ
ອັນວ່າກັບດານນັ້ນ ເດໂຊນີມາກ
ເຮົາຈັກດັ້ນດ່ວນຜ້າຍ ໄປແທ້ທີໃດ ແມ່ເດ

ອັນນຶ່ງວຽງຫຼວງກວ້າງ ກັບດານຍັກໃຫ່ຍ
ຫີນກໍ່ຕ້າຍ ກຳແພງແກ້ວແວດລະວັງ ແມ່ນາ
ເມື່ອນັ້ນທ້າວກ່າວຕ້ານ ຈາແມ່ມາດາ
ເຈົ້າປ່າເຄືອງແຄນສັງ ຮີບເປືອງດຽວນີ້
ແຕ່ນັ້ນທ້າວຍ່າງຍ້າຍ ສະເດັດອອກມີນານ
ທັງມາດາ ອອກໂຮງມີຊ້າ
ນາງກໍຫຼຽວເຫັນນ້າ ອາຊະໄນປືນຢູ່
ນາງກໍຖາມແຈ່ມເຈົ້າ ກຸມານນ້ອຍລູກຕົນ
ອັນວ່າອັດສະດອນນ້າ ມູງຄຸນຂອງລູກ ຈິງລື
ເຈົ້າກໍໄປຊອກໄດ້ ນະບີແກ້ວທີ່ໃດ ແມ່ເດ
ເມື່ອນັ້ນບາດານທ້າວ ຖວາຍຄະດີບັນບອກ
ໄຫວ້ແມ່ເຈົ້າ ຄຳແຈ້ງຊູ່ອັນ
ນັບຫາກເປັນແຕ່ສົມພານສ້າງ ປາຣະມີນຳສ້າງ ແມ່ເອີຍ
ຂ້ອຍໄດ້ເປັນລູກລ້ຽງ ຣັດສີເຈົ້າຍອດເຊີງ
(ເພີ່ນກໍຮັກຍີ່ງລົ້ນ ຫຼຽມດັ່ງບຸດຕາ
ອາຄົນສອນ ຊູ່ເຊີງສິດໃຫ້)
ພຣະກໍເວນວາງໃຫ້ ທະນູສິນກັບດາບ
ບອກໃຫ້ຕົວຂ້ານ້ອຍ ນຳໃຫ້ແມ່ຕົນ ແທ້ແລ້ວ
ກັບທັງອັດສະນ້າ ຕົວດີສຸດຂນາດ
ນ້າຈຶ່ງພາເຜັ່ນຜ້າຍ ເຖິງເຈົ້າບໍ່ນານ ແມ່ເອີຍ
ບັດນີ້ເຮົາຄ່ອຍຂຽວຄືນຜ້າຍ ເດີນໜີເຮວຣີບ

ປ່າໄດ້ບັງປູ່ຊ້າ ມັນຈິແຈ້ງຮຸ່ງຈວນ ແມ່ເອີຍ
ຄ້ອນວ່າແລ້ວ ສອງຊື່ນຊົມບານ
ອັນວ່ານາງດາຕົກ- ແຕ່ງຕົນດາເນື້ອ
ເມື່ອນັ້ນກຸມານນ້ອຍ ບາຍສໍຊຽນຂຶດ
ຕິດປ່ອງແປ້ນ ປະຕູແກ້ວປ່ອງລົມ
ຄ້ອນວ່າຊຽນຂຶດແລ້ວ ເຕີນແມ່ນາດາ
ສາບໃຈເອີຍ ຮີບມາດຽວນີ້
ເຈົ້າຈົ່ງເອົາຕົນຂຶ້ນ ອາຊະໄນທັງຂີ່
ຮຽງຮ່ວມຊ້ອນ ດອນຂ້ອຍທ່ຽວເປືອງ
ແຕ່ນັ້ນນາດາແກ້ວ ໂດຍພລັນເຮວຮີບ
ນາງກໍເຂົ້າແທບໃກ້ ມະນີແກ້ວບໍ່ນານ
ນາງກໍນົບນອບນົ້ວ ຂະມາໂທດປາປັງ
ຂໍຈົ່ງປານີຜາຍ ໂພດຕົນຕົວຂ້າ
ຂ້ອຍນີ້ເປັນຍິງແຜ້ ຂໍພອນອະນຸຍາດ
ຂໍໂທດສີແຈ່ມເຈົ້າ ມະນີແກ້ວບອດຄຸນ ແດ່ຖ້ອນ
ເມື່ອນັ້ນອັດສະດອນແກ້ວ ອາຊະໄນກອຍກວ່າວ
ຈົ່ງໃຫ້ພຣະແມ່ເຈົ້າ ຜາຍຂຶ້ນທ່ຽວເປືອງ ຫັນຖ້ອນ
ຂ້ອຍຈັກພາດຸ່ງດັ້ນ ພົ້ນເຂດເມືອງຜີ
ໃນຣາຕີ ທ່ຽງຄືນວັນນີ້
ຄ້ອນວ່າມ້າກ່າວແລ້ວ ນາງນາດໂດຍພລັນ
ນາງກໍຜັນຄືງແຜງ ຂື້ອານມະນີແກ້ວ

ອັນວ່າກຸມານທ້າວ ທົງພຣະຂັນຂັດດາບ
(ທະນູແນບແໜ້ນ ຕົນເຈົ້າບໍ່ວາງ)
ແລ້ວກໍຊັກແຄ່ນມ້າ ແບງປ່ອງປະຕູທວານ
(ມືນານເຖິງ ປ່ອງທວານທາງເຄົ້າ)
ອາຊະໄນເຕັ້ນ ຜບອງໄປອາກາດ
ພາເຜັ້ນຂຶ້ນ ທະຍານລ້ລ່ວງບິນ
ນາດຕາໄດ້ ພໍປະມານຄາວບຶ່ງ
ກໍຈິງເຖິງແທ່ງຫ້ອງ ຄູຫາກວ້າງບ່ອນເດີນ
ສອງແຈ່ມເຈົ້າ ລົງຈາກອາຊະໄນ
ບາຄານລົດ ເຄືອງຄຳເລີບແລ້ວ
ສອງແຈ່ມເຈົ້າ ສະຖິດແທ່ນບັນທົມ
ສອງນົງແພງ ຄ່ອຍນອນໃນຫ້ອງ
(ໃບຕິກາບັ້ນ ສຸຣິວົງຮອດແມ່
ແລ້ວແຕ່ພຽງທໍ່ນີ້ ໄປໜ້າຊິກ່າວພີ ກ່ອນແລ້ວ

ບັ້ນທ້າວສຸຣິວົງ ເອວຍັກທິສກັນ

– ບັດນີ້ຈັກກ່າວເຖິງທິສກັນຜູ້ ພີລວາງບັກໃຫຍ່ ກ່ອນແລ້ວ
ມັນກໍຫຼັບຊວດພົ້ນ ບໍ່ມີຮູ້ເມືອຄືງ
ເພື່ອວ່າເດໄຊທ້າວ ສຸຣິວົງແຂງຂິ່ນ
ອັນວ່າອຳນາດທ້າວ ກຸມານນ້ອຍຄອບງຳ
ໃນຄືນນັ້ນ ມັນຝັນເຫັນຫຼາກ
ດູປລາດລ້ຳ ລັງລ້າວຕ່າງຫຼັງ ແທ້ແລ້ວ

ຝັນວ່າຄຸທຣາດທ້າວ ຄາບດອກບິນໜີ
ພາທະບານໄປ ທີ່ໃດນີຮູ້
ອັນນຶ່ງຝັນວ່າສຸຣິເຍດຍ້າຍ ເປື້ອງເປັ່ງຮັງສີ
ເປັນແປວລຸກ ທົ່ວໂຮງດວັນກຸ້ມ
ອັນນຶ່ງຝັນເຫັນສະພັງກວ້າງ ບົວທອງເຮືອງຮຸ່ງ
ມີນະນີໂຊດແກ້ວ ໃບຫັ້ນສ່ອງໃສ
ອັນນຶ່ງຝັນວ່າຍັກໃຫ່ຍທ້າວ ຄຶດຢູ່ໃນໃຈ
ທັງຄ່ຳຄະນຶງ ເດືອດແດດາດິ້ນ
ອັນນຶ່ງຝັນວ່າມັນໄດ້ທຳໂຕນເຕັ້ນ ທະບານໄປເຮວຣີບ
ຣິດເດດທ້າວ ເລີຍຫຼ້ ຍຫອດແຮງ
ຝັນວ່າມັນໄດ້ຕິກໃສ່ນ້ຳ ສະພັ້ງໃຫ່ຍກາງວັງ
ມັນກໍລະວັງລະເວກວ້າກ ຣີບລອຍນີຊ້າ
ຝັນວ່າປີງຂນາດຮ້າຍ ຈັງໄຣຕິວນຶ່ງ
ຈັບຈ່ອງໄວ້ ດຶງໜັ້ນບໍ່ວາງ
ຝັນວ່າກັນດານທັງຣິດທີ່ເຫາະ ຫອບຕົນທະບານຂຶ້ນ
(ສຸດທີ່ກຳລັງໄຫວ້ ທັງຣິດທີ່ພໍເດດ
ເລີຍບໍ່ເປັນປໂຍດໃຫ້ ເຫັນນ້ອຍນຶ່ງນີ້)
ອັນວ່າປີງໃຫ່ຍຮ້າຍ ບັງກອດນີນາຍ
ກັນດານເລີຍ ຕື່ນຕົນພໍສະທ້ານ
ອັນວ່າຕີນມືທ້າວ ກັນດານມືນເມື້ອຍ
ມັນກໍ່ຟຸດລຸກແລ້ວ ເລີຍສະບັ້ນຫຼຸດໃຈ

ແຕ່ນັ້ນທິສກັນທ້າວ　　ສິດທິເດດນະຄອນພີ
ມັນກໍທິງຄຳຄະນຶງ　　ຊູ່ອັນມີແລ້ວ
ແຕ່ນັ້ນຍັກໃຫ່ງຟ້າວ　　ລຸກອາບສີງສີ
ຈັບມັນຫອມ　　ລູບທະໄລໂລມເນື້ອ
ຄ້ອມວ່າບໍ່ຣະບວນແລ້ວ　　ດາ.ດີດິກແຕ່ງ
ມັນກໍທຳເພດພຽງ　　ດວງໜ້າແປກອື່ນ
ແລ້ວເລົາຫວາຍທິງງ້າວ　　ພຣະຂັນໄຊຫຽມແຫບ
ສຸບເກີບແກ້ວ　　ທະຍານລ້າລ່ວງໄປ
ມັນກໍແບງຫໍແກ້ວ　　ເຫີນາງບາດ
ຄຶດຈັກໄປເສບຊ້ອນ　　ຊິນຫຼົ້ບສວ່າງກໍໃຈ
ມັນກໍລືລາເຂົ້າ　　ຊານນິບຜາສາດ
ຂໍງັດງ້າງ　　ກະແຈຟັ້ງຫຼຸດໄລ
ແຕ່ນັ້ນກັນດານເຈົ້າ　　ເມືອໃນຜາສາດ
ມັນກໍຫອມກົນນ້ຳ　　ຫັງຫ້າວຫົວໂຮງ
ເມື້ອນັ້ນກັນດານເອີ້ນ　　ຫານາງແວນຮົບ
ບໍ່ໄດ້ຍິນສຽງແຈ່ມເຈົ້າ　　ນາງແກ້ວທີໄດ
ກັນດານທ້າວ　　ຄະນຶງໃຈນີມາກ
ມັນກໍປືດຜ້າກັ້ງ　　ຄອບປ້ຽນລຳດູ
ເຫັນແຕ່ບັນທົມເຈົ້າ　　ນາງງາມແປນເປົ່າ　　ເສັ້ງນັ້ນ
ເຫັນແຕ່ເສືອອ່ອນຮ້າງ　　ໝອນເຫົ້າຫ່າງສະເທີນ
ແຕ່ນັ້ນຍັກໃຫ່ງທ້າວ　　ກົ້ວໂກດໂກທາ

ເຄັງໆສຽງ ແຜດດັງຄືຟ້າ
ເມື້ອນັ້ນຄືນເຊັ້ງຊຸ້ນ ໃຫບານເລີບຕື່ນ
ເຂົາກໍປີບແລ່ນເຕັ້ນ ຫາທ້າວບໍ່ນານ
ໄຟບານໄຕ້ ເບືອງແສງໃສສ່ອງ
ເຮືອງຮຸ່ງເຫົ້າ ໃບຄຸ້ມຄວ່າງປາງ
ເຂົາກໍແຊວງກ້ອງ ໃບກາງຜາສາດ
ທັງສີດ້ານ ຫາຖ້ວນກໍບໍ່ເຫັນ ແຫ້ແລ້ວ
ອັນນີ້ຕັ້ງແມ່ນວົງສາເຊື້ອ ເປັງຈານມາຮອດ ຈິງແລ້ວ
ນາລັກເອົານອດແກ້ວ ຈອນຊ້ອນດ່ວນໜີ ພຣະເອີຍ
ຄ້ອນວ່າເຂົາກ່າວແລ້ວ ທ້າວເຫດກັນດານ
ມັນກໍຂີວງສຽງ ກ່າວຈາຈິງຕ້ານ
ກໍຈຶ່ງຈຳຄຳໄຫ້ ຂຸນຫຼວງຟ້າເກື່ອນ
ທ່ານຈຶ່ງຫຼີງລ່ຳປຸ້ມ ສານແກ້ວອ່ານດູ ທ່ານເອີຍ
ແຕ່ນັ້ນຟ້າເກື່ອນທ້າວ ໂດຍອາດບັນຊາ
(ໂດຍພູມີ ບໍ່ນານພລັນຟ້າວ)
ມັນກໍນາຍສານແກ້ວ ແລດູຫຼີງລ່ຳ
ບິກໃສ່ເກົ້າ ບໍ່ຂຶ້ນອ່ານຖວາຍ
ສານນີ້ຊື່ວ່າອັກຄະສໍວໍຣະດາຖາທ້າວ ສຸຣິວົງລືເດດ
ເຮົາຈັກມາຜ່າມ້າງ ກັນດານທ້າວທີ່ສວາງ
ຄຽດທີ່ກັນດານທ້າວ ພາໄລສາໂຫດ
ທ່ານຫາກດູງ່າຍພົ້ນ ບຸຮານເຖົ້າບໍ່ນຳ ແຫ້ນາ

ອັນວ່າບຸບເພພຸ້ນ ເຣື່ອງມາເຮົາຈື່ ຈຳນັ້ນ
ໃຜຜູ້ເປັນສິ່ງນີ້ ກູຫ້າວບໍ່ທ່ອນເຫັນ ທ່ານເອີຍ
ອວດວ່າທິງຣິດທີກ້າ ລື່ກຽງນກິງໂລກ ອືທື ນັ້ນ
ເຊີນອອກໄປຕໍ່ງ້າວ ກູຫ້າວທ່ຽວເປືອງ ຫັ້ນຖ້ອນ
ເຮົາຈັກໄປເຊົາບັ້ງ ເຂົາວົງເວຣະວາດ
ເຊີນທ່ານໄປມ່ວນຫຼີ້ນ ຊົນຊ້າງກ່າຍງາ ທ່ຽວເຖີ້ນ
ຄ້ອນວ່າສານອ່ານແລ້ວ ບັກໂກດໂກທາ
ຄີງແດງປານ ດັ່ງຫາງຫາເນື້ອ
ມັນກໍບໍກຳປັ່ນ ຕີທວງກອບກ່າວ
ກູຈັກກິນບັກນ້ອຍໆ ມາອ້າງໂອດສະຫາວ ນີ້ເດ
ອັນນີ້ດັ່ງວ່າສາຣະພິດແທ້ ຈີ່ໂງ່ຕອດພາຍລຸນ ແລະນໍ
ກູບໍ່ຕັດຄຳເສັງ ແຕ່ປາງຄາວນັ້ນ
ແຂງວ່າກູຫາກຕັດຫົວຂ້າ ພັນຄໍຈືຫາຍສວ່າງ ດອກນາ
ດຽວນີ້ກູຫາກຕິກບາດຊ້າ ພາຍຊ້ອຍຈິຕອດກູ ແລະນາ
ອັນນີ້ຫາກແມ່ນກັມນຶ່ງແລ້ວ ເດີນມາຫາປ່າເຮ່ວ ນຶ່ງນໍ
ກູຈັກພັນນອດມຽ້ນ ໃຫ້ຕາຍຊ້າຊາກຕາວ ຫັ້ນແລ້ວ
ກູນີ້ຕັ້ງວ່າທັມມະຊາດເຊື້ອ ເປັນເອກນະຄອນຜີ
ໃຜຜູ້ມາພານຕາວ ກໍສ່ວນຂວັນເຂີນເນື້ອ
ຄ້ອນວ່າມັນກ່າວແລ້ວ ເລີນຮຸ່ງອໍຣະຊອນ
ກັນດານຈັດໃບທາ ແຕ່ງພິນໂບງຄ້ອງ
ເຄັ້ງໆກ້ອງ ສຽງກອງເຕີນປ່າວ

ເຂົາກໍໃຊ້ຖີບມ້າ ຫາທ້າວຊູ່ພາຍ
ສິບໆແສ້ ອາຊະໄນເມືອງຫົງ
ເຂົາກໍປີບປ່ວງເຕັ້ນ ທັງຄ້າຍທົ່ວເມືອງ
ອຸກຄະຫກເອົ້າ ທັງເມືອງຟ້າວຟັ່ງ
ຄື່ດັ່ງເສິກໃຫຍ່ເຂົ້າ ເມືອງກວ້າງຕື່ນຣິບ
ມັນກໍຈັດເອົາໄດ້ ຫຼາຍພຍາເມືອງສ່ວຍ
ເຂົາກໍມາພ່ຳພ້ອມ ດູຖ້ວນຊູພາຍ
ສັງຂຍາດ້ວຍ ພົນແພນນີມາກ
ນັບອ່ານໄດ້ ສາມລ້ານແປດແສນ
ຄ້ອນແຕ່ງແລ້ວ ລອງເດດສໍຣະສິບ
ກັບດານເຕາະ- ຕ່ອຍທະນູດັ່ງກ້ອງ
ເດັງໆກ້ອງ ທໍຣະນີໄຫວຫວັ່ນ
ຄືດັ່ງຈັກແຕກມ້າງ ທັງຄ້າຍທົ່ວແດນ
ແຕ່ນັ້ນຣາຊາທ້າວ ທິສກັນນີອາດ
ບອກໃຫ້ຟ້າເກື້ອນຜູ້ ຄົນກ້າອອກໄປ
ມັນນັ້ນອາສາໄດ້ ພົນຫານຫຼາຍໝູ່
ເຂົານັ້ນຈົບສລາດຮູ້ ບັງກ້ອງແກ່ວງທະນູ
ອັນວ່າທາງຕີນໄວ້ ຜີສວາງຖ້ານອ່ອນ
ຈົ້ງໃຫ້ເຂົາຂຶ້ນປ້ານ ພົນເຂົ້າປ່າຫົນ
ຟ້າຮ່ອນເຈົ້າ ເປັນອາດພຍາຜີ
ເຂົານັ້ນເຄີຍຟັນດາວ ຕໍ່ພຍາຊົບຊ້າງ

ເຂົາກໍໂຮມພົບໄດ້ ອາສາຫຼາຍໝູ່
ນົວນຶດແທ້ ທັງຄ້າຍຄັ່ງບົບ
ອັນວ່າທາງດົນນັ້ນ ຖືຜະລາກັບທອກ
ທັງໜ້າໄມ້ ທະນູກ້າກົງກາງ
ຄ້ອນວ່າມັນບອກແລ້ວ ຟ້າຮ່ອນດໍາດົນ
ມັນກໍນອງພົນຫຼວງ ອອກໄປມີຊ້າ
ຫຼີ ງາງູໂຮງໆເຫຼື້ອມ ປະຄືແດງຫຼາຍໝູ່ ພຸ້ນເປີ
ມັນກໍທົງສະອາດຊ້າງ ຕົວກ້າກ່ອນພົນ
ອັນວ່າໝື່ນລູກທ້າວ ຂຶ້ນຂີ່ພາຍສານ
ປະຄືຊຽວຫຼາຍ ໝູ່ພົນພອນຕັ້ງ
ປະຄືຊຽວພຸ້ນ ພຍານີຟ້າຮ່ອນ
ມັນກໍທົງສະອາດຊ້າງ ຕົວກາເຄື່ອງຄໍາ
ປະຄືເຫຼືອງນັ້ນ ກົງຄີຣີຟ້າປາດ
ມັນກໍຂຶ້ນຂີ່ຊ້າງ ຕົວກ້າອອກວຽງ
ອັນວ່າແສນປໍາທ້າວ ປະຄືອອນໂກວແກວ່ງ
ພົນພວກພ້ອມ ບວງບ້າຍບໍ່ນານ
ທັນທີເມືອງໆເຫຼື້ອມ ໂຂໂບບັກໃຫ່ງ
ປະຄືແສດຕັ້ງ ໝຸນເຂົ້າຂົມພົນ
ມັນນັ້ນເປັນລູງເຈົ້າ ທົສກັນບັກໃຫ່ງ ຈຶ່ງແລ້ວ
ມັນກໍແຂງຂົ້ນປ້ານ ພົນຕື້ອອກໄປ
ອັນວ່າທົສກັນຜູ້ ທົງຣິດທີລືເດດ

ນັບກໍ່ຂຶ້ນຣິດແລ້ວ　　ທະຍານລ້າລ່ວງບິນ
ອັນແຕ່ໃນຫາທ້າວ　　ຜີຫຼວງຫຼາຍໝູ່
ເຂົາກໍໄຫຼລັ່ງເຂົ້າ　　ທາງກວ້າງຄັ່ງຄີນ
ອັນວ່າທາງບິນພຸ້ນ　　ທະຍານໄປເທາະຫອບ
ພົນມາກລົ້ນ　　ທະຍານຜ້າຍຜັ່ນໄປ
ສົນໆແສ້ວ　　ຄວງບິນບົດມືດ
ເຂົາກໍຂັດດາບກ້າ　　ທະນູແກ້ວແກວ່ງກິງ
ທາງຕີນນັ້ນ　　ຜາລາກັບດາບ
ນອງຫ້າລ້ານ　　ທວນໄງ້ປອກເງິນ
ເຂົາກໍໃຂເຂຫຼົ້ນ　　ແຫງລາຟ້ອນດາບ
ສຽງສນັ່ນກ້ອງ　　ໂຮຮ້ອງມີນັນ
ແຊວໆກ້ອງ　　ເຟືອນຟັ່ງຜີບິນ
ທາງຕີນຫຼາຍ　　ມືດມົວຄົວນກຸ້ມ
ເຂົາກໍ່ນອງພົນເຂົ້າ　　ຕີນດອຍເຂົາໃຫ່ງ
ທີ່ນັ້ນເປັນທົ່ງກວ້າງ　　ແດນເສື້ອຈິ້ມດອຍ
ແຕ່ນັ້ນທິສກັນທ້າວ　　ເຕີນພົນເຊົາຈອດ
ຄວນທີ່ເຮົາແຕ່ງໃຊ້　　ໄປຢຸ້ມພໍ່ດູ　　ກ່ອນເຖິ້ນ
ຄ້ອນວ່າແລ້ວ　　ລົງສູ່ທໍຣະນີ
ພົນແພນລົດ　　ເຄື່ອງເຄົາເລີຍແລ້ວ
ຟູງໝູ່ອາສາທ້າວ　　ພົນຫານຫຼາຍໝູ່
ເຂົາກໍລົດເຄື່ອງຊ້າງ　　ທັງມ້າລວດເຊົາ

ຝູງໝູ່ພິນພີເຖົ້າ ໂຮມກັນເອົ້າອຶດ
ຄືດັ່ງຈັກແຕກມ້າງ ທັງຄ້າຍຫວັ່ນໄຫວ
ຄ້ອນວ່າລົດເຄືອງແລ້ວ ພຍາໃຫ່ຍທິສກັນ
ມັນຈິ່ງມີບັນຊາ ກ່າວຈາຈ້ຶງຕ້ານ
ມັນກໍປົງຄຳໃຫ້ ພຍາຫຼວງຟ້າເກື້ອນ
ທ່ານຈິ່ງໄປລ່ຳປຸ້ມ ດູຖ້ອນບອດດອຍ
ອັນນຶ່ງສຸຣິວົງນ້ອຍ ມັນຄອຍເຮົາຢູ່ ຈິ່ງລື
ຮູ້ວ່າມັນລ່ວງຜ້າຍ ໄປແລ້ວດັ່ງໃດ ນັ້ນເດ
ອັນນຶ່ງມັນກໍມີພວກພ້ອມ ພິນໄພ່ໄບຫາ ນັ້ນລື
ຄັນວ່າຄົນດຽວແທ້ ມັນເນົາບອບຢູ່
ທ່ານຈິ່ງຈັບຜູກແປ້ ເອົາໄດ້ລາກມາ ນັ້ນຖ້ອນ
ຄ້ອນວ່າມັນກ່າວແລ້ວ ຟ້າເກື້ອນຄົນດີ
(ມັນກໍໂດຍອາສາ ບໍ່ຂືນຈອມເຈົ້າ
ເອົາແຕ່ເສນາທ້າວ ພໍສອງສາມສີ
ວ່າຈັກໄປຜູກເອົາແຈ່ມເຈົ້າ ບາທ້າວງ່າຍດາຍ ເຈົ້າເອີຍ
ບັດນີ້ຈັກກ່າວເຖິງພິເສດເຈົ້າ ນາມມະໜໍ່ເປັງຈານ ກ່ອນແລ້ວ
ເຈົ້າກໍເນົາຫໍປາງ ເທພດາແປງໄວ້
ບູທ່າງບາຄານທ້າວ ເນົາບອບນິທເບ່ງ
ໃນແຫ່ງຫ້ອງ ຫໍແກ້ວແທນຄຳ
ກັບທັງນາດາແກ້ວ ໄສບາດອນລູກ
ພໍເມື່ອສູບສ່ອງແຈ້ງ ສອງເຈົ້າຕື່ນມາ

ສິດທິເດດເທ້າ ລຸກອາບສິງສີ
ທັງມາດາ ພ່ຳນວນສິງນ້ຳ
ຄ້ອນວ່າໄສງໄສດແລ້ວ ສເວີບໂພດພາທິບ
ອາຊະໄນສະຖິດ ປູ່ໂຮງຮຽງທ້າວ
ແຕ່ນັ້ນມາດາເຈົ້າ ພາທີກອບກ່າວ
ເຈົ້າຈິ່ງພາດຸ່ງດັ້ນ ໄປໜ້າທ່ຽວເປືອງ ແມ່ຖ້ອນ
ກົວແຕ່ກັບດານທ້າວ ໂກທາກົ້ວໂກດ
ມັນຈັກອວນໄພ່ຟ້າ ພິບຕິ້ດ່ວນດານ ແມ່ແລ້ວ
ເມື່ອນັ້ນທ້າວກ່າວຕ້ານ ດອນແມ່ມາດາ
ຂ້ອຍຈັກກຳດາວຟັນ ດ່ມີມັນນັ້ນ
ແນນທໍ່ກັບດານທ້າວ ບໍພົບມາດໍ່ ເຮົາຖ້ອນ
ຂ້ອຍຈັກຟັງນອດມ້ຽນ ມັນນັ້ນບໍ່ຍອມ ງ່າຍແລ້ວ
ແມ່ສັງບໍ່ຄຶດເມື່ອລຳບາກເບື້ອງ ຫີນແຫ່ງພາຍຫຼັງ ນັ້ນເດ
ມັນທາກໄປທຳເວນ ແກ່ເຮົາປາງນັ້ນ
ອັນນີ້ມັນທາກເປັນແຕ່ບຸນຂອງເຈົ້າ ກັບອວນລົງເກີດ ຈິ່ງແລ້ວ
ກໍຈິ່ງມາຈອບເຈົ້າ ຈອນຊ້ອຍເມື່ອລູນ ແທ້ແລ້ວ
ຄ້ອນວ່າສອງກ່າວແລ້ວ ເລີຍປູ່ສະບາຍໃຈ
ປານດັ່ງໂອຄາເທີນ ສວ່າງເທີບທາບໄຂ້
ສອງແຈ່ມເຈົ້າ ພົ້ນໂສກໂສກາ
ບູສະບາຍສຸກ ສຳອານມີຮ້ອນ
ອິນພົນພ້ອມ ສາທຸການຊົນຊື້ນ

ກໍເພື່ອສອງແຈ່ມເຈົ້າ　　ແພງລ້ານສວ່າງໄພຍ
ອັນວ່າເທວະດາດ້າວ　　ຈະຕຸຣາທັງສີ່
ກັບທັງຄຸດບາກພ້ອມ　　ທັງຄ້າຍຊຶບຊິມ
ແມ່ນວ່າເທວະດາຫ້ອງ　　ຄູຫາຄ້ຳໃຫຍ່　　ກໍດີ
ເຈົ້າກໍແນມອ່ອນນ້ອຍ　　ບາທ້າວບໍ່ວາງ　　ຫັ້ນແລ້ວ
ບັດນີ້ຈັກກ່າວເຖິງຄົນດີທ້າວ　　ກັບດາບໄຊ້ຮອດ　　ກ່ອນແລ້ວ
ມັນກໍຜິກຖ່ອມລີ້　　ນຳປຸ້ມແຕ່ໄກ
ກໍບໍ່ເຫັນພົນທ້າວ　　ພໍ່ສອງສາມສີ່　　ຈິງແລ້ວ
ກໍຫາກເຫັນແຕ່ສອງແຈ່ມເຈົ້າ　　ບາທ້າວທີເຊງ　　ແກ້ແລ້ວ
ເບື້ອນັ້ນຟ້າເກືອນເຈົ້າ　　ຄຶດປຸໃນໃຈ
ອັນນີ້ກູຈັກທຳປະການໃດ　　ຈິງຈິກຸມເອົາໄດ້
ຄວນກູອຸບາຍໃຫ້　　ບາດາບຫຼົງຫຼຸດ　　ໃຈຖ້ອນ
ຈິງຈິໄດ້ເຂົ້າໃກ້　　ບາທ້າວຜູກເຂົາ　　ຊອນແລ້ວ
ແຕ່ນັ້ນຟ້າເກືອນທ້າວ　　ທຳເພດທິງກະບວນ
ເໜືອນຈັກໄປທູນຖວາຍ　　ພຣະບອດເມືອງບຸນກວ້າງ
ມັນກໍລີລາຍ້າຍ　　ຜາຍເຊີງຍົກຍ່າງ
ແຕ່ນັ້ນເທວະເຈົ້າ　　ຍານແກ້ວສ່ອງເຫັນ
ພຣະຈິງຕ້ານຕໍ່ທ້າວ　　ເດີນອ່ອນກຸມານ
ແທນຄຳຄວນ　　ບອກບາເລີ່ຍຊີ້
ອັນວ່າຄົນດີທ້າວ　　ກັບດາບກັບເພດ　　ມາແລ້ວ
ມັນຈັກທຳເຫດໃຫ້　　ບາທ້າວບໍ່ສ່ອງເຫັນ　　ເຈົ້າເອີຍ

ເຈົ້າຈິງຫວາຍຫິງງ້າວ	ຂັ້ນໄຊໂກວແກວ່ງ	ເສັ່ງເຖິນ
ຢ່າໃຫ້ມັນເຂົ້າໃກ້	ບາທ້າວບໍ່ດີ	ແທ້ດາຍ
ເມື່ອນັ້ນບາຄານນ້ອຍ	ຄອຍດູຫຼີງລ່ຳ	
ກໍເລົາເຫັນແຈ່ມເຈົ້າ	ຜີຮ້າຍດ່ວນມາ	ແທ້ແລ້ວ
ມັນກໍຮອດຂ່ວງຄຸ້ມ	ຜາສາດວິໄຊຍົນ	
ບາຄານເຫັນ	ບໍ່ກົວເກງຢ້ານ	
ເຈົ້າກໍຫວາຍຫິງງ້າວ	ດວງພະຂັນຫຼຸມແທບ	
ທ້າວກໍທິງເພດໄວ້	ກະບວນໜ້າບໍ່ຄອຍ	
ແຕ່ນັ້ນຟ້າເກືອນທ້າວ	ຂຶ້ນສູ່ຊານມົນ	
ມັນກໍນຳຂອງມາ	ຂາບຖວາຍທູນທ້າວ	
ອັນວ່າພິເສດຜ້າ	ຂອງເທດນາໂຄ	ພຣະເອີຍ
ທ່ານໃຫ້ນຳມາຖວາຍ	ແກ່ບາບຸນກວ້າງ	
ອັນວ່າວັດຖຸຜ້າ	ຜືນດີແວນປະເສີດ	
ຖວາຍແກ່ສີແຈ່ມເຈົ້າ	ບາທ້າວນຸ່ງທິງ	ວ່າດາຍ
ແມ່ນວ່າສົມຄາມລົບ	ທໍຣະນີເຫຼືອແຜ່ນ	ກໍດີຖ້ອນ
ຄັນໄດ້ທິງນຸ່ງຜ້າ	ຜືນນີ້ເຂືອນແຂງ	ແທ້ແລ້ວ
ເມື່ອນັ້ນສຸເວດນ້ອຍ	ຕ້ານຕໍ່ຜີສວາງ	
ນຶ່ງນີ້ແມວກັນດານ	ຢ່າມາລວນເບົາ	
ກູນີ້ວິງສາເຊື້ອ	ເປັງຈານລືເດດ	
ຢ່າໄດ້ມາລ້ຳຫຼີ້ນ	ກູທ້າວບໍ່ດີ	ທ່ານເອີຍ
ນຶງຈິ່ງລິງໄປຖ້ອນ	ໜີເປືອງໂດຍຮີບ	ຈິ່ງເຖີນ

ມຶງບັງຄົນປູ່ໜີ້ ຫົວທ້າວບໍ່ແກວ່ນຄໍ ແທ້ດາຍ
ແຕ່ນັ້ນຟ້າເກືອນທ້າວ ກັບດານກັບເພດ
ມັນກໍກອຍກ່າວຕ້ານ ບາທ້າວລ່ວງພາງ
ອັນວ່າຣາຊາທ້າວ ພຍາຫຼວງນາກໃຫຍ່ ພາຍພຸ້ນ
ພຣະກໍຮູ້ຂ່າວເຈົ້າ ມາຄ້າງເຂດຜີ
ກໍຈຶ່ງເອົາຜືນຜ້າ ມຸງຄຸ້ນມາຝາກ
ພຣະຈຶ່ງຈຳຂ້ານ້ອຍ ມາພໍ້ຮອດບາ ແທ້ແລ້ວ
ຄ້ອມວ່າມັນກ່າວແລ້ວ ເລີຍໜອບຄານໄປ
ເມື່ອນັ້ນເທວາແໜກອນຄຳ ບອກບາພອຍຊີ້
ມັນບໍ່ຫາກແມ່ນຄົນເຊັງຊັ້ນ ທິສກັບກັບເພດ ຈິງແລ້ວ
ຢ່າໃຫ້ມັນເຂົ້າໃກ້ ບາທ້າວບໍດີ ແທ້ດາຍ
ເມື່ອນັ້ນສຸຣິວົງທ້າວ ພະຂັນໄຊຖືກຄອດ
ທ້າວກໍບໍ່ແກວ່ງເປືອງ ແສງເຫຼື້ອມນາບເມືອງ
ແສງຕາວຕ້ອງ ຄົນດີຟ້າເກືອນ
ຄໍຂາດແລ້ວ ຫົວກິ້ງເກືອນລົງ
ມັນກໍວາງຄີງລົ້ມ ຫົວສະເດັນຄໍຂາດ
(ເລືອດລັ່ງລົນ ລົງຫ້ອງດາດແດງ
ມັນບໍ່ຊ້າ ຟ້າວຟັ່ງທັງກະຫາຍ
ຟາງຕາຍລຸກ ເລົາກົວເກງປ້ານ)
ມັນກໍຄວາຄີໄດ້ ເອົາຫົວມາຕໍ່
ທະຍານລ່ວງລ້ຳ ໜີແທ້ທ່ຽວເປືອງ

ອັນວ່າວັດຖຸຜ້າ　　ໃບຂັນຟ້ອງອອກ
ເລີຍເລົ່າເປັນບາດບ້ວງ　　ເຫຼືອລົ້ນອະເນກນອງ
ທ້າວກໍຫຼິງລ່ຳປຸ້ມ　　ເຫັນຫຼາກອັສຈັນ
ບາກໍບໍຕາວກວັດ　　ແກວ່ງໄກວຟັນເຟື້ອງ
ອັນວ່າອາຄົມກ້າ　　ເດໂຊຟ້າເກື້ອນ
ກໍເລົ້າກັບກ່າຍແຫ້　　ຫາຍສ້ຽງບໍ່ມີ　　ເຈົ້າເອີຍ
ອັນວ່າເດໂຊກ້າ　　ກຸມານມີມາກ
ທ້າວບໍ່ປຸດປ່ອນປ້ານ　　ສັ້ງແຫ້ທໍ່ໄຍ
ແຕ່ນັ້ນພາຍຜີຜູ້　　ຄົນດີຟ້າເກື້ອນ
ເຂົາກໍຕົກຂະນະປ້ານ　　ໜີແຫ້ບໍ່ເຫຼືອດຫຼຽວ
ກໍເພື່ອເດໂຊງ້າວ　　ບາຄານແຂງຂິ້ນ
ມັນກໍປັ້ງບໍ່ໄດ້　　ເລີຍຟ້າວຜ່າຍໜີ
ແມ້ງບົ່ງເຖິງພົບທ້າວ　　ທົສກັນຍັກໃຫຍ່
ມັນກໍເຂົ້າຂາບໄຫວ້　　ທູນເຈົ້າບໍ່ນານ
ຝູງຂ້າໄປກອບປຸ້ມ　　ສຸຣິວົງແມ່ລູກ
ກໍຫາກເຫັນແຈ່ມເຈົ້າ　　ສອງນ້ອຍຢູ່ດອຍ
ຂ້າກໍປອງເອົາແຫ້　　ດູນານອິດອ່ອນ　　ເສັ້ຽແລ້ວ
ເກືອບຈັກມໍຣະນົງມ້ຽນ　　ຕົວຂ້າສແມ່ງຕາຍ　　ພຣະເອີຍ
ອັນວ່າບາຄານນ້ອຍ　　ບໍຕາວຜລຽງຜ່າ
ຂ້າກໍເຊທ່າວລົ້ມ　　ຄໍຄ້ານຂາດສະເດັ່ນ
ຂ້າກໍຄວາຄືໄດ້　　ຫົວມາຕິດຕໍ່

ຂ້າກໍກົວເດດທ້າວ	ທະຍານຜ້າຍລ່ວງມາ	ແທ້ແລ້ວ
ອັນວ່າເຕໄຊທ້າວ	ກຸມານແຂງຂບາດ	
ໃຜບໍ່ມີອາດສູ້	ເສງໄດ້ເດັດອິດທີ	ພຣະເອີຍ
ເມື່ອນັ້ນພຣະບາດທ້າວ	ຍັກໃຫຍ່ທິສກັນ	
ມັນກໍຂວາງສຽງ	ຕໍ່ພຍາທັງຄ້າຍ	
ບັດນີ້ເຮົາຈັກບອງພົນເຂົ້າ	ທີ່ດຽວໂຣມຜ່າ	ເອົາເຖີ້ນ
ຢ່າໃຫ້ມັນທັນຫ້າງເນື້ອ	ດາຕັ້ງແຕ່ງຕົວ	ທ່ຽວເຖີ້ນ
ສູຈົ່ງດາດີຫ້າງ	ປຸນເປືອງຕົກແຕ່ງ	
ກູຈິໄປຈັບເອົາເດັກອ່ອນນ້ອຍ	ວັນນີ້ບໍ່ຄາ	ແທ້ແລ້ວ
ເມື່ອນັ້ນພຣະບາດທ້າວ	ຄ້ອງປ່າວເຕີນພົນ	ພູ້ນເປີ
ຟັງຍິນແຊວໆນີ	ຊຶ້ນຊົມຈາຕ້ານ	
ບັດນີ້ເຮົາຈັກກຸມເອົານ້ອຍ	ສຸຣິວົງມາປອກ	
ຕາງໃຫ້ເຫັນເດດທ້າວ	ຈູງຫົ້ນດັ້ງຄວາຍ	
ຄ້ອມວ່າແລ້ວ	ທ້າວໃຫຍ່ທິສກັນ	
ມັນກໍບໍພົນຫຼວງ	ລ່ວງມານີຊ້າ	
ແຊວໆກ້ອງ	ຊາວພີຣ້ອງໂຫ່	
ສຽງສນັ່ນກ້ອງ	ພົນຕີ້ຫຼັ່ງໄຫຼ	
ອັນວ່າທາງດົນນັ້ນ	ພົນຫຼວງໄຫຼຫຼັ່ງ	ໄປແລ້ວ
ເຂົາກໍຖືທອກງ້າວ	ທະນູໜ້າແລຕາວ	
ທາງບິນນັ້ນ	ທະຍານໄປທີທາດ	
ສຽງມີກ້ອງ	ບິນຟ້າມືດມົວ	

ແມ້ງບົ້ງຄັບຄັ່ງເໜົ້າ	ເຖິງຈອມເຂົາໃຫຍ່	
ເຂົາກໍລົງຈອດປັ້ງ	ພະລານກວ້າງຈິ້ມຈົບ	
ພໍປະມານໄດ້	ໄກກັບໂບດບົ້ງ	
ເຂົາກໍຕົກແຕ່ງຫ້າງ	ດາເນື້ອຊູ່ຕົວ	
ພົບຫານທ້າວ	ຜີສວາງຄາດເຄື່ອງ	
ເຂົາກໍແບກປີກຊ້າຍ	ຂວາຕັ້ງແຕ່ງໄປ	
ພາຍບິນພຸ້ນ	ຫຼາຍພຍາມົວມືດ	
ເຂົາກໍເພາະຫອບຜ້າຍ	ທະຍານລ້ຳລ່ວງໄປ	
ເຄັ້ງໆກ້ອງ	ກອງຜີຮ້ອງໂຫ່	ໄປແລ້ວ
ຄືດັ່ງຈັກແຕກມ້າງ	ທັງຄ້າຍຟັ່ງເຟືອນ	
ຫາງຕີນບັ້ນ	ພາຍສານຊ້າງໃຫຍ່	
ຄວນຂີ້ແລ້ວ	ປະໂຄນໝັ້ນຄາດດີ	
ຝູງໝູ່ໄທລວາເຂົາ	ແຫ່ຕາມຕີນຊ້າງ	
ອັນວ່າປະຄືເຫຼືອງນັ້ນ	ກົງຄີຣີຟ້າປາດ	
ມັນກໍເປັນທັບໜ້າ	ຟັນເຂົ້າບໍ່ທົນ	ງ່າຍແລ້ວ
ອັນວ່າພຣະບາດທ້າວ	ຍັກໃຫຍ່ໄຂໂນ	
ທົງແສງປຳ	ຂຶ້ນພົບໝູນເຂົ້າ	
ແຊວໆພ້ອມ	ບັກໄຂຫຼາຍໝູ່	
ເຂົາກໍຂັບຕໍ່ຕ້ອງ	ບາທ້າວຊູ່ຕົວ	
ທົມໆກ້ອງ	ຄູຫາຖ້ຳໃຫຍ່	
ເທວະຣາດເຈົ້າ	ເຕີນທ້າວແຕ່ງຕົວ	ຫ່ວງເຖິນ

ບັດນີ້ກັບດາບທ້າວ ນອງພົນເຂົ້າອີກ ມາແລ້ວ
ເຂົາຈັກມາຕໍ່ງ້າວ ບາທ້າວບອກຊາຍ ແທ້ແລ້ວ
ເຈົ້າຈົ່ງດາດີເຖີ້ນ ປຸນເປືອງຕົກແຕ່ງ ຈົ່ງເຖີ້ນ
ເຂົາຈັກມາລ່ວງລ້ຳ ຈົນໃກ້ທີ່ເຮົາ ແທ້ແລ້ວ
ເມື່ອນັ້ນສຸຣິເວດທ້າວ ຈອມຣາດໂພທິສັດ
ບາກໍ່ນົບດີຊົມ ຊື່ນຈາຈົ່ງຕ້ານ
ແມ່ນວ່າພົນພີ້ລົ້ນ ກີ່ກອງລ້ານໂກດ ກໍດີຖ້ອນ
ຂ້ອຍຈັກໄກວແກວ່ງແພ້ວ ສອນແກ້ວຜ່າພລຽງ ເຈົ້າເອີຍ
ໃຫ້ມັນພິງຫຼືມ້າງ ກະຈັດໄປເປັນຕ່ອນ ເສັຽນັ້ນ
ເຂົາຈັກມຸດມອດມ້ຽນ ຕາຍສ້ຽງບໍ່ຫຼໍ ຫັ້ນແລ້ວ
ຄ້ອມວ່າທ້າວກ່າວແລ້ວ ສະເດັດສູ່ຊານມົນ
ບາຄານເນົາ ປູ່ຄອງຄອຍຖ້າ
ອັນວ່າມາດາເຈົ້າ ນາງງາມດົນແມ່ ນານັ້ນ
ເຈົ້າກໍເນົາປູ່ຫ້ອງ ດອມນ້ຳເພື່ອນເພົາ
ອັນວ່າແພງສີແກ້ວ ນາງງາມນ້ອຍອ່ອນ
ນາງກໍຕົກຂະນະປ້ານ ຜີຮ້າຍອະເນກນອງ ແທ້ແລ້ວ
ບັດນີ້ຈັກກ່າວທ້າວ ຍັກໃຫຽ່ກັບດາບ ກ່ອນແລ້ວ
ມັນກໍມາຈົນນາ ມືດມົວມີແຈ້ງ
ອັນວ່າອາສາຜູ້ ຄົນດີຟ້າເກື້ອນ ມັນນັ້ນ
ມັນກໍມາແທບໃກ້ ນາທ້າວຈີ່ມຈົ່ນ
ມັນກໍເອີ້ນຮຽກຮ້ອງ ຫາອ່ອນກຸມມານ

ມຶງຈິ່ງເອົາມາດາ ສິງກູບາຊ້າ
ແມ່ນວ່າໃຫສາລົບ ຈີບັນເທົາລຸ້ງໃພດ ມຶງແລ້ວ
ຄັນວ່າມຶງບໍ່ວາງແມ່ໃຫ້ ກູແທ້ສ່ວນຕາຍ ແທ້ແລ້ວ
ອັນວ່າໃບທາກ້າ ພົນກູມີມາກ
ກູຈັກຈັບປີ້ນແປ້ ເປັນໝຸ້ງເໜືອດຶງ ແທ້ແລ້ວ
ບັກກ່າວແລ້ວ ທ້າວວອນຄຳຂືນ
ກູບໍ່ເປັນທາສາສູ ສິງໃດມາຕ້ານ
ອັນວ່າມາດາແກ້ວ ບຸບເພຕັ້ງແຕ່ກ່ອນ ກູນີ້
ສູຫາກລັກລອບເຈົ້າ ເອົາໄດ້ຈາກກູ ບັ້ນບາ
ອັນວ່າໃທດທ່ານນີ້ ເຖິງທີ່ນໍຣະນາ ແທ້ດາຍ
ກູຈັກຟັງທັວເສັງ ໃຫ້ສວ່າງໃຈຄາວນີ້
ສູຈິ່ງຄືນເມືອຫ້ອງ ນະຄອນຫຼວງຂອງເກົ່າ ສູເຖີ້ນ
ຢ່າໄດ້ມາໂອດອ້າງ ຄຳຮ້າຍບໍ່ດີ ແທ້ດາຍ
ເມື່ອນັ້ນຟ້າເກືອນທ້າວ ກົ້ວໂກດໂກທາ
ມັນກໍໄສພາບສານ ເຂົ້າມານີບັ້ງ
ເມື່ອນັ້ນກຸມານທ້າວ ສຸຣິວົງລືເດດ
ທ້າວກໍສິບເສກກ້ອນ ຜາລ້ານເກືອນມາ
ເລີບເກີດເປັນຕົວຊ້າງ ສັດທັນຂາວເຜືອກ
ງາເຮື່ອປ້ອງ ຄຳເຫຼື້ອມອະເນກນອງ
ກຸບຊະໂຣຊ້າງ ພາບງາມຄາດເຄື່ອງ
ຄວັນຂີພ້ອມ ຄຶງຟ້ອນແກວ່ງຂໍ

ຄ້ວນຂີ້ພ້ອມ   ຄີງພ້ອນແກວ່ງຂໍ
ບາບໆເຫຼືອ   ພ້ອນດາບຫຼັງພາຍ   ພຸ້ນເປ
ເຂົາກໍໃສພາຍສາບ   ອອກໄປຊິບຊ້າງ
ແຊວງເປື້ອງ   ພົບບາແບກໝູ່   ແລເປີ
ເຂົາກໍຕັ້ງປີກໄວ້   ຂວາຊ້າຍອະເນກນອງ
ທ້າວກໍບອກໃຫ້ແຈ້ງ   ການແຫ່ງສົງຄາມ
ສູຈົ່ງໄປຊິບພາຍ   ຕໍ່ພຍາຜີພຸ້ນ
ສູຈົ່ງຟັນແຫງຂ້າ   ພົບເຂົາປ່າປ່ອນ
ສູຈົ່ງຟັນມອດມ້ຽນ   ແຫງຂ້າຕຸ່ມວາຍ   ຫັ້ນຖ້ອນ
ຄ້ອນບອກແລ້ວ   ຍ້າຍໝູ່ພາຍສາບ
ນາຍຄວັນເກາະ   ກ່ຽວພາຍໂຮມເຂົ້າ
ພົບແຜນເປື້ອງ   ບ-ຄານໄຫຼອອກ   ໄປແລ້ວ
ຊ້າງກ່າຍຊ້າງ   ງາກ້າເຣືອເຣືອງ
ພົບແຜນທ້າວ   ກີກອງອະນັນເນກ
ຄັບຄັ່ງເທົ້າ   ດອຍກວ້າງອັ້ງພົບ
ສຽງໂຮ່ເປື້ອງ   ບາຄານດາສນັ້ນ
ຄືນໆເຄົ້າ   ຄືຟ້າລ່ວງບິນ
ແຕ່ນັ້ນກັບດານທ້າວ   ຄົບດີຟ້າເກື້ອນ
ມັນກໍເຫັນຫາກແທ້   ພົບທ້າວຫຼັ້ງມາ
ຟ້າເກື້ອນທ້າວ   ມີປ່ອນອາຄົມ
ມັນກໍບໍທບູະສົບ   ແກວ່ງໄກວມີຊ້າ

ເຄ້ງໆກ້ອງ　　ເທິງບິນເຟືອນຟັ່ງ
ຄືດັ່ງຈັກແຕກນ້າງ　　ທັງຄ້າຍມີບັນ
ປີນສແວງຂຶ້ນ　　ເມື່ອບິນເຄ້ງຄື່ນ
ເລີຍເລົ່າເປັນຫອກງ້າວ　　ຫຼາຍລົ້ນໝື່ນດວງ
ເມື່ອນັ້ນກອງແຜງທ້າວ　　ສຸຣິວົງຫຼີງລ່ຳ
ເຈົ້າກໍເຫັນຕ່າງແທ້　　ບາທ້າວບໍ່ກິວ
ບາກໍຣວາຍນົບແກ້　　ອາຄົມອັນປະເສີດ
ເລີຍເລົ່າເປັນແຜ່ນແກ້ວ　　ກະດານກັ້ງເຊື່ອນແຂງ
ປີ້ນປຳທ້າວ　　ຄົນດີຟ້າເກື່ອນ
ກໍລວດກັບກ້າຍແທ້　　ຫາຍສ້ຽງບໍ່ຫຼໍ
ແມ່ນວ່າຍິງໄປແທ້　　ແສນດວງຮ້ອຍຫາ　　ກໍດີແລ້ວ
ກໍບໍ່ຖອງຖືກແທ້　　ພົບທ້າວປູ່ສະບາຍ
ແຕ່ນັ້ນຟ້າເກື່ອນທ້າວ　　ຄືດຽດມີນາຍ
ມັນກໍໄສພາຍສານ　　ຜ່າຊົນຕຳຕ້ອງ
ອັນວ່າຫາງຕີນນັ້ນ　　ຟັນລາກັບດານ
ຝູງຫອກງ້າວ　　ທະນູໜ້າກົ້ງຍິງ
ເລີຍເລົ່າເກົ້າກ່ວາຊຸ້ນ　　ຟັນກັນເອົ້າອຶດ
ຝູງໝູ່ຊ້າງ　　ເມົາບ້າບໍ່ຫົນ
ພາຍາສານຊ້າງ　　ພົນບາແຂງຂົ່ນ　　ຈິງແລ້ວ
ງວງພາດກ້ຽວ　　ງາຊື້ເກື່ອນຫງາຍ
ລາງພ່ອງເລີຍວາຍແທ້　　ລາງຕົວກົ້ງເກື່ອນ　　ກໍມີ

ລາງຕົວພຸດລຸກໄດ້ ຟາງເລືອດແຫງຄວັນ ກໍມີ
ລາງຕົວຊົບຕໍ່ຕາຍ ທ່າວເຊເລີບລົ້ມ
ຊ້າງໃຫຍ່ທ້າວ ຟ້າເກືອບມືຫົບ
ງາສວາບງາ ສອດສົບງາໃຊ້
ຜົງທຸລີຂຶ້ນ ເມືອບົນບົດມືດ
ສຽງໂຮເຫົ້າ ທະລຶງພົ້ນແຜ່ນດິນ
ອັນວ່າພົບຜີເບື້ອງ ພຍາຫຼວງຟ້າເກື້ອບ
ເຂົາກໍອຶດອ່ອນແທ້ ແຄນຮ້າຍຊວາດປະມານ
ອັນວ່າພົບຣິດທ້າວ ສຣີວົງລືເດດ
ເຂົາກໍຟັບລ່າວລົ້ມ ຜີນັ້ນບໍ່ຂາມ
ເຂົາກໍຊວາດງຸເຕັ້ນ ແຫງຫອກຟັບລາ
ພົບຜີຫັກ ໂຄບຄືນມີບັ້ງ
ອັນວ່າຄົບດີທ້າວ ພຍາຜີຟ້າເກື້ອບ
ມັນກໍຫົບພຽກຢ້ານ ບໍ່ມີເອື້ອອ່າວຄອບ
ຫົ໌ບພົບແຜນທ້າວ ມີໄຊແຂງຂົ້ນ ເຮົາແລ້ວ
ເຂົາກໍບັງໄລ່ຈົ້ມ ບໍາສົ້ນບໍ່ວາງ
ເມື້ອນັ້ນໃບທາທ້າວ ພຣະບາຜີຫຼາຍໝູ່
ເຂົາກໍເຫັນເດດທ້າວ ເລີຍປ້ານພ່າຍພັງ
ໃບທາທ້າວ ທາງຕີນປຸດປ່ອນ ເສັງແລ້ວ
ເຂົາກໍປະໄປ່ຊ້າງ ທັງມ້າບໍ່ຄອຍ
ເມື້ອນັ້ນທິສກັບທ້າວ ພຍາຜີບັກໃຫ່ຍ

ມັນກໍເຫັນຫຼາກແທ້ ພົນທ້າວບາດໃຊ
ມັນກໍຮວາຍມົນໃຫ້ ເປັນໄຟເຜົາແຜ່ນ
ແປວເປົ້ງໃໝ້ ດອຍກວ້າງຫົວແດນ
ຫົນໆກ້ອງ ເຜນີເຜົາແຜ່ນ
ໂຫດໆໃໝ້ ພົນທ້າວທ່າວລົງ
ອັນວ່າເດໂຊທ້າວ ພົນບາສາດເພດ
ກໍລວດຫາຍສຽງແທ້ ພົນທ້າວບໍ່ຫຼໍ
ໄຟເລົາບັງເຜົາໄໝ້ ພູດອຍພັງເພົ້າ ໄປແລ້ວ
ແປວເປົ້ງເປື້ອງ ໄປແທ້ບໍ່ເຊົາ
ເມື່ອນັ້ນບໍຣິບທ້າວ ໂພທິບານເຫັນຫຼາກ
ກໍຫາກດູຕ່າງແທ້ ບາທ້າວບໍ່ກົວ
ເຈົ້າກໍຄຶດຮ່ຳຮູ້ ລະນຶກຮອດຄູບາ
ຂໍໃຫ້ມາຊູແບນ ຊ່ອຍປອງປາງນີ້
ເມື່ອນັ້ນທ້າວກໍຮວາຍມົນໃຫ້ ເປັນຝົນແສນຫ່າ
ໄຫຼຫຼັ່ງເທົ້າ ທະຮັງຟ້າມືດມົວ
ຊວາດໆນ້ຳ ນອງແຜ່ນທໍຣະນີ
ຫົນໆຝົນ ຫຼັ່ງລົງມິເອື້ອນ
ອັນວ່າອາຄົມທ້າວ ທົສກັນເລີຍສວ່າງ
ໄຟນອດມ້ຽນ ຫາຍຮ້ອນປູ່ເປັນ
ອາໂປນ້ຳ ນອງໄຫຼດົກດາດ
ນ້ຳຍຶ່ງຖ້ວມ ນອງລົ້ນແຜ່ນດິນ

ແຊວໆເບື້ອງ　　ພົນຜີດູສນັ້ນ
ເຂົາກໍລອຍຂວ້າມນ້ຳ　　ແຄນຮ້າຍລວດຈົມ
ເມື່ອນັ້ນບັກໃຫ່ງທ້າວ　　ຄອຍຜໍ່ພົນແພນ
ດູບາງບົກ　　ໄພ່ພົນທາງພົ້ນ
ນັບກໍບໍ່ສອນແກ້ວ　　ທະນູສິນໄກວແກວ່ງ
ບົງໃສນ້ຳ　　ທະລາຍຟົ້ງຟາດຟອງ
ອາໄປນ້ຳ　　ເລີຍຫາຍບົກຂາດ
ເຂີນໄຄ່ແຫ້ງ　　ທັງຄ້າຍທົ່ວແດນ
ແຕ່ນັ້ນທົສກັນທ້າວ　　ເຕີນເຂົາຕົກແຕ່ງ
ສູຈົ່ງຕົກແຕ່ງຕ້າຍ　　ຄູລ້ອມແວດລະວັງ　　ທ່ຽວເຖິ່ນ
ແຕ່ນັ້ນທົ່ນໆຂ້າ　　ຊາວເທດມຸນຕີ
ເຂົາກໍເອວພລັບຕົກ　　ແຕ່ງເປືອງມີຊ້າ
ທໍ່ສະຖິດທ້າວ　　ທົສກັບດູອາດ
ຫຼົ່ງລ່ຳຢຸ້ມ　　ສູງພົ້ນເມກວຽງ
ແສນຜີພ້ອມ　　ຫຼາຍພຍາໂຮມໄພ່
ເຂົາກໍເຊົາຈອດບັ້ງ　　ບານນ້ອຍຖ່ຳຈວນ
ບັດນີ້ຈັກກ່າວເຖິງບຸດຣາດນ້ອຍ　　ເຈົ້າອ່ອນສຸຣິວົງ　　ກ່ອນແລ້ວ
ເຈົ້າກໍຜາຍຖືງແພງ　　ອອກໄປສົ່ງນ້ຳ
ທ້າວກໍທວາຍທົ່ງບ້າວ　　ບວຍຖ່ຳໂສງໂສດ
ຣິດຣວ່າງເຮົ້າ　　ຈັບທະຖູ້ກົ່ນຫອມ
ເຈົ້າກໍໂສງໂສດແລ້ວ　　ສະເດັດສູ່ປາງຫອງ

ມາດາຕິກ	ແຕ່ງພາປຸນຕັ້ງ	
ສອງແຈ່ມເຈົ້າ	ສເວີຍໄພດພາແລງ	
ບໍຣະບວນຖອຍ	ເລີກລາເລີຍແລ້ວ	
ຂັບສລາຕັ້ງ	ຫຼຸມອິງຮຽງພ່າງ	
ເຈົ້າສເວີຍໝາກແລ້ວ	ຈາຕ້ານຊື່ນຊົມ	
ເຈົ້າກໍເວົ້າຕໍ່ທ້າວ	ເທວະຣາດຄູຫາ	
ຈາສຽງໃສ	ຕໍ່ເທວະດາເຈົ້າ	
ບັດນີ້ທິສກັບທ້າວ	ແປງວຽງລະວັງຮອບ	ເຮົາແລ້ວ
ຖັດຖີໃກ້	ເຮົາແທ້ຈີ່ມຈິບ	ເຈົ້າເອີຍ
ຂໍແກ່ເທວະດາເຈົ້າ	ປານີຜາຍໄພດ	ແດ່ຖ້ອນ
ຈົງໃຫ້ຫຼີ ງລ່ຳປຽມ	ບານເຜົ້າປູ່ປອງ	ແດ່ຖ້ອນ
ເມື່ອນັ້ນເທວະດາໄທ້	ພາທີກອບກ່າວ	
ເຈົ້າຢ່າໄດ້ຄຶດແຄ້ນ	ສັງແທ້ທໍ່ໄຍ	ເຈົ້າເອີຍ
ເຈົ້າບໍ່ມີ ໃຊ່ສາມານເຊື້ອ	ໃບໃສຖ້ານຕ່ຳ	ສັງນາ
ຫາກແມ່ນເຊື້ອໜໍ່ຟ້າ	ແນວທ້າວໜໍ່ພຸດໂທ	ແທ້ດາຍ
ອັນນຶ່ງເຈົ້າຈົ່ງປານີແທ້	ຝູງພີ່ຊາວໄພ່	ນັ້ນເນີ
ເຈົ້າຢ່າໄດ້ເຮັດຮ້າຍ	ເຂົານັ້ນບໍ່ດີ	ແທ້ດາຍ
ກົວແຕ່ໄພຍໄພ່ຕ້ອງ	ປາປັງເປັນບາບ	
ເວັນບໍ່ແລ້ວ	ນຳໃຊ້ເມື່ອລຸນ	ຫັ້ນແລ້ວ
ເທວະດາກ່າວແລ້ວ	ທ້າວຊື່ນຊົມບານ	
ເຈົ້າບໍ່ກົວເກັງສັງ	ທີ່ໄຍຍ່ອງນ້ອຍ	

ເມື່ອນັ້ນະທວີແກ້ວ	ມາດາຕົນແມ່	
ນາງກໍບ່ອນໜ່ຽວເຈົ້າ	ກູນາງນ້ອຍລູກຕົນ	
ບັດນີ້ເຈົ້າຈິງພາແມ່ດັ້ນ	ເດີນໜີແວນຣີບ	ເສັຽຖ້ອນ
ແມ່ກໍກິວແຕ່ສິນຄາມໜັກ	ເພີນເຊີງເອົາໄດ້	
ແບ່ປ້ານເສັຽໄຊເຈົ້າ	ຕົນດຽວອິດອ່ອນ	ເສັຽນັ້ນ
ຄັນວ່າເຂົາຍາດໄດ້	ຕົນເຈົ້າກໍສ່ວນຕາຍ	ແມ່ແລ້ວ
ຊາດທີ່ຖຸງຄາແກ້ງ	ທະເວຫຼວງນ້ຳໃຫ່ຽ	
ໃຜຫ່ອນເບັດໃສ່ກ້ອນ	ຫີນລ້ານບ່ອນເຜືອນ	ແມ່ເດ
ຄວນທີ່ເອົາຕົວເວັ້ນ	ໜີໄກແວນຊອບ	ດີດາຍ
ຄັນວ່ານັບຫາກເດີນດຸ່ງດັ້ນ	ນຳແທ້ຊ່າງເປັນ	ແມ່ຖ້ອນ
ອັນນີ້ຕັ້ງແມ່ນສາຣະພິດຮ້າຍ	ໃຜຫ່ອນສັບຫາ	ແມ່ເດ
ຊາດທີ່ແປວໄພເຮືອງ	ບໍ່ຫ່ອນເບືອງຝອນໄກ້	
ຮານີ້ເປັນດັ່ງປາເນົາຄ້າງ	ໃນໜອງເຂີນຂາດ	ນັ້ນແລ້ວ
ຄັນວ່ານ້ຳຂາດແຫ້ງ	ຕົນຊີຊົ້ນກໍບໍ່ມີ	ແມ່ແລ້ວ
ເມື່ອກນັ້ນບໍ່ຮີບທ້າວ	ສຸຣິວົງກອນກ່າວ	
ຂ້ອຍບໍ່ມີປ່ອນປ້ານ	ເຂົານັ້ນທໍ່ໄຍ	ແມ່ເອີຍ
ຊາດທີ່ເປັນພົງເຊື້ອ	ກະສັດຕາຍບິດໃຫ່ຽ	
ລື້ຊີຖອຍທີ່ ກເວັ້ນ	ສວາງເສື້ອສິງໃດ	ແມ່ເອີຍ
ຂ້ອຍນີ້ລູກສິດເຈົ້າ	ຮັດສີ ໃຫ່ຽທິງຫັນ	ແທ້ນາ
ຂ້ອຍບໍ່ກິວເກັງເຂົາ	ທໍ່ໄຍບອງນ້ອຍ	
ຄ້ອນວ່າແລ້ວ	ຮາຕີເຖິງຫ່ຽງ	ນາແລ້ວ

ຟັງຍິນຜີປ່າວຄ້ອງ ບານຕັ້ງຕື່ນກອງ
ທຸກປາກເວົ້າ ຕ້ານຕໍ່ສົມຄານ
ໂຍທາຫຼາຍ ບອກໃນເມືອງເຜົ້າ
ອັນວ່າທິສກັບທ້າວ ເນົາບອນເນຫເນັ້ງ
ພໍເມື່ອດາວເຣືອຂ້ອນ ບານຕັ້ງຕ່ອນກອງ
ຟັງຍິນເຄັ່ງໆກ້ອງ ກອງຄົວໃກ້ຮຸ່ງ ພຸ້ນເປີ
ຜີລັ່ນຄ້ອງ ເຕີນຕັ້ງແຕ່ງຕົວ
ພໍເມື່ອສຸນສິງຂຶ້ນ ພົ້ນໂລກໂລກາ ແລເປີ
ບາຄານລຸກ ອາບສີ ໃສງນໍ້າ
ຄັນວ່າບໍຣະບວນແລ້ວ ມາດາຕົກແຕ່ງ
ພາທິບຕັ້ງ ຮຽງທ້າວບໍ່ນານ
ທ້າວບໍ່ຊ້າ ສເວີຍໂພດພາທິບ
ບໍຣະບວນບາ ສ່ວຍມືເຊັດຜ້າ
(ມາດາມ້ຽນ ພາຄຳເຣວຮີບ
ສອງພໍ່າພ້ອມ ງາບແລ້ວປູ່ສງຽນ
ທ້າວກໍຄຶດຮ່ຳຮ້ອນ ເຖິງທີ່ສົມຄານ
ກໍຈື່ງຜາຍຄືງຄວນ ບ່າງໄປມີຊ້າ
ແບງທີ່ບັນລັງແກ້ວ ຊານມິນຫຼີງລ່ຳ
ທ້າວກໍປຸດປູ່ຍັ້ງ ຄອບປັ້ນເບິ່ງເຂົາ
ເມື່ອນັ້ນທິສກັບຂຶ້ນ ຫໍຄອບຫຼີງລ່ຳ
ມັນກໍເຫັນອ່ອນນ້ອຍ ບາທ້າວປູ່ດຽວ

ຄ້ອນວ່າມັນຮ່ຳແລ້ວ   ເດີນບອກໂບຫາ
ສູຈິງເດົາດາດິກ   ແຕ່ງເປືອງບາຊ້າ
ບັດນີ້ກູຈັກລອງສອນແກ້ວ   ທະນຸສິນໂກວແກວ່ງ   ໄປແລ້ວ
ໃຫ້ມັນນໍຣະນີງນຸ້ງ   ບານເຊົ້າກ່ອນງາບ   ແທ້ແລ້ວ
ຄ້ອນວ່າມັນກ່າວແລ້ວ   ຂຶ້ນກິງທະນູສິນ
ມັນກໍບໍ່ແບງບິງ   ແກວງໂກວດາງເປືອງ
ສຽງດັງກ້ອງ   ທໍຣະນີໄຫວຫວັ່ນ
ຄືດັ່ງຟ້າແຜດຮ້ອງ   ເມົາບ້າຫິວບິນ
ປືນສແວງເຕັ້ນ   ເຖິງບາໂມທີຣາດ
ເລີບເລົ່າເປັນດອກໄມ້   ບູຊາເຈົ້າເຮືອເຮືອງ
ເກີດເປັນບຸບຜາພ້ອມ   ມາລາທຽນຫູບ
ຫອມຫົວເທົ້າ   ສະຖານທ້າວບອດຊາຍ
ແຕ່ນັ້ນສຸຣິວົງທ້າວ   ບິນດີຊົມຊື່ນ
ກັບທັງເທວະຣາດເຈົ້າ   ບໍ່ບ້ອງຊື່ນດອນ
ກັບທັງມາດາແກ້ວ   ເທວ້ດີນແມ່
ນາງກໍຊົມຊື່ນບ້ອງ   ບຸນທ້າວມາກຫຼາຍ   ແທ້ແລ້ວ
ແມ່ນວ່າໃຜຈັກມາປອງຂ້າ   ເທົ້າອດີນແດນໂລກ   ເຮົານີ້
ບໍ່ອາດຫວັງເຮັດໄດ້   ບາທ້າວບອດຄຸນ   ງ່າຍແລ້ວ
ເມື່ອນັ້ນທິສກັບທ້າວ   ເພຍາພືບັກໃຫ່ງ
ມັນກໍເຫັນບອດແກ້ວ   ກຸມານນ້ອຍຢູ່ສະບາຍ
ອັນວ່າປືນຢຳທ້າວ   ກາບເປັນເຂົ້າຕອກ

ທັງດອກໄມ້ ບູຊາເຈົ້າເຮືອເຮືອງ ແທ້ແລ້ວ
ນັບກໍກົ່ວໂກດກ້າ ຂິນບຶງແສນຖບັດ
ສັ່ງວ່າເຕໂຊແຂງ ກ່ວາກູເປັນກະດໍ້
ນັບຫາກລືກູແລ້ວ ກຳກິງທະບູສິບ
ນັບກໍບໍແບງບິງ ຟັ່ງເຟືອນທັງຄ້າຍ
ຄືວັ່ງທໍຣະນີມ້າງ ປະຖະພີ ໄຫວຫວັ່ນ
ຝູງໝູ່ເທວະຣາດທ້າວ ເຣຣ້ອງຮ່ຳເຄືອງ
ປືນສແວງຂຶ້ນ ເມື້ອບິນເຄັ້ງຄື້ນ
ຄືດັ່ງຟ້າແຜດຮ້ອງ ລິມບ້າລ່ວງບິນ
ອັນວ່າສອນຂນາດກ້າ ບັກໃຫ່ງທິສກັນ
ເລີບເລົ້າເປັນຕາວຄັບ- ຄັ້ງມາພໍລ້ານ
ຟັງບິນສຽງໂຮ່ຮ້ອງ ກັບດານດາສນັ່ນ
ຜີຮ່ຳຄ້ອງ ທັງຊ້າຮ່ຳກອງ
ເມື້ອນັ້ນສຸຣິວົງທ້າວ ນານໝໍ່ໄພທິສັດ
(ເຈົ້າກໍມອງເມີນເຫັນ ເຫດການອັນຮ້າຍ)
ເລັ້ງເຫັນປືນຢຳທ້າວ ທິສກັບບັກໃຫ່ງ
ກໍຫາກດູຫາກແທ້ ບາທ້າວບໍ່ກິວ
ບຸຕຣາດທ້າວ ລະບຶກຮອດພິດີກ
ທ້າວກໍຣວາຍອາຄົມ ຖອດດາວກາງກັ້ງ
ອັນວ່າປືນຢຳທ້າວ ທິສກັບບັກໃຫ່ງ
ເລີບເລົ້າກັບກ່າຍແທ້ ຫາຍສ້ຽງປູ່ເປັນ

ບັກໃຫ່ງທ້າວ ກົ໊ວໂກດໂກທາ
ມັນກໍບໍໂກວກວັດ ແກວ່ງທະນູມືຊ້າ
ເຕໂຊທ້າວ ທິສກັບລືເດດ
ສອບເລົ່າເປັນຫອກງ້າວ ຫຼາຍເຫຼັ້ມໜື້ນດວງ
ເຄັງງກ້ອງ ເວຫາອາກາດ
ປືນສອດແສ້ວ ເຖິງທ້າວບໍ່ນານ
ເມືອບັ້ນສຸຣິວົງນ້ອຍ ບຸນເຮືອງໂພທິຣາດ
ທ້າວບໍ່ຊ້ຳ ບໍ່ງ້າວແກວ່ງໂກວ
ເຕໂຊງ້າວ ດວງພະຂັນລືເດດ
ແສງນາບເຫຼື້ອມ ກົງແກ້ວນາບເມືອງ
ເຕໂຊງ້າວ ດວງພະຂັນບັງເກີດ
ສຽງຄື້ນເຄົ້າ ລົມບ້າຟາດຕີ
ອາຄົມແກ້ວ ວາໂບກວັດແກວ່ງ
ເລີຍຫອບອູ້ມ ປີ້ວເປືອງເປົ່ງໄປ
ອັນວ່າປືນປໍາທ້າວ ທິສກັບເທີບສວ່າງ
ກັບກ່າຍແທ້ ຫາຍສ້ຽງບໍຫຼໍ
ອັນວ່າວາໂບແກ້ວ ດວງພະຂັນເປືອງເປົ້ງ ໄປແລ້ວ
ຝູງໝູ່ໄມ້ ຫັກລົ້ມລ່າວໄປ
ໂຫງງກ້ອງ ລົມຟາດຕີວຽງ ພຸ້ນເປີ
ເພພັງຫັກ ມຸ່ນກະຈວນທະລາຍມ້າງ
ຝູງໝູ່ໂບທາທ້າວ ຄາງຕາຍໜາວສັ່ນ

ເຂົາກໍ່ເຊວຊວ່າຮ້ອງ ທັງຄ້ານຟັ່ງເຟືອນ
ແຕ່ນັ້ນທິສກັນທ້າວ ຣາຊາຟ້າວຟັ່ງ
ມັນກໍ່ຮີບເປົ່າແກ້ ອາຄົມທ້າວລວດຫານ
ທິສກັນທ້າວ ໂກທາກື້ວໂກດ
ສັງວ່າເດັກຂີ້ຮ້າຍ ມາອ້າງໂອດສາຫາວ ນີ້ເດ
ບັດນີ້ກູຈັກກຳຕາວກ້າ ທະຍານໄປຟັນຜ່າ
ກູຈັກເຂົ້າຕໍ່ງ້າວ ມັນນັ້ນບໍ່ຍອມ ງ່າຍແລ້ວ
ແຕ່ນັ້ນຟ້າເກື້ອນທ້າວ ເປັນຣາດພຍາຜີ
ມັນກໍ່ເດີນໂຍທາ ພ່ຳມວນມາພ້ອມ
ຫຼາຍພຍາເຈົ້າ ຈາກກັນຫຼາຍສິງ
(ກໍ່ຫາກຫຼາຍຜູ້ເວົ້າ ຄຳກ້າກ່າວຫານ
ທຸກປາກພ້ອມ ຂັນຂຶ້ນບາຄານ
ຍວດທໍ່ເຊີງຊາຍໃຜ ວ່ານັ້ນເປັນກະດີ້)
ບັດນີ້ເຮົາຈັກຟັນເອົາຫົວຊາຍນ້ອຍ ມາຮອງຕາງຕັ້ງ
ໃຫ້ມັນດັບຊາດມ້ຽນ ວັນນີ້ສວ່າງກໍ່ໃຈ ຫັ້ນຖ້ອນ
ແຕ່ນັ້ນຣາຊາທ້າວ ຫຼາຍພຍາມີມາກ
ເຂົາກໍ່ໂດຍອາດເຈົ້າ ປຸນເປື້ອງທ່ຽວເປືອງ
ທຸກທ່ອນທ້າວ ຄາດເຄື່ອງສົມຄານ
ໂຍທາຫຼາຍ ຊູ່ຄົນຫານຫ້ານ
ເມື່ອນັ້ນທິສກັນທ້າວ ພຍາຜີບັກໃຫ່ຽ
ມັນກໍ່ຂັດດາບກ້າ ທະນູແກ້ວບໍ່ວາງ

24 / VII
ຫ້າມຈຳໜ່າຍ

ມັນກໍເຫາະຫອບເຕັ້ນ   ທະຍານລ່ວງເວຫາ
ມັນກໍຖືງດາວກວັດ-   ແກວ່ງໄກວພລຽງເຫຼື້ອມ
ອັນວ່າໃບທາກ້າ   ພຍາຜີຫຼາຍໝູ່
ເຂົາກໍຍາບໆຂື້ນ   ທະຍານລ້ຳລ່ວງຕາມ
ຫຼືງດູແທ້   ຫຼາຍພຍາທະຍານລ່ວງ
ດູນາກລົ້ນ   ເຫຼືອລ້ຳຫຼາກກໍຕາ
ຫຼືງດູແສງດາວກ້າ   ທິສກັບເມືອງນາບ   ພຸ້ນເປີ
ນີ້ແຕ່ຜີເບືອກຟ້ອນ   ຄືງງ້າວແກວ່ງໄກວ
ມັນກໍທຳເດດກ້າ   ຕັ້ງປູ່ກາງຫາວ
ເຕັງໆສຽງ   ກ່າວຈາຈິງຕ້ານ
ນາເປີບາຣາມນ້ອຍ   ສຸຣິວົງຄົບຖ່ອຍ   ນາເປີ
ນຶງຈົ່ງນາຕໍ່ງ້າວ   ກູພີ້ຍ່ານາບ   ຫ່ງວເຖີ້ນ
ອວດວ່າເຊີງດາວກ້າ   ທະຍານມາຣົບຕໍ່   ກັບພີ້
ກູຈັກຟັນມອດມ້ຽນ   ວັນນີ້ບໍ່ສົງ   ແທ້ແລ້ວ
ນຶງຈົ່ງວາງນາງແກ້ວ   ນາດາຕົນແມ່   ນຶງນັ້ນ
ໄວ້ທີ່ຍາສາດແກ້ວ   ກູຈິເຂົ້າຍາດເອົາ   ເກ່ານເອີຍ
ເມື່ອນັ້ນໂພທິຍານເຈົ້າ   ສຸຣິວົງນ້ອຍອ່ອນ
ພຣະໄດ້ຍິນພາກຖ່ອຍ   ສຽງເອີ້ນແຫ່ງຜີ
ເຂົາກໍແຊວງຮ້ອງ   ຫາບານວນນີ້
ຊູ່ຕົວຊູ່ກ່າວຕ້ານ   ຫານເຂົ້າຕໍ່ດາວ   ຫັ້ນແລ້ວ
ແຕ່ນັ້ນສຸຣິວົງທ້າວ   ຄະນຶງໃຈຈິງນາກ

ເມື່ອຈັກວາງແມ່ໄວ້ ທາງພົ້ນກໍເລົ່າກົວ ແທ້ແລ້ວ
ເຈົ້າກໍດ້ານສັ່ງເທພໄທ້ ເທວະຣາດຄູຫາ
ຂໍໃຫ້ຮັກສາມາດາ ຊ່ອຍປອງທາງພົ້ນ
ຈິ່ງໃຫ້ແມນນຳແທ້ ຝູງນາງພາຍລຸ່ມ
ໃຫ້ະເຈົ້າແຂງຂືນໄວ້ ພາຍພົ້ນຊ່ອຍອວນ ແດ່ຖ້ອນ
ຄ້ອນວ່າທ້າວກ່າວແລ້ວ ເທວະຣາດພອຍຂານ
ເຈົ້າຢ່າເຄືອງແຄນສັງ ທີ່ໄບ້ຍ້ອງນ້ອຍ
ຂ້ອຍຈັກອາສາຄ້ຳ ທໍຣະນີພາຍລຸ່ມ
ບໍ່ມີໃຫ້ເດືອດຮ້ອນ ຈອມເຈົ້າເບື່ອງໃດ ເຈົ້າ (
ແຕ່ນັ້ນທ້າວອ່ວຍໜ້າ ສັ່ງແມ່ມາດາ
ເຈົ້າຈິ່ງເບືອງຫຼຽນຕີດ ເບີກພລີຊູຄ້ຳ
ບັດນີ້ກູຈັກພາຍວິນຂຶ້ນ ເວຫາສູ້ດາບ ພາຍພຸ້ນ
ແມ່ຈິ່ງນອນປູ່ຫ້ອງ ທໍແກ້ວຜໍ່ຄອຍ ນັ້ນຖ້ອນ
ຄ້ອນວ່າທ້າວສັ່ງແລ້ວ ຄາດເຄື່ອງສົມຄາມ
ອາຊະໄນຫຼຽນ - ແທບເກີບຮຽງຮ້ານ
ເທວະດາໄທ້ ດາດີຄາດເຄື່ອງ
ໜອບໃສ່ແລ້ວ ອານທ້າງເຄື່ອງຄຳ
ອັນວ່າດາວຄຳແກ້ວ ມະນີໂຊໃສສ່ອງ
ມາບໆເທົ້ງອມ ແສງເປື້ອງເປົ້າເປືອງ
ຟັງບິນສຽງດັງກ້ອງ ອາຊະໄນແຊນທີ່ງ
ມ້າກໍທີ່ຣະແທ່ນຮ້ອງ ສຽງທ້າວທົ່ວບິນ

ຄ້ອນວ່າຄາດເຄືອງແລ້ວ ທ້າວເລົ່າລີລາ
ທັງອາຊະໄນ ປ່ອງເຊີງຊໍາເຕັ້ນ
ທ້າວກໍພາຍຄໍາຕ້ານ ອາຊະໄນກອບກ່າວ
ເທື່ອນີ້ຮາຈິງຂຶ້ນຕໍ່ງ້າວ ສວາງເສືອຊາດມັນ ພີ່ເອີຍ
ຄ້ອນວ່າທ້າວກ່າວແລ້ວ ນະນີກາບຕິວດີ
ພາທະຍານພາຍ ເຜັ້ນໄປມີຊ້າ
ບໍຣິນທ້າວ ທະນູທອງຫຼຽນນາດ
ທ້າວກໍຖອດດາບກ້າ ກໍາດ້າແກວ່ງໄກວ
ແສງດາບກ້າ ຣາງເຊັ່ງເມືອງມານ
ມ້າບໍ່ຍັ້ງ ທະຍານລ້າລ່ວງໄປ
ອັນວ່າຣິດເດດງ້າວ ດວງພະຂັນໄກວແກວ່ງ
ເປັນແຕ່ແສງສອດແສ້ວ ກຸມກົ້ງວທົ່ວແດນ
ທີ່ນັ້ນຜີຂາມຢ້ານ ແສງດາວພູວະນາດ
ເຂົາກໍທັກໂຄນຄ້ານ ບໍ່ມີເອື້ອອ່າວຄອບ
ເຂົາກໍສິນສວ່ານເຕັ້ນ ທະຍານໜີທົ່ງບທົ່ງກ
ເຂົາປູ່ບໍ່ໄດ້ ກົວປ້ານພ່າຍພັງ
ອັນວ່າທິສກັນຜູ້ ຣາຊາບັກໃຫຍ່
ມັນກໍກົວເດດກ້າ ທະຍານລ້າລ່າງໄປ
ກຸມານນ້ອຍ ສຸຣິວົງເລີບໄລ່ ໄປແລ້ວ
ທ້າວກໍຊັກແຄ່ນມ້າ ມະນີແກ້ວລ່ວງຕາມ
ເມື່ອນັ້ນໄຂໄນຜູ້ ພຍານີເຫັນຫຼາກ

ດູດັ່ງພົບແຕກມ້າງ ຄືນໍ້າບ່າຝາຍ
ອັນວ່າໄພທາທ້າວ ພຍາຜີຫຼາຍໝູ່
ເຂົາບໍ່ຊ້າ ຄືນເຂົ້າສູ່ວຽງ
ແຕ່ນັ້ນໄພທີຣາດທ້າວ ເຈົ້າອ່ອນສຸຣິວົງ
ເຫັນພົບຜີ ຜ່າຍຄືນໝົດສ້ຽງ
ທ້າວກໍຊັກອ່ວຍມ້າ ຄືນແທ້ບໍ່ນານ
ທ້າວກໍເຂົ້າສູ່ຫ້ອງ ຜາສາດຫໍຄໍາ
ນໍາເຂົ້າອາຊະໄນ ຈອດເກີບຮຽງຮ້ານ
ສຸຣິວົງນ້ອຍ ກູມານແກ້ເຄື່ອງ
ທ້າວກໍໂສງໃສດນ້ຳ ຫາຍຮ້ອນສວ່າງໃຈ ແທ້ແລ້ວ
ບັດຈັກກ່າວເຖິງໂຂໃບທ້າວ ກັບດາບກື່ວໂກດ
ມັນກໍກໍາດາບກ້າ ທະນູແກ້ວກົ່ງກາງ
ມັນກາກລືກູແລ້ວ ອາຄົມສິນຕະສາດ
ສັ່ງວ່ານາຜ່າຍໂຕຂຽດໄມ້ ຄືນເຂົ້າສູ່ວຽງ ນີ້ເດ
ແຕ່ນັ້ນມັນກໍທໍາຣິດທີໃຫ້ ຕົວທີ່ພູເຂົາ
ເອີ ຂອນບາງ ໃສ່ຫູດາງດ້າງ
ເນື່ອງໆເຫື້ອນ ໂຂໃບບັກໃຫ່ງ
ແຂນມັນນີ້ແປດກ້າ ລີລ້າຍແກວ່ງໂກວ
ມືນຶ່ງຫວາຍທົງນ້າວ ທະນູທອງໂກວແກວ່ງ
ມືນຶ່ງຈັບດາບກ້າ ລາຟ້ອນໂຂວຂີນ
ມືນຶ່ງຖືກະບອງເພັດພ້ອມ ທັງທວນຟ້ອນປ່າຍ

ແຂນມັນມີແປດເບື້ອງ ທະນູກ້າຄູ່ມື
ອັນວ່າຟ້າຮວ່ານເກ້າ ລື່ເດດທົ່ງອຶດທີ
ມັນກໍມີຫົກຫົວ ປູ່ສລອນລຽນຕັ້ງ
ມືນັ້ນສາມສິບສອງກ້ຳ ກຳທະນູກັບດາບ
ມັນກໍຄືງແກວ່ງຟ້ອນ ດາວກ້າຄູ່ມື
ອັນວ່າເສນາທ້າວ ພົນມັນຫຼາຍໝູ່ ຈິ່ງແລ້ວ
ເຂົາກໍທຳເດດໃຫ້ ເປັນແຫ້ວຊູ່ຄົນ
ລາງພ່ອງຫົງກເອົາຕົ້ນ ບຸງຍາງລຳໃຫຍ່
ທັດເກດເກົ້າ ເພື່ອຍຟ້ອນກ່າວຫານ
ເຂົາກໍສັກຄະໂບງເຕັ້ນ ບຳດິນຕາມໄຕ່ ໄປແລ້ວ
ລາງພ່ອງຫົງກຕົ້ນພ້າວ ຕານຟ້ອນແກວ່ງໄປ
ອັນວ່າພົນຫານທ້າວ ທິສກັນມີມາກ ຈິ່ງແລ້ວ
ເຂົາກໍໃຊ້ຖືບດັ້ນ ທັນທ້າວຊູ່ພາຍ
ອັນວ່າທິສກັນທ້າວ ຣາຊາພຍາໃຫຍ່
ຣົ້ມກິ່ງກົ້ງ ຕົນທ້າວປູ່ກາງ
ຄ້ອນວ່າໂຣມພົນແລ້ວ ສັນຍາເດີນປ່າວ
ຜີລັ້ນຄ້ອງ ທັ້ງຊ້ຳຕ່ອຍກອງ
ເຄັງງພື້ນ ພົນແຜນໄຫຼອອກ ໄປແລ້ວ
ຄັນຄັ່ງເຫົ້າ ປະຕູກ້ວາງອອກວຽງ ແລະເປີ
ຝູງໝູ່ທາງຕົນນັ້ນ ຖືລາກັບຫອກ
ກັບທັ້ງສີນາດກ້ອງ ທະນູໜ້າເຫວີດດາວ

ອັນວ່າທາງບິນນັ້ນ ພຍານິທານຫມູ່
ເຂົາກໍເຫາະຫອບຜ້າຍ ທະຍານລ້ຳລ່ອງບິນ
ບົດງບ້າຍ ອາກາດເວຫາ
ທົ່ງດູແສງດາວເຮືອງ ຄັ່ງບິນເທົ່ອງເທົ່ອມ
ເມື່ອນັ້ນສຸຣິວົງນ້ອຍ ຄອຍດູທົ່ງລ່ຳ
ທ້າວກໍເຫັນທາກແທ້ ນີຣ້າຍເລື່ອນມາ
ຟັງບິນເຄັງງຮ້ອງ ທາງດິນໃບງປີບ ມາແລ້ວ
ເໜືອນຈັກຫຼຸບທົ່ມຟື້ນ ບັງພື້ນແຜ່ນດິນ
ທົ່ງດູພາຍບິນພຸ້ນ ເວຫາມືວມືດ
ດື່ດັ່ງຈັກເປ່ນ້າງ ຄວງຟ້າລັ່ນລິງ ແທ້ແລ້ວ
ແຕ່ນັ້ນສຸຣິເວດທ້າວ ຄະນຶງປູ່ຫີນຫວຍ
ເມື່ອຈັກໄປທາງບິນ ກໍເລົ່າວາງທາງພື້ນ
ກົວແຕ່ຈັກເສັ້ງແກ້ວ ມາດາດິນແມ່
ຢ້ານແຕ່ຜີຍາດໄດ້ ເອົາແກ້ວແມ່ດິນ ບໍ່ຮູ້
ຄ້ອມວ່າເຈົ້າຮ່ຳແລ້ວ ຕ້ານຕໍ່ອາຊະໄນ
ບັດນີ້ເຮົາຈັກທຳປະການໃດ ຈົ່ງຈຶດວນເດເຈົ້າ?
ເມື່ອວ່າເຮົາຈັກວາງສອນແກ້ວ ຜົງຫຼຸລິເປັນຝຸ່ນ ໄປນັ້ນ
ກົວແຕ່ຜີສ່ຳໃບ້ ເຂົາຈິມ້ວຍມອດຕາຍ ບໍ່ຮູ້
ເມື່ອນັ້ນອັດສາມ້າ ອາຊະໄນມະນີກາບ
ກໍຈຶ່ງໄຂປາກຕ້ານ ຈາທ້າວຊູ່ອັນ
ເທື່ອນີ້ທ້າວຈິ່ງບໍ່ບັງງ້າວ ດວງພຣະຂັນໄກວແກວ່ງ ໄປເທີ້ນ

ຫ້ເຂົາຕົກຂະນະປ້ານ ຜີຮ້າຍຜ່າຍໜີ ຫັ້ນຖ້ອນ
ອ້ອມວ່າມ້າກ່າວແລ້ວ ທ້າວອ່ານອາຄົມ
ງາຄາບຖົກ ຖອດດາວໄກວເບື້ອງ
ະແສງດາບຕ້ອງ ຜີສວາງເມືອງມາບ
ດັ່ງຟ້າຜ່າໄມ້ ກຸມກົ້ງວສວ່າງແສງ
ຟັງບິນແຊວງເບື້ອງ ທາງຕຶງເຟອບຟັ່ງ
ຂົາກໍຄ້ານບໍ່ໄດ້ ແສງງ້າວພ່າຍພັງ
ແຕ່ນັ້ນຣາຊາທ້າວ ພຍາຜີຫາຍໜູ່
ຂົາກໍເຫັນຟ່າຍເບື້ອງ ພົງກ້າໂຄບຄືນ
ຂົາກໍກື້ວໂກດກ້າ ຂົມຍິງປານໄຟ
ຊັງວ່າທາງດີນຫັກ ພ່າຍຄືນບໍ່ມີເອື້ອ
ອ້ອມວ່າແລ້ວ ເຂົ້າປ່ອຍທະນູສິນ
ນໍແສນດວງ ພາບກັບເຟືອນຟື້ນ
ຄັ້ງງກ້ອງ ເວຫາະຄັງຄຶ້ນ
ດັ່ງຟ້າແຜດຮ້ອງ ລົມບ້າລ່ວງບິນ
ປັນສແວງເຂົ້າ ທາບາໂພທິຣາດ
ລີບເກີດເປັນດອກໄມ້ ລະອອງຟົ້ງກິ່ນຫອມ
ປັນແຕ່ມາລາລ້ວນ ຫຼຸບຄໍາເຮືອງເຮືອ
ອະບັບຜກລົ້ນ ບູຊາເຈົ້າທົ່ວໂຮງ
ະແຕ່ນັ້ນເທພາດ້າວ ໂມທະນາຊົມຊື່ນ
ກັບທັງພຣະແມ່ເຈົ້າ ຈອມໃທ້ຊື່ນບານ

ບັງແຕ່ປີ້ນບາທ້າວ	ໂຂໂບບັກໃຫຍ່	
ບັງເກີດເປັນຫອກງ້າວ	ພໍລ້ານລັ້ງລິງ	
ປີ້ນກໍຜາຍໆອ້ອມ	ບາຄານນ້ອຍອ່ອນ	
ເປັນດັ່ງບ້າສວ່ານກ້ອນ	ວັງເຫວົ້າຫວ່າງຫີນ	ບັ້ນແລ້ວ
ອັນວ່ານາມໜໍ່ເນື້ອ	ບັ້ງປູ່ກາງກະແສ	
ບານເນື້ອອາໄປພັດ	ບໍ່ຕີງເພື່ອນຟັ້ງ	
ຟັງບິນສຽງໃຮເປື້ອງ	ໂຂໂບເອົ້າອືບ	ມາແລ້ວ
ຝູງໝູ່ຜີເຫຼົ້າອົມເຂົ້າ	ມາໃກ້ຈົມຈິບ	
ເມື່ອນັ້ນສຸຣິວົງທ້າວ	ຫຼີງລ່ຳຝູງຜີ	
ດູດັ່ງສິນຄາມໜັກ	ເກື່ອນມາຈິບໃກ້	
ແຕ່ນັ້ນນໍຣິນທ້າວ	ສຸຣິວົງນາມໜໍ່	
ເຈົ້າກໍກົ້ວໂກດກ້າ	ຄໍາຮ້າຍດ່ວນໄວ	
ທ້າວກໍຫວາຍຫີງແກ້ວ	ທະນູທອງນ້າວກົ້ງ	
ໄກວແກວ່ງເຫຼົ້ອມ	ດວງແກ້ວແຫ່ງສອນ	
ເຈົ້າກໍບໍ່ແນງຊື້	ໂຂໂບຜລຽງຜ່າ	ໄປແລ້ວ
ຕີດັ່ງຟ້າກະເດື່ອງຂວ້ຳ	ລີງແຫ້ບໍ່ນານ	
ເມື່ອນັ້ນທິສກັນທ້າວ	ທະບານລີງເຮວຣີບ	
ມັນກໍຈັບຕໍ່ໃຫ້	ຄືນແຫ້ບໍ່ນານ	
ອັນວ່າບັກໃຫຍ່ຜູ້	ຕົວຊື່ໂຂໂບ	
ມັນກໍໄງເງລຸກ	ຣີບທະບານມີຊ້ຳ	
ໂຂໂບທ້າວ	ກຳຕາວໄກວແກວ່ງ	

ັບກໍປຸດປ່ອນປ້ານ ຄອບປຸ້ມແຕ່ໄກ
ັບວ່າອາສາທ້າວ ຄິບດີຟ້າເກື້ອນ
ັບກໍເຕົ້າໝູ່ເຂົ້າ ຫາທ້າວບໍ່ນານ
ຂົາກໍບາບໆບ້າບ ພ້ອນດາບສິບໆ
ທືຄັບ ຄັ່ງມາປານນ້ຳ
ຕ່ນັ້ນບໍ່ອຶນທ້າວ ບໍທະນູໄກວແກວ່ງ
ດັ່ງຟ້າແຜດຮ້ອງ ເດືອນຫ້າເມື້ອຝົນ
ນສແວງເຂົ້າ ຄຸງບາຟ້າເກື້ອນ
ັບກໍເຊທ່າວລົ້ມ ຫົວກິ້ງເກືອກລິງ
ອ້ອນນັ້ນທິສກັບຜູ້ ບັກໃຫ່ງກັບດາບ
ັບກໍຄວາມືຈັບ ຮັບເອົາມືຊ້າ
ັບກໍບາບຫົວໄດ້ ມາຕາມຕິດຕໍ່
ນເປົ່າແລ້ວ ບາທ້າວລອດຄືບ ແທ້ແລ້ວ
ຕ່ນັ້ນຟ້າເກື້ອນທ້າວ ທະບານປູ່ແວນໄກ
ແຕ່ບໍ່ຕາວກວັດ ແກວ່ງໄກເຟື້ອນພ້ອນ
ຕ່ນັ້ນຟ້າແສດທ້າວ ກົ້ວໄກດໄກທາ
າແດງປານ ດັ່ງໄຟຕາມໄດ້
ັບກໍທະບານດິນເຕັ້ນ ເວຫາເຫາະຫອບ ມາແລ້ວ
ັບກໍຈັດເຂົ້າໃກ້ ບາທ້າວຈົ້ມຈົບ
ອ້ອນນັ້ນສຸຣິວົງທ້າວ ຄອບດູທີ່ງລ່ຳ
ທັບເຜົ່າຜູ້ ຜີຮ້າຍບຸດຈົບ

ແຕ່ນັ້ນທ້າວບໍ່ຊ້າ ເປື້ອງແກວ່ງທະນູສິນ
ຄືດັ່ງພູຜາຫັກ ເກືອນເພທັງຄ້າຍ
ປີນສແວງດັ້ນ ເຖິງບາຟ້າແສດ
ຄຳຂາດມຸ້ງນ ຫົວກິ້ງເກືອນລິງ
ເມື່ອນັ້ນທິສກັນທ້າວ ທະຍານລີງເຣວຣີບ
ບາຍເອົາຫົວຕໍ່ໃຫ້ ຄືນແທ້ບໍ່ນານ
ແຕ່ນັ້ນຟ້າແສດທ້າວ ທະຍານຫຼີກແວນໄກ
ມັນກໍເຟືອບໆແຂນ ແກວ່ງດາວຄືງຟ້ອນ
ເມື່ອນັ້ນຫັນປຳທ້າວ ຄືນດີຟ້າຣວ່ານ
ມັນກໍເຫັນເດດກ້າ ສອນທ້າວເບືອກກົວ
ບັງແຕ່ທິສກັນທ້າວ ຣາຊາພຍາໃຫ່ຽ
ມັນກໍເອີ້ນຮຽກຮ້ອງ ຫາທ້າວທ່ຽວເປືອງ
ນາເປີ ສຣີວົງນ້ອຍ ນາຊູອີບຕໍ່ ພູເຖົ້າ:
ໂອດວ່າດີ່ຂບາດກ້າ ນາສູ້ຕໍ່ພູ ທ່ຽວຖ້ອ:
ນຶງຈິງເອົາຕີນຂຶ້ນ ຫາກູຟັນດາບ
ຢ່າໄດ້ຊ້າ ດຽວນີ້ທ່ຽວເປືອງ ທ່ານເອີ
ເມື່ອນັ້ນກຸມານນ້ອຍ ໂກຫານີມາກ
ທ້າວກໍຊິກຂຶ້ນມ້າ ທະນູແກ້ວແຫບຫຽນ
ທ້າວກໍກຳດາວຟ້ອນ ຫຼັງອານໄກວແກວ່ງ
ຄືດັ່ງຟ້າມາບເຫຼື້ອມ ຍາມແລ້ງເມື່ອແລງ ຫັ້ນແລ້:
ອັນວ່າເທວະດາເຈົ້າ ຄູຫາຫຼີງລ່ຳ

ເຈົ້າກໍຂຶ້ນຜໍ່ປຸ້ມ　　ບາທ້າວແກວ່ງດາວ
ກັບທັງນາດາແກ້ວ　　ເຫວີດິນແມ່　　ບານັ້ນ
ບາງກໍບິບນອບນົ້ວ　　ຕາມໄຕ້ເນີກພລີ
ບັດນີ້ ຂ້າກໍຂໍວອນໄຫວ້　　ອິນພົມຊູຊ່ອຍ　　ປາງນັ້ນ
ຂໍໃຫ້ມາຊ່ອຍຄ້ຳ　　ບານ້ອຍຜາບຜີ　　ແດ່ຖ້ອນ
ກັບທັງພຣະປຸເຈົ້າ　　ຮັກສາເຂດຝັງຈານ　　ທີ່ພຸ້ນ
ຂໍໃຫ້ມາຊູຫານ　　ຜາບມານທັງຄ້າຍ
ຂໍໃຫ້ມີໄຊແຜ້　　ຕໍໄຊແຂງຂຶ້ມຈິງເຖິ້ງ
ຂໍໃຫ້ລຸລາບແພ້　　ມານຮ້າຍອ່ອນໂຍນ　　ແດ່ຖ້ອນ
ຄັນວ່ານາງກ່າວແລ້ວ　　ເລີບລ່ຳກອບດູ
ດາແລນຳ　　ລູກດິນກາຍກະດ້າງ
ອາຊະໄນແກ້ວ　　ສບອງໄປເຮວຮີບ
ທ້າວບໍ່ຊ້າ　　ບໍງ້າວຜ່າພລຽງ
ທິສກັບທ້າວ　　ບໍດາວຮັບຮໍ່
ແສງດາບກ້າ　　ກຸມກ້ຽວທໍ່ກັບ
ແຕ່ນັ້ນບັກໃຫຍ່ທ້າວ　　ຟ້າເກືອບມືກົວ
ມັນກໍກຳດາວຜັນ　　ເຂົ້າໄປຈິບໃກ້
ແຕ່ນັ້ນບໍຮິບທ້າວ　　ບໍພຣະຂັ້ນໂກວແກວ່ງ
ແສງສອດແສ້ວ　　ກຸມກ້ຽວແມ່ນຄໍ
ບັກໃຫຍ່ທ້າວ　　ລົ້ມທ່າວທັງປືນ
ຫົວສະເດນດິກ　　ຫຼຸດລົງວາງເນື້ອ

ມັນກໍເຣຣິບຟ້າວ	ຫາຫົວເຣວຣີບ
ພໍເມື່ອຄຸບໄດ້ແລ້ວ	ເອົາຕັ້ງຕໍ່ຄືນ
ແຕ່ນັ້ນບັກໃຫຍ່ທ້າວ	ຫຼົບ ຫຼີກແວບເບືອງ
ບາກໍຜັນລວາແຖມ	ໄລ່ນຳມີຊ້າ
ເມື່ອນັ້ນໂຍທາທ້າວ	ພົນມານຫຼາຍໝູ່
ເຂົາກໍເຫັນເຜົ້າຜູ້	ກັບດານທ້າວຜ່າຍຄືນ
ແຕ່ນັ້ນໂຂໂບພ້ອນ	ພຍາຜີຫຼາຍໝູ່
ເຂົາກໍປົບແລ່ນເຕັ້ນ	ໄປແທ້ຟັງເພື່ອນ
ແຕ່ນັ້ນກຸມານນ້ອຍ	ບໍທະນູເປື້ອງແກວ່ງ
ປືນໄຕ່ຕ້ອງ	ຕາມສົ້ນໄລ່ນຳ
ຫຼີງໆເຫັນໂຍທາຝັ້ງ	ເປັນກະຈວນຫຼາຍໝູ່
ເຂົາກໍຫຼົບ ຫຼີກເວັ້ນ	ນີແທ້ຊູ່ຄືນ
ຄັນວ່າພໍປະມານແລ້ວ	ບາຄານເຊົາປູ່
ສອນເລົ້າຫຼົບຕ່າວປົ້ນ	ຫາທ້າວບໍ່ນານ
ເມື່ອນັ້ນບຸດຣາດນ້ອຍ	ເຈົ້າອ່ອນສຸຣິວົງ
ມີຄວາຈັບ	ຣັບເອົາມີຊ້າ
ເຈົ້າໜໍ່ຟ້າ	ລົງສູ່ປາງຫອງ
(ເນົາຫໍປາງ	ຣ່ວມມາດາແກ້ວ
ອາຊະໄນມ້າ	ເຊົາແຮງພັກເມື່ອຍ
ອັນວ່າເທເວດເຈົ້າ	ຫົວຫ້ອນຊື່ນຊົມ ແທ້ແລ້ວ
ແຕ່ນັ້ນຝູງສ່ຳເສືອ	ບັກໃຫຍ່ກັບດານ

ກົວຕາຍປົບ　　　ຜ່າຍບາທັງຟ້າວ
ຄັນວ່າພໍຄາວແລ້ວ　　　ດາກັບໂຮມໃພ່
ພໍວ່າໝົດຖ້ວນໄດ້　　　ຄືນຕັ້ງຕໍ່ເຮວ
ທົສກັບທ້າວ　　　ໂກທານີມາກ
ສັງວ່າເດັກດັ່ງໃນ້　　　ມາຮູ້ກວ່າເຮົາ　　　ນີ້ເດ
ກູນີ້ຕັ້ງວ່າຫັ້ນນະຊາດເຊື້ອ　　　ເປັນເອກນະຄອນຜີ　　　ແທ້ດາຍ
ຊາດທີເຊີງຟັນຕາວ　　　ກໍ່ວ່າກູເປັນຕົ້ນ
ຄ້ອນກ່າວແລ້ວ　　　ເຂົາຮີບທະຍານໄປ
ແບງຄູຫາ　　　ຈີ່ມຈົບປາງແກ້ວ
ເມື່ອນັ້ນສຸຣິວົງທ້າວ　　　ບາຄານຫົງລ່ຳ
ເຂົານີ້ຕັ້ງວ່າຕາຍບໍ່ແລ້ວ　　　ຄືນຕັ້ງຕໍ່ກູ　　　ແທ້ນໍ
ຄ້ອນວ່າທ້າວຮ່ຳແລ້ວ　　　ເອີ້ນກ່າວຄຳຄວນ
(ສູຫາກມີປະສົງສັງ　　　ຈົ່ງປາກຕາຍຈົ່ງແທ້
ປ່ຽວວ່າຊີວັງນັ້ນ　　　ຄວນແພງຮັກນຶ່ງ　　　ສູເອີຍ)
ສູປ່ານາຕໍ່ງ້າວ　　　ກູທ້ອນສ່ວນຈິຕາຍ　　　ແທ້ແລ້ວ
ໃຫ້ສູຄືນເມືອສ້າງ　　　ນະຄອນຜີເມືອງໃຫຍ່　　　ສູຖ້ອນ
ຢ່າໄດ້ມາຊຸ້ນຊ້ຽວ　　　ເຊີງຮ້າຍບໍ່ດີ　　　ທ່ານ ອີຍ
ຄ້ອນວ່າທ້າວກ່າວແລ້ວ　　　ຍັກໃຫຍ່ນີກົວ
ມັນກໍກຳຕາວພາຍ　　　ເພັ້ນມາຈົບໃກ້
ແຕ່ນັ້ນສຸຣິວົງນ້າວ　　　ກາຍສູບສັບສອດ
ທ້າວກໍໂກວແກວ່ງເປື້ອງ　　　ທະນູແກ້ວຜ່າພຽງ

ເຄັ່ງໆກ້ອງ	ຄຸຫາເພື່ອນພັ້ງ	
ຄືດັ່ງຟ້າກະເດື່ອງຂວ້າ	ເທວະທ້າວຕື່ນຣິບ	
ອັນວ່າສອນຂນາດກ້າ	ຮຽກຊື່ກາບສູບ	
ຄືດັ່ງຂວັນແສນດວງ	ຜ່າລິງລຳໄມ້	
ເລີບເລົ້າຜິງຫຸລີ້ມ້າງ	ກັນດານເປັນບ່ອບ	ໄປແລ້ວ
ອັນວ່າຫົວຂາດກິ້ງ	ໄປເ ທ້ທົວພູ	
ທິສກັນທ້າວ	ຄວານຳເລີບບໍ່ຈວບ	
ເພາະວ່າຫົວແລ່ນກິ້ງ	ໄປແທ້ບໍ່ເຊົາ	ຫັ້ນແລ້ວ
ເມື່ອນັ້ນອັດສາມ້າ	ອາຊະໄນເຣວຣີບ	
ເທາະຫອບເຕັ້ນ	ທະຍານລ້າລ່ວງຕາມ	
ຕີນເຕະຕ້ອງ	ຫົວນາງເລີບແຕກ	ໄປແລ້ວ
ຫົວກໍເລີບແລ່ນກິ້ງ	ໄປເລື້ອຍບໍ່ເຊົາ	
ອັດສາມ້າ	ອາຊະໄນເຣວຣີບ	
ເທາະຫອບເຕັ້ນ	ທະຍານລ້າລ່ວງຕາມ	
ຕີນເຕະຕ້ອງ	ສອງທີຊ້ຳຕື່ມ	
ຫົວແລ່ນກິ້ງ	ເຖິງຫັ້ນເກືອກລິງ	
ແຕ່ນັ້ນອັດສາມ້າ	ທະຍານນຳນີປ່ອນ	
ຕີນດີດຊ້ຳ	ຫົວກິ້ງດັ່ງລູກຄີ	
ແຕ່ນັ້ນສອນຂນາດກ້າ	ແຫງສຽບທໍຣະນີ	
ເລີບເລົ້າເປັນຮູຫຸບ	ທິ່ມລິງທາງພື້ນ	
ອັນວ່າອັດສາປ້ອງ	ຫົວນາງເປາະໃສ່	

ດັ່ງວ່າຫົວຍັກຮ້າຍ ເຖິງຫັ້ນກິ້ງລິ້ງ ແທ້ແລ້ວ
ແຕ່ນັ້ນອັດສາຟ້າວ ຖອນປຶ້ນຖົກຖອດ
ຖາບອອກແລ້ວ ເອົາໃຫ້ແກ່ນາ
ອັນວ່າສີສະຫ້າວ ຍັກໃຫຍ່ທົສກັນ
ທໍຣະນີຫຸບ ແບກເອົາລີງພື້ນ
ຂຸນນາງເຕັ້ນ ຫາຫົວອີດອ່ອນ ເສັ່ງແລ້ວ
ອັ້ນວ່າຫົວທ່ານທ້າວ ລີງພື້ນແຜ່ນດິນ
ມັນກໍປີບແລ່ນເຕັ້ນ ໄປຫົວພູເຂົາ
ຫາເອົາຫົວ ແຫ່ງໃດມີໄດ້
ມັນກໍຈົນໃຈແທ້ ຊີວັງແວນຂາດ
ເລີຍຫາຫົວບໍ່ໄດ້ ຖາວນ້ອຍລວດຕາຍ ເຈົ້າເອີຍ
ແຕ່ນັ້ນຍັກໃຫຍ່ຮ້າຍ ລົດຊີວົນມໍຣະນາ
ເອືອເລືອທັບ- ແຜ່ນດິນດູຮ້າຍ
ແຕ່ນັ້ນໂບຫາທ້າວ ພະຍາ ຜີຄ້ອນຄັ່ງ ເສັ່ງແລ້ວ
ກໍເພື່ອເສັ່ງເຜົ່າຜູ້ ເປັນເຈົ້າແຫ່ງເຂົາ
ແຕ່ນັ້ນໄຂໂນທ້າວ ພະຍາຜີຟ້າເກື່ອນ
ມັນກໍຊິລເບດໄຫ້ ບິນບ້ອນຮຸ່ງຫາ
ອັນແຕ່ແສນພະຍາພ້ອມ ກັບຕາຍມໍຣະນີງ ຈີ່ງແລ້ວ
ເຂົາກໍມໍຣະນີງມ້ຽນ ຕາຍຊ້າຊາກຕາວ ແທ້ແລ້ວ
ແຕ່ນັ້ນພົນຜີປ້ານ ກົວຕາຍມໍຣະນາດ
ເຂົາກໍຫຼູຫຼັ່ງເຂົ້າ ວຽງກ້ວາງຊູ່ຄົນ

ບໍຣະບວນແລ້ວ	ແສນພຍາໂຮມໄພ່	
ທຸກປາກເວົ້າ	ຈາຕ້ານຕໍ່ກັນ	
ເຮົາຈັກປຸນປອງດ້ວຍ	ປະການໃດຈິ່ງຊິດອງ	ເຮົາເອີຍ
ລືວ່າເຮົາຈິເຂົ້າຂາບໄຫວ້	ຈອມເຈົ້າອ່ອນໂຍນ	ນັ້ນລື
ຮູ້ວ່າເຮົາຈັກເອົາຕີນດັ້ນ	ເດີນໜີຫີ ນຫຼີ ກ	ໄປນັ້ນ
ກົວແຕ່ສອນເດດທ້າວ	ສແດງດັ້ນດ່ວນນໍາ	ບໍ່ຮູ້
ຄວນທີ່ເຮົາແຕ່ງໃຊ້	ເມືອສູ່ເມືອງເຮົາ	ກ່ອນຖ້ອນ
ນໍາເອົາປັນນາການ	ເຂົ້າໄປຖວາຍໄຫວ້	
ຫອນທ້າວກູນາໃຫ້	ຊີວັງຕິດຕໍ່	ໄປແລ້ວ
ຄັນວ່າທ້າວບໍ່ລຸໂທດແທ້	ເຮົານີ້ຈິບໍ່ດີ	ທ່ານເອີຍ
ຄ້ອນວ່າເຂົາກ່າວແລ້ວ	ພຍາໃຫ່ງໂຂໂນ	
ມັນກໍເດົາດາຕິກ	ແຕ່ງຂຸນເລີບແລ້ວ	
ມັນກໍປຸນຄວາມໃຫ້	ແສນປໍາເຮວຮີບ	
ມັນບໍ່ຊ້ຳ	ທະຍານລ້າລ່ວງໄປ	
ບັດນີ້ຈັກກ່າວເຖີງສຸຣິວົງນ້ອຍ	ຈອມບຸນໄພທີຣາດ	ກ່ອນແລ້ວ
ເຈົ້າກໍຄອຍພໍ່ປູ່ມ	ພີຣ້າ ບງງບເປັນ	
ທັງປວງພ້ອມ	ວຽງຫຼວງສງັດຢູ່	
ກໍບໍ່ມີຜູ້ເວົ້າ	ຈາຕ້ານຕໍ່ກັນ	
ກໍຫາກດູນານແທ້	ຫຼາຍຍາມໃກຈິຄໍ່າ	ມາແລ້ວ
ນັບແຕ່ຍັກໃຫ່ງມ້ຽນ	ຍາມຕັ້ງຕູດແຖ	
ບັດນີ້ຄວນກູໃຊ້	ຄໍາແຂງຖາມເຫດ	ດູກ່ອນ

ເຂົາຈັກຄິດເບື້ອງຂໍ້ ດີຮ້າຍສິ່ງໃດ ບໍ່ຮູ້
ຜີວ່າເຂົາຈັກມາໂຍມແທ້ ຕາມໃຈເຂົາຈີ່ວ່າ ມາເຖິງ
ຄັນວ່າເຂົາຈັກມາ.ຕໍ່ຕ້ອງ ກູແທ້ກໍຊ່າງເຂົາ ຫັ້ນແລ້ວ
ຄ້ອນວ່າທ້າວຮ່ຳແລ້ວ ນ້າວກົງທະນູສິນ
ບາກໍຜາຍຄຳຄວນ ຊູ່ອັນເອົາຜ່ຽນ
ເຈົ້າຈິ່ງໄປຄອຍຢ້ຽມ ວຽງຜີຍັກໃຫຍ່ ດູເຖິງ
ເຂົາຈັກຄືນຕໍ່ຕ້ອງ ເຮົາແທ້ກໍໃຫ້ມາ ວ່າເນີ້
ຄັນວ່າທ້າວສັ່ງແລ້ວ ໄກວແກວ່ງທະນູສິນ
ຄືດັ່ງເຜນີຫັກ ຄື້ນເຄັງຄຸງຟ້າ
ປືນສະແວງດັ້ນ ເຖິງວຽງຍັກໃຫຍ່
ແສງເດດນ້າງ ວຽງແກ້ວເປ່ເພ
ແລ້ວເລົາບັງວຽນອ້ອມ ສາມທີວຽນຄອບ
ປືນຈິ່ງເຂົ້າສູ່ຫ້ອງ ຜີຮ້າຍກ່າວຈາ
ເໝືອນດັ່ງເປັນຄືນແທ້ ຫູຕາໃຊ້ຮອດ
ສອນກ່າວຕ້ານ ເປັນຖ້ອຍຖີ່ຖັນ
ຮຽນນີ້ຊິວ່າອັດສອນທ້າວ ສຸຣິວົງມາບອກ ຈິ່ງແລ້ວ
ນັດນີ້ເສັງແກ່ໃຈທ່ານທ້າວ ສວາງເສື້ອສ່ຽງໃຈ ຫັ້ນຖ້ອນ
ຄັນວ່າສູຈີໂຍມກູແທ້ ໂດຍພລັນເຣວຣີນ
ຈິ່ງໃຫ້ມາຂາບໄຫວ້ ກູພີ້ຫ່ຽວເປືອງ ທ່າວເອີຍ
ຄັນວ່າບັງແຂງກ້າ ໂກທາຂົມຖຽດ ດັ້ງນັ້ນ
ຈິ່ງໃຫ້ມາຕໍ່ງ້າວ ກູແທ້ຫ່ຽວເປືອງ ຫັ້ນຖ້ອນ

ຄ້ອນວ່າສອນກ່າວແລ້ວ	ຍັກໃຫຍ່ໂຂໃບ	
ເຮວພລັນນົບ	ຂາບລົງປະນົມໄຫວ້	
ຂໍແກ່ຈອມຫົວເຈົ້າ	ປານີພາຍໂພດ	ແດ່ຖ້ອນ
ຕູຂ້າໄປບໍ່ໄດ້	ກົວປ້ານທ່ານກະເກົາ	ເຈົ້າເອີຍ
ບັດນີ້ເໜືອຫົວເຈົ້າ	ຈອມບຸນໃຊ້ຮອດ	ດີແລ້ວ
ຝູງຂ້າບໍ່ໄດ້ຂັນຕໍ່ງ້າວ	ຈອມເຈົ້າທີ່ເຊັງ	ສັງແລ້ວ
ຂໍໃຫ້ຈອມຫົວເຈົ້າ	ກະຣຸນາລຸຂະໂທດ	
ຂໍໃຫ້ພາຍໂພດລ້ຽງ	ຕູຂ້າເພິ່ງບຸນ	ແດ່ຖ້ອນ
ຄັ່ນວ່າເຂົາກ່າວແລ້ວ	ສອນຕອບແວນເປືອງ	
ປາຍປີນຫຼິບ	ຕ່າວຄືນເຖິງທ້າວ	
ສະບກໍພາທີຕ້ານ	ຖແລງຄຳກອບກ່າວ	
ຕາບດັ່ງຄຳສັ່ງເຈົ້າ	ບາທ້າວບອກໄປ	
ບັດນີ້ແສນຜີພ້ອມ	ໂຂໃບຫຼາຍໝູ່	
ເຂົາກໍຂໍອ່ອນນ້ອມ	ບອນເຈົ້າຊູ່ພຍາ	ວ່າດາຍ
ຄ້ອນວ່າສອນກ່າວແລ້ວ	ມຸ້ງນປາກສະເດັດການ	
ບາການຊຸມ	ຊື່ນບານຫົວຈົ້ນ-	
ບັດນີ້ຈັກກ່າວເຖິງແສນປ່າທ້າວ	ຄືນມາເຮວຣີບ	
ຮອດແຫ່ງຫ້ອງ	ວຽງກ້ວາງຈອດເຊົາ	
ແຕ່ນັ້ນຫຼາຍພຍາພ້ອມ	ໂຂໃບເປັນໃຫຍ່	
ເຂົາກໍດົກແຕ່ງ ນ້ອ	ເມືອເຝົ້າຊູ່ຄົນ	
ຫຼີ ງດູບຶດງບ້າຍ	ຍັກໃຫຍ່ຜີສວາງ	ພຸ້ນເປີ

ມັນກໍອວນພຍາພີ	ອອກໄປທັງບ້ານ	
ພໍເມື່ອເຖິງສະຖານຫ້ອງ	ຄູຫາຖ້ຳໃຫຍ່	
ເຂົາກໍເຊົາຈອອບັ້ງ	ສະຖານກ້ວາງຄັ່ງພົບ	
ຫຼີງດູເມືອງໆເຫຼື້ອມ	ທໍຄຳພາສາດ	ພຸ້ນເຢີ
ອັນວ່າບອດຊໍ່ຟ້າ	ນະບີແກ້ວສ່ອງໃສ	
ແຕ່ບັ້ນຟ້າເກື້ອນທ້າວ	ຍັກໃຫຍ່ມານຫຼວງ	
ມັນກໍພາບຄຶງຄວນ	ຂຶ້ນເມືອຊານກ້ວາງ	
ກໍຈຶ່ງບໍ່ມີໄຫວ້	ສາມທີກົ້ມຂາບ	
ເຂົາກໍນົບນອບໄຫວ້	ທູນເຈົ້າປູ່ຊະລອນ	
ໂຊໂນທ້າວ	ປະນົມກອນກອບກ່າວ	
(ທູນບາດພົ້ນ	ຈອມເຈົ້າທີ່ເຊົາ)	
ຖວາຍເຄື່ອງຕ້ອນ	ທຸກສິ່ງປັນນາການ	
ຕາມບູຮານ	ຮີດຄອງປະຖົມເຖົ້າ	
ບັດນີ້ຝູງຂ້າຂໍດອມເຈົ້າ	ຈອມຫົວພາບໂພດ	
ຂໍໃຫ້ສຸກປູ່ບ້ອນ	ບຸນເຈົ້າເຫຼື້ອມງ່າ	ແດ່ຖ້ອນ
ອັນວ່າເມືອງຫຼວງກ້ວາງ	ນະຄອນພີບັກໃຫຍ່	ຂ້ານີ້
ຖວາຍແກ່ພຣະແຜ່ນຫຼ້າ	ບຸນກ້ວາງບັ່ງປອງ	ແທ້ແລ້ວ
ແມ່ນວ່າເງິນຄຳແກ້ວ	ເບັ້ງສາງແສນໂກດ	ກໍດີຖ້ອນ
ຖວາຍແກ່ພຣະຍຳເກົ້າ	ແພງລ້ານບັ້ງປອງ	ເຈົ້າເອີຍ
ຄ້ອນວ່າເຂົາທູນແລ້ວ	ໂຊໂນສງັດປູ່	
ທຸກປາກມ້ຽນ	ຄອບເຈົ້າປູ່ຟັງ	

ເມື່ອນັ້ນສິດທິເດດທ້າວ	ນາມໜໍ່ໂພທິສັດ	
ເຈົ້າກໍຂວາງສຽງ	ກ່າວຈາຈິງຕ້ານ	
ດຶງແລ້ວ	ພຍາພິສເລີຍດາບ	ກູເອີຍ
ກູບໍ່ວ່າຈິຂ້າ	ສູມ້ຽນມອດຊີວັງ	ດອກນາ
ອັນວ່າທິສກັນທ້າວ	ກັນມັນມາຮອດ	ຈິ່ງແລ້ວ
ກໍເພື່ອມັນໄດ້ທຳກັນໃຫ້	ພາບເຮົາທຸກໂສກ	
ບັດນີ້ນາບແລ່ນຕ້ອງ	ເວນຮ້າຍຮອດມັນ	ທ່ານເອີຍ
ມັນຈຶ່ງມໍຣະນຶງມ້ຽນ	ລິດຊີວເມືອແມນ	
ມັນຈຶ່ງມໍຣະນາຕາຍ	ຈາກຣູຮາມຮ້າມ	
ເຮົາບໍ່ມີຫວັງດ້ວຍ	ນະຄອນພິເມືອງນຶ່ງ	ສູນັ້ນ
ສູຈິ່ງແທນສືບສ້າງ	ເມືອງກວ້າງແທ່ງສູ	ຫັ້ນຖ້ອນ
ແຕ່ນັ້ນທ້າວກໍຖາມຫາເຊື້ອ	ແນວນາມຍັງໃຫ່ງ	ມັນນັ້ນ
ອັນວ່າເຊື້ອສືບເຊື້ອ	ແທນຮ້າງແຕ່ປະຖົມ	ນັ້ນນາ
ອັນວ່າບຸດຕາພ້ອມ	ພົງພັນຍັກໃຫ່ງ	ສູນັ້ນ
ຍັງຈັກມີຜູ້ທິງສືບສ້າງ	ເມືອງນັ້ນຮູ້ບໍ່ມີ	ທ່ານເອີອ
ເມື່ອນັ້ນໄຂໂນທ້າວ	ບໍ່ມີທູນບາດ	
ນົບນອບນົ້ວ	ທູນໄຫວ້ຊູ່ອັນ	
ອັນວ່າສາຍນາມເຊື້ອ	ທິສກັນພຍາໃຫ່ງ	
ລູກທ່ານເຈົ້າ	ນາທ້າວບໍ່ມີ	ພຣະເອີຍ
ແຕ່ນັ້ນເຈົ້າກໍຖາມຫາເຊື້ອ	ກັນມາເປັນຄູ່	ກັນນັ້ນ
ສູຈິ່ງບອກໃຫ້ແຈ້ງ	ຄຳຜ້ຽງຢ່າບັງ	ທ່ານເອີຍ

ເມື່ອນັ້ນສຸຣິເວດທ້າວ   ບານໜໍ່ໄພທິສັດ
ພຣະກໍຂວາງສຽງ   ຊື່ນຊົມຈາຕ້ານ
ເອົາແຕ່ຝູງສູທ້າວ   ຫຼາຍພຍາຄິດຮ່ຳ   ດູຖ້ອນ
ຢ່າໃຫ້ບາກອຶກຊ້ຳ   ກູທ້າວເມື່ອລູນ   ທ່ານເອີຍ
ເມື່ອນັ້ນນໍຣິນທ້າວ   ສຸຣິວົງກອບກ່າວ
ບັດນີ້ກູຈັກມ້ຽນຊາກຮ້າຍ   ສວາງເສື້ອເພດພີ   ກ່ອນແລ້ວ
ສູຈົ່ງເອົາໄປໄວ້   ສະຖານງາມພຽງຮາບ   ເສັງຖ້ອນ
ເຮົາຈັກເຜົາຄານທ້າວ   ວັນນີ້ສົ່ງສະການ   ທ່ານເອີຍ
ເມື່ອນັ້ນໄຂໃບພ້ອມ   ພຍາພີຫຼາຍໝູ່
ເອົາກໍກົ້ນຂານໄຫວ້   ຫູນທ້າວແທບຕີນ
ຝູງຂ້າຂໍແຕ່ງຕັ້ງ   ໃສ່ຫີບໂຮງຄຳ
ຕາມບູຮານ   ສືບມາເປັນເຄົ້າ
ເມື່ອນັ້ນສຸຣິເວດທ້າວ   ບານໜໍ່ໄພທິສັດ
ພຣະຈິ່ງຈາຄຳຄວນ   ຕໍ່ພີສວາງເສື້ອ
ດູຮາໄຂໃບທ້າວ   ຂຸນພີຜູ້ໃຫ່ຍ   ກູເອີຍ
ຄຳນີ້ພິດຮີດແທ້   ບູຮານເຖົ້າເລົ່າມາ   ແທ້ດາຍ
(ເພິ່ນວ່າຕາຍປ່າງນີ້   ເອີ້ນວ່າຕາຍຫຸງ
ຕາຍບໍ່ເປັນມຸງຄຸນ   ທີ່ຫັມມະດາຫ້າມ
ເຫດຈັກເປັນເຂັ້ນຂ້ອງ   ພິງພັນຄນາບາດ)
ຊາດທີ່ຕາຍປ່າງນີ້   ບໍ່ຄວນໃຫ້ໃສ່ໂຮງ   ທ່ານເອີຍ
ສູຈົ່ງເອົາໄປໄວ້   ວາງທີ່ສົມຄວນ

ພໍປະມານກັບ　　ບາບກັມມັນທ້າວ
ກູຈັກບິງສອນໃຊ້　　ສຸມໄຟນັ່ງບຄາບ　　ມັນແລ້ວ
ສູກໍປ່າໄດ້ຊ້າ　　ຈວນຈິໃກ້ຫ່າງທາງ　　ແທ້ດາຍ
ບັດນີ້ກູຈັກເມືອຫີນຫ້ອງ　　ເປັງຈານເມືອງເກົ່າ　　ກູພຸ້ນ
ເຮົາກໍພັດພໍ່ໄວ້　　ບານຊ້າຊວດປະມານ　　ທ່ານເອີຍ
ຄັອນວ່າທ້າວກ່າວແລ້ວ　　ບັກໃຫ່ງໃຂໃນ
ເຂົາກໍເອົາກັບໄປ　　ສູ່ພຍາມວນພ້ອມ
ແມ້ງບິງເຖິງສະຖານທ້າວ　　ທິສກັບນໍຣະບາດ
ຕັ້ງວ່າໃຫ່ງຂບາດແທ້　　ປະມານດ້າມທໍ່ພູ　　ພຸ້ນແລ້ວ
ອັນວ່າຂອນຜີທ້າວ　　ທິສກັບພາງໜ່າຍ
ຫົວບໍ່ມີຕໍ່ຕັ້ງ　　ວາງໄວ້ແຕ່ຕົວ
ເມືອນັ້ນໃຂໃນທ້າວ　　ເຕີນເຂົາຟູງໄພ່
ສູຣິບພ້ອມ　　ເອົາທ້າວບໍ່ນານ
ເຂົາກໍເອົາໄປໄວ້　　ຕາມຄໍາທ້າວບອກ
ວາງທອດໄວ້　　ພລານກວ້າງຂວ້າງພຽງ
ເຂົາຈິງຄືນມາໄຫວ້　　ບາດານສຸຣິເວດ
ນ້ອມເກດເກົ້າ　　ທູນທ້າວເລົ່າກອນ
ຟູງຂ້າໂດຍຄໍາເຈົ້າ　　ຈອມຫົວດ້ານບອກ
ໂດຍດັ່ງຄໍາສັ່ງເຈົ້າ　　ບຸນກວ້າງຊູອັນ　　ພຣະເອີຍ
ຂໍແກ່ພຣະບາດເຈົ້າ　　ຫຼີ້ງລໍ່າຄອຍດູ　　ຫັ້ນຖ້ອນ
ເຊີນພູມີ　　ອອກໄປເກີຍກວ້າງ

ຄ້ອນວ່າເຂົາກ່າວແລ້ວ　　ພຣະບາດອົງກະສັດ
ພູມິທົງທະບູສິນ　　ແບບນຳມີຊ້າ
ບຸນເຣືອງເຈົ້າ　　ລີລາບົວລະບາດ
ສະເດັດສູ່ຫ້ອງ　　ເກີບແກ້ວບໍ່ນານ
ແຕ່ນັ້ນສຸຣິວົງທ້າວ　　ສະຖິດແທ່ນບັນລັງ
ເທວະດານຳ　　ແທບຫຽນຈອມເຈົ້າ
ເມື່ອນັ້ນອົງກະສັດເຈົ້າ　　ສຸຣິວົງຫຼິງລ່ຳ
ເຈົ້າກໍເຫັນຮ່າງຮ້າຍ　　ນາບເຖົ້ານິງນອນ
ຫຼິງເຫັນເມືອງງເຫຼື້ອມ　　ພລານຫິນຮຽງຮາບ
ເຈົ້າກໍເຕີນບອກໃຫ້　　ຜີຮ້າຍຮ່ຳດູ　　ຫັ້ນຖ້ອນ
ກູຈັກບົງສອນແກ້ວ　　ສແວງໄປເຜົາຈູດ
ສູຈົງຄອບລ່ຳປ່ຽນ　　ນອງສົ້ງສ່ອງດູ　　ຫັ້ນຖ້ອນ
ຄ້ອນວ່າເຈົ້າບອກແລ້ວ　　ບ້າວກົງທະບູສິນ
ບາຄານເຕາະ　　ຕ່ອບທະບູດັ້ງກ້ອງ
ຄືດັ່ງອິນດາທ້າວ　　ຄວງສວັນປະສິງເສບ
ດູມ່ວນແມ້ງ　　ອໍຣະອົ້ງກ່ອນຫູ
ຄ້ອນວ່າທ້າວຕ່ອບແລ້ວ　　ເລີບເລົາບົງໄປ
ຄືດັ່ງທໍຣະນີຫຼຸບ　　ຄື້ນເຄັ້ງຄຸງຟ້າ
ປີນເລົາບັງສແວງຂົ້ນ　　ເວຫາເຟື້ອນຟັ້ງ
ແລ້ວຈິງລົງສູ່ພົ້ນ　　ພາບໃຕ້ບໍ່ນານ
ສອບເລົາໄປວຽນອ້ອມ　　ທິສກັບສາມຮອບ

ແປວເປົ້າໃໝ້ ນາບຣ້າຍເຜົາຜິງ
ອັນວ່າກາຍາທ້າວ ທິສກັບເປັນເຖົ່າ ໄປແລ້ວ
ເຂົາກໍເກັບດູກທ້າວ ໂຮມໄວ້ທີຖວບ
ສອນຈິງຜັນຜຍອງເຂົ້າ ຫາບາໂພທິຣາດ
ພຣະບາດເຈົ້າຍໍໄວ້ ທີຖວບຫັ້ນແລ້ວ
ເມືອນັ້ນເຈົ້າກໍຄິດຮຸ່ງຮູ້ ໃນແຫ່ງທີອະໄທ
ຄວນກູແປງເຈດີ ກໍ່ກວມບາທ້າວ
ເຈົ້າຈິງກອບກ່າວຕ້ານ ຈາຕໍ່ໂຂໂນ
ມັນນີ້ກູຈັກແປງເຈດີ ກໍ່ກວມມັນໄວ້
ສູຈິງເດົາດາຫ້າງ ນາລາຫຼຽນຫຼູບ
ທັງດອກໄມ້ ນວນພ້ອມໃສ່ຂັນ
ວັນນີ້ສູຈິງນຳມາພ້ອມ ບິງສາວຫຼາຍໝູ່
ມາພ່ຳພ້ອມ ກັນຫຼີ້ນຊື່ນຊົມ
ເຮົາຈັກໄປແຕ່ງຕັ້ງ ພຣະທາດໃຫຍ່ເຈດີ
ສູຈິງນຳລະເມັງໂຂນ ພ່ຳນວນມາຫຼີ້ນ
ຄ້ອນວ່າເຂົາກ່າວແລ້ວ ເຂົາຊື່ນຊົມບານ
ໂຂໂນຕິກ ແຕ່ງເປືອງປຸນໄຊ້
ພໍປະມານແລ້ວ ໄປເຖິງເມືອງໃຫຍ່
ເຂົາກໍແຫນຮ່າງໃຫ້ ຕາມເຈົ້າບອກມາ ແທ້ແລ້ວ
ບັດນີ້ພຣະບາດທ້າວ ນີອາດບາຕັດ
ວ່າໃຫ້ເຂົາຊຸມສູ ໝູ່ສາວໄປພ້ອມ

ທ່ານຈັກທຳການທຶ໌ນ   ບູຊາທາດໃຫຍ່   ຈິງແລ້ວ
ທ່ານຈັກຕົກແຕ່ງໄວ້   ເມືອໜ້າໂລກລື   ວ່າດາຍ
ແຕ່ນັ້ນຊາວສາວເຊື້ອ   ຝູງນາງບັກໜຸ່ມ
ເຂົາກໍຊຸມຊື່ນດ້ວຍ   ດາຫ້າງແຕ່ງຕົວ
ກັບທັງສິງໂຂນພ້ອມ   ຝູງລະເມັງຫຼາຍໝູ່
ເຂົາກໍໂດຍອາດເຈົ້າ   ມີຊ້າຣີບໄປ
ບຶດງບ້າຍ   ທະຍານລ່ວງເວຫາ
ປອມເມໂຄ   ເພັ່ນພະໂຍມບັງຟ້າ
ພໍປະມານແລ້ວ   ເຖິງພົບເຊົາຈອດ
ທຸກທ່ອນທ້າວ   ທູນເຈົ້າປູ່ຊະລອນ
ແຕ່ນັ້ນບໍ່ຣິນທ້າວ   ພາທີກອບກ່າວ
ບັດນີ້ເຮົາຈັກທຳ:ດດໃຫ້   ສອນໃຊ້ແຕ່ງໄປ   ກ່ອນແລ້ວ
ຄ້ອມວ່າທ້າວກ່າວແລ້ວ   ກຳກົງທະນູສິນ
ພູມີເຕາະ   ຕ່ອນທະນູເຟືອນຟົ້ນ
ເຄັ່ງໆກ້ອງ   ຄູຫາຖ້າໃຫຍ່
ຄືດັ່ງສຽງເສບຫ້ອງ   ເມືອງຟ້າເທພອິນ   ເຈົ້າເອີຍ
ເນືອດງເນື້ອ   ໂກວແກວ່ງສໍຣະສິນ
ຄືດັ່ງເທພານາຍ   ຂ່ວງພຣະອິນເຟືອນຟົ້ນ
ເຄັ່ງໆພົ້ນ   ທໍຣະນີໄຫວຫວັ່ນ
ຄືດັ່ງຟ້າຣວ່ານຮ້ອງ   ເດືອນຫ້າອຸ່ນເມືອງ
ປືນເລົ້າບັງສແວງຂຶ້ນ   ເມືອບິນເຄົ້າຄືນ

ເກີດເປັນພົນມາກລົ້ນ	ພໍຕໍ່ຕົວອະໄຂ	
ພົນມາກລົ້ນ	ອະນັນເນກເຫຼືອຫຼາຍ	
ອື້ຫືຄັບ	ຖັ່ງຄົນນອງລົ້ນ	
ເຂົາກໍເອົາກັນສ້າງ	ເຈດີຫາດໃຫຍ່	
ຕົດຕໍ່ໃຫ້	ເລີບແລ້ວບໍ່ນານ	
ມີທັງຄໍາພອກແລ້ວ	ແກ້ວໃສ່ດວງປີ	
ໂຮງງໃສ	ສ່ອງງາມເງົາແກ້ວ	
ດູເລີດລ້າ	ຫາດໃຫຍ່ທົສກັນ	
ລວງສູງສຸດ	ຊິ່ວຕາເຕັມຢຸ້ງມ	
ຄ້ອນວ່າບໍ່ຣະບວນແລ້ວ	ບາຄານເຕີນປ່າວ	
ສູຈິ່ງຕົກແຕ່ງຫ້າງ	ຕານໄຕ້ທູບທຽນ	
ແລ້ວໃຫ້ພາກັນຫຼີ້ນ	ນະໂຫຣີຂັບເສບ	ເສັຽເຖິນ
ຢ່າໃຫ້ເສັຽບົດທ້າວ	ກັບດານບັ້ນໝົ່ນໝອງ	ທ່ານເອີນ
ຄ້ອນວ່າແລ້ວ	ຊາວເທດໂຂໂນ	
ເຂົາກໍເອົາກັນຕົກ	ແຕ່ງດີດາຫຼີ້ນ	
ອັນວ່າສິງໂຂນພ້ອມ	ນະໂຫຣີຟ້ອນແອ່ນ	
ກັບທັງພິນພາດພ້ອມ	ດີດ້ອງຕ່ອນຊຸງ	
ຟັງຍິນຄ່ວນໆກ້ອງ	ກອງເສບເຈີ	ແລະເປີ
ເຂົາກໍອໍແອຫຼີ້ນ	ຫຼາຍແຊງເຊີງຕ່າງ	
ຝູງໝູ່ມີຊ່າງຫຼີ້ນ	ຄະໂຍງແກ້ງແກ່ໜັງ	
ລາງພ່ອງໂຮເຮຮ້ອງ	ຫາສາວຂັບສຽດ	ກໍມີ

ລາງພ່ອງເປົ່າປີແຕ້   ແຄນເຂົ້າຄຸບຊໍ
ລາງພ່ອງບໍ່ແຂບພ້ອນ   ນຳຫຼັງສາວຖ່າວ
ຫັງເລົ້າຂັບສຽດຊູ້   ໃບຫຼົ້ນປອກກັບ
ຝູງຜີຫຼົ້ນ   ບູຊາຫາດໃຫ່ຍ
ດູນວນແມ້ງ   ນະໃບຊ້ອນໃສ່ກັນ
ອັນວ່າສຸຣິເວດທ້າວ   ຫຼິງລ່ຳດູຜີ
ເຂົາກໍ່ແຊວງສຽງ   ປອກກັບຫົວຈົ້ນ
ດູນານໄດ້   ເຈັດວັນຫັດທ່ຽງ
ເຈົ້າຈິ່ງບິນບອກໃຫ້   ເຂົານັ້ນເລີກລາ
ນັບແຕ່ນາຄານທ້າວ   ເຮວຜີບັກໃຫ່ຍ
ນັບອ່ານໄດ້   ຫຼາຍນົ້ນພ່ຳນານ
ສັງຂຍາໄດ້   ເຈັດເດືອນຫັດທ່ຽງ   ຈິ່ງແລ້ວ
ເທວະດາຊ່ອຍປ້ອງ   ປອງໃຫ້ສວ່າງໃຈ
ອັນວ່າບັກໃຫ່ຍທ້າວ   ເຊັ້ງຊີ້ທິສກັນ
ມັນຈິ່ງນໍຣະບາດັບ   ຄອບເວນນາທ້າວ
(ບັດນີ້ບຸທກັມນັ້ນ   ນິທານຫັນກ່າວ
ກໍຫາກແລ້ວທໍ່ນີ້   ບໍໄວ້ທີ່ຄວນກ່ອນແລ້ວ)

ບັ້ນທ້າວ ພາແມ່ຄືນເມືອເມືອງເປັງຈານ

(ຂວນເມື່ອຟ້າສວ່າງແຈ້ງ ມື້ໃໝ່ສວຍມາ ແລະເປີ
ຝູງນາຣີນາງບັກ ຂານລາເມືອບ້ານ
ບັດນີ້ຈັກກ່າວເຖິງພູບານທ້າວ ສຸຣິວົງອົງອາດ ກ່ອນແລ້ວ
ເຈົ້າກໍໃອວາດຕ້ານ ຂານຖ້ອຍສັ່ງພີ່)
ເທື່ອນີ້ເຮົາຈັກລາເມືອຫ້ອງ ເປັງຈານເມືອງນີ້ງ ກ່ອນແລ້ວ
ເຮົາກໍພັດພາກບ້ານ ມາໄດ້ພໍ່ານານ ທ່ານເອີຍ
ພີ່ຈັກຕາດູໄດ້ ສອງປີປາຍຂນາດ ຈິງແລ້ວ
ບັດນີ້ສູຈັກເນົາປູ່ຫ້ອງ ເມືອງກວ້າງຄ່ອຍສຳຣານ ທໍ່ພີ່
ແຕ່ນັ້ນຫົ້ນໆພ້ອມ ຊາວເທດພຍາພີ່
ເຂົາກໍບໍ່ມີທູນ ຊູ່ພຍາພຽງພ້ອມ
ຂໍແກ່ເໜືອຫົວເຈົ້າ ປານີພາຍໂພດ ແດ່ຖ້ອນ
ຂ້າຂໍຕາມບາດພົ້ນ ຕີນເຈົ້າບໍ່ໄລ ພຣະເອີຍ
ອັນນຶ່ງຝູງຂ້າຂໍອາສາແທ້ ຫົນທາງນຳສົ່ງ
ພໍໃຫ້ເຖິງແຫ່ງຫ້ອງ ເປັງຈານພຸ້ນຈິ່ງຈິ່ງຄືນ ພຣະເອີຍ
ເມື່ອນັ້ນມ່ານໆໜ້າ ພຣະບາດອົງກະສັດ
ພຣະກໍພາຍຄຳຄວນ ກ່າວຈາຈິງຕ້ານ
ເຮົາບໍ່ຂືນຄຳທ້າວ ທັງຫຼາຍຈິ່ນຳສົ່ງ ເຮົານັ້ນ
ຄັນວ່າສູຈັກນຳສົ່ງແທ້ ກູທ້າວກໍບໍ່ຂືນ ທ່ານເອີຍ

ຄ້ອນວ່າທ້າວກ່າວແລ້ວ ເຂົາຊື່ນຊົມບານ
ເຂົາກໍເດົາດາດິກ ແຕ່ງເປືອງມີຊ້າ
ຫຼາຍພຍາພ້ອມ ຝູງຜີບ້າຍບ່າງ
ໄປກ່ອນໜ້າ ບາທ້າວມາກຫຼາຍ
ອັນວ່າທາງຕີນນັ້ນ ຕໍສືບທຶບເປ່
ທໍາໃຫ້ພຽງຮາບແທ້ ທາງກວ້າງແປດວາ
ເຂົາກໍປາຍກັບໄວ້ ເປັນແຖວຖັບຖີ
ຝູງທອກງ້າວ ລຽບໄວ້ພ່າງທາງ
ພືດາບກັ້ງ ເຮືອງຮົມດູອາດ
ປະຄືໃຫ່ງຕັ້ງ ລົມເຟື້ອງແກວ່ງໄກວ
ໂບທາພ້ອມ ພຍາຜີຫຼາຍໝູ່
ເຂົາກໍແບກປີກໄວ້ ດາຫ້າງແຫ່ໄປ
ອັນວ່າໄຂໂບທ້າວ ເຕີນພົບດິກແຕ່ງ
ອິດໃຫ່ງຕັ້ງ ມະນີນ້າແທບທຽມ
ພໍເມື່ອບໍຣະບວນແລ້ວ ດາດີດິກແຕ່ງ
ເຂົາຈຶ່ງເຊີນແຈ່ມເຈົ້າ ມາດາແກ້ວຂີ່ທິງ
ອັນວ່າສັດທັນຊ້າງ ງາຣີຂາວເຜືອກ
ໄວ້ໃຫ້ສີແຈ່ມເຈົ້າ ບາທ້າວຂີ່ທິງ
ອັນວ່າເທວີໄທ້ ຄູຫາດີນປະເສີດ
ບັງເລົາແນມອ່ອນນ້ອຍ ສອງເຈົ້າບໍ່ວາງ ແທ້ແລ້ວ
ແຕ່ນັ້ນກຸມານນ້ອຍ ເຕີນເຂົາດິກແຕ່ງ

ຜາສາດຕັ້ງ　　ຫຼັງຊ້າງເຄືອງຄຳ
ຕິວບໍ່ໄວ້ແກ່ເທວະຣາດເຈົ້າ　　ທົງຂີ້ພາຍສານ
ແຜນບາຄານ　　ບໍ່ວາງສອງເຈົ້າ
ແຕ່ນັ້ນເມືອງບັນພ້ອມ　　ຊາວຜີເຕົ້າໝູ່
ພົບຍັກກຸ້ມ　　ຫຼາບລ້ານພໍ່າມວນ
ຕັ້ງຫອກງ້າວ　　ລະວັງແຫ່ຫຼາບຄູັນ
ໃຫຂັນເຂົາ　　ປູ່ຄອງຄອບຫ້າວ
ເມື່ອນັ້ນບາບ່າວເຈົ້າ　　ອົງອາດຈອມກະສັດ
ຂວາງສຸງ　　ສັ່ງນາງຟູງເຖົ້າ
ຄ່ອຍປູ່ດີເຢີ ເສນາເຖົ້າ　　ກັບດານທຸກໝູ່　　ກູເອີຍ
ຮຽມຈັກຄືນສູ່ຫ້ອງ　　ເມືອງບ້ານແຫ່ງຕົນ　　ກ່ອນແລ້ວ
ສູຈົ່ງພາກັນເຝົ້າ　　ຮັກສາເມືອງປຸນແຕງ　　ດີເນີ
ຂໍໃຫ້ເຈົ້າພີ່ນ້ອງ　　ສະຖຽນໝັ້ນໝື່ນປີ　　ແດ່ຖ້ອນ
ຄັນຫາກເຮົາເມືອຮອດບ້ານ　　ເປັງຈານທີ່ພຸ້ນ
ເຮົາຈັກຈຳພົບຫຼວງ　　ຮີບຄືນມີຊ້າ
ເມື່ອນັ້ນຝູງນາງເຖົ້າ　　ບໍ່ມີນິບບາດ
ເຂົາກໍກອບກ່າວຕ້ານ　　ພອນແກ້ວສັ່ງບາ
ໃຫ້ຄ່ອຍໄປດີເຢີ ອົງກະສັດເຊື້ອ　　ເປັງຈານອົງປະເສີດ　　ຮຽມເອີຍ
ເຈົ້າຈົ່ງຄືນສູ່ຫ້ອງ　　ເມືອງບ້ານຄ່ະຍສຳຣານ　　ແດ່ເນີ
ຈົ່ງໃຫ້ລຸລາບໄດ້　　ໂດຍດັ່ງປາຖນາ
ຢ່າໄດ້ມີໂຣຄາ　　ບຽດບຽນພຣະອົງເຈົ້າ

24/ขาย
ห้ามจำหน่าย

ຄັນວ່າເມືອເຖິງຫ້ອງ ເປັງຈານເມືອງໃຫ່ຍ ພາຍພຸ້ນ
ຫາຍຂວບເຂົ້າ ພຣະອົງເຈົ້າໝັ້ນປານ ແດ່ເນີ
ຄັ້ອມວ່າເຂົາສັ່ງແລ້ວ ເຖິງໃບກບານດີ
ບາຄານຫັງ ໄພ່ພົນບວງບ້າຍ
ບາຄານຂຶ້ນ ພາຍສານຂາວເພືອກ
ຣິມກົງກັ້ງ ຂວາຊ້າຍແປດດວງ
ອັນວ່າມາດາແກ້ວ ພົມພາຕົນແມ່ ພຣະອົງນັ້ນ
ເຈົ້າກໍຂີ່ຣົດແກ້ວ ພົນລ້ອມລັ່ງນຳ
ອັນວ່າເທວະດາຂຶ້ນ ພາຍຄຳຊ້າງອາດ
ຜາສາດຕັ້ງ ຫລັງຊ້າງເຣືອເຣືອງ
ຫາຍຂຸນທ້າວ ຂີ່ສວາງບັກໃຫ່ຍ
ຂຶ້ນຂີ່ຊ້າງ ຕົວກ້າອະເນກນອງ
ບືດງບ້າຍ ບັກໃຫ່ຍກັບດານ
ເປັນບໍຣິວານ ຄັ່ງທາງເພືອນຟັ້ນ
ຟັງບົບຄື້ນໆກ້ອງ ກອງໃຫ່ຍຈັດພົນ ພຸ້ນເຢີ
ປະຄືແດງອວນ ກ່ອນພົນໄປໜ້າ
ພົນຫາຍລົ້ນ ເມືອງນອງຄັບຄັ່ງ
ໄຫຫລົ້ງເຂົ້າ ວັງກວ້າງໜື້ນຖັນ
ຫລິ້ງດູເສີນໆຊ້າງ ເທວະດາໄປກ່ອນ ພຸ້ນເຢີ
ຜາສາດຕັ້ງ ຫລັງຊ້າງເຣືອຄຳ
ຖັດມານັ້ນ ສັດທັນຊ້າງເພືອກ

ມາບໆເທື້ອນ ເຂັນແກ້ວຮຸ່ງເຮືອງ
ຣິມກິ່ງກົ້ນ ພໍແປດດວງຂຽວ
ທັງຂາວເຫຼືອງ ຄູ່ກັນຂວາຊ້າຍ
ອັນວ່າພິນພາແກ້ວ ເທວີດິນແມ່
ຂຶ້ນຣິດແກ້ວ ຕາມທ້າວຝ່າຍຫຼັງ
ພິນຫຼວງກຸ້ມ ຕາມບຳເຖັຽລະດາດ
ທາງໜ້າພຸ້ນ ຂວາຊ້າຍອະເນກນອງ
ກາຍເຂົາຂັ້ນ ດົງດອນຫຼາຍຍ່ານ
ທາງຮ່ອມກ້ຽງ ຣິດທີກ້າຍບັກແປງ
ທິນໆຟື້ນ ໃບດົງເຟືອນຟັ່ງ
ເສືອແຮດຊ້າງ ດົງກວ້າງຜ່າຍພັງ
ພົນພວກໜ້າ ເປັນບັກເທັງມວນ
ຝູງໝູ່ທຳເປັນຄົນ ຄ່ອຍຕາມຄືນຊ້າງ
ອັນວ່າຄົນຕາມແກ້ວ ເທວີດິນແມ່
ເຂົາແຫ່ລ້ອມ ຂວາຊ້າຍຊູພາຍ
ເຂົາກໍສຳແດງໃຫ້ ເປັນສາວຂຶ້ນໃຫຍ່
ບົມຕຸ່ມດັ້ງ ຄີງສ້ວຍສີງເຫຼົາ
ເຂົາກໍບິບດີພ້ອມ ເອົາກັນຊິນຊື່ນ
ເຂົ້າປ່າໄມ້ ຫຼາຍຊັ້ນຊ່ອງຊັນ
ສຽງນັບກ້ອງ ຊາວຜີຊິນເຖືອນ
ພົນເລື່ອນບ້າຍ ດົງກວ້າງເຖືອນກວາງ

ໄພຂວາງໄອ້ ບາງຫຼາຍສິ່ງ
ຫອມດອກໄມ້ ບານແລ້ງເມື່ອແລງ
ກອງແພງທ້າວ ເດີນພິນພັກເມື່ອຍ
ຕັ້ງທັບໜ້າ ຂວາຊ້າຍຊູ່ພາຍ
ທ້າວກໍບົງສອນໃຫ້ ເປັນສານຫຼັງໃຫຍ່
ມີແທ່ນຕັ້ງ ຕຽງແກ້ວມ່ານມຸງ
ຝູງນາງລ້ອມ ຫຼາຍຖັນເຖິງລະດາດ
ພຣະບາດເຈົ້າ ບຸນກວ້າງປູ່ເຊີາ
ທັງແຈ່ມເຈົ້າ ພຣະແມ່ມາດາ
ເນົາຕຽງຄຳ ສໍ່າຣາບຫາຍຮ້ອນ
ແສນສາວລ້ອມ ບາຄານທັງແມ່
ເຂົາແຫ່ລ້ອມ ຂວາຊ້າຍແກວ່ງວີ
ຊາວພີຕັ້ງ ເປັນວຽງອ້ອມຮອບ
ເທວະດາປູ່ເຜົ້າ ແພນເຈົ້າຊູ່ບານ
ພໍເມື່ອຣາຕີຕັ້ງ ກອງບານເຖົ້ງຄືນ
ຂຸນໝື່ນທ້າວ ເດີນຕັ້ງບັ່ງບານ
ພໍເມື່ອຣາຕີລ້າ ເຖິງແຖໃກ້ທ່ຽງ ຄືນນັ້ນ
ພຣະແມ່ເຈົ້າ ທັງທ້າວເລົ້ານອນ
ຫຼັບບີ່ນບັ້ງ ໃນອາສນາພຽງ
ນອນສາລາ ກໍ່າເປັນສະບາຍເນື້ອ
ພໍເມື່ອຣາຕີຂ້ອນ ລົມວອນໜາວໜ່ວງ ມາແລ້ວ

ຟັງບິນເຄົ້າອັ່ນຮ້ອງ　　ປາຍໄມ້ສົ່ງສຽງ
ພໍຄາວແລ້ວ　　ແສງທອງແຈ້ງສວ່າງ　ມາແລ້ວ
ສອງແຈ່ມເຈົ້າ　　ບຸນກວ້າງຕື່ນຕິນ
ສອງກໍລຸກຈາກຫ້ອງ　　ແລ້ວອາບໃສງສີ
ຄັນທີຈັບ　　ລູບອິງຫອມເຣົ້າ
ເຈົ້າຈີງເດົາດາຫ້າງ　　ເດີນພິນທຸກແຫ່ງ
ຫ້າງເຄື່ອງຊ້າງ　　ສານກ້າເຄື່ອງຄຳ
ຟັງບິນເຄັ້ງໆກ້ອງ　　ສຽງກອງເດີນປ່າວ　ພຸ້ນເຢີ
ປະຕີແດງອອກຕັ້ງ　　ຫິວໜ້າກ່ອນພິບ
ແຕ່ນັ້ນບືດໆຍ້າຍ　　ພິນຫຼັ່ງຕາມຫຼັງ
ບາຄານສະເດັດ　　ຂຶ້ນພາຍສານຊ້າງ
ເຄັ້ງໆຟື້ນ　　ສຽງຄົນເພື່ອນຟັ້ງ
ບັ້ງໆເຂົ້າ　　ດັງກວ້າງດ່ວນໄປ
ຫຼີງເຫັນຖຸກຖັ່ນໄມ້　　ລຽນລຳເປັນສ່ຳ　ພຸ້ນເຢີ
ນີ້ຫມູ່ນິກຮ່ຳຮ້ອງ　　ບິນແສ້ວຮ່າຍຮຽວ
ຖຸກຖັ້ນໄມ້　　ບຸງບາງບານຍ່າງ
ລີງຄ້າງເຕັ້ນ　　ໂຕນຫຼົ້ນຮ່າຍກໍ
ກໍລຽນກໍ　　ຕໍ່ໄປລຳໄມ້
ຄອຍເຫັນພູຜາຂັ້ນ　　ເຫັວຊັນຊ້ອງຊັ່ນ　ພຸ້ນເຢີ
ທ້າວກໍພາພິນເຂົ້າປ່າໄມ້　　ຫຼາຍຊັ້ນຊ່ອງຊັນ
ຫຼາຍວັນຄືນ　　ບໍ່ເຊົາໄປເຊົ້າ

ວອນໆເຂົ້າ　　　　ເຂົາຮອນຫຼາຍຮ່ອນ
ຫອມດອກໄມ້　　　　ຈອມເຈົ້າດ່ວນໃຈ
ຈິນໃຈເຈົ້າ　　　　ຍິນສະເຈົາຄຶດຮ່ຳ
ຫຼາຍພ່ຳນີ້　　　　ບາທ້າວທ່າວທອງ
ຄຶດເຖິງດວງສານແກ້ວ　　　　ໄກສອນເມັຽມິງ
ພູກໍໄດ້ກິງແກ້ວ　　　　ຫຼາຍນີ້ພ່ຳນານ　　ແຫ້ນາ
ອັນວ່ານາຄານທ້າວ　　　　ແສນກະສັນອິກສັ້ນ
ຟັງຍິນຈັກກະຈັ່ນຮ້ອງ　　　　ເດືອນຫ້າແຫ່ງວອນ
ທ້າວເກືອນກັ້ນ　　　　ຄະນຶງອ່ອນສະອອນອິກ
ພູກໍຕິກເມືອງນີ　　　　ພ່ຳນານໄກນ້ອງ
ທ້າວຮ່ຳແລ້ວ　　　　ເດີນໄພ່ເດີນໄພ
ຫຼາຍວັນຄືນ　　　　ບໍ່ເຊົາໄປເຊົ້າ
ແມ້ງບຶ່ງເຖິງແດນດ້າວ　　　　ເປົ້າຈານເມືອງໃຫ່ຽ
ສຽງໂຫ່ຮ້ອງ　　　　ພິນລ້ານມີນັບ
ສິນໆພ້ອມ　　　　ນິວເມົາບິດມືດ　　ໄປແລ້ວ
ເມື່ອນັ້ນໄທດ່ານຍ້ານ　　　　ຊາວບ້ານຕື່ນຣິນ
ສິນໆຮ້ອງ　　　　ຫາກັນມວນມີ
ໂຕນຈາກຫ້ອງ　　　　ເຮືອນຢ້າວແຫ່ງຕິນ
ລາງຄີນຍັງກິນເຂົ້າ　　　　ນຳເມັຽທາງລູກ
ໄດ້ຍິນສຽງຕື້ນເຕົ້າ　　　　ພິນລ້ານຕື່ນໃຈ
ວາງຄຳເຂົ້າ　　　　ຈັບແຂນເມັຽລູກ

ປົບປ່ວງເຕັ້ນ　　ລົງປ້າວບໍ່ບານ
ເຂົາກໍວາງເສັ້ງເຂົ້າ　　ຂອງເຮືອນປະໄປ່
ລາງຄົນອູ້ມລູກໄດ້　　ໂດນເຕັ້ນຈາກເຮືອນ
ລາງຄົນໄປຕັກນ້ຳ　　ມີທັນມາຮອດ
ມັນກໍຖື້ມຫາບນ້ຳ　　ເລີຍຟ້າວແລ່ນໜີ
ລາງຄົນໄປຊາບນ້ຳ　　ລ້າງສ່ວນສີໄຄ
ມັນກໍຫຼຽວເຫັນເຂົາ　　ຕື່ນຣົນທັງປ້ານ
ມັນກໍໂຮເຮຟ້າວ　　ລືມໃຈເຕັ້ນແລ່ນ
ຈັບສົບໄດ້　　ເລີຍເຕັ້ນແລ່ນມາ
ໄດ້ຍິນສຽງເຂົາຫ້ວງ　　ແຊວງຈິ່ງຮູ້ເມື່ອ
ມັນກໍເລີຍນັ່ງໄຫ້　　ທັງຟ້າວບຸ່ງທົງ
ຕາມັນປ້ຽນ　　ເຫັນເຂົາເຕັ້ນຜ່າຍ
ມັນເອົາຕີນອ່ວຍຂຶ້ນ　　ຫົວປີ້ນຕ່າວລົງ
ເລີຍຜັນເຕັ້ນ　　ນຳເຂົາປົບແລ່ນ　　ໄປແລ້ວ
ເຂົາກໍໄຫຼຫຼັ່ງເຂົ້າ　　ເມືອງກວ້າງມີບັ້ນ
ລາງຄົນເລີຍປົບເຂົ້າ　　ດົງດອນປ່າໃຫ່ຍ
ບຸບົ່ນເຂົ້າ　　ໄປລີ້ຫີ ບຜາ　　ກໍມີ
ລາງຄົນເຂົ້າ　　ຮູເຫົວລີ້ຢູ
ລາງພ່ອງເຂົ້າ　　ໄປລີ້ຟຸ່ມເຟືອຍ
ລາງຄົນໂດນລົງນ້ຳ　　ດຳໄປລີ້ຢູ່
ລາງພ່ອງເຂົ້າ　　ໄປລີ້ຢູ່ຂຸມ

ອັນວ່າຝູງຊາວບ້ານ　　ຄາເມປາຍດ່ານ
ເຂົາຕື່ນປ້ານ　　ໜີສ້ຽງບໍ່ຫຼົ່
ເຂົາກໍວາງເສັ່ງເຂົ້າ　　ຂອງເຮືອນປະເປົ່າ
ເພື່ອວ່າເຫັນຍັກເຂົ້າ　　ມາບ້ານມືດມົວ
ເຂົາກໍກົວຕາຍແທ້　　ວາງເຮືອນເສັ່ງເປົ່າ
ໄຫຫຼັ້ງເຂົ້າ　　ເມືອງກວ້າງສູ່ວຽງ　　ແທ້ແລ້ວ
ບັດນີ້ຈັກກ່າວເຖິງອິງກະສັດເຈົ້າ　　ສຸຣິວົງລືເດດ　　ກ່ອນແລ້ວ
ພຣະກໍເຕີນໄພ່ຟ້າ　　ພົນລ້ານຫຸກພາຍ
ພັກຈອດຊ້າງ　　ເຊົາໄພ່ພົນຫານ
ຊາວກັບດານ　　ຮ່ຳກອງເຊົາຊ້າງ
ພົນຫຼວງຕັ້ງ　　ແຄມເມືອງຍັກແຕ່ງ
ເຂົາແຕ່ງຕັ້ງ　　ເປັນຄ້າຍເມກວຽງ
ຫຼິງດູວຽງສູງຕັ້ງ　　ພຽງຕານເຖິງໂບດ
ຫົນຕໍ່ຕັ້ງ　　ເປັນຕ້າຍກ່ຳແພງ
ເຂົາກໍແປງຫໍເຈົ້າ　　ສຸຣິວົງຫຼັ້ງໃຫ່ຽ
ຕຽງອາດຕັ້ງ　　ເຫຼືອງເຫຼື້ອມເຮືອງາມ
ເຂົາເລົ່າປຸກຫໍແລ້ວ　　ເທົ່ວຕົບແມ່
ຫຼັ້ງໃຫ່ຽຕັ້ງ　　ສາວໃຊ້ປູ່ເຕັ້ນ
ແສນສາວລ້ອມ　　ຈອມນາງລຽນຢູ່
ເຂົາຢູ່ເຝົ້າ　　ຂວາຊ້າຍແກວ່ງວີ
ນອກກວ່ານັ້ນ　　ຫໍໃຫ່ຽລຽນກັນ

ພໍແສນຫຼັງ	ໝູ່ນາງຫຼາຍລ້ານ	
ເຂົາກໍມາເຝົ້າເຈົ້າ	ນ້ອຍອ່ອນຈອມກະສັດ	
ລຽນເປັນຖັນ	ໝູ່ນາງແຝງເຝົ້າ	
ເຂົາກໍຫຸມຍໍເຈົ້າ	ຫົວຊົມຊື່ຊວ່າ	
ເຂົາກໍຊົມຊື່ນເວົ້າ	ຫົວຈົ້ນຕໍ່ກັນ	
ມີແຕ່ຫຼັງໃຫຍ່ກວ້າງ	ເນື້ອງໃຫຍ່ເປ້ງຈານ	
ຫຼາຍມື້ຄືນ	ດ່ານລຽນເປັນຖ້ານ	
ບັດນີ້ຈັກກ່າວເຖິງຂີນີຜູ້	ນາງມີກັບເພດ	ກ່ອນແລ້ວ
ມັນກໍເນົາຢູ່ຫ້ອງ	ຫໍແກ້ວຮ່ວມພຍາ	
ມັນກໍນອນໃນຫ້ອງ	ຫໍຄຳຜາສາດ	
ນາງກໍຝັນຫຼາກລ້ຳ	ດູລ້າວຕ່າງຫຼັງ	
ຝັນວ່າຜາສາດປິ້ນ	ເອົາບອກລົງດິນ	
ຝັນວ່າທົງສັງວານ	ເກີດເປັນງູກ້ຽວ	
ຝັນວ່າຫໍນອນຂວ້ຳ	ຈົມລົງສມຸດໃຫຍ່	
ນາງກໍລອຍບໍ່ພົ້ນ	ເລີຍສະດຸ້ງຕື່ນຕົນ	
ນາງກໍຫົນຫວຍແກ້ນ	ຄາຫວງຂລັງຢູ່	
ຄິດຮອດຂ້	ຝັນຮ້າຍບໍ່ຫ່ອນເຄີຍ	ແທ້ນາ
ແຕ່ນັ້ນແສງສູນຂຶ້ນ	ພົນຂອບເຂົາທອງ	
ຮອງໆໃສ	ສ່ອງມາເລີຍແຈ້ງ	
ນາງຈິງບໍ່ມີໄຫວ້	ຣາຊາຜົວມິ່ງ	
(ຫູບກິ່ງແກ້ວ	ຮອງພື້ນບາດຄຳ)	

ບາງກໍແກ້ກ່າວຂໍ້ ຕາມເຫດອັນຜັນ
ຕາມອັນມີ ຊູ່ປະການພາຍຜ້ງນ
ເມື່ອນັ້ນພິນມະທັດທ້າວ ໄດ້ຍິນເຫດນາງຜັນ
ກໍຈຶ່ງໂອຍພອນດີ ແກ່ນາງດູລະຫ້ອຍ
ນາງຈຶ່ງຍືນຍາວໝັ້ນ ພັນປີຫາຍຂວນ
ໂພຍພຍາດຮ້າຍ ຍາໄດ້ບຽດບຽນ ພີ່ຄ້ອນ
ເມື່ອນັ້ນນາງພີກົ້ມ ບໍ່ມີນິບບາດ
ຮັບເອົາພອນໃສ່ເກົ້າ ຂໍໝັ້ນໝື່ນປີ ພຣະເອີຍ
ພໍວ່າສອງຈາແລ້ວ ຣາຊາສະເດັດອອກ
ລົງສູ່ຫ້ອງ ພຣະໂຮງກວ້າງແທ່ນທອງ
ຝູງໝູ່ໄທພາເຫວີຍ ແຕ່ງງາຍຖວາຍເຈົ້າ
ຣາຊາເຈົ້າ ພຍາຫຼວງສເວີຍໂພດ
ມີທັງເຂົ້າໂຄບພ້ອມ ຂອງຕ້ອນເຄື່ອງຫວານ
ພໍປະມານຖອຍ ເລີກລາເລີຍແລ້ວ
ຂັນສລາແກ້ວ ນາງສນົມຍໍ່ຍົ້ນ
ພຣະບາດເຈົ້າ ເຫວີຍແລ້ວຢູ່ສະບາຍ
ບັດນີ້ຈັກເຖິງຝູງເຂົາຂ້າ ຄາເມບ້ານດ່ານ ກ່ອນແລ້ວ
ເຂົາກໍໄຫຼຫຼັ່ງເຂົ້າ ວຽງກວ້າງຝັ່ງເຝືອນ
ເມື່ອນັ້ນຄາມະໂພຊະໂກເຖົ້າ ນາຍຂຸນເຈົ້າດ່ານ
ເຂົາກໍມາຮອດຄຸ້ມ ສນາມກວ້າງກ່າວກອນ
ເຖົ້າກໍບໍ່ມີໄຫວ້ ເສນາຜູ້ໃຫຍ່

ເລົ່າເຫດໃຫ້	ທັງປ້ານສັ່ນສາຍ	
ຂ້າໃຫວ້ເຈົ້າ	ຜູ້ໃຫຍ່ເສນາ	
ບັດນີ້ໄພຍໄພຫຼວງ	ເກີດມີເມືອງບ້ານ	
ປ້ານແຕ່ເປັນການຮ້ອນ	ສິນຄາມວາບວອດ	ເມືອງແລ້ວ
ເພາະວ່າຜີຍັກເຂົ້າ	ເມືອງບ້ານແຫ່ງເຮົາ	ພຣະເອີຍ
ອັນວ່າພົນຜີຕັ້ງ	ເມືອງເຮົາອ້ອມຮອບ	
ກໍຫາກມືວມືດກຸ້ມ	ດິນຟ້າມືດມຸງ	
ຝູງຂ້າກົວເກງປ້ານ	ພົນຜີຍັກໃຫຍ່	
ເລີບເລົ່າໜີຈາກບ້ານ	ໄລປ້າວສິ່ງຂອງ	
ຝູງຂ້າຄອງຕາຍແທ້	ວາງເຮືອນປະໄປ	
ໄດ້ແຕ່ເສື້ອແລະຜ້າ	ຄາເນື້ອແລ່ນມາ	ແທ້ແລ້ວ
ເມື່ອນັ້ນເສນາໄດ້	ຍິນຄຳເຂົາກ່າວ	
ເຈົ້າກໍຮີບຟັ່ງຟ້າວ	ເມືອເຝົ້າບໍ່ນານ	
ແຕ່ນັ້ນເສນາເຂົ້າ	ເມືອທູນພູ່ບາດ	
ທຸກໝູ່ພ້ອມ	ທູນເຈົ້ານັ່ງເມືອງ	
ບັດນີ້ຄຳເຄືອງຮ້ອນ	ເຖິງເມືອງເສິກໃຫຍ່	
ໄທດ່ານເຂົາແຕກເຂົ້າ	ມາແທ້ຜ່າຍພັງ	ພຣະເອີຍ
ເຂົາວ່າເສິກຕ່າງດ້າວ	ຍັກໃຫຍ່ກັນດານ	
ຫາກແມ່ນແນວຜີໄຂ	ມືດມາທາງຟ້າ	
ທາງດິນພ້ອມ	ທາງບິນສເມີພາກ	ກັນແລ້ວ
ຕັ້ງຫາກມາຊູ່ກ້ຳ	ທາງລຸ່ມທາງເທິງ	

ຈິບໃຈຊາວຄາມ	ປູ່ເຮືອນບໍ່ມີໄດ້	
ດຽວນີ້ຝູງເຂົາຂ້າ	ຄາມບ້ານນອກ	
ປະໄປ່ປ້າວ	ວາງເຂົ້າສິງຂອງ	
ເຂົາກໍນອງກັນເຂົ້າ	ນາວຽງຄັບຄັ່ງ	
ດຽວນີ້ຍັກປູ່ຍັ້ງ	ວຽງລ້ອມຮອບເມືອງ	ພຣະເອີຍ
ເມືອນັ້ນພຣະບາດທ້າວ	ຟັ່ງຂ່າວຂີບາ	
ກໍຈຶງທັບເສນາ	ຊູ່ຄິນມາພ້ອມ	
ແຕ່ນັ້ນຄິນເຮືອງເຫົ້າ	ທັງເມືອງສຽງສນັ່ນ	
ເຂົາຕືນປ້ານ	ເມືອງກວ້າງຟັ່ງເຟືອນ	
ສຽງຊ່າເຫົ້າ	ເຂົາເຂດເປັງຈານ	
ໂຮເຮປິບ	ປ່ວງປານເປັນບ້າ	
ເຂົາກໍພາກັນເຂົ້າ	ວຽງຫຼວງດູສນັ່ນ	
ຂື້ນເຝົ້າເຈົ້າ	ບຸນກວ້າງປູສະລອນ	
ເມືອນນັ້ນພຣະກໍເສັ້ງແກ່ເສນາທ້າວ	ທັງຫຼາຍນ້ອຍໃຫຍ່	
ທັງລູກທ້າວ	ນານນ້ອຍໄພ່ພິນ	
ໃຜຈັກຂັບເຮວໄດ້	ເສິກຜີຍັກໃຫຍ່	ນີ້ເດ
ກູຈັກເວນມອບບ້ານ	ເມືອງໃຫ້ແກ່ມັນ	ແທ້ແລ້ວ
ເມືອນັ້ນທັງຫຼາຍພ້ອມ	ບໍມືທູນບາດ	
ປາກບໍ່ໄດ້	ຄາແຄ້ນຄັ່ງຫວງ	
ອັນນີ້ເສິກຫຼວງຮ້າຍ	ຜີສວາງຍັກໃຫຍ່	
ໃຜຫ່ອນຊິນຕໍ່ຕ້ອງ	ມັນໄດ້ຄັ່ງລື	ນີ້ເດ

ແຂງວ່າເສິກຄິນເຕົ້າ	ເຫເນືອງຊີງບາດ	ດັ່ງນັ້ນ
ຈັກກ່ອນຂັນຕໍ່ຕ້ອງ	ຊິນຊ້າງບໍ່ຫິນງ່າຍແລ້ວ	
ອັນນີ້ບໍ່ໃຊ່ແນວຄິນແທ້	ຜີໄຂບໍຣິສາດ	
ລືຈັກຊິນຕໍ່ຕ້ອງ	ມັນໄດ້ສິ່ງໃດ	ພຣະເອີຍ
(ດັ້ງແມ່ນຂອງໜ້າປ້ານ	ບັກໃຫຍ່ຜີສາງ)	
ມັນຈັກກິນເຮົາເສັຽ	ນອດວາຍເມືອງບ້ານ	
ສຸດແຕ່ອິງກະສັດເຈົ້າ	ຫິງຫັນຕັດສ່ອງ	ດູຖ້ອນ
ຝູງຂ້າສຸດອິດແລ້ວ	ຄາແຄ້ນຄັ່ງຫວງ	ພຣະເອີຍ
ເມື່ອນັ້ນພຣະກໍປາກບໍ່ໄດ້	ແຄ້ນຄັ້ງຫືຣະໄທ	
ໃນໃຈເໜືອນ	ດັ່ງກືນກິນກ້າງ	
ພຣະກໍລືລາເຂົ້າ	ຫໍປາງຄຶດໂສກ	
ອິກວູ່ຮ້ອນ	ປານສັ້ຽນສຽບແທງ	
ແຕ່ນັ້ນເສນາພ້ອມ	ລາລິງທຸກໝູ່	
ເມືອສູ່ຫ້ອງ	ເຮືອນຢ້າວຊູ່ຄິນ	
ເມື່ອນັ້ນຣາຊາເຈົ້າ	ພຍາຫຼວງເສົ້າໂສກ	
ເຂົ້າບໍ່ນ້ຳ	ວາງໄວ້ບໍ່ສເວີຍ	
ພຣະກໍນອນອີງເທົ້ງ	ໜອນລາຍທອດຫຸ່ນ	
ໂອນໍກູນີ້ທຸກໂສກຮ້ອນ	ແຮງພົ້ນຊວດປະມານ	ແລະນໍ
ໂອນໍກູນີ້ມາໄດ້ໄລລູກນ້ອຍ	ແປນເປົ້າສູນເສັຽ	
ຝູງໝູ່ສັດຕູເຂົາ	ບໍ່ເກັງກົວປ້ານ	
ເປັນດັ່ງບູງບາງໄມ້	ລຳດຽວຕົ້ນປ່ຽວ	ແລະນໍ

ຍາມເມື່ອລົມລ່ວງຕ້ອງ ຄວບຄ້ອນຮອດໂຄນ ຫັ້ນແລ້ວ
ດັງວ່າຫາຍລຳຕັ້ງ ເປັນດາງຍັງຢູ່ ສັນນັ້ນ
ຍາມເມື້ອລົມພັດຕ້ອງ ໄຫວເປື້ອງແຕ່ປາຍ ແລະບໍ
ໂອບໍເສັຽດາຍແກ້ວ ສຸຣິວົງເຈົ້າອ່ອນ ກູເດ
ຜີວ່າກູບໍ່ຂ້າ ບາທ້າວຈິໃຫຽ່ມາ ແລະບາ
ຍັງຈິມີຜູ້ອາສາສູ້ ຂັບຕາຍຕາງຮາດ ກິບາ
ກູຫາກມາຣົບຮ້ອນ ເຣວພົ້ນຖ່ອຍຜຍາ ແລະບໍ
ແຕ່ນັ້ນພຣະກໍຕືອົກໂອ້ ໃນຫໍຄາງຫຸ່ຍ
ນ້ຳພຣະເນດທ້າວ ຍົມຍ້ອຍຖັ້ງແຖວ
ເມື້ອນັ້ນເທວີຜູ້ ນາງຜີກັບເພດ
ເຫັນທີ່ພຣະບາດເຈົ້າ ບຸນກວ້າງປູ່ເທງົາ
ນາງຈຶ່ງວອນວານໄຫວ້ ຖາມອົງພູວະບາດ
ບັດນີ້ເປັນເຫດຮ້ອນ ພຣະເມືອງເຈົ້າດັ່ງລື ນີ້ເດ ?
ຮູ້ວ່າພະຍາດຮ້າຍ ບັງເກີດໃນຂັນ ພຣະລື
ຮູ້ວ່າເສັຽພິງພັນ ຍາດວົງພຣະເມືອງເຈົ້າ ?
ເປັນສັນໃດບໍ ຣາຊາຈອມເກດ ຂ້ອຍເອີຍ
ວຍວ່າພຣະເນດເຈົ້າ ຍົມຍ້ອຍຖຸ່ມແຖວ ນີ້ເດ ?
ື້ອນັ້ນຣາຊາເຈົ້າ ຖວາຍຄ່ຳກອບກ່າວ
ຣະບາດທ້າວ ຈາຕ້ານຕໍ່ນາງ
ດຣາສເນຫາແກ້ວ ເທວີເມັຽມີ່ງ ພີ່ເອີຍ
ດນີ້ຄຳເຄືອງຮ້ອນ ເຄືອງເຮົາມີມາກ

ເສິກບັກເຂົ້າ　　ເມືອງບ້ານຍາດຊີງ

ກໍບໍ່ມີໃຜຜູ້　　ອາສາຣັບຕໍ່　　ເຂົາແລ້ວ

ຈັກຈິດັບມອດບ້ານ　　ເມືອງຂວ້າຈຸ່ມຈົມ　　ບໍຣູ

ເຮົາຈັກນຳຣະບາມ້ຽນ　　ອາຫາໃຣເປັນເຫງື່ອ　　ເຂົາແລ້ວ

ຣູ້ວ່ານ້ອງຈັກພັດຈາກຂ້າງ　　ໄກຣ້າງຣ່າງຣຽມ　　ບໍ່ຣູ້

ກັນຣາແລ້ວ　　ສເນຫາເມັ່ງມິ່ງ　　ກູເອີຍ

ຄັນວ່າເສິກຫຸ່ມເຂົ້າ　　ຣາເຈົ້າຈິພັດກັນ　　ພີ່ແລ້ວ

ຄ້ອນວ່າພຣະກ່າວແລ້ວ　　ນາງຕອບພອຍຖແລງ

ພຣະຢ່າກິວເກັງສັງ　　ທີ່ໃນນອງນ້ອຍ

ຂ້າຈັກອາສາແທ້　　ຣາຊາຢ່າໂສກ　　ສັງຄ້ອນ

ດ້ານແຕ່ບັກຖ່ອຍຮ້າຍ　　ນາຢ້ານປ່ອນກິວ　　ພຣະເອີຍ

ຂ້ານີ້ເປັນແນວເຊື້ອ　　ເທວາແຂງຂນາດ

ຂ້າຈັກໄປບອກໃຫ້　　ມານຮ້າຍຮີບໜີ　　ດອກນາ

ເມື່ອນັ້ນຣາຊາເຈົ້າ　　ຍິນດີຊົມຊື່ນ

ແປປາກຕ້ານ　　ຈານ້ອງນີ່ງເມັ່ງ

ດີງແລ້ວ　　ກັລຍາເມັ່ງມິ່ງ　　ຣຽມເອີຍ

ພີ່ຈັກວາງມອບບ້ານ　　ເມືອງໃຫ້ແກ່ນາງ　　ພີ່ແລ້…

ອັນວ່າເປັງຈານກວ້າງ　　ຈິບໍວາງເວັ້ນມອບ　　ນາງແລ້…

ໃຫ້ະເຈົ້າໄປຝານມ້າງ　　ມານຮ້າຍຈາກເມືອງ　　ພີ່ຄ້ຽ…

(ອ່ານຕໍ່ສບັບໜ້າ)